THE WORD OF THE BUDDHA

# ຄູ່ມື

# ຮັກສາອຸໂປສົຖ

“ວິສາຂາ ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ
ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ
ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ
ມີຄວາມແພ່ໄພສາລຫລາຍ.”

# UPOSATHA

## Observance



“ພິກຂຸທັງຫລາຍ ໃນວັນອຸໂປສົຖ ໑໕ ຄ່ຳນັ້ນ ທ້າວຈາຕຸມ
ມະຫາຣາຊຍ່ອມທ່ຽວກວດເບິ່ງໂລກນີ້ດ້ວຍຕົນເອງວ່າ
ໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່
ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນ
ນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕ
ກະທຳບຸນຍ໌ມີຢູ່ຫລາຍຫລືໜໍ.”

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໘໐/໑໙໕/໔ກຜ

# ບົທນໍາ

ພິກຂຸທັງຫລາຍ ໃນດິຖີທີ່ ๘ ແຫ່ງປັກຂ໌ ເທວະດາຜູ້ເປັນບໍຣິວານຂອງທ້າວຈາຕຸມມະຫາຣາຊ ຍ່ອມທ່ຽວກວດເບິ່ງໂລກນີ້ວ່າ ໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ **ຣັກສາອຸໂປສົຖ** *(ອຸໂປສະຖັງອຸປະວະສັນຕິ)* ປະຕິບັຕກະທໍາບຸນຍ໌ມີຢູ່ຫລາຍຫລືໜໍ.

ພິກຂຸທັງຫລາຍ ໃນດິຖີທີ່ ໑໔ ແຫ່ງປັກຂ໌ ພວກໂອຣົສຂອງທ້າວຈາຕຸມມະຫາຣາຊ ຍ່ອມທ່ຽວກວດເບິ່ງໂລກນີ້ວ່າ ໃນໝູ່

ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທຳບຸນຍ໌ມີຢູ່ຫລາຍຫລືໜໍ.

**ພິກຂຸທັງຫລາຍ ໃນວັນອຸໂປສົຖ ໑໔ ຄ່ຳນັ້ນ ທ້າວຈາຕຸມມະຫາຣາຊຍ່ອມທ່ຽວກວດເບິ່ງໂລກນີ້ດ້ວຍຕົນເອງວ່າ ໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທຳບຸນຍ໌ມີຢູ່ຫລາຍຫລືໜໍ.**

ພິກຂຸທັງຫລາຍ ຖ້າໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທຳບຸນຍ໌ມີໜ້ອຍ ທ້າວຈາຕຸມມະຫາຣາຊຍ່ອມບອກເຖິງເຫຕທີ່ກ່າວມານັ້ນແກ່ພວກເທວະດາຊັ້ນດາວະດຶງສ໌ທີ່ມາປະຊຸມກັນຢູ່ທີ່ສຸທັມມາສະພາວ່າ ທ່ານຜູ້ນິຣະທຸກຂ໌ທັງຫລາຍ ໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທຳບຸນຍ໌ມີໜ້ອຍ.

ພິກຂຸທັງຫລາຍ ເມື່ອເປັນເຊັ່ນນັ້ນ ພວກເທວະດາຊັ້ນດາວະດຶງສ໌ກໍພາກັນເສຍໃຈວ່າ ທ່ານຜູ້ຈະເຣີນທັງຫລາຍ ກາຍທິພຈັກເສື່ອມຫາຍ ອະສຸຣະກາຍຈັກເຕັມບໍຣິບູນ ດັ່ງນີ້.

ພິກຂຸທັງຫລາຍ ຖ້າໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທໍາບຸນຍ໌ມີຢູ່ຫລາຍ ທ້າວຈາຕຸມມະຫາຣາຊຍ່ອມບອກເຖິງເຫຕທີ່ກ່າວມານັ້ນແກ່ພວກເທວະດາຊັ້ນດາວະດຶງສ໌ທີ່ມາປະຊຸມກັນຢູ່ທີ່ສຸທັມມາສະພາວ່າ ທ່ານຜູ້ນິຣະທຸກຂ໌ທັງຫລາຍ ໃນໝູ່ມະນຸສ ມະນຸສທີ່ເກື້ອກູນແກ່ມາຣດາ ເກື້ອກູນແກ່ບິດາ ເກື້ອກູນແກ່ສະມະນະ ເກື້ອກູນແກ່ພຣາມນ໌ ອ່ອນນ້ອມຕໍ່ຜູ້ຫລັກຜູ້ໃຫຍ່ໃນຕະກຸນ ຮັກສາອຸໂປສົຖ ປະຕິບັຕກະທໍາບຸນຍ໌ມີຢູ່ຫລາຍແລ.

ພິກຂຸທັງຫລາຍ ເມື່ອເປັນເຊັ່ນນັ້ນ ພວກເທວະດາຊັ້ນດາວະດຶງສ໌ກໍພາກັນດີໃຈວ່າ ທ່ານຜູ້ຈະເຣີນທັງຫລາຍ ກາຍທິພຈັກເຕັມບໍຣິບູນ ອະສຸຣະກາຍຈັກເສື່ອມສູນ ດັ່ງນີ້.

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໓໕/໔໗໖



“On the fifteenth, the uposatha day, the four great kings themselves wander over this world, thinking: ‘We hope there are many people who behave properly toward their mother and father, behave properly toward ascetics and brahmins, honor the elders of the family, observe the uposatha, keep the extra observance days, and do meritorious deeds.”

Source: Catumahārāja Sutta AN 3.37 AN i 142
Translated by Bhikkhu Bodhi
https://suttacentral.net/an3.37

# ສາຣະບານ

4 ບົທນຳ

8 ສາຣະບານ

14 ບົທທັມທີ່ຄວນຊາບກ່ອນ

25 “ທ່ານທັງຫລາຍໄດ້ຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຫລືໜໍ?”

33 ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ

47 ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂ

ຕລອດກາລນານ
64 ອຸໂປສົຖ ໓ ປະກາຣ
92 ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນອັນດະຊະ
ບາງພວກຮັກສາອຸໂປສົຖ
95 ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນຊະລາພຸຊະ
ບາງພວກຮັກສາອຸໂປສົຖ
98 ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນສັງເສທະຊະ
ບາງພວກຮັກສາອຸໂປສົຖ
101 ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນອຸປປາຕິກະ
ບາງພວກຮັກສາອຸໂປສົຖ
104 ເຣື່ອງນາຄແປງກາຍເປັນມະນຸສມາບວຊ
ພຣະຜູ້ມີພຣະພາຄຊົງຕຣັສບອກນາຄນັ້ນໃຫ້ໄປຮັກສາ
ອຸໂປສົຖ ດ້ວຍວິທີນີ້ ຈັກພົ້ນຈາກກຳເນີດນາຄ
ແລະຈັກໄດ້ອັຕຕະພາບຄວາມເປັນມະນຸສຢ່າງວ່ອງໄວ
109 ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈ
ໄດ້ເພາະຈິຕບໍຣິສຸທ
117 ສີລແລະຄວາມເຫັນຕົງເປັນເບື້ອງຕົ້ນແຫ່ງກຸສົລທັມ
122 ສີລະສັມປະທາເປັນນິມິຕ
ແຫ່ງອະຣິຍະມັຄປະກອບດ້ວຍອົງຄ໌ ໘
126 ອາສັຍສີລ ຕັ້ງຢູ່ໃນສີລແລ້ວ
ຈຶ່ງຈະເຣີນສັມມັປປະທານ ໔

130 ສີລຍ່ອມຊຳຣະປັນຍາໃຫ້ບໍຣິສຸທ
200 ບັນດິຕປາຖນາຄວາມສຸຂ ໓ ປະການ ຈຶ່ງຮັກສາສີລ
204 ເປັນທັມມະດາທີ່ອະວິປປະຕິສາຣຍ່ອມເກີດຂຶ້ນແກ່ ບຸຄຄົລຜູ້ມີສີລ ຜູ້ສົມບູນດ້ວຍສີລ
210 ສີລຍ່ອມຮູ້ໄດ້ດ້ວຍການຢູ່ຮ່ວມກັນ...
218 You Can Get to Know a Person's Ethics by Living with Them…
223 ສີລເປັນໜຶ່ງໃນທັມທີ່ເປັນເຫຕໃຫ້ສົມປາຖນາ
249 ຄວາມສຳຄັນຂອງການສະມາທານສັທທາ ສະມາທານ ສີລ ສະມາທານສຸຕະ ສະມາທານຈາຄະ ສະມາທານ ປັນຍາ ໃນທັມວິນັຍທີ່ພຣະຕະຖາຄົຕປະກາສແລ້ວ
254 ສີລທີ່ເປັນກຸສົລມີອະວິປປະຕິສາຣເປັນຜົລ ມີອະວິປປະຕິສາຣເປັນອານິສົງສ໌
261 ສີລທີ່ເປັນອະກຸສົລ
ສີລທີ່ເປັນກຸສົລ
285 Unskillful Behaviors
Skillful Behaviors
299 ສີລ ພຣົຕ ຊີວິຕ ພຣົມມະຈັນຍ໌
303 ຊານຸສະໂສນີພຣາມມ໌ທູລຖາມເຖິງພຣົມມະຈັນຍ໌ ທີ່ຂາດ ທະລຸ ດ່າງ ພ້ອຍ
312 ທຸສະສີລະສູຕ
316 ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ

ແລະອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລ
ຜູ້ເຖິງພ້ອມດ້ວຍສີລ
324 ຄວາມເປັນຜູ້ມີມິຕຊົ່ວເປັນອັນຕຣາຍຕໍ່ສີລ
ຄວາມເປັນຜູ້ມີມິຕດີເປັນອາຫາຣຂອງສີລ
331 ນັນທະນະເທວະບຸຕທູລຖາມພຣະຜູ້ມີພຣະພາຄ
334 ຈັນທະນະເທວະບຸຕທູລຖາມພຣະຜູ້ມີພຣະພາຄ
337 ອຸຄຄະຄະຫະບໍດີຊາວເມືອງເວສາລີ
ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌
ອັນບໍ່ເຄີຍມີມາ ໘ ປະກາຣ
346 ກິ່ນຫອມທວນລົມ
351 ຄຸນແຫ່ງກາຣສັນອາຫາຣຄັ້ງດຽວ
381 ຫລັກກາຣບໍຣິໂພຄອາຫາຣ
384 ເຫຕປັຈຈັຍທີ່ເຮັດໃຫ້ອາຍຸສັ້ນແລະອາຍຸຍືນ
387 ສີລເປັນໜຶ່ງໃນທັມທີ່ເປັນເຫຕໃຫ້ອາຍຸຍືນ
390 ພຣະເຈົ້າພິມພິສາຣກຣາບທູລພຣະຜູ້ມີພຣະພາຄ
ຂໍໃຫ້ພິກຂຸທັງຫລາຍປະຊຸມກັນໃນວັນ ໑໔ ຄ່ຳ,
໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌





“ອານົນທ໌ ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍ
ຄວນສຶກສາຢ່າງນີ້ວ່າ ເຮົາທັງຫລາຍຈັກພະຍາຍາມ
ບຳເພັນທັມທີ່ສູງຍິ່ງຂຶ້ນໄປ ປະນີຕຂຶ້ນໄປ ກໍຈັກກະ
ທຳໃຫ້ແຈ້ງເຊິ່ງວິມຸຕອັນເປັນທັມຊັ້ນຢ້ຽມ.

ອານົນທ໌ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.”

ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໘໘/໑໖໑-
໑໖໔/໑໗໐

# ບົທທັມທີ່ຄວນຊາບກ່ອນ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນໂກສົລຊົນບົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ຂະນະທີ່ສະເດັຈໄປຕາມຫົນທາງໄກ ໄດ້ທອດພຣະເນຕເຫັນປ່າສາລະໃຫຍ່ໃນປະເທສແຫ່ງໜຶ່ງ ຈຶ່ງຊົງແວະລົງຈາກທາງ ສະເດັຈເຂົ້າໄປສູ່ປ່າສາລະນັ້ນ ຄັນສະເດັຈເຖິງແລ້ວຈຶ່ງຊົງກະທຳການຍິ້ມໃຫ້ປາກົຕໃນທີ່ແຫ່ງໜຶ່ງ ຄັ້ງນັ້ນ ທ່ານພຣະອານົນທ໌ໄດ້ຄິດວ່າ ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ພຣະຜູ້ມີພຣະພາຄຊົງກະທຳການຍິ້ມໃຫ້ປາກົຕ ພຣະຕະຖາຄົຕຍ່ອມບໍ່ຊົງກະທຳການຍິ້ມໃຫ້ປາກົຕເມື່ອບໍ່ມີເຫຕ. ຄັ້ງນັ້ນ ທ່ານພຣະອານົນທ໌ຈຶ່ງໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

**ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ພຣະຜູ້ມີພຣະພາຄຊົງກະທຳການຍິ້ມໃຫ້ປາກົຕ ພຣະຕະຖາຄົຕຍ່ອມບໍ່ຊົງກະທຳການຍິ້ມໃຫ້ປາກົຕເມື່ອບໍ່ມີເຫຕ?**

ອານົນທ໌! ເຣື່ອງເຄີຍມີມາແລ້ວ ຄືໃນປະເທສນີ້ເຄີຍເປັນເມືອງອຸດົມຮັ່ງມີ ກວ້າງຂວາງ ມີຊົນຈຳນວນຫລາຍ ມີມະນຸສໜາແໜ້ນ ກໍພຣະຜູ້ມີພຣະພາຄພຣະນາມວ່າ ກັສສະປະອະຣະຫັນຕະສັມມາສັມພຸທທະຊົງອາສັຍຢູ່ໃນພຣະນະຄອຣນີ້ ກໍອຸປາສົກນາມວ່າ ພະເວສີ ຂອງພຣະຜູ້ມີພຣະພາຄພຣະນາມວ່າ ກັສສະປະອະຣະຫັນຕະສັມມາສັມພຸທທະ ເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສີລ ແລະອຸປາສົກປະມານ ໕໐໐ ຄົນ ຜູ້ທີ່ພະເວສີອຸປາສົກຊີ້ແຈງ ຊັກຊວນ ກໍບໍ່ກະທຳໃຫ້ບໍຣິບູນໃນສີລ.

ຄັ້ງນັ້ນ ພະເວສີອຸປາສົກໄດ້ຄິດວ່າ ກໍເຮົາເປັນຜູ້ມີອຸປະການະຫລາຍ ເປັນຫົວໜ້າ ຊັກຊວນອຸປາສົກປະມານ ໕໐໐ ຄົນເຫລົ່ານີ້ ແລະເຮົາກໍເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສີລ ແລະອຸປາສົກປະມານ ໕໐໐ ເຫລົ່ານີ້ ກໍບໍ່ກະທຳໃຫ້ບໍຣິບູນໃນສີລ ຕ່າງຄົນຕ່າງກໍເທົ່າໆກັນ ບໍ່ໄດ້ຍິ່ງໄປກວ່າກັນ ເພາະສະນັ້ນ ເຮົາຄວນປະຕິບັຕໃຫ້ຍິ່ງກວ່າ. ຄັ້ງນັ້ນ ພະເວສີອຸປາສົກໄດ້ເຂົ້າໄປຫາອຸປາສົກປະມານ ໕໐໐ ເຫລົ່ານັ້ນ ແລ້ວໄດ້ກ່າວວ່າ:

ທ່ານຜູ້ມີອາຍຸທັງຫລາຍ! ຕັ້ງແຕ່ວັນນີ້ໄປ ຂໍທ່ານທັງຫລາຍຈົ່ງຈຳເຮົາໄວ້ວ່າ ເປັນຜູ້ກະທຳໃຫ້ບໍຣິບູນໃນສີລ.

ຄັ້ງນັ້ນ ອຸປາສິກປະມານ ໕໐໐ ເຫລົ່ານັ້ນໄດ້ຄິດວ່າ ພະເວສີອຸປາສິກຜູ້ເປັນນາຍ ເປັນຜູ້ມີອຸປະກາຣະຫລາຍ ເປັນຫົວໜ້າຊັກຊວນເຮົາທັງຫລາຍ ກໍພະເວສີອຸປາສິກຜູ້ເປັນນາຍຈັກກະທຳໃຫ້ບໍຣິບູນໃນສີລ ເຫຕໃດເຮົາທັງຫລາຍຈະກະທຳສີລໃຫ້ບໍຣິບູນບໍ່ໄດ້ໜໍ?

ຄັ້ງນັ້ນ ອຸປາສິກປະມານ ໕໐໐ ເຫລົ່ານັ້ນໄດ້ເຂົ້າໄປຫາພະເວສີອຸປາສິກແລ້ວກ່າວວ່າ ຕັ້ງແຕ່ວັນນີ້ເປັນຕົ້ນໄປ ຂໍພະເວສີຜູ້ເປັນນາຍຈົ່ງຈຳອຸປາສິກ ໕໐໐ ເຫລົ່ານີ້ວ່າ ເປັນຜູ້ກະທຳໃຫ້ບໍຣິບູນໃນສີລ.

ຄັ້ງນັ້ນ ພະເວສີອຸປາສິກໄດ້ຄິດວ່າ ກໍເຮົາເປັນຜູ້ມີອຸປະກາຣະຫລາຍ ເປັນຫົວໜ້າ ຊັກຊວນອຸປາສິກປະມານ ໕໐໐ ຄົນເຫລົ່ານີ້ ເຮົາເປັນຜູ້ກະທຳໃຫ້ບໍຣິບູນໃນສີລ ແລະອຸປາສິກປະມານ ໕໐໐ ເຫລົ່ານີ້ ກໍກະທຳໃຫ້ບໍຣິບູນໃນສີລ ຕ່າງຄົນຕ່າງກໍເທົ່າໆກັນ ບໍ່ໄດ້ຍິ່ງໄປກວ່າກັນ ເພາະສະນັ້ນ ເຮົາຄວນປະຕິບັຕໃຫ້ຍິ່ງກວ່າ. ຄັ້ງນັ້ນ ພະເວສີອຸປາສິກໄດ້ເຂົ້າໄປຫາອຸປາສິກປະມານ ໕໐໐ ເຫລົ່ານັ້ນ ແລ້ວໄດ້ກ່າວວ່າ:

ທ່ານຜູ້ມີອາຍຸທັງຫລາຍ! ຕັ້ງແຕ່ວັນນີ້ໄປ ຂໍທ່ານທັງຫລາຍຈົ່ງຈໍາເຮົາໄວ້ວ່າ ເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ.

ຄັ້ງນັ້ນ ອຸປາສົກປະມານ ໕໐໐ ເຫລົ່ານັ້ນໄດ້ຄິດວ່າ ພະເວສີອຸປາສິກາຜູ້ເປັນນາຍ ເປັນຜູ້ມີອຸປະກາຣະຫລາຍ ເປັນຫົວໜ້າຊັກຊວນເຮົາທັງຫລາຍ ກໍພະເວສີອຸປາສົກຜູ້ເປັນນາຍຈັກເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ ເຫຕໃດເຮົາທັງຫລາຍຈະເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານບໍ່ໄດ້ໜໍ?

ຄັ້ງນັ້ນ ອຸປາສົກປະມານ ໕໐໐ ເຫລົ່ານັ້ນໄດ້ເຂົ້າໄປຫາພະເວສີອຸປາສົກແລ້ວກ່າວວ່າ ຕັ້ງແຕ່ວັນນີ້ເປັນຕົ້ນໄປ ຂໍພະເວສີຜູ້ເປັນນາຍຈົ່ງຈໍາອຸປາສົກ ໕໐໐ ເຫລົ່ານີ້ວ່າ ເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ.

ຄັ້ງນັ້ນ ພະເວສີອຸປາສົກໄດ້ຄິດວ່າ ກໍເຮົາເປັນຜູ້ມີອຸປະກາຣະຫລາຍ ເປັນຫົວໜ້າ ຊັກຊວນອຸປາສົກປະມານ ໕໐໐ ຄົນເຫລົ່ານີ້ ເຮົາເປັນຜູ້ກະທໍາໃຫ້ບໍຣິບູນໃນສີລ ແລະອຸປາສົກປະມານ ໕໐໐ ເຫລົ່ານີ້ກໍກະທໍາໃຫ້ບໍຣິບູນໃນສີລ, ເຮົາເປັນຜູ້

ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ ແລະອຸປາສົກປະມານ ໕໐໐ ເຫລົ່ານີ້ກໍເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ ຕ່າງຄົນຕ່າງກໍເທົ່າໆກັນ ບໍ່ໄດ້ຍິ່ງໄປກວ່າກັນເພາະສະນັ້ນ ເຮົາຄວນປະຕິບັຕໃຫ້ຍິ່ງກວ່າ. ຄັ້ງນັ້ນ ພະເວສີອຸປາສົກໄດ້ເຂົ້າໄປຫາອຸປາສົກປະມານ ໕໐໐ ເຫລົ່ານັ້ນ ແລ້ວໄດ້ກ່າວວ່າ:

ທ່ານຜູ້ມີອາຍຸທັງຫລາຍ! ຕັ້ງແຕ່ວັນນີ້ໄປ ຂໍທ່ານທັງຫລາຍຈົ່ງຈຳເຮົາໄວ້ວ່າ ເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລ.

ຄັ້ງນັ້ນ ອຸປາສົກປະມານ ໕໐໐ ເຫລົ່ານັ້ນໄດ້ຄິດວ່າ ພະເວສີອຸປາສົກຜູ້ເປັນນາຍ ເປັນຜູ້ມີອຸປະກາຣະຫລາຍ ເປັນຫົວໜ້າຊັກຊວນເຮົາທັງຫລາຍ ກໍພະເວສີອຸປາສົກຜູ້ເປັນນາຍຈັກເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລ ເຫຕໃດເຮົາທັງຫລາຍຈະເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລບໍ່ໄດ້ໜໍ?

ຄັ້ງນັ້ນ ອຸປາສິກປະມານ ໕໐໐ ເຫລົ່ານັ້ນໄດ້ເຂົ້າໄປຫາພະເວສິອຸປາສິກແລ້ວກ່າວວ່າ ຕັ້ງແຕ່ວັນນີ້ເປັນຕົ້ນໄປ ຂໍພະເວສິຜູ້ເປັນນາຍຈົ່ງຈຳອຸປາສິກ ໕໐໐ ເຫລົ່ານີ້ວ່າເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິການ.

ຄັ້ງນັ້ນ ພະເວສິອຸປາສິກໄດ້ຄິດວ່າ ກໍເຮົາເປັນຜູ້ມີອຸປະການະຫລາຍ ເປັນຫົວໜ້າ ຊັກຊວນອຸປາສິກປະມານ ໕໐໐ ຄົນເຫລົ່ານີ້ ເຮົາເປັນຜູ້ກະທຳໃຫ້ບໍຣິບູນໃນສີລ ແລະອຸປາສິກປະມານ ໕໐໐ ເຫລົ່ານີ້ ກໍກະທຳໃຫ້ບໍຣິບູນໃນສີລ, ເຮົາເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ ແລະອຸປາສິກປະມານ ໕໐໐ ເຫລົ່ານີ້ກໍເປັນຜູ້ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກຈາກເມຖຸນອັນເປັນທັມຂອງຊາວບ້ານ, ເຮົາເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິການ ແລະອຸປາສິກປະມານ ໕໐໐ ເຫລົ່ານີ້ກໍເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ເວັ້ນຈາກການບໍຣິໂພຄໃນຣາຕຣີ ງົດເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິການ ຕ່າງຄົນຕ່າງກໍເທົ່າໆກັນ ບໍ່ໄດ້ຍິ່ງໄປກວ່າກັນ ເພາະສະນັ້ນ ເຮົາຄວນປະຕິບັຕໃຫ້ຍິ່ງກວ່າ.

ຄັ້ງນັ້ນ ພະເວສີອຸປາສົກໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄພຣະນາມວ່າ ກັສສະປະອະຣະຫັນຕະສັມມາສັມພຸທທະເຖິງທີ່ປະທັບ ແລ້ວໄດ້ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຂໍບັນພະຊາອຸປະສົມບົທໃນສຳນັກຂອງພຣະຜູ້ມີພຣະພາຄ.

ພະເວສີອຸປາສົກໄດ້ບັນພະຊາອຸປະສົມບົທແລ້ວໃນສຳນັກຂອງພຣະຜູ້ມີພຣະພາຄພຣະນາມວ່າ ກັສສະປະອະຣະຫັນຕະສັມມາສັມພຸທທະ ເມື່ອພະເວສີພິກຂຸອຸປະສົມບົທແລ້ວບໍ່ນານຫລີກອອກຈາກໝູ່ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ບໍ່ນານກໍກະທຳໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ອັນຍອດຢ້ຽມ ທີ່ກຸລະບຸຕທັງຫລາຍອອກບວຊເປັນບັນພະຊິຕໂດຍຊອບມີຄວາມຕ້ອງການ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ ພະເວສີພິກຂຸກໍໄດ້ເປັນພຣະອະຣະຫັນຕ໌ອົງຄ໌ໜຶ່ງໃນຈຳນວນພຣະອະຣະຫັນຕ໌ທັງຫລາຍ.

ອານົນທ໌! ຄັ້ງນັ້ນ ອຸປາສົກປະມານ ໕໐໐ ເຫລົ່ານັ້ນໄດ້ຄິດວ່າ ພະເວສີອຸປາສົກຜູ້ເປັນນາຍ ເປັນຜູ້ມີອຸປະກາຣະຫລາຍ ເປັນ

ຫົວໜ້າ ຊັກຊວນເຮົາທັງຫລາຍ ກໍພະເວສີອຸປາສົກຜູ້ເປັນນາຍ ປົງຜົມແລະໜວດ **ຄອງຜ້າກາສາຍະ**ອອກບວຊເປັນບັນພະຊິຕ ເຫຕໃດເຮົາທັງຫລາຍຈະເປັນຜູ້ປົງຜົມແລະໜວດ ຄອງຜ້າກາສາຍະອອກບວຊເປັນບັນພະຊິຕບໍ່ໄດ້ໜໍ?

*(ອະຖະໂຂ ອານັນທະ ເຕສັງ ປັນຈັນນັງ ອຸປາສະກະສະຕານັງ ເອຕະທະໂຫສິ ອັຍໂຍ ໂຂ ພະເວສີ ອັມຫາກັງ ພະຫູປະກາໂຣ ປຸພພັງຄະໂມ ສະມາທະເປຕາ ອັຍໂຍ ຫິ ນາມະ ພະເວສີ ເກສະມັສສຸງ ໂອຫາເຣຕວາ* ***ກາສາຍານິ ວັຕຖານິ ອັຈສາເທຕວາ*** *ອະຄາຣັສມາ ອະນະຄາຣິຍັງ ປັພ-ພະຊິສສະຕິ ກິມັງຄັງ ປະນະ ມະຍັນຕິ)*

ຄັ້ງນັ້ນ ອຸປາສົກປະມານ ໕໐໐ ເຫລົ່ານັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄພຣະນາມວ່າ ກັສສະປະອະຣະຫັນຕະສັມມາສັມພຸທທະເຖິງທີ່ປະທັບ ແລ້ວໄດ້ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍຂໍບັນພະຊາອຸປະສົມບົທໃນສຳນັກຂອງພຣະຜູ້ມີພຣະພາຄ.

ຄັ້ງນັ້ນ ພະເວສີພິກຂຸໄດ້ຄິດວ່າ ເຮົາແລເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງວິມຸຕຕິສຸຂ ອັນເປັນທັມຊັ້ນຍັ່ງມ. ໂອໜໍ ພິກຂຸປະມານ ໕໐໐ ເຫລົ່ານີ້ກໍຄວນເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງວິມຸຕຕິສຸຂ ອັນເປັນທັມຊັ້ນຍັ່ງມນີ້.

ຄັ້ງນັ້ນ ພິກຂຸປະມານ ໕໐໐ ເຫລົ່ານັ້ນຕ່າງເປັນຜູ້ຫລີກອອກຈາກໝູ່ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ບໍ່ນານກໍກະທຳໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ອັນຍອດຢ້ຽມ ທີ່ກຸລະບຸຕທັງຫລາຍອອກບວຊເປັນບັນພະຊິຕໂດຍຊອບມີຄວາມຕ້ອງການ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ ພິກຂຸປະມານ ໕໐໐ ເຫລົ່ານັ້ນເຊິ່ງມີພະເວສີພິກຂຸເປັນປະມຸຂ ພະຍາຍາມບຳເພັນທັມທີ່ສູງຍິ່ງຂຶ້ນໄປ ປະນີຕຂຶ້ນໄປກໍກະທຳໃຫ້ແຈ້ງເຊິ່ງວິມຸຕອັນເປັນທັມຊັ້ນຢ້ຽມ ດ້ວຍປະການຢ່າງນີ້.

**ອານົນທ໌! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ເຮົາທັງຫລາຍຈັກພະຍາຍາມບຳເພັນທັມທີ່ສູງຍິ່ງຂຶ້ນໄປ ປະນີຕຂຶ້ນໄປ ກໍຈັກກະທຳໃຫ້ແຈ້ງເຊິ່ງວິມຸຕອັນເປັນທັມຊັ້ນຢ້ຽມ. ອານົນທ໌ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.**

ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໗໑-໑໗໔/໑໗໐

"ພາຫິຍະ ເພາະສະນັ້ນ ເຈົ້າຈົ່ງຊຳຣະເບື້ອງຕົ້ນ ແຫ່ງກຸສົລທັມໃຫ້ບໍຣິສຸທເສຍກ່ອນ ກໍອັນໃດເປັນ ເບື້ອງຕົ້ນແຫ່ງກຸສົລທັມ?

ຄືສີລທີ່ບໍຣິສຸທດີ ແລະຄວາມເຫັນຕົງ."

ສັງຍຸຕຕະນິກາຍ ມະຫາວາຣະວັຄ
໑໙/໑໘໑/໗໔໗





# “ທ່ານທັງຫລາຍໄດ້ຮັກສາອຸໂປສົຖ ປະກອບດ້ວຍອົງຄ໌ ໘ ຫລືໜໍ?”

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ນິໂຄທາຣາມ ໃກ້ພຣະນະຄອຣກະບິລະພັສ ໃນສັກກະຊົນບົທ, ຄັ້ງນັ້ນແລ ອຸປາສົກຊາວສັກກະຊົນບົທຈຳນວນຫລາຍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບໃນວັນອຸໂປສົຖ ຖວາຍອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຕຣັສຖາມອຸປາສົກຊາວສັກກະຊົນບົທວ່າ:

**ຊາວສັກກະທັງຫລາຍ! ທ່ານທັງຫລາຍໄດ້ຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຫລືໜໍ?**

ອຸປາສົກຊາວສັກກະຊົນບົທເຫລົ່ານັ້ນກາຣາບທູລວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ບາງຄາວພວກຂ້ານ້ອຍທັງຫລາຍກໍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ບາງຄາວກໍບໍ່ໄດ້ຮັກສາພຣະອົງຄ໌ຜູ້ຈະເຣີນ.

**ຊາວສັກກະທັງຫລາຍ! ບໍ່ເປັນລາພຂອງທ່ານທັງຫລາຍເສຍແລ້ວ ທ່ານທັງຫລາຍບໍ່ໄດ້ດີເສຍແລ້ວ ທີ່ທ່ານທັງຫລາຍເມື່ອຊີວິຕມີພັຍເພາະຄວາມໂສກ ມີພັຍເພາະຄວາມຕາຍຢູ່ຢ່າງນີ້ ບາງຄາວກໍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ບາງຄາວກໍບໍ່ໄດ້ຮັກສາ.**

ຊາວສັກກະທັງຫລາຍ! ທ່ານທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສໃນໂລກນີ້ຍ່ອມກະທຳຊັພຍ໌ເຄິ່ງກະຫາປະນະໃຫ້ເກີດຂຶ້ນທຸກໆວັນ ດ້ວຍການງານອັນຊອບ ໂດຍບໍ່ແຕະຕ້ອງອະກຸສົລເລີຍ ສົມຄວນຈະກ່າວໄດ້ຫລືບໍ່ວ່າ ເປັນບຸຣຸສສລາດສົມບູນດ້ວຍຄວາມໝັ່ນ?

ສົມຄວນກ່າວໄດ້ຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຊາວສັກກະທັງຫລາຍ! ທ່ານທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສໃນໂລກນີ້ຍ່ອມກະທຳຊັພຍ໌ ໑ ກະຫາປະນະ ໃຫ້ເກີດຂຶ້ນທຸກໆວັນ ດ້ວຍການງານອັນຊອບ ໂດຍບໍ່ແຕະຕ້ອງອະກຸສົລເລີຍ ສົມຄວນຈະກ່າວໄດ້ຫລືບໍ່ວ່າ ເປັນບຸຣຸສສລາດ ສົມບູນດ້ວຍຄວາມໝັ່ນ?

ສົມຄວນກ່າວໄດ້ຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຊາວສັກກະທັງຫລາຍ! ທ່ານທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສໃນໂລກນີ້ຍ່ອມກະທຳຊັພຍ໌ ໒ ກະຫາປະນະ, ໓ ກະຫາປະນະ, ໔ ກະຫາປະນະ, ໕ ກະຫາປະນະ, ໖ ກະຫາປະນະ, ໗ ກະຫາປະນະ, ໘ ກະຫາປະນະ, ໙ ກະຫາປະນະ, ໑໐ ກະຫາປະນະ, ໒໐ ກະຫາປະນະ, ໓໐ ກະຫາປະນະ, ໔໐ ກະຫາປະນະ, ໕໐ ກະຫາປະນະ, ໖໐ ກະຫາປະນະ, ໗໐ ກະຫາປະນະ, ໘໐ ກະຫາປະນະ, ໙໐ ກະຫາປະນະ, ໑໐໐ ກະຫາປະນະ ໃຫ້ເກີດຂຶ້ນທຸກໆວັນ ດ້ວຍການງານອັນຊອບ ໂດຍບໍ່ແຕະຕ້ອງອະກຸສົລເລີຍ ສົມຄວນຈະກ່າວໄດ້ຫລືບໍ່ວ່າ ເປັນບຸຣຸສສລາດ ສົມບູນດ້ວຍຄວາມໝັ່ນ?

ສົມຄວນກ່າວໄດ້ຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຊາວສັກກະທັງຫລາຍ! ທ່ານທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສໃນໂລກນີ້ຍ່ອມກະທຳຊັພຍ໌ ໑໐໐ ກະຫາປະນະ, ໑໐໐໐ ກະຫາປະນະໃຫ້ເກີດຂຶ້ນທຸກໆວັນ ເກັບຊັພຍ໌ທີ່ຕົນໄດ້ແລ້ວ ໄດ້ແລ້ວໄວ້ ເປັນຜູ້ມີຊີວິຕຮ້ອຍປີ ຍ່ອມຈະປະສົບກອງໂພຄະສົມບັຕຫລາຍຫລືໜໍ?

ຍ່ອມເປັນຢ່າງນັ້ນໄດ້ ພຣະອົງຄ໌ຜູ້ຈະເຣີນ!

ຊາວສັກກະທັງຫລາຍ! ທ່ານທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຈະສເວີຍຄວາມສຸຂໂດຍສ່ວນດຽວຢູ່ໜຶ່ງຄືນໜຶ່ງວັນ ຫລືເຄິ່ງວັນ ອັນມີໂພຄະສົມບັຕເປັນເຫຕ ມີໂພຄະສົມບັຕເປັນແດນເກີດ ມີໂພຄະສົມບັຕເປັນທີ່ຕັ້ງຫລືໜໍ?

ບໍ່ເປັນຢ່າງນັ້ນເລີຍ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເປັນເພາະເຫຕໃດ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເພາະກາມທັງຫລາຍເປັນຂອງບໍ່ທ່ຽງ ເປັນຂອງວ່າງເປົ່າ ເປັນຂອງຫລອກລວງ ເປັນຂອງມີຄວາມຈິບຫາຍໄປເປັນທັມມະດາ.

ຊາວສັກກະທັງຫລາຍ! ສ່ວນສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ປະຕິບັດຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໑໐ ປີ ຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລ ຍ່ອມເປັນສະກະທາຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັດບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ໑໐ ປີຈົ່ງຍົກໄວ້ ສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ປະຕິບັດຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໙ ປີ, ໘ ປີ, ໗ ປີ, ໖ ປີ, ໕ ປີ, ໔ ປີ, ໓ ປີ, ໒ ປີ, ໑ ປີ, ຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລ ຍ່ອມເປັນສະກະທາຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັດບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ໑ ປີຈົ່ງຍົກໄວ້ ສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ປະຕິບັດຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໑໐ ເດືອນ ຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລ ຍ່ອມເປັນສະກະທາ

ຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັດບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ໑໐ ເດືອນຈົ່ງຍົກໄວ້ ສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວປະຕິບັດຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໙ ເດືອນ, ໘ ເດືອນ, ໗ ເດືອນ, ໖ ເດືອນ, ໕ ເດືອນ, ໔ ເດືອນ, ໓ ເດືອນ, ໒ ເດືອນ, ໑ ເດືອນ, ເຄິ່ງເດືອນ, ຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລ ຍ່ອມເປັນສະກະທາຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັດບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ເຄິ່ງເດືອນຈົ່ງຍົກໄວ້ ສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວປະຕິບັດຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໑໐ ຄືນ ໑໐ ວັນຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລ ຍ່ອມເປັນສະກະທາຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັດບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ໑໐ ຄືນ ໑໐ ວັນຈົ່ງຍົກໄວ້ ສາວົກຂອງເຮົາໃນທັມວິນັຍນີ້ ເປັນຜູ້ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວ ປະຕິບັຕຕາມຄຳທີ່ເຮົາພ່ຳສອນຢູ່ຕລອດ ໙ ຄືນ ໙ ວັນ, ໘ ຄືນ ໘ ວັນ, ໗ ຄືນ ໗ ວັນ, ໖ ຄືນ ໖ ວັນ, ໕ ຄືນ ໕ ວັນ, ໔ ຄືນ ໔ ວັນ, ໓ ຄືນ ໓ ວັນ, ໒ ຄືນ ໒ ວັນ, ໑ ຄືນ ໑ ວັນ, ຍ່ອມສເວີຍຄວາມສຸຂໂດຍສ່ວນດຽວຕລອດຮ້ອຍປີກໍມີ ໝື່ນປີກໍມີ ແສນປີກໍມີ ແລະສາວົກຂອງເຮົານັ້ນແລຍ່ອມເປັນສະກະທາຄາມີກໍມີ ເປັນອະນາຄາມີກໍມີ ເປັນໂສດາບັນປະຕິບັຕບໍ່ຜິດກໍມີ.

ຊາວສັກກະທັງຫລາຍ! ບໍ່ເປັນລາພຂອງທ່ານທັງຫລາຍເສຍແລ້ວ ທ່ານທັງຫລາຍບໍ່ໄດ້ດີເສຍແລ້ວ ທີ່ທ່ານທັງຫລາຍເມື່ອຊີວິຕມີພັຍເພາະຄວາມໂສກ ມີພັຍເພາະຄວາມຕາຍຢູ່ຢ່າງນີ້ບາງຄາວກໍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ບາງຄາວກໍບໍ່ໄດ້ຮັກສາ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍເຫລົ່ານີ້ຈັກຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຕັ້ງແຕ່ວັນນີ້ເປັນຕົ້ນໄປ.

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໓໖-໓໙/໔໖*



# ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ບຸພພາຣາມ ປາສາທຂອງມິຄາຣະມາຣດາ ໃກ້ພຣະນະຄອຣສາວັຕຖີ ຄັ້ງນັ້ນແລນາງວິສາຂາມິຄາຣະມາຣດາເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

ວິສາຂາ! ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ.

**ວິສາຂາ! ກໍອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ອັນບຸຄຄົລຮັກສາແລ້ວຢ່າງໃດ ຈຶ່ງມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ?**

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຊີວິຕ; **ໃນວັນນີ້ ເຮົາກໍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໑ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະອະທິນນາທານ, ງົດເວັ້ນຈາກ

ອະທິນນາທານ, ຖືເອົາແຕ່ສິ່ງຂອງທີ່ເຂົາໃຫ້ ຫວັງແຕ່ສິ່ງຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຊີວິຕ; **ໃນວັນນີ້ ເຮົາກໍລະອະທິນນາທານ, ງົດເວັ້ນຈາກອະທິນນາທານ, ຖືເອົາແຕ່ສິ່ງຂອງທີ່ເຂົາໃຫ້ ຫວັງແຕ່ສິ່ງຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໒ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນທັມຂອງຊາວບ້ານຕລອດຊີວິຕ; **ໃນວັນນີ້ ເຮົາກໍລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນທັມຂອງຊາວບ້ານຕລອດຄືນໜຶ່ງກັບວັນໜຶ່ງ** ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໓ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະມຸສາວາທ ງົດເວັ້ນຈາກມຸສາ

ວາທ ເວົ້າແຕ່ຄຳຈິງ ດຳຣົງຄວາມສັຈ ມີຖ້ອຍຄຳທີ່ເຊື່ອຖືໄດ້ ບໍ່ກ່າວໃຫ້ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຊີວິຕ; **ໃນວັນນີ້ ເຮົາກໍລະມຸສາວາທ ງົດເວັ້ນຈາກມຸສາວາທ ເວົ້າແຕ່ຄຳຈິງ ດຳຣົງຄວາມສັຈ ມີຖ້ອຍຄຳທີ່ເຊື່ອຖືໄດ້ ບໍ່ກ່າວໃຫ້ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໔ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຊີວິຕ; **ໃນວັນນີ້ ເຮົາກໍລະສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໕ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລຢູ່ຕລອດຊີວິຕ; **ໃນວັນນີ້ ເຮົາກໍບໍຣິໂພຄອາຫາຣຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລຢູ່ຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໖ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ *(ປຸນະ ຈະປະຣັງ ວິສາເຂ ອະຣິຍະສາວະໂກ ອິຕິ ປະຕິສັນຈິກຂະຕິ ຍາວະຊີວັງ ອະຣະຫັນໂຕ ເອກະພັຕຕິກາ ຣັຕຕູປະຣະຕາ ວິຣະຕາ ວິກາລະໂພຊະນາ ອະຫັງປັຊຊະ ອິມັນຈະ ຣັຕຕິງ ອິມັນຈະ ທິວະສັງ ເອກະພັຕຕິໂກ ຣັຕຕູປະຣະໂຕ ວິຣະໂຕ ວິກາລະໂພຊະນາ ອິມິນາປັງເຄນະ ອະຣະຫະຕັງ ອະນຸກະໂຣມິ ອຸໂປສະໂຖ ຈະ ເມ ອຸປະວຸຕໂຖ ພະວິສສະຕີຕິ ອິມິນາ ສັຕເຖນະ ອັງເຄນະ ສະມັນນາຄະໂຕ ໂຫຕິ)*.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາອັນເປັນຖານແຫ່ງການແຕ່ງໂຕຕລອດຊີວິຕ; **ໃນວັນນີ້ ເຮົາກໍງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການ**

**ຫລີ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາ ອັນເປັນຖານແຫ່ງການແຕ່ງໂຕຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໗ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຊີວິຕ; **ໃນວັນນີ້ ເຮົາກໍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຄືນໜຶ່ງກັບວັນໜຶ່ງ,** ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໘ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ *(ຍາວະຊີວັງ ອະຣະຫັນໂຕ ອຸຈຈາສະຍະນະມະຫາສະຍະນັງ ປະຫາຍະ ອຸຈຈາສະຍະນະມະຫາສະຍະນາ ປະຕິວິຣະຕາ ນີຈເສີຍຍັງ ກັປເປນຕິ ມັນຈະເກ ວາ ຕິນະສັນຖະຣະເກ ວາ ອະຫັງປັຊຊະ ອິມັນຈະ ຣັຕຕິງ ອິມັນຈະ ທິວະສັງ ອຸຈຈາສະຍະນະມະຫາສະຍະນັງ ປະຫາຍະ ອຸຈຈາສະຍະນະມະຫາສະຍະນາ ປະຕິວິຣະໂຕ ນີຈເສີຍຍັງ ກັປເປມິ ມັນຈະເກ ວາ ຕິນະສັນຖະຣະເກ ວາ ອິມີນາປັງເຄນະ ອະຣະຫະຕັງ ອະນຸກະໂຣມິ ອຸໂປສະ-*

*ໂຖ ຈະ ເມ ອຸປະວຸຕໂຖ ພະວິສສະຕີຕິ ອິມິນາ ສັຕເຖນະ ອັງເຄນະ ສະ-ມັນນາຄະໂຕ ໂຫຕີ).*

ວິສາຂາ! ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນີ້ແລ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ.

ວິສາຂາ! ກໍອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນີ້ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍພຽງໃດ?

ວິສາຂາ! ປຽບເໝືອນພຣະຣາຊາສເວີຍຣາຊະສົມບັຕ ດຳຣົງອິສສະຣາທິປັຈໃນຊົນບົທໃຫຍ່ໆ ໑໖ ຣັຖ, ມີຣັຕນະ ໗ ປະການມາກມາຍ, ເຫລົ່ານີ້ຄື ອັງຄະ ມະຄະທະ ກາສີ ໂກສົລ ວັຊຊີ ມັລລະ ເຈດີຍ໌ ວັງສະ ກຸຣຸ ປັນຈາລະ ມັຈສະ ສຸຣະເສນະ ອັສສະກະ ອະວັນຕີ ຄັນທາຣະ ກັມໂພຊະ ການສເວີຍຣາຊະສົມບັຕ ດຳຣົງອິສສະຣາທິປັຈຂອງພຣະຣາຊານັ້ນ ຍ່ອມບໍ່ເຖິງສ່ວນທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການຂໍ້ນັ້ນເພາະເຫຕໃດ? ເພາະຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໕໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໕໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໑໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດາວະດຶງສ໌, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໑໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດາວະດຶງສ໌.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອ

ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນດາວະດຶງສ໌ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໒໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຍາມາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໒໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຍາມາ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຍາມາ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໔໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດຸສິຕ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ,

໑໘ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໔໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດຸສິຕ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນດຸສິຕ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໘໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນນິມມານະຣະດີ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໘ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໘໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນນິມມານະຣະດີ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນນິມມານະຣະດີ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໑,໖໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໑໖,໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ບຸຄຄົລບໍ່ຄວນຂ້າສັຕ ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ຄວນເວັ້ນຈາກເມຖຸນທັມ ອັນບໍ່ແມ່ນຄວາມປະພຶຕຂອງພຣົມບໍ່ຄວນເວົ້າຕົວະ ບໍ່ຄວນດື່ມນ້ຳເມົາ ບໍ່ຄວນບໍຣິໂພຄອາຫານ

ໃນເວລາວິກາລ ໃນຣາຕຣີ ບໍ່ຄວນປະດັບຕົກແຕ່ງດ້ວຍດອກໄມ້ແລະຂອງຫອມ ຄວນນອນເທິງຕຽງ ເທິງແຜ່ນດິນ ຫລືເທິງເຄື່ອງລາດດ້ວຍຫຍ້າ ບັນດິຕທັງຫລາຍກ່າວອຸໂປສົຖ ໘ ປະການ ທີ່ພຣະພຸທທະເຈົ້າຜູ້ເຖິງທີ່ສຸດແຫ່ງທຸກຂ໌ຊົງປະກາສແລ້ວ ດວງຈັນທ໌ແລະດວງອາທິຕທັງສອງສ່ອງແສງສະວ່າງສະໄຫວ ຍ່ອມໂຄຈອຣໄປຕາມວິຖີພຽງໃດ ດວງຈັນທ໌ແລະດວງອາທິຕນັ້ນກໍກຳຈັດຄວາມມືດໄດ້ພຽງນັ້ນ ລອຍຢູ່ເທິງອາກາສ ສ່ອງແສງທົ່ວທຸກທິສໃນທ້ອງຟ້າ ຊັພຍ໌ໃດອັນມີຢູ່ໃນລະຫວ່າງນີ້ ຄືແກ້ວມຸກດາ ແກ້ວມະນີ ແກ້ວໄພທູຣຍ໌ ຫລືທອງຄຳມີສີສຸກໃສທີ່ຮຽກກັນວ່າ ທະຕະກະ ດວງຈັນທ໌ດວງອາທິຕແລະຊັພຍ໌ນັ້ນໆ ຍ່ອມບໍ່ເຖິງສ້ຽວທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ປຽບເໝືອນຣັສມີຂອງດວງຈັນທ໌ຍ່ອມຂົ່ມໝູ່ດາວທັງຫລາຍ ສັນນັ້ນ. ເພາະເຫຕນັ້ນແລ ຍິງຫລືຊາຍຜູ້ມີສີລເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ກະທຳບຸນຍ໌ທັງຫລາຍອັນມີສຸຂເປັນກຳໄຣ ບໍ່ມີໃຜຕິຕຽນ ຍ່ອມເຂົ້າເຖິງສວັນ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໔໓/໔໐໐-໔໐໔/໑໓໓*



“ວາເສຕຖະ ຖ້າໂລກ ພ້ອມທັງເທວະໂລກ ມາຣໂລກ
ພຣົມມະໂລກ ໃນໝູ່ສັຕ ພ້ອມທັງສະມະນະພຣາມນ໌
ເທວະດາແລະມະນຸສ ຮັກສາອຸໂປສົຖປະກອບດ້ວຍອົງຄ໌
໗ ປະກາຣ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໗ ປະ
ກາຣນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມ
ສຸຂຕລອດການານແກ່ໂລກ ພ້ອມທັງເທວະໂລກ ມາຣ
ໂລກ ພຣົມມະໂລກ ໃນໝູ່ສັຕ ພ້ອມທັງ
ສະມະນະພຣາມນ໌ ເທວະດາແລະມະນຸສ.”



# ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ກູຕາຄາຣະສາລາ ປ່າມະຫາວັນ ໃກ້ພຣະນະຄອຣເວສາລີ. ຄັ້ງນັ້ນແລ ວາເສຕຖະອຸປາສົກເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

**ວາເສຕຖະ! ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ.**

ວາເສຕຖະ! ກໍອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ ອັນບຸຄຄົລຮັກສາແລ້ວຢ່າງໃດ ຈຶ່ງມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ?

ວາເສຕຖະ! ອະຣິຍະສາວົກໃນທັມວິນັຍນີ້ ຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຣຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະກາຣທີ ໑ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອີກປະກາຣໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະອະທິນນາທານ, ງົດເວັ້ນ

ຈາກອະທິນນາທານ, ຖືເອົາແຕ່ສິ່ງຂອງທີ່ເຂົາໃຫ້ ຫວັງແຕ່ສິ່ງຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍລະອະທິນນາທານ, ງົດເວັ້ນຈາກອະທິນນາທານ, ຖືເອົາແຕ່ສິ່ງຂອງທີ່ເຂົາໃຫ້ ຫວັງແຕ່ສິ່ງຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໒ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນທັມຂອງຊາວບ້ານຕລອດຊີວິຕ; ໃນວັນນີ້ ເຮົາກໍລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນທັມຂອງຊາວບ້ານຕລອດຄືນໜຶ່ງກັບວັນໜຶ່ງ ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໓ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະມຸສາວາທ ງົດເວັ້ນຈາກ

ມຸສາວາທ ເວົ້າແຕ່ຄຳຈິງ ດຳຣົງຄວາມສັຈ ມີຖ້ອຍຄຳທີ່ເຊື່ອຖື ໄດ້ ບໍ່ກ່າວໃຫ້ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຊີວິຕ; ໃນວັນນີ້ ເຮົາກໍລະມຸສາວາທ ງົດເວັ້ນຈາກມຸສາວາທ ເວົ້າແຕ່ ຄຳຈິງ ດຳຣົງຄວາມສັຈ ມີຖ້ອຍຄຳທີ່ເຊື່ອຖືໄດ້ ບໍ່ກ່າວໃຫ້ ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ ທັງຫລາຍ ແລະອຸໂປສົຖປະການທີ ໔ ກໍຊື່ວ່າ ເຮົາໄດ້ສະມາ ທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ ວ່າ ພຣະອະຣະຫັນຕ໌ທັງຫລາຍລະສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະ ສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຊີວິຕ; ໃນ ວັນນີ້ ເຮົາກໍລະສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນ ເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍ ປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ ທັງຫລາຍ ແລະອຸໂປສົຖປະການທີ ໕ ກໍຊື່ວ່າ ເຮົາໄດ້ສະມາ ທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍເປັນຜູ້ບໍຣິໂພຄອາຫາຣຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍບໍຣິໂພຄອາຫາຣຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫາຣໃນເວລາວິກາລຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໖ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາອັນເປັນຖານແຫ່ງການແຕ່ງໂຕຕລອດຊີວິຕ; ໃນວັນນີ້ ເຮົາກໍງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາອັນເປັນຖານແຫ່ງການແຕ່ງໂຕຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໗ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຊີວິຕ; ໃນວັນນີ້ ເຮົາກໍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໘ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວາເສຕຖະ! ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນີ້ແລ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ.

ວາເສຕຖະ! ກໍອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນີ້ ອັນບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍພຽງໃດ?

ວາເສຕຖະ! ປຽບເໝືອນພຣະຣາຊາສເວີຍຣາຊະສົມບັຕດຳຣົງອິສສະຣາທິປັຈໃນຊົນບົທໃຫຍ່ໆ ໑໖ ຣັຖ, ມີຣັຕນະ ກ ປະການມາກມາຍ, ເຫລົ່ານີ້ຄື ອັງຄະ ມະຄະທະ ກາສີ ໂກສົລ

ວັຊຊີ ມັລລະ ເຈດີຍ໌ ວັງສະ ກຸຣຸ ປັນຈາລະ ມັຈສະ ສຸຣະເສນະ ອັສສະກະ ອະວັນຕີ ຄັນທາຣະ ກັມໂພຊະ ການສເວີຍຣາຊະສົມບັຕ ດຳຣົງອິສສະຣາທິປັຈຂອງພຣະຣາຊານັ້ນ ຍ່ອມບໍ່ເຖິງສ້ຽວທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ຂໍ້ນັ້ນເພາະເຫດໃດ? ເພາະຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໕໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໘ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໕໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໑໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດາວະດຶງສ໌, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໑໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດາວະດຶງສ໌.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນດາວະດຶງສ໌ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໒໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຍາມາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໒໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຍາມາ.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ

ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຍາມາ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໔໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດຸສິຕ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໔໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດຸສິຕ.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນດຸສິຕ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໘໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນນິມມານະຣະດີ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນ

ໜຶ່ງເດືອນ, ໑໔ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໗໐໐໐ ປີທິພ ໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນນິມມານະຣະດີ.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍ ກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງ ເທວະດາຊັ້ນນິມມານະຣະດີ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງ ມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວາເສຕຖະ! ໑,໖໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງ ຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ, ໓໐ ຣາຕຣີ ໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໔ ເດືອນໂດຍເດືອນນັ້ນເປັນ ໜຶ່ງປີ, ໑໖,໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະ ດາຊັ້ນປະຣະນິມມິຕະວະສະວັຕດີ.

ວາເສຕຖະ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍ ກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງ

ເທວະດາຊັ້ນປະຣະນິມມິຕະວະສະວັຕດີ ນີ້ເປັນຖານະທີ່ຈະມີໄດ້.

ວາເສຕຖະ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ບຸຄຄົລບໍ່ຄວນຂ້າສັຕ ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ຄວນເວັ້ນຈາກເມຖຸນທັມ ອັນບໍ່ແມ່ນຄວາມປະພຶຕຂອງພຣົມ ບໍ່ຄວນເວົ້າຕົວະ ບໍ່ຄວນດື່ມນ້ຳເມົາ ບໍ່ຄວນບໍຣິໂພຄອາຫາຣໃນເວລາວິກາລ ໃນຣາຕຣີ ບໍ່ຄວນປະດັບຕົກແຕ່ງດ້ວຍດອກໄມ້ແລະຂອງຫອມ ຄວນນອນເທິງຕຽງ ເທິງແຜ່ນດິນ ຫລືເທິງເຄື່ອງລາດດ້ວຍຫຍ້າ ບັນດິຕທັງຫລາຍກ່າວອຸໂປສົຖ ໘ ປະການ ທີ່ພຣະພຸທທະເຈົ້າຜູ້ເຖິງທີ່ສຸດແຫ່ງທຸກຂ໌ຊົງປະກາສແລ້ວ ດວງຈັນທ໌ແລະດວງອາທິຕທັງສອງສ່ອງແສງສະວ່າງສະໄຫວ ຍ່ອມໂຄຈອຣໄປຕາມວິຖີພຽງໃດ ດວງຈັນທ໌ແລະດວງອາທິຕນັ້ນກໍກຳຈັດຄວາມມືດໄດ້ພຽງນັ້ນ ລອຍຢູ່ເທິງອາກາສ ສ່ອງແສງທົ່ວທຸກທິສໃນທ້ອງຟ້າ ຊັພຍ໌ໃດອັນມີຢູ່ໃນລະຫວ່າງນີ້ ຄືແກ້ວມຸກດາ ແກ້ວມະນີ ແກ້ວໄພທູຣຍ໌ ຫລືທອງຄຳມີສີສຸກໃສທີ່ຮຽກກັນວ່າ ຫະຕະກະ ດວງຈັນທ໌ດວງອາທິຕແລະຊັພຍ໌ນັ້ນໆ ຍ່ອມບໍ່ເຖິງສ້ຽວທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ປຽບເໝືອນຣັສມີຂອງດວງຈັນທ໌ຍ່ອມຂົ່ມໝູ່ດາວ

ທັງຫລາຍ ສັນນັ້ນ. ເພາະເຫຕນັ້ນແລ ຍິງຫລືຊາຍຜູ້ມີສີລ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ກະທຳບຸນຍ໌ທັງຫລາຍອັນມີສຸຂເປັນກຳໄຣ ບໍ່ມີໃຜຕິຕຽນ ຍ່ອມເຂົ້າເຖິງສວັນ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ວາເສຕຖະອຸປາສົກໄດ້ກຣາບທູລພຣະຜູ້ມີພຣະພາຄຢ່າງນີ້ວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າຍາຕສາຍໂລຫິຕຜູ້ເປັນທີ່ຮັກຂອງຂ້ານ້ອຍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການານແກ່ຍາຕສາຍໂລຫິຕຜູ້ເປັນທີ່ຮັກຂອງຂ້ານ້ອຍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າກະສັຕທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການານແກ່ກະສັຕທັງປວງ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພຣາມນ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖ

ປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ພຣາມນ໌ທັງປວງ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າແພສຍ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ແພສຍ໌ທັງປວງ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າສູທທ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ສູທທ໌ທັງປວງ.

**ວາເສຕຖະ! ຂໍ້ນີ້ເປັນຢ່າງນັ້ນ.**
**ວາເສຕຖະ! ຂໍ້ນີ້ເປັນຢ່າງນັ້ນ.**

ວາເສຕຖະ! ຖ້າກະສັຕທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ກະສັຕທັງປວງ.

ວາເສຕຖະ! ຖ້າພຣາມນ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ພຣາມນ໌ທັງປວງ.

ວາເສຕຖະ! ຖ້າແພສຍ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ແພສຍ໌ທັງປວງ.

ວາເສຕຖະ! ຖ້າສູທທ໌ທັງປວງຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ສູທທ໌ທັງປວງ.

ວາເສຕຖະ! ຖ້າໂລກ ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກ ໃນໝູ່ສັຕ ພ້ອມທັງສະມະນະພຣາມນ໌ ເທວະດາແລະມະນຸສ ຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣ, ການຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ປະກາຣນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່

ໂລກ ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກ ໃນໝູ່ສັຕ ພ້ອມທັງສະມະນະພຣາມນ໌ ເທວະດາແລະມະນຸສ.

ວາເສຕຖະ! ຖ້າທ່ານຜູ້ມະຫາສາຣເຫລົ່ານີ້ຮັກສາອຸໂປສົຖ ປະກອບດ້ວຍອົງຄ໌ ໘ ປະການ, ການຮັກສາອຸໂປສົຖປະກອບ ດ້ວຍອົງຄ໌ ໘ ປະການນັ້ນ ຍ່ອມເປັນໄປເພື່ອປະໂຍຊນ໌ ເກື້ອກູນ ເພື່ອຄວາມສຸຂຕລອດການນານແກ່ທ່ານຜູ້ມະຫາສາຣ ເຫລົ່ານີ້ ຖ້າຫາກວ່າຕັ້ງໃຈ ຈະກ່າວຫຍັງເຖິງມະນຸສໝົ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*

*໔໓/໔໐໓-໔໐໔/໑໓໔*





“ວິສາຂາ ອະຣິຍະສາວົກໃນທັມວິນັຍນີ້ ຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຊີວິຕ, ໃນວັນນີ້ ເຮົາກໍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໑ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.”

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໙໕-໔໐໖/໕໑໐

# ອຸໂປສົຖ ໓ ປະການ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ປາສາທຂອງມິຄາຣະມາຣດາໃນບຸພພາຣາມ ໃກ້ພຣະນະຄອຣສາວັຕຖີ ຄັ້ງນັ້ນແລນາງວິສາຂາມິຄາຣະມາຣດາໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບໃນວັນອຸໂປສົຖ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວ ພຣະຜູ້ມີພຣະພາຄຕຣັສຖາມວ່າ:

ວິສາຂາ! ເຈົ້າມາຈາກໃສແຕ່ທ່ຽງວັນ?

ນາງວິສາຂາກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ວັນນີ້ຂ້ານ້ອຍເຂົ້າຈຳອຸໂປສົຖ.

ວິສາຂາ! ອຸໂປສົຖ ໓ ປະການີ້, ໓ ປະການເປັນຢ່າງໃດ? ຄື:

**ໂຄປາລະກະອຸໂປສົຖ,**
**ນິຄັນຖະອຸໂປສົຖ,**
**ອະຣິຍະອຸໂປສົຖ.**

ວິສາຂາ! ກໍໂຄປາລະກະອຸໂປສົຖເປັນຢ່າງໃດ?
ວິສາຂາ! ປຽບເໝືອນນາຍໂຄບາລ ຕອນແລງມອບຝູງງົວໃຫ້ແກ່ເຈົ້າຂອງແລ້ວ ພິຈາຣະນາດັ່ງນີ້ວ່າ ວັນນີ້ງົວໄດ້ທ່ຽວໄປໃນປະເທສນັ້ນໆ ດື່ມນ້ຳໃນປະເທສນັ້ນໆ ມື້ອື່ນງົວຈະທ່ຽວໄປໃນປະເທສນັ້ນໆ ຈະດື່ມນ້ຳໃນປະເທສນັ້ນໆ ສັນໃດ; ວິສາຂາ ສັນນັ້ນເໝືອນກັນ ຄົນຮັກສາອຸໂປສົຖບາງຄົນໃນໂລກນີ້ ພິຈາຣະນາດັ່ງນີ້ວ່າ ວັນນີ້ເຮົາຄ້ຽວຂອງຄ້ຽວຊະນິດນີ້ໆ ກິນຂອງຊະນິດນີ້ໆ ມື້ອື່ນເຮົາຈະຄ້ຽວຂອງຄ້ຽວຊະນິດນີ້ໆ ຈະກິນຂອງຊະນິດນີ້ໆ ເຂົາມີໃຈປະກອບດ້ວຍອະພິຊຊາ ກະທຳວັນເວລາໃຫ້ລ່ວງໄປດ້ວຍຄວາມໂລພນັ້ນ *(ໂສ ເຕນະ ໂລເພນະ ອະພິຊຊາ-ສະຫະຄະເຕນະ ເຈຕະສາ ທິສະວັງ ອະຕິນາເມຕິ)*. ວິສາຂາ ໂຄປາລະກະອຸໂປສົຖເປັນຢ່າງນີ້ແລ. ວິສາຂາ ໂຄປາລະກະອຸໂປສົຖ

ທີ່ບຸຄຄົລເຂົ້າຈຳແລ້ວຢ່າງນີ້ແລ ຍ່ອມບໍ່ມີຜົລຫລາຍ ບໍ່ມີອານິສົງສ໌ຫລາຍ ບໍ່ມີຄວາມຮຸ່ງເຮືອງຫລາຍ ບໍ່ມີຄວາມແຜ່ໄພສາລຫລາຍ.

ວິສາຂາ! ກໍນິຄັນຖະອຸໂປສົຖເປັນຢ່າງໃດ?
ວິສາຂາ! ມີສະມະນະພວກໜຶ່ງມີນາມວ່າ ນິຄຣົນຖ໌ ນິຄຣົນຖ໌ເຫລົ່ານັ້ນຊັກຊວນສາວົກຢ່າງນີ້ວ່າ ມາເຖີດ ທ່ານທັງຫລາຍ ທ່ານຈົ່ງວາງທັນດະ*(ທ່ອນໄມ້)* ໃນໝູ່ສັຕທີ່ຢູ່ທາງທິສບູຣະພາໃນທີ່ເລີຍຮ້ອຍໂຍຊນ໌ໄປ ຈົ່ງວາງທັນດະໃນໝູ່ສັຕທີ່ຢູ່ທາງທິສປັຈຈິມໃນທີ່ເລີຍຮ້ອຍໂຍຊນ໌ໄປ ຈົ່ງວາງທັນດະໃນໝູ່ສັຕທີ່ຢູ່ທາງທິສອຸດອຣໃນທີ່ເລີຍຮ້ອຍໂຍຊນ໌ໄປ ຈົ່ງວາງທັນດະໃນໝູ່ສັຕທີ່ຢູ່ທາງທິສທັກຂິນໃນທີ່ເລີຍຮ້ອຍໂຍຊນ໌ໄປ ນິຄຣົນຖ໌ເຫລົ່ານັ້ນຊັກຊວນເພື່ອເອັນດູສັຕບາງເຫລົ່າ ບໍ່ຊັກຊວນເພື່ອເອັນດູສັຕບາງເຫລົ່າ ດ້ວຍປະການຢ່າງນີ້.

ນິຄຣົນຖ໌ເຫລົ່ານັ້ນຊັກຊວນສາວົກໃນອຸໂປສົຖເຊັ່ນນັ້ນຢ່າງນີ້ວ່າ ມາເຖີດ ທ່ານທັງຫລາຍ ທ່ານຈົ່ງຖິ້ມຜ້າເສຍທຸກຊິ້ນ ແລ້ວກ່າວຢ່າງນີ້ວ່າ ເຮົາບໍ່ເປັນທີ່ກັງວົນຂອງໃຜໆ ໃນທີ່ໃດໆ ແລະຕົວເຮົາກໍບໍ່ມີຄວາມກັງວົນໃນບຸຄຄົລແລະສິ່ງຂອງໃດໆ ໃນທີ່ໃດໆ ດັ່ງນີ້ ແຕ່ມາຣດາບິດາຂອງເຂົາຍ່ອມຮູ້ຢູ່ວ່າ ຜູ້ນີ້ເປັນບຸຕຂອງເຮົາ ແມ່ນແຕ່ເຂົາເອງກໍຮູ້ຢູ່ວ່າ ທ່ານເຫລົ່ານີ້ເປັນມາຣດາ

ບິດາຂອງເຮົາ. ອີກຢ່າງໜຶ່ງ ບຸຕແລະພະຣິຍາຂອງເຂົາກໍຮູ້ຢູ່ວ່າ ຜູ້ນີ້ເປັນບິດາ ເປັນສາມີຂອງເຮົາ ແມ່ນແຕ່ເຂົາກໍຮູ້ຢູ່ວ່າ ຜູ້ນີ້ເປັນບຸຕ ເປັນພະຣິຍາຂອງເຮົາ ພວກທາສກັມມະກອຣຂອງເຂົາກໍຮູ້ຢູ່ວ່າ ທ່ານຜູ້ນີ້ເປັນນາຍຂອງເຮົາ ແມ່ນແຕ່ເຂົາກໍຮູ້ຢູ່ວ່າ ຄົນເຫລົ່ານີ້ເປັນທາສກັມມະກອຣຂອງເຮົາ ເຂົາຊັກຊວນໃນການເວົ້າຕົວະໃນສມັຍທີ່ຄວນຊັກຊວນໃນຄຳສັຈ ດ້ວຍປະການຢ່າງນີ້ ນີ້ເຮົາກ່າວວ່າເປັນມຸສາວາທ *(ອິທະມັສສະ ມຸສາວາທັສມິງ ວະທາມິ)*. ພໍລ່ວງຣາຕຣີນັ້ນໄປ ເຂົາຍ່ອມບໍຣິໂພຄໂພຄະເຫລົ່ານັ້ນທີ່ເຈົ້າຂອງບໍ່ໄດ້ໃຫ້ ນີ້ເຮົາກ່າວວ່າເປັນອະທິນນາທານ. ວິສາຂາ ນິຄັນຖະອຸໂປສົຖເປັນຢ່າງນີ້ແລ. ວິສາຂາ ນິຄັນຖະອຸໂປສົຖທີ່ບຸຄຄົລເຂົ້າຈຳແລ້ວຢ່າງນີ້ແລ ຍ່ອມບໍ່ມີຜົລຫລາຍ ບໍ່ມີອານິສົງສ໌ຫລາຍ ບໍ່ມີຄວາມຮຸ່ງເຮືອງຫລາຍ ບໍ່ມີຄວາມແຜ່ໄພສາລຫລາຍ.

**ວິສາຂາ! ກໍອະຣິຍະອຸໂປສົຖເປັນຢ່າງໃດ?**

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ.

ກໍຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງ ຕະຖາຄົຕວ່າ:

**ເພາະເຫຕຢ່າງນີ້ໆ**
**ພຣະຜູ້ມີພຣະພາຄ ພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌,**
**ຕຣັສຮູ້ເອງໂດຍຊອບ,**
**ເຖິງພ້ອມດ້ວຍວິຊຊາແລະຈະຣະນະ,**
**ສະເດັຈໄປດີແລ້ວ,**
**ຊົງຮູ້ແຈ້ງໂລກ,**
**ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ,**
**ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ,**
**ເປັນຜູ້ເບີກບານແລ້ວ,**
**ເປັນຜູ້ຈຳແນກທັມ** ດັ່ງນີ້.

ເມື່ອເຂົາຣະນຶກເຖິງຕະຖາຄົຕຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ປຽບເໝືອນຫົວທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນ ກໍຫົວທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງໃດ? ຈະກະທຳໃຫ້ສະອາດໄດ້ເພາະອາສັຍກັກກະ *(ກັກກັບຈະ ປະຕິຈຈະ)*, ດິນໝຽວ, ນ້ຳ, ແລະຄວາມພະຍາຍາມອັນເກີດແຕ່ເຫຕນັ້ນຂອງບຸຣຸສ. ວິສາຂາ ຫົວທີ່

ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງນີ້ແລ ສັນໃດ; ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍ ຄວາມພຽນ ສັນນັ້ນເໝືອນກັນ. ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງ ຕະຖາຄົຕວ່າ:

ເພາະເຫຕຢ່າງນີ້ໆ
ພຣະຜູ້ມີພຣະພາຄ ພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌,
ຕຣັສຮູ້ເອງໂດຍຊອບ,
ເຖິງພ້ອມດ້ວຍວິຊຊາແລະຈະຣະນະ,
ສະເດັຈໄປດີແລ້ວ,
ຊົງຮູ້ແຈ້ງໂລກ,
ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ,
ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ,
ເປັນຜູ້ເບີກບານແລ້ວ,
ເປັນຜູ້ຈຳແນກທັມ ດັ່ງນີ້.

ເມື່ອເຂົາຣະນຶກເຖິງຕະຖາຄົຕຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມ ປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ອະຣິຍະສາວົກນີ້ຮຽກວ່າ ເຂົ້າຈຳພຣົມມະອຸໂປສົຖ ຢູ່ຮ່ວມກັບພຣົມ ແລະມີຈິຕຜ່ອງໃສເພາະປຣາຣົພພຣົມ ຍ່ອມເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້. ວິສາຂາ ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງນີ້ແລ.

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ.

ກໍຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

**ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງພຣະທັມວ່າ ພຣະທັມເປັນທັມທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ອັນບຸຄຄົລຜູ້ບັນລຸຍ່ອມເຫັນເອງ ບໍ່ປະກອບດ້ວຍກາລ ຄວນຮຽກໃຫ້ມາເບິ່ງ ຄວນນ້ອມເຂົ້າມາ ອັນວິນຍູຊົນຍ່ອມຮູ້ໄດ້ສະເພາະຕົນ** ເມື່ອເຂົາຣະນຶກເຖິງພຣະທັມຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ປຽບເໝືອນກາຍທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນ.

ວິສາຂາ! ກໍກາຍທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງໃດ? ຈະກະທຳໃຫ້ສະອາດໄດ້ເພາະອາສັຍເຊືອກ, ຈຸນສຳຫລັບອາບນ້ຳ ແລະຄວາມພະຍາຍາມທີ່ເກີດແຕ່ເຫຕນັ້ນຂອງບຸຣຸສ.

ວິສາຂາ! ກາຍທີ່ເປື້ອນຍ່ອມກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງນີ້ແລ ສັນໃດ, ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ສັນນັ້ນເໝືອນກັນ. ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງພຣະທັມວ່າ ພຣະທັມເປັນທັມທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວອັນບຸຄຄົລຜູ້ບັນລຸຍ່ອມເຫັນເອງ ບໍ່ປະກອບດ້ວຍກາລ ຄວນຮຽກໃຫ້ມາເບິ່ງ ຄວນນ້ອມເຂົ້າມາ ອັນວິນຍູຊົນຍ່ອມຮູ້ໄດ້ສະເພາະຕົນ ເມື່ອເຂົາຣະນຶກເຖິງພຣະທັມຢູ່ ຈິຕຍ່ອມຜ່ອງໃສເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ອະຣິຍະສາວົກນີ້ຮຽກວ່າ ເຂົ້າຈຳທັມມະອຸໂປສົຖ ຢູ່ຮ່ວມກັບທັມ ແລະມີຈິຕຜ່ອງໃສເພາະປຣາຣົພທັມ ຍ່ອມເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງນີ້ແລ.

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ.

ກໍຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

**ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງພຣະສົງຄ໌ວ່າ ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕດີແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕຕົງແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕຊອບແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕສົມຄວນແລ້ວ, ໄດ້ແກ່ບຸຄຄົລເຫລົ່ານີ້ຄື ຄູ່ແຫ່ງບຸຣຸສສີ່ຄູ່ ນັບຮຽງຕົວໄດ້ ໘ ບຸຣຸສ ນັ້ນແຫລະຄືສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ, ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົານຳມາບູຊາ, ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົາຈັດໄວ້ຕ້ອນຮັບ, ເປັນສົງຄ໌ຄວນຮັບທັກຂິນາທານ, ເປັນສົງຄ໌ທີ່ບຸຄຄົລທົ່ວໄປຄວນທຳອັນຊະລີ, ເປັນສົງຄ໌ທີ່ເປັນນາບຸນຍ໌ຂອງໂລກ ບໍ່ມີນາບຸນຍ໌ອື່ນຍິ່ງກວ່າ.**

ເມື່ອເຂົາຣະນຶກເຖິງພຣະສົງຄ໌ຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ປຽບເໝືອນຜ້າທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນ.

ວິສາຂາ! ກໍຜ້າທີ່ເປື້ອນຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງໃດ? ຈະກະທຳໃຫ້ສະອາດໄດ້ເພາະອາສັຍເກືອ ນ້ຳກົຕ ໂຄມັຍ ນ້ຳ ແລະຄວາມພະຍາຍາມທີ່ເກີດແຕ່ເຫຕນັ້ນຂອງບຸຣຸສ.

ວິສາຂາ! ຜ້າທີ່ເປື້ອນຍ່ອມກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງນີ້ແລ ສັນໃດ, ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ສັນນັ້ນເໝືອນກັນ. ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງພຣະສົງຄ໌ວ່າ ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕດີແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕຕົງແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້ປະຕິບັຕຊອບແລ້ວ, ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ ເປັນຜູ້

ປະຕິບັດສົມຄວນແລ້ວ, ໄດ້ແກ່ບຸຄຄົລເຫລົ່ານີ້ຄື ຄູ່ແຫ່ງບຸຣຸສ ສີ່ຄູ່ ນັບຮຽງຕົວໄດ້ ໘ ບຸຣຸສ ນັ້ນແຫລະຄືສົງຄ໌ສາວົກຂອງ ພຣະຜູ້ມີພຣະພາຄ, ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົານຳມາ ບູຊາ, ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົາຈັດໄວ້ຕ້ອນຮັບ, ເປັນສົງຄ໌ຄວນຮັບທັກຂິນາທານ, ເປັນສົງຄ໌ທີ່ບຸຄຄົລທົ່ວໄປ ຄວນທຳອັນຊະລີ, ເປັນສົງຄ໌ທີ່ເປັນນາບຸນຍ໌ຂອງໂລກ ບໍ່ມີນາ ບຸນຍ໌ອື່ນຍິ່ງກວ່າ.

ເມື່ອເຂົາຣະນຶກເຖິງພຣະສົງຄ໌ຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມ ປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ອະຣິຍະສາວົກນີ້ຮຽກວ່າ ເຂົ້າຈຳສັງຄະອຸໂປສົຖ ຢູ່ ຮ່ວມກັບສົງຄ໌ ແລະມີຈິຕຜ່ອງໃສເພາະປຣາຣົພສົງຄ໌ ຍ່ອມ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້. ວິສາຂາ ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍ ຄວາມພຽນຢ່າງນີ້ແລ.

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍ ຄວາມພຽນ.

ກໍຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງສີລຂອງຕົນທີ່ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ວິນຍູຊົນສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິ ເມື່ອເຂົາຣະນຶກເຖິງສີລຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ປຽບເໝືອນແວ່ນທີ່ມົວຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນ.

ວິສາຂາ! ກໍແວ່ນທີ່ມົວຈະກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງໃດ? ຈະກະທຳໃຫ້ສະອາດໄດ້ເພາະອາສັຍນ້ຳມັນ ເຖົ່າ ແປງ ແລະຄວາມພະຍາຍາມທີ່ເກີດແຕ່ເຫຕນັ້ນຂອງບຸຣຸສ.

ວິສາຂາ! ແວ່ນທີ່ມົວຍ່ອມກະທຳໃຫ້ສະອາດໄດ້ດ້ວຍຄວາມພຽນຢ່າງນີ້ແລ ສັນໃດ, ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ສັນນັ້ນເໝືອນກັນ. ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງສີລ ຂອງຕົນທີ່ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ວິນ ຍູຊົມສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິ ເມື່ອເຂົາຣະນຶກເຖິງສີລຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາ ໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ອະຣິຍະສາວົກນີ້ຮຽກວ່າ ເຂົ້າຈຳສີລອຸໂປສົຖ ຢູ່ ຮ່ວມກັບສີລ ແລະມີຈິຕຜ່ອງໃສເພາະປຣາຣົພສີລ ຍ່ອມເກີດ ຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້. ວິສາຂາ ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍ ຄວາມພຽນຢ່າງນີ້ແລ.

ວິສາຂາ! ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍ ຄວາມພຽນ.

ກໍຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ຢ່າງໃດ?

**ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງເທວະ ດາວ່າ ເທວະດາຊັ້ນຈາຕຸມມະຫາຣາຊິກາມີຢູ່ ເທວະດາຊັ້ນດາ ວະດຶງສ໌ມີຢູ່ ເທວະດາຊັ້ນຍາມາມີຢູ່ ເທວະດາຊັ້ນດຸສິຕມີຢູ່**

**ເທວະດາຊັ້ນນິມມານະຣະດີມີຢູ່ ເທວະດາຊັ້ນປະຣະນິມມິຕະວະສະວັຕດີມີຢູ່ ເທວະດາຊັ້ນພຣົມມະກາຍິກາມີຢູ່ ເທວະດາທີ່ສູງກວ່ານັ້ນມີຢູ່ ເທວະດາເຫລົ່ານັ້ນປະກອບດ້ວຍສັທທາເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ສັທທາເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍສີລເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ສີລເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍສຸຕະເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ສຸຕະເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍຈາຄະເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ຈາຄະເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍປັນຍາເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ປັນຍາເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່.**

ເມື່ອເຂົາຣະນຶກເຖິງສັທທາ ສີລ ສຸຕະ ຈາຄະ ປັນຍາຂອງຕົນແລະຂອງເທວະດາເຫລົ່ານັ້ນຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ປຽບເໝືອນຄຳທີ່ໝົ່ນໝອງຈະກະທຳໃຫ້ສຸກໄດ້ດ້ວຍຄວາມພຽນ.

ວິສາຂາ! ກໍຄຳທີ່ໝົ່ນໝອງຈະກະທຳໃຫ້ສຸກໄດ້ດ້ວຍຄວາມພຽນຢ່າງໃດ? ຈະກະທຳໃຫ້ສຸກໄດ້ເພາະອາສັຍເບົ້າຫລອມຄຳ ເກືອ ຢາງໄມ້ ຄີມ ແລະຄວາມພະຍາຍາມທີ່ເກີດແຕ່ເຫຕນັ້ນຂອງບຸຣຸສ.

ວິສາຂາ! ຄຳທີ່ໝົ່ນໝອງຈະກະທຳໃຫ້ສຸກໄດ້ດ້ວຍຄວາມພຽນຢ່າງນີ້ແລ ສັນໃດ, ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ສັນນັ້ນເໝືອນກັນ. ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງໃດ?

ວິສາຂາ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມຣະນຶກເຖິງເທວະດາວ່າ ເທວະດາຊັ້ນຈາຕຸມມະຫາຣາຊິກາມີຢູ່ ເທວະດາຊັ້ນດາວະດຶງສ໌ມີຢູ່ ເທວະດາຊັ້ນຍາມາມີຢູ່ ເທວະດາຊັ້ນດຸສິຕມີຢູ່ ເທວະດາຊັ້ນນິມມານະຣະດີມີຢູ່ ເທວະດາຊັ້ນປະຣະນິມມິຕະວະສະວັຕດີມີຢູ່ ເທວະດາຊັ້ນພຣົມມະກາຍິກາມີຢູ່ ເທວະດາທີ່ສູງກວ່ານັ້ນມີຢູ່ ເທວະດາເຫລົ່ານັ້ນປະກອບດ້ວຍສັທທາເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ສັທທາເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍສີລເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນນັ້ນ ສີລເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍສຸຕະເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັຕໃນເທວະດາຊັ້ນ

ນັ້ນ ສຸຕະເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍຈາຄະເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວ ອຸບັດໃນເທວະດາຊັ້ນນັ້ນ ຈາຄະເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່; ເທວະດາເຫລົ່ານັ້ນປະກອບດ້ວຍປັນຍາເຊັ່ນໃດ ຈຸຕິຈາກໂລກນີ້ແລ້ວອຸບັດໃນເທວະດາຊັ້ນນັ້ນ ປັນຍາເຊັ່ນນັ້ນແມ່ນແຕ່ເຮົາກໍມີຢູ່.

ເມື່ອເຂົາຣະນຶກເຖິງສັທທາ ສິລ ສຸຕະ ຈາຄະ ປັນຍາຂອງຕົນແລະຂອງເທວະດາເຫລົ່ານັ້ນຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ! ອະຣິຍະສາວິການີ້ຮຽກວ່າ ເຂົ້າຈຳເທວະຕາອຸໂປສົຖຢູ່ຮ່ວມກັບເທວະດາ ແລະມີຈິຕຜ່ອງໃສເພາະປຣາຣົພເທວະດາຍ່ອມເກີດຄວາມປຣາໂມທຍ໌ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້. ວິສາຂາ ຈິຕທີ່ເສົ້າໝອງຍ່ອມກະທຳໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນຢ່າງນີ້ແລ.

ວິສາຂາ! ອະຣິຍະສາວິກາໃນທັມວິນັຍນີ້ ຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະປານາຕິບາຕ ງົດເວັ້ນຈາກປານາຕິບາຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍລະປານາຕິບາຕ ງົດເວັ້ນຈາກປານາຕິ

ບາດ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ເຖິງພ້ອມດ້ວຍຄວາມເອັນດູ ອະນຸເຄາະເກື້ອກູນແກ່ສັຕທັງປວງຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໑ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະອະທິນນາທານ, ງົດເວັ້ນຈາກອະທິນນາທານ, ຖືເອົາແຕ່ຂອງທີ່ເຂົາໃຫ້ ຫວັງແຕ່ຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍລະອະທິນນາທານ, ງົດເວັ້ນຈາກອະທິນນາທານ, ຖືເອົາແຕ່ຂອງທີ່ເຂົາໃຫ້ ຫວັງແຕ່ຂອງທີ່ເຂົາໃຫ້ ບໍ່ເປັນຂະໂມຍ ເປັນຜູ້ສະອາດຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໒ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນທັມຂອງຊາວບ້ານຕລອດຊີວິຕ; ໃນວັນນີ້ ເຮົາກໍລະອະພຣົມມະຈັນຍ໌ ປະພຶຕພຣົມມະຈັນຍ໌ ປະພຶຕຫ່າງໄກ ເວັ້ນຈາກເມຖຸນອັນເປັນ

ທັມຂອງຊາວບ້ານຕລອດຄືນໜຶ່ງກັບວັນໜຶ່ງ ດ້ວຍປະການ ຢ່າງນີ້ ເຮົາກໍຊື່ວ່າ ກະທໍາຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໓ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາ ແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍ ລະມຸສາວາທ ງົດເວັ້ນຈາກມຸສາ ວາທ ເວົ້າແຕ່ຄໍາຈິງ ດໍາຣົງຄວາມສັຈ ມີຖ້ອຍຄໍາທີ່ເຊື່ອຖືໄດ້ ບໍ່ກ່າວໃຫ້ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຊີວິຕ; ໃນ ວັນນີ້ ເຮົາກໍລະມຸສາວາທ ງົດເວັ້ນຈາກມຸສາວາທ ເວົ້າແຕ່ຄໍາ ຈິງ ດໍາຣົງຄວາມສັຈ ມີຖ້ອຍຄໍາທີ່ເຊື່ອຖືໄດ້ ບໍ່ກ່າວໃຫ້ ຄາດເຄື່ອນຈາກຄວາມຈິງແກ່ໂລກຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້ ເຮົາກໍຊື່ວ່າ ກະທໍາຕາມພຣະອະຣະຫັນຕ໌ ທັງຫລາຍ ແລະອຸໂປສົຖປະການທີ ໔ ກໍຊື່ວ່າ ເຮົາໄດ້ ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະສຸຣາເມຣັຍແລະສິ່ງມຶນເມົາ ອັນ ເປັນທີ່ຕັ້ງແຫ່ງຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງ ມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຊີວິຕ; ໃນວັນ ນີ້ ເຮົາກໍລະສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງ

ຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໕ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍເປັນຜູ້ບໍຣິໂພຄອາຫານຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫານໃນເວລາວິການຢູ່ຕລອດຊີວິຕ; ໃນວັນນີ້ ເຮົາກໍບໍຣິໂພຄອາຫານຄັ້ງດຽວ ງົດການບໍຣິໂພຄໃນຣາຕຣີ, ເວັ້ນຈາກການບໍຣິໂພຄອາຫານໃນເວລາວິການຢູ່ຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໖ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາອັນເປັນຖານແຫ່ງການແຕ່ງໂຕຕລອດຊີວິຕ; ໃນວັນນີ້ ເຮົາກໍງົດ

ເວັ້ນຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ແລະການປະດັບຕົກແຕ່ງດ້ວຍດອກໄມ້ຂອງຫອມ ເຄື່ອງລູບທາອັນເປັນຖານແຫ່ງການແຕ່ງໂຕຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໗ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມຮູ້ຊັດຢ່າງນີ້ວ່າ ພຣະອະຣະຫັນຕ໌ທັງຫລາຍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຊີວິຕ; ໃນວັນນີ້ ເຮົາກໍລະທີ່ນອນອັນສູງໃຫຍ່ ງົດເວັ້ນຈາກທີ່ນອນອັນສູງໃຫຍ່ ສຳເຣັຈການນອນໃນທີ່ນອນອັນຕ່ຳ ຄືເທິງຕຽງ ຫລືເຄື່ອງປູດ້ວຍຫຍ້າຕລອດຄືນໜຶ່ງກັບວັນໜຶ່ງ, ດ້ວຍປະການຢ່າງນີ້, ເຮົາກໍຊື່ວ່າ ກະທຳຕາມພຣະອະຣະຫັນຕ໌ທັງຫລາຍ ແລະອຸໂປສົຖປະການທີ ໘ ກໍຊື່ວ່າ ເຮົາໄດ້ສະມາທານຮັກສາແລ້ວ.

ວິສາຂາ! ອະຣິຍະອຸໂປສົຖເປັນເຊັ່ນນີ້ແລ ອະຣິຍະອຸໂປສົຖທີ່ບຸຄຄົລຮັກສາແລ້ວຢ່າງນີ້ແລ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍ.

ວິສາຂາ! **ອະຣິຍະອຸໂປສົຖ**ທີ່ບຸຄຄົລຮັກສາແລ້ວ ຍ່ອມມີຜົລຫລາຍ ມີອານິສົງສ໌ຫລາຍ ມີຄວາມຮຸ່ງເຮືອງຫລາຍ ມີຄວາມແຜ່ໄພສາລຫລາຍພຽງໃດ?

ວິສາຂາ! ປຽບເໝືອນພຣະຣາຊາສເວີຍຣາຊະສົມບັຕ ດຳຣົງອິສສະຣາທິປັຈໃນຊົມບົທໃຫຍ່ໆ ໑໖ ຣັຖ, ມີຣັຕນະ ໗ ປະການມາກມາຍ, ເຫລົ່ານີ້ຄື ອັງຄະ ມະຄະທະ ກາສີ ໂກສົລ ວັຊຊີ ມັລລະ ເຈດີຍ໌ ວັງສະ ກຸຣຸ ປັນຈາລະ ມັຈສະ ສຸຣະເສນະ ອັສສະກະ ອະວັນຕີ ຄັນທາຣະ ກັມໂພຊະ ການສເວີຍຣາຊະສົມບັຕ ດຳຣົງອິສສະຣາທິປັຈຂອງພຣະຣາຊານັ້ນ ຍ່ອມບໍ່ເຖິງສ່ວນທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ຂໍ້ນັ້ນເພາະເຫຕໃດ? ເພາະຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໕໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໕໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຈາຕຸມມະຫາຣາຊິກາ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍ ຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອ ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງ ເທວະດາຊັ້ນຈາຕຸມມະຫາຣາຊິກາ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງ ມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໑໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງ ເທວະດາຊັ້ນດາວະດຶງສ໌, ๓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງ ເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໑໐໐໐ ປີທິພ ໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດາວະດຶງສ໌.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍ ຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອ ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງ ເທວະດາຊັ້ນດາວະດຶງສ໌ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັດຂອງ ມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໔໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຍາມາ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໔ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໔໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນຍາມາ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຍາມາ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໔໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດຸສິຕ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໔ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໔໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນດຸສິຕ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອ

ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນດຸສິຕ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໘໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນນິມມານະຣະດີ, ໓໐ ຣາຕຣີໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໒ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໘໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນນິມມານະຣະດີ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນນິມມານະຣະດີ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ວິສາຂາ! ໑,໖໐໐ ປີຂອງມະນຸສ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ, ໓໐ ຣາຕຣີ

ໂດຍຣາຕຣີນັ້ນເປັນໜຶ່ງເດືອນ, ໑໔ ເດືອນໂດຍເດືອນນັ້ນເປັນໜຶ່ງປີ, ໑໖,໐໐໐ ປີທິພໂດຍປີນັ້ນເປັນປະມານອາຍຸຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ.

ວິສາຂາ! ຂໍ້ທີ່ບຸຄຄົລບາງຄົນໃນໂລກນີ້ ຈະເປັນຍິງຫລືຊາຍກໍຕາມ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນປະຣະນິມມິຕະວະສະວັຕດີ ນີ້ເປັນຖານະທີ່ຈະມີໄດ້.

ວິສາຂາ! ເຮົາໝາຍເອົາຂໍ້ນີ້ຈຶ່ງກ່າວວ່າ ຣາຊະສົມບັຕຂອງມະນຸສເປັນເໝືອນຂອງຄົນກຳພ້າເມື່ອທຽບກັບສຸຂອັນເປັນທິພ.

ບຸຄຄົລບໍ່ຄວນຂ້າສັຕ ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ຄວນເວັ້ນຈາກເມຖຸນທັມ ອັນບໍ່ແມ່ນຄວາມປະພຶຕຂອງພຣົມ ບໍ່ຄວນເວົ້າຕົວະ ບໍ່ຄວນດື່ມນ້ຳເມົາ ບໍ່ຄວນບໍຣິໂພຄອາຫານໃນເວລາວິການ ໃນຣາຕຣີ ບໍ່ຄວນປະດັບຕົກແຕ່ງດ້ວຍດອກໄມ້ແລະຂອງຫອມ ຄວນນອນເທິງຕຽງ ເທິງແຜ່ນດິນ ຫລືເທິງເຄື່ອງລາດດ້ວຍຫຍ້າ ບັນດິຕທັງຫລາຍກ່າວອຸໂປສົຖ ໘ ປະການ ທີ່ພຣະພຸທທະເຈົ້າຜູ້ເຖິງທີ່ສຸດແຫ່ງທຸກຂ໌ຊົງປະກາສແລ້ວ ດວງຈັນທ໌ແລະດວງອາທິຕທັງສອງສ່ອງແສງສະວ່າງສະໄຫວ

ຍ່ອມໂຄຈອຣໄປຕາມວິຖີພຽງໃດ ດວງຈັນທ໌ແລະດວງອາທິຕ ນັ້ນກໍກຳຈັດຄວາມມືດໄດ້ພຽງນັ້ນ ລອຍຢູ່ເທິງອາກາສ ສ່ອງແສງທົ່ວທຸກທິສໃນທ້ອງຟ້າ ຊັພຍ໌ໃດອັນມີຢູ່ໃນລະຫວ່າງນີ້ ຄື ແກ້ວມຸກດາ ແກ້ວມະນີ ແກ້ວໄພທູຣຍ໌ ຫລືທອງຄຳມີສີສຸກໃສ ທີ່ຮຽກກັນວ່າ ຫະຕະກະ ດວງຈັນທ໌ດວງອາທິຕແລະຊັພຍ໌ນັ້ນໆ ຍ່ອມບໍ່ເຖິງສ່ວນທີ ໑໖ ແຫ່ງອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການ ປຽບເໝືອນຣັສມີຂອງດວງຈັນທ໌ຍ່ອມຂົ່ມໝູ່ດາວທັງຫລາຍ ສັນນັ້ນ. ເພາະເຫຕນັ້ນແລ ຍິງຫລືຊາຍຜູ້ມີສີລ ເຂົ້າຢູ່ອຸໂປສົຖປະກອບດ້ວຍອົງຄ໌ ໘ ປະການແລ້ວກະທຳບຸນຍ໌ທັງຫລາຍອັນມີສຸຂເປັນກຳໄຣ ບໍ່ມີໃຜຕິຕຽນ ຍ່ອມເຂົ້າເຖິງສວັນ.

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໙໕-໒໐໓/໕໑໐*



# ເຫຕຸປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນອັນດະຊະບາງພວກຮັກສາອຸໂປສົຖ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນອາຣາມຂອງທ່ານອະນາຖະບິນດິກະເສດຖີ ໃກ້ພຣະນະຄອຣສາວັຕຖີ. ຄັ້ງນັ້ນແລ ພິກຂຸອົງຄ໌ໜຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍ ເປັນເຫຕຸ ເປັນປັຈຈັຍໃຫ້ນາຄທີ່ເປັນອັນດະຊະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ດູກ່ອນພິກຂຸ! ນາຄບາງພວກທີ່ເປັນອັນດະຊະໃນໂລກນີ້ ມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນພວກເຮົາເປັນຜູ້ກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອພວກເຮົາກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອແຕກກາຍຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາຄທີ່ເປັນອັນດະຊະ ຖ້າວັນນີ້ພວກເຮົາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕ ເມື່ອເປັນຢ່າງນີ້ ເມື່ອແຕກກາຍຕາຍໄປ ພວກເຮົາຈະເຂົ້າເຖິງສຸຄະຕິໂລກສວັນ. ເຊີນພວກເຮົາມາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕເສຍເຖີດໃນບັດນີ້.

ດູກ່ອນພິກຂຸ! ຂໍ້ນີ້ແລ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນອັນດະຊະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້.

---

*ສັງຍຸຕຕະນິກາຍ ຂັນທະວາຣະວັຄ ໑໗/໔໗໐-໔໗໑/໘໔໑*



# ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນຊະລາພຸຊະບາງພວກຮັກສາອຸໂປສົຖ

ທີ່ພຣະນະຄອຣສາວັຕຖີ. ຄັ້ງນັ້ນແລ ພິກຂຸອົງຄ໌ໜຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນຊະລາພຸຊະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ດູກ່ອນພິກຂຸ! ນາຄບາງພວກທີ່ເປັນຊະລາພຸຊະໃນໂລກນີ້ ມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນພວກເຮົາເປັນຜູ້ກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອພວກເຮົາກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອແຕກກາຍຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາຄທີ່ເປັນຊະລາພຸຊະ ຖ້າວັນນີ້ພວກເຮົາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕ ເມື່ອເປັນຢ່າງນີ້ ເມື່ອແຕກກາຍຕາຍໄປ ພວກເຮົາຈະເຂົ້າເຖິງສຸຄະຕິໂລກສວັນ. ເຊີນພວກເຮົາມາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕເສຍເຖິດໃນບັດນີ້.

ດູກ່ອນພິກຂຸ! ຂໍ້ນີ້ແລ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນຊະລາພຸຊະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້.

---

*ສັງຍຸຕຕະນິກາຍ ຂັນທະວາຣະວັຄ ໑໗/໔໗໑/໕໔໔*



# ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນສັງເສທະຊະບາງພວກຣັກສາອຸໂປສົຖ

ທີ່ພຣະນະຄອຣສາວັຕຖີ. ພິກຂຸອົງຄ໌ນັ້ນນັ່ງໃນທີ່ຄວນສ່ວນຂ້າງໜຶ່ງແລ້ວ ໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນສັງເສທະຊະບາງພວກໃນໂລກນີ້ ຣັກສາອຸໂປສົຖແລະສະລະກາຍໄດ້?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ດູກ່ອນພິກຂຸ! ນາຄບາງພວກທີ່ເປັນສັງເສທະຊະໃນໂລກນີ້ ມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນພວກເຮົາເປັນຜູ້ກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອພວກເຮົາກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອແຕກກາຍຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາຄທີ່ເປັນສັງເສທະຊະ ຖ້າວັນນີ້ພວກເຮົາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕ ເມື່ອເປັນຢ່າງນີ້ ເມື່ອແຕກກາຍຕາຍໄປ ພວກເຮົາຈະເຂົ້າເຖິງສຸຄະຕິໂລກສວັນ. ເຊີນພວກເຮົາມາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕເສຍເຖິດໃນບັດນີ້.

ດູກ່ອນພິກຂຸ! ຂໍ້ນີ້ແລ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນສັງເສທະຊະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້.

---

*ສັງຍຸຕຕະນິກາຍ ຂັນທະວາຣະວັຄ ໑໗/໔໗໑/໕໔໘*



# ເຫຕປັຈຈັຍທີ່ເຮັດໃຫ້ນາຄທີ່ເປັນອຸປປາຕິກະບາງພວກຮັກສາອຸໂປສົຖ

ທີ່ພຣະນະຄອຣສາວັຕຖີ. ພິກຂຸອົງຄ໌ນັ້ນນັ່ງໃນທີ່ຄວນສ່ວນຂ້າງໜຶ່ງແລ້ວ ໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນອຸປປາຕິກະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ດູກ່ອນພິກຂຸ! ນາຄບາງພວກທີ່ເປັນອຸປປາຕິກະໃນໂລກນີ້ ມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນພວກເຮົາເປັນຜູ້ກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອພວກເຮົາກະທຳກັມທັງສອງດ້ວຍກາຍ, ກະທຳກັມທັງສອງດ້ວຍວາຈາ, ກະທຳກັມທັງສອງດ້ວຍໃຈ, ເມື່ອແຕກກາຍຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາຄທີ່ເປັນອຸປປາຕິກະ ຖ້າວັນນີ້ພວກເຮົາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕ ເມື່ອເປັນຢ່າງນີ້ ເມື່ອແຕກກາຍຕາຍໄປ ພວກເຮົາຈະເຂົ້າເຖິງສຸຄະຕິໂລກສວັນ. ເຊີນພວກເຮົາມາປະພຶຕກາຍສຸຈະຣິຕ ປະພຶຕວະຈີສຸຈະຣິຕ ປະພຶຕມະໂນສຸຈະຣິຕເສຍເຖີດໃນບັດນີ້.

ດູກ່ອນພິກຂຸ! ຂໍ້ນີ້ແລ ເປັນເຫຕ ເປັນປັຈຈັຍໃຫ້ນາຄທີ່ເປັນອຸປປາຕິກະບາງພວກໃນໂລກນີ້ ຮັກສາອຸໂປສົຖແລະສະລະກາຍໄດ້.

---

*ສັງຍຸຕຕະນິກາຍ ຂັນທະວາຣະວັຄ ໑໗/໔໗໔/໕໔໔*





“ພວກເຈົ້າເປັນນາຄ ມີຄວາມບ່ງອກງາມໃນ
ທັມວິນັຍນີ້ເປັນທັມມະດາ ໄປເຖິດເຈົ້ານາຄ
ຈົ່ງໄປຮັກສາອຸໂປສົຖໃນດິຖີທີ ໑໔, ດິຖີທີ ໑໕
ແລະດິຖີທີ ໘ ແຫ່ງປັກຂ໌ ດ້ວຍວິທີນີ້ແລ ເຈົ້າຈັກ
ພົ້ນຈາກກຳເນີດນາຄ ແລະຈັກໄດ້ອັຕຕະພາບ
ຄວາມເປັນມະນຸສຢ່າງວ່ອງໄວ.”

ວິນັຍປິດົກ ມະຫາວັຄ ພາຄ ໑ ເຫລັ້ມ ໔/໑໔໓-໑໔໔/໑໘໗

# ເຣື່ອງນາຄແປງກາຍເປັນມະນຸສມາບວຊ ພຣະຜູ້ມີພຣະພາຄຊົງຕຣັສບອກນາຄນັ້ນໃຫ້ໄປຮັກສາອຸໂປສົຖດ້ວຍວິທີນີ້ ຈັກພົ້ນຈາກກຳເນີດນາຄແລະຈັກໄດ້ອັຕຕະພາບຄວາມເປັນມະນຸສຢ່າງວ່ອງໄວ

ໃນສມັຍນັ້ນ ນາຄໂຕໜຶ່ງອຶດອັດ ຣະອາ ກຽດຊັງກຳເນີດນາຄ ນາຄນັ້ນຈຶ່ງໄດ້ມີຄວາມດຳຣິວ່າ ດ້ວຍວິທີໃດໜໍ ເຮົາຈຶ່ງຈະພົ້ນຈາກກຳເນີດນາຄ ແລະກັບໄດ້ອັຕຕະພາບຄວາມເປັນມະນຸສຢ່າງວ່ອງໄວ. ຄັນແລ້ວໄດ້ດຳຣິຕໍ່ໄປວ່າ ພຣະສະມະນະເຊື້ອສາຍພຣະສາກະຍະບຸຕເຫລົ່ານີ້ແລ ເປັນຜູ້ປະພຶຕທັມ ປະພຶຕສງົບ ປະພຶຕພຣົມມະຈັນຍ໌ ກ່າວແຕ່ຄຳສັຈ ມີສີລ ມີກັລຍານະທັມ ຫາກເຮົາບວຊໃນສຳນັກຂອງພຣະສະມະນະເຊື້ອສາຍພຣະສາກະຍະບຸຕ ດ້ວຍວິທີເຊັ່ນນີ້ ເຮົາກໍຈະພົ້ນຈາກກຳເນີດນາຄ ແລະກັບໄດ້ອັຕຕະພາບຄວາມເປັນມະນຸສຢ່າງວ່ອງໄວ. ຄັນແລ້ວ ນາຄນັ້ນຈຶ່ງແປງກາຍເປັນຊາຍໜຸ່ມ ແລ້ວເຂົ້າໄປຫາ

ພິກຂຸທັງຫລາຍຂໍບັນພະຊາ ພິກຂຸທັງຫລາຍຈຶ່ງໃຫ້ເຂົາບັນພະຊາອຸປະສົມບົທ.

ສມັຍຕໍ່ມາ ພຣະນາຄນັ້ນອາສັຍຢູ່ໃນວິຫາຣສຸດເຂຕກັບພິກຂຸອົງຄ໌ໜຶ່ງ ຄັນປັຈຈຸສສມັຍແຫ່ງຣາຕຣີ ພິກຂຸອົງຄ໌ນັ້ນຕື່ນນອນແລ້ວ ອອກໄປເດີນຈົງກົມຢູ່ໃນທີ່ແຈ້ງ ຄັນພິກຂຸອົງຄ໌ນັ້ນອອກໄປແລ້ວ ພຣະນາຄນັ້ນຈຶ່ງວາງໃຈນອນຫລັບ, ວິຫາຣທັງຫລັງເຕັມໄປດ້ວຍງູ*(ສັພໂພ ວິຫາໂຣ ອະຫິນາ ປຸນໂນ)*, ຂນົດຍື່ນອອກໄປທາງໜ້າຕ່າງ ຄັນພິກຂຸອົງຄ໌ນັ້ນຜລັກບານປະຕູດ້ວຍຕັ້ງໃຈວ່າຈັກເຂົ້າວິຫາຣ ໄດ້ເຫັນວິຫາຣທັງຫລັງເຕັມໄປດ້ວຍງູເຫັນຂນົດຍື່ນອອກໄປທາງໜ້າຕ່າງ ກໍຕົກໃຈ ຈຶ່ງຮ້ອງເອະອະຂຶ້ນ.

ພິກຂຸທັງຫລາຍພາກັນແລ່ນເຂົ້າໄປແລ້ວໄດ້ຖາມພິກຂຸອົງຄ໌ນັ້ນວ່າ ອາວຸໂສ ທ່ານຮ້ອງເອະອະເຮັດຫຍັງ?

ພິກຂຸອົງຄ໌ນັ້ນບອກວ່າ ອາວຸໂສທັງຫລາຍ ວິຫາຣນີ້ທັງຫລັງເຕັມໄປດ້ວຍງູ ຂນົດຍື່ນອອກໄປທາງໜ້າຕ່າງ.

ຂະນະນັ້ນ ພຣະນາຄນັ້ນໄດ້ຕື່ນຂຶ້ນເພາະສຽງນັ້ນ ແລ້ວນັ່ງຢູ່ເທິງອາສະນະຂອງຕົນ.

ພິກຂຸທັງຫລາຍຖາມວ່າ ອາວຸໂສ ທ່ານເປັນໃຜ?

ຂ້ານ້ອຍເປັນນາຄ ຂ້ານ້ອຍ!

ອາວຸໂສ! ທ່ານໄດ້ກະທຳເຊັ່ນນີ້ເພື່ອປະສົງອັນໃດ?

ພຣະນາຄນັ້ນຈຶ່ງແຈ້ງເນື້ອຄວາມນັ້ນແກ່ພິກຂຸທັງຫລາຍ. ພິກຂຸທັງຫລາຍກຣາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສສັ່ງໃຫ້ປະຊຸມສົງຄ໌ໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕແຣກເກີດນັ້ນ ແລ້ວໄດ້ຊົງປະທານພຣະພຸທໂທວາທນີ້ແກ່ນາຄນັ້ນວ່າ:

**"ພວກເຈົ້າເປັນນາຄ ມີຄວາມບໍ່ງອກງາມໃນທັມວິນັຍນີ້ເປັນທັມມະດາ ໄປເຖີດເຈົ້ານາຄ ຈົ່ງໄປຮັກສາອຸໂປສົຖໃນດິຖີທີ ໑໔, ດິຖີທີ ໑໕ ແລະດິຖີທີ ໘ ແຫ່ງປັກຂ໌ ດ້ວຍວິທີນີ້ແລ ເຈົ້າຈັກພົ້ນຈາກກຳເນີດນາຄ ແລະຈັກໄດ້ອັຕຕະພາບຄວາມເປັນມະນຸສຍ່າງວ່ອງໄວ."**

ຄັນນາຄນັ້ນໄດ້ຊາບວ່າ ຕົນມີຄວາມບໍ່ງອກງາມໃນທັມວິນັຍນີ້ ເປັນທັມມະດາ ກໍເສຍໃຈຫລັ່ງນ້ຳຕາ ສົ່ງສຽງດັງແລ້ວຫລີກໄປ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສສັ່ງກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເຫຕແຫ່ງຄວາມປາກົຕຕາມສະພາບຂອງນາຄມີ ໔ ປະການນີ້ຄື ເວລາເສພເມຖຸນທັມກັບນາງນາຄຜູ້ມີຊາຕສະເໝີກັນ ໑, ເວລາວາງໃຈນອນຫລັບ ໑, ພິກຂຸທັງຫລາຍ ເຫຕແຫ່ງຄວາມປາກົຕຕາມສະພາບຂອງນາຄ ໔ ປະການນີ້ແລ.

ພິກຂຸທັງຫລາຍ! ອະນຸປະສັມບັນຜູ້ເປັນສັຕດິຣັຈສານ ພິກຂຸບໍ່ຄວນໃຫ້ອຸປະສົມບົທ ທີ່ອຸປະສົມບົທແລ້ວ ຕ້ອງໃຫ້ສິກເສຍ.

---

*ວິນັຍປິດົກ ມະຫາວັຄ ພາຄ ໑ ເຫລັ້ມ ໔/໑໔໖-໑໔໔/໑໔໗*



# ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ

ພິກຂຸທັງຫລາຍ! ເຫຕເກີດຂຶ້ນແຫ່ງທານ ໘ ປະການີ້, ໘ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄື ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາເຫັນກະສັຕມະຫາສາລ ພຣາມນ໌

ມະຫາສາລ ຫລືຄະຫະບໍດີມະຫາສາລ ຜູ້ເອີບອິ່ມພັ່ງພ້ອມບຳເຣີຢູ່ດ້ວຍກາມຄຸນ ໕ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັຕມະຫາສາລ ພຣາມນ໌ມະຫາສາລ ຫລືຄະຫະບໍດີມະຫາສາລ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ *(ໂສ ຕັງ ຈິຕຕັງ ປະທະຫະຕິ ຕັງ ຈິຕຕັງ ອະທິຕຖາຕິ ຕັງ ຈິຕຕັງ ພາເວຕິ ຕັສສະ ຕັງ ຈິຕຕັງ ຫີເນທິມຸຕຕັງ ອຸຕຕຣິງ ອະພາວິຕັງ)* ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັຕມະຫາສາລ ພຣາມນ໌ມະຫາສາລ ຫລືຄະຫະບໍດີມະຫາສາລ **ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ**. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນຈາຕຸມມະຫາຣາຊິກາມີອາຍຸຍືນ ມີວັນນະງາມມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍ

ແຫ່ງເທວະດາຊັ້ນຈາຕຸມມະຫາຣາຊິກາ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມມະຫາຣາຊິກາ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສິລ ບໍ່ແມ່ນຂອງຜູ້ທຸສິລ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສິລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນຕາວະຕິງສາມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕາວະຕິງສາ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕາວະຕິງສາ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສິລ ບໍ່ແມ່ນຂອງຜູ້ທຸສິລ. ພິກຂຸ

ທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນຍາມາມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຍາມາ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຍາມາ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາ

ວ່າ ເທວະດາຊັ້ນຕຸສິຕາມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕຸສິຕາ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕຸສິຕາ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສິລ ບໍ່ແມ່ນຂອງຜູ້ທຸສິລ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສິລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນໍ້າ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນນິມມານະຣະຕີມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນນິມມານະຣະຕີ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນນິມມານະຣະຕີ ແຕ່

ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສິລ ບໍ່ແມ່ນຂອງຜູ້ທຸສິລ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສິລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄືເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນປະຣະນິມມິຕະວະສະວັຕຕີມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອຫນໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສິລ ບໍ່ແມ່ນຂອງຜູ້ທຸສິລ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສິລຍ່ອມສຳເຣັຈໄດ້ເພາະຈິຕບໍຣິສຸທ.

ພິກຂຸທັງຫລາຍ! ສ່ວນບຸຄຄົລບາງຄົນໃນໂລກນີ້ ໃຫ້ທານຄື ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟແກ່ສະມະນະຫລືພຣາມນ໌ ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ ເຂົາໄດ້ສະດັບມາວ່າ ເທວະດາຊັ້ນພຣົມມະກາຍິກາມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາຈຶ່ງມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນພຣົມມະກາຍິກາ ເຂົາຕັ້ງຈິຕນັ້ນ ອະທິສຖານຈິຕນັ້ນ ຈະເຣີນຈິຕນັ້ນຢູ່ ຈິຕຂອງເຂົານຶກນ້ອມໄປໃນທາງຊາມ ບໍ່ຈະເຣີນຍິ່ງຂຶ້ນ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນພຣົມມະກາຍິກາ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ ເປັນຂອງຜູ້ປາສະຈາກຣາຄະ ບໍ່ແມ່ນຂອງຜູ້ມີຣາຄະ. ພິກຂຸທັງຫລາຍ ຄວາມປາຖນາແຫ່ງໃຈຂອງບຸຄຄົລຜູ້ມີສີລຍ່ອມສຳເຣັຈໄດ້ເພາະຈິຕປາສະຈາກຣາຄະ.

ພິກຂຸທັງຫລາຍ! ເຫຕເກີດຂຶ້ນແຫ່ງທານ ໘ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*

*໔໓/໑໗໖/໑໔໕*



# ສີລແລະຄວາມເຫັນຕົງເປັນເບື້ອງຕົ້ນແຫ່ງກຸສົລທັມ

ຄັ້ງນັ້ນ ທ່ານພຣະພາຫິຍະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ຂໍພຣະຜູ້ມີພຣະພາຄໂປດຊົງສະແດງທັມໂດຍຫຍໍ້ແກ່ຂ້ານ້ອຍດ້ວຍ ເມື່ອຂ້ານ້ອຍໄດ້ຟັງແລ້ວ ຈະເປັນຜູ້ຫລີກອອກຈາກໝູ່ ຢູ່ຜູ້ດຽວບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວຢູ່.

ພຣະຜູ້ມີພຣະພາຄຕຣັສວ່າ:

**ພາຫິຍະ! ເພາະສະນັ້ນ ເຈົ້າຈົ່ງຊຳຣະເບື້ອງຕົ້ນແຫ່ງກຸສົລທັມ ໃຫ້ບໍຣິສຸທເສຍກ່ອນ ກໍອັນໃດເປັນເບື້ອງຕົ້ນແຫ່ງກຸສົລທັມ? ຄື ສີລທີ່ບໍຣິສຸທດີ ແລະຄວາມເຫັນຕົງ.**

ພາຫິຍະ! ເມື່ອໃດແລ ສີລຂອງເຈົ້າບໍຣິສຸທດີ ແລະຄວາມເຫັນ ຂອງເຈົ້າຕົງ ເມື່ອນັ້ນ ເຈົ້າຈົ່ງອາສັຍສີລ ຕັ້ງໝັ້ນໃນສີລ ແລ້ວ ຈະເຈີນສະຕິປັຕຖານ ໔,

ສະຕິປັຕຖານ ໔ ເປັນຢ່າງໃດ?

ພາຫິຍະ! ເຈົ້າຈົ່ງພິຈາຣະນາເຫັນກາຍໃນກາຍຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສໃນ ໂລກເສຍ;

ຈົ່ງພິຈາຣະນາເຫັນເວທະນາໃນເວທະນາທັງຫລາຍຢູ່ ມີ ຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທ ມະນັສໃນໂລກເສຍ;

ຈຶ່ງພິຈາຣະນາເຫັນຈິຕໃນຈິຕຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສໃນໂລກເສຍ;

ຈຶ່ງພິຈາຣະນາເຫັນທັມໃນທັມທັງຫລາຍຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສໃນໂລກເສຍ.

ພາຫິຍະ! ເມື່ອໃດ ເຈົ້າອາສັຍສີລ ຕັ້ງໝັ້ນຢູ່ໃນສີລແລ້ວ ຈະເຣີນສະຕິປັຕຖານ ໔ ເຫລົ່ານີ້ຢ່າງນີ້ ເມື່ອນັ້ນ ເຈົ້າຍ່ອມຫວັງຄວາມຈະເຣີນໃນກຸສົລທັມທັງຫລາຍໄດ້ຕລອດຄືນຫລືວັນທີ່ຈະມາເຖິງ ຍ່ອມບໍ່ມີຄວາມເສື່ອມເລີຍ.

ຄັ້ງນັ້ນ ທ່ານພຣະພາຫິຍະຊື່ນຊົມອະນຸໂມທະນາພຣະພາສິຕຂອງພຣະຜູ້ມີພຣະພາຄແລ້ວ ລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວຫລີກໄປ ທ່ານພຣະພາຫິຍະຫລີກອອກຈາກໝູ່ ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວຢູ່ ບໍ່ນານເທົ່າໃດກໍກະທຳໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ອັນຍອດຢ້ຽມ ທີ່ກຸລະບຸຕທັງຫລາຍອອກບວຊເປັນບັນພະຊິຕໂດຍຊອບມີຄວາມຕ້ອງການ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳໄດ້ທຳ

ສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ. ທ່ານພຣະພາຫິຍະກໍໄດ້ເປັນພຣະອະຣະຫັນຕ໌ອົງຄ໌ໜຶ່ງໃນຈຳນວນພຣະອະຣະຫັນຕ໌ທັງຫລາຍ.

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໑໗໑/໗໕໗*



# ສີລະສັມປະທາເປັນນິມິຕ ແຫ່ງອະຣິຍະມັຄປະກອບດ້ວຍອົງຄ໌ ໘

ພິກຂຸທັງຫລາຍ! ເມື່ອດວງອາທິຕຈະຂຶ້ນ ສິ່ງທີ່ມາກ່ອນ ເປັນນິມິຕໃຫ້ເຫັນກ່ອນຄື ແສງອະຣຸນ ສັນໃດ; ຄວາມເຖິງ ພ້ອມດ້ວຍສີລ ກໍເປັນຕົວນຳ ເປັນບຸພພະນິມິຕເພື່ອຄວາມເກີດ ຂຶ້ນແຫ່ງອະຣິຍະມັຄປະກອບດ້ວຍອົງຄ໌ ໘ ສັນນັ້ນ.

ພິກຂຸທັງຫລາຍ! ພິກຂຸຜູ້ເຖິງພ້ອມດ້ວຍສີລ ຍ່ອມຫວັງຂໍ້ນີ້ໄດ້ ວ່າ ຈັກຈະເຣີນອະຣິຍະມັຄປະກອບດ້ວຍອົງຄ໌ ໘ ຈັກກະທຳ ໃຫ້ຫລາຍເຊິ່ງອະຣິຍະມັຄປະກອບດ້ວຍອົງຄ໌ ໘.

ພິກຂຸທັງຫລາຍ! ພິກຂຸຜູ້ເຖິງພ້ອມດ້ວຍສິລ ຈັກຈະເຣີນອະຣິຍະມັຄປະກອບດ້ວຍອົງຄ໌ ໘ ຈັກກະທຳໃຫ້ຫລາຍເຊິ່ງອະຣິຍະມັຄປະກອບດ້ວຍອົງຄ໌ ໘ ຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຈະເຣີນສັມມາທິຕຖິ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາສັງກັປປະ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາວາຈາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາກັມມັນຕະ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາອາຊີວະ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາວາຍາມະ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາສະຕິ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສັມມາສະມາທິ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໓໐/໑໓໑*



# ອາສັຍສິລ ຕັ້ງຢູ່ໃນສິລແລ້ວ ຈຶ່ງຈະເຮີນສັມມັປປະທານ ໔

ພິກຂຸທັງຫລາຍ! ກາຣງານທີ່ຈະກະທຳດ້ວຍກຳລັງຢ່າງໃດຢ່າງໜຶ່ງ ອັນບຸຄຄົລກະທຳຢູ່ ກາຣງານທີ່ຈະກະທຳດ້ວຍກຳລັງທັງໝົດນັ້ນ ບຸຄຄົລອາສັຍແຜ່ນດິນ ດຳຣົງຢູ່ເທິງແຜ່ນດິນ ຈຶ່ງກະທຳໄດ້ຢ່າງນັ້ນ ສັນໃດ;

ພິກຂຸທັງຫລາຍ! ພິກຂຸອາສັຍສິລ ຕັ້ງຢູ່ໃນສິລແລ້ວ ຈຶ່ງຈະເຮີນສັມມັປປະທານ ໔ ກະທຳໃຫ້ຫລາຍເຊິ່ງສັມມັປປະທານ ໔ ສັນນັ້ນເໝືອນກັນ.

ພິກຂຸທັງຫລາຍ! ກໍພິກຂຸອາສັຍສິລ ຕັ້ງຢູ່ໃນສິລແລ້ວ ຈຶ່ງຈະເຣີນສັມມັປປະທານ ໔ ກະທຳໃຫ້ຫລາຍເຊິ່ງສັມມັປປະທານ ໔ ຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອບໍ່ໃຫ້ອະກຸສິລທັມອັນເປັນບາບທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ,

ຍ່ອມຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອລະອະກຸສິລທັມອັນເປັນບາບທັງຫລາຍທີ່ເກີດຂຶ້ນແລ້ວ,

ຍ່ອມຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອໃຫ້ກຸສິລທັມທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ,

ຍ່ອມຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອຄວາມຕັ້ງຢູ່ ເພື່ອຄວາມບໍ່ເລືອນຫາຍ ເພື່ອຄວາມມີຍິ່ງໆຂຶ້ນໄປ ເພື່ອຄວາມໄພບູນ ເພື່ອຄວາມຈະເຣີນ ເພື່ອຄວາມບໍຣິບູນແຫ່ງກຸສິລທັມທັງຫລາຍທີ່ເກີດຂຶ້ນແລ້ວ.

ພິກຂຸທັງຫລາຍ! ພິກຂຸອາສັຍສີລ ຕັ້ງຢູ່ໃນສີລແລ້ວ ຈຶ່ງຈະເຈີນສັມມັປປະທານ ໔ ກະທຳໃຫ້ຫລາຍເຊິ່ງສັມມັປປະທານ ໔ ຢ່າງນີ້ແລ.

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໔໗໔/໑໐໙໓-໑໐໙໔*



# ສີລຍ່ອມຊໍາຣະປັນຍາໃຫ້ບໍຣິສຸທ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນອັງຄະຊົນບົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ປະມານ ໕໐໐ ອົງຄ໌ ສະເດັຈເຖິງນະຄອຣຈັມປາ ໄດ້ຍິນວ່າ ສມັຍນັ້ນ ພຣະອົງຄ໌ປະທັບຢູ່ໃກ້ຂອບສະໂບກຂະຣະນີຄັຄຄຣາ ໃນນະຄອຣຈັມປາ.

ສມັຍນັ້ນ ພຣາມນ໌ໂສນະທັນດະຄອງນະຄອຣຈັມປາ ເຊິ່ງຄັບຄັ່ງດ້ວຍປະຊາຊົນແລະໝູ່ສັຕ ອຸດົມດ້ວຍຫຍ້າ ດ້ວຍໄມ້

ດ້ວຍນ້ຳ ສົມບູນດ້ວຍທັນຍາຫານ ເຊິ່ງເປັນຣາຊະສົມບັດຂອງພຣະເຈົ້າພິມພິສານຈອມເສນາມະຄະຣາຊ ພຣະຣາຊະທານປູນບຳເໜັຈໃຫ້ເປັນສ່ວນພຣົມໄທຍ. ພຣາມມ໌ແລະຄະຫະບໍດີຊາວນະຄອຣຈັມປາໄດ້ສະດັບຂ່າວວ່າ ພຣະສະມະນະໂຄຕະມະສາກະຍະບຸຕຊຶ່ງຜນວຊຈາກສາກະຍະຕະກຸນ ສະເດັຈຈາຣິກໄປໃນອັງຄະຊົນບົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ປະມານ ໕໐໐ ອົງຄ໌ ສະເດັຈເຖິງນະຄອຣຈັມປາ ປະທັບຢູ່ໃກ້ຂອບສະໂບກຂະຣະນີຄັຄຄຣາ ໃນນະຄອຣຈັມປາ. ກິຕຕິສັທອັນງາມຂອງທ່ານພຣະໂຄຕະມະພຣະອົງຄ໌ນັ້ນຂະຈອຣໄປແລ້ວຢ່າງນີ້ວ່າ ເພາະເຫຕນີ້ໆ ພຣະຜູ້ມີພຣະພາຄ ພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວເປັນຜູ້ຈຳແນກທັມ, ພຣະອົງຄ໌ຊົງທຳໂລກນີ້ ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກ ໃຫ້ແຈ້ງຊັດດ້ວຍພຣະປັນຍາອັນຍິ່ງຂອງພຣະອົງຄ໌ເອງແລ້ວ ຊົງສອນໝູ່ສັຕພ້ອມທັງສະມະນະພຣາມມ໌ ເທວະດາແລະມະນຸສໃຫ້ຮູ້ຕາມ ຊົງສະແດງທັມງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດຊົງປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ ກໍການເຫັນພຣະອະຣະ

ຫັນຕ໌ທັງຫລາຍເຫັນປານນັ້ນ ເປັນການດີແລ ດັ່ງນີ້. ຄັ້ງນັ້ນ ພຣາມນ໌ແລະຄະຫະບໍດີຊາວນະຄອຣຈັມປາ ອອກຈາກ ນະຄອຣຈັມປາ ລວມກັນເປັນໝູ່ໆ ພາກັນໄປຍັງສະໂບກ ຂະຣະນີຄັຄຣາ.

ສມັຍນັ້ນ ພຣາມນ໌ໂສນະທັນດະພັກຜ່ອນທ່ຽງວັນຢູ່ທີ່ປາສາທ ຊັ້ນເທິງ ໄດ້ເຫັນພຣາມນ໌ແລະຄະຫະບໍດີຊາວນະຄອຣຈັມປາ ອອກຈາກນະຄອຣຈັມປາ ລວມກັນເປັນໝູ່ໆ ພາກັນໄປຍັງສະ ໂບກຂະຣະນີຄັຄຣາ ຈຶ່ງຮຽກນັກການ[1]ມາຖາມວ່າ ທ່ານນັກ ການ*(ໂພ ຂັຕເຕ)* ພຣາມນ໌ແລະຄະຫະບໍດີຊາວນະຄອຣຈັມປາ ອອກຈາກນະຄອຣຈັມປາ ລວມກັນເປັນໝູ່ໆ ພາກັນໄປຍັງສະ ໂບກຂະຣະນີກັນເຮັດຫຍັງ?

ມີເຣື່ອງຢູ່ ທ່ານຜູ້ຈະເຣີນ! ພຣະສະມະນະໂຄຕະມະສາກະຍະ ຊົງຜນວຊຈາກສາກະຍະຕະກຸນ ສະເດັຈຈາຣິກໄປໃນອັງຄະ ຊົນບົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ປະມານ ໕໐໐ ອົງຄ໌ ສະ ເດັຈເຖິງນະຄອຣຈັມປາ ປະທັບຢູ່ໃກ້ຂອບສະໂບກຂະຣະ ນີຄັຄຣາ ໃນນະຄອຣຈັມປາ. ກິຕຕິສັທອັນງາມຂອງ ທ່ານພຣະໂຄຕະມະພຣະອົງຄ໌ນັ້ນຂະຈອຣໄປແລ້ວຢ່າງນີ້ວ່າ ເພາະເຫຕນີ້ໆ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະ

---

[1] ຂັຕຕັງ ອາມັນເຕສິ

ອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ, ພຣາມນ໌ແລະຄະຫະບໍດີເຫລົ່ານັ້ນພາກັນໄປເຝົ້າທ່ານພຣະໂຄຕະມະພຣະອົງຄ໌ນັ້ນ.

ທ່ານນັກກາຣ! ຖ້າເຊັ່ນນັ້ນ ທ່ານຈົ່ງໄປຫາເຂົາ ແລ້ວບອກເຂົາຢ່າງນີ້ວ່າ ທ່ານທັງຫລາຍຈົ່ງລໍກ່ອນ ທ່ານພຣາມນ໌ໂສນະທັນດະຈະເຂົ້າໄປເຝົ້າພຣະສະມະນະໂຄຕະມະດ້ວຍ.

ນັກກາຣຮັບຄຳແລ້ວ ເຂົ້າໄປຫາພຣາມນ໌ແລະຄະຫະບໍດີຊາວນະຄອຣຈັມປາ ແລ້ວບອກຕາມຄຳສັ່ງວ່າ ທ່ານທັງຫລາຍພຣາມນ໌ໂສນະທັນດະສັ່ງວ່າ ຂໍທ່ານທັງຫລາຍຈົ່ງລໍກ່ອນທ່ານພຣາມນ໌ໂສນະທັນດະຈະໄປເຝົ້າດ້ວຍ.

ສມັຍນັ້ນ ພວກພຣາມນ໌ຕ່າງເມືອງປະມານ ໕໐໐ ຄົນ ມາພັກຢູ່ໃນນະຄອຣຈັມປາດ້ວຍກະຣະນີຍະກິຈບາງຢ່າງ ເຂົາໄດ້ຊາບວ່າ ພຣາມນ໌ໂສນະທັນດະຈະໄປເຝົ້າພຣະສະມະນະໂຄຕະມະ ຈຶ່ງພາກັນເຂົ້າໄປຫາແລ້ວຖາມວ່າ ໄດ້ຊາບວ່າທ່ານຈະໄປເຝົ້າພຣະສະມະນະໂຄຕະມະຈິງຫລື?

ພຣາມນ໌ໂສນະທັນດະຕອບວ່າ ເຮົາຄິດວ່າຈະໄປ.

ພວກພຣາມນ໌ກ່າວວ່າ ຢ່າເລີຍທ່ານໂສນະທັນດະ ທ່ານບໍ່ຄວນເຂົ້າໄປເຝົ້າສະມະນະໂຄຕະມະ. ຖ້າທ່ານໄປ ທ່ານຈະເສຍກຽດຕິຍົສ ກຽດຕິຍົສຂອງພຣະສະມະນະໂຄຕະມະຈັກຮຸ່ງເຮືອງດ້ວຍເຫຕນີ້ແຫລະ ທ່ານຈຶ່ງບໍ່ຄວນໄປ ພຣະສະມະນະໂຄຕະມະຕ່າງຫາກຄວນຈະສະເດັຈມາຫາທ່ານ. ອີກຢ່າງໜຶ່ງ ທ່ານເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ມີຄັນເປັນທີ່ຖືປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງຊາຕ ເພາະເຫຕນີ້ ທ່ານຈຶ່ງບໍ່ຄວນໄປເຝົ້າພຣະສະມະນະໂຄຕະມະ ພຣະສະມະນະໂຄຕະມະຕ່າງຫາກຄວນຈະສະເດັຈມາຫາທ່ານ.

ອີກຢ່າງໜຶ່ງ ທ່ານເປັນຄົນຮັ່ງມີ ມີຊັພຍ໌ຫລາຍ ມີໂພຄະສົມບັຕຫລາຍ...

ອີກຢ່າງໜຶ່ງ ທ່ານເປັນຜູ້ເລົ່າຮຽນ ຊົງຈຳມົນຕ໌ ຮູ້ຈົບໄຕຣເພທພ້ອມທັງຄັມພີຣ໌ນິຄັນທຸ ຄັມພີຣ໌ເກຕຸພະ ພ້ອມທັງປະເພດອັກສອຣມີຄັມພີຣ໌ອິຕິຫາສເປັນທີ ໕ ເປັນຜູ້ເຂົ້າໃຈຕົວບົທເປັນຜູ້ເຂົ້າໃຈໄວຍາກອນ ຊຳນານໃນຄັມພີໂລກາຍະຕະ ແລະມະຫາປຸຣິສະລັກສະນະ...

ອີກຢ່າງໜຶ່ງ ທ່ານເປັນຜູ້ມີຮູປງາມ ໜ້າເບິ່ງໜ້າເຫລື້ອມໃສ ປະກອບດ້ວຍຜິວພັນຜຸດຜ່ອງຢ່າງຍິ່ງ ມີຜິວພັນຄ້າຍພຣົມ ມີຮູບຮ່າງຄ້າຍພຣົມ ໜ້າເບິ່ງໜ້າຊົມບໍ່ນ້ອຍ...

ອີກຢ່າງໜຶ່ງ ທ່ານເປັນຜູ້ມີສີລ ມີສີລຍັ້ງຍືນ ປະກອບດ້ວຍສີລຍັ້ງຍືນ...

ອີກຢ່າງໜຶ່ງ ທ່ານເປັນຜູ້ມີວາຈາມ່ວນ ມີສຳນຽງມ່ວນ ປະກອບດ້ວຍວາຈາຂອງຊາວເມືອງງົດງາມຫາໂທສບໍ່ໄດ້ ໃຫ້ຜູ້ຟັງເຂົ້າໃຈເນື້ອຄວາມໄດ້ຢ່າງແຈ່ມແຈ້ງ...

ອີກຢ່າງໜຶ່ງ ທ່ານເປັນອາຈາຣຍ໌ແລະປາຈາຣຍ໌ຂອງຊົນທັງຫລາຍ ສອນມົນຕ໌ມານົພເຖິງ ໓໐໐ ຄົນ ມານົພຈຳນວນຫລາຍ ຕ່າງທິສ ຕ່າງຊົນບົທຜູ້ຕ້ອງການມົນຕ໌ ໃຄ່ຈະຮຽນມົນຕ໌ໃນສຳນັກຂອງທ່ານ ພາກັນມາ...

ອີກຢ່າງໜຶ່ງ ທ່ານເປັນຄົນແກ່ເຖົ້າ ເປັນຜູ້ໃຫຍ່ ລ່ວງກາລຜ່ານວັຍມາໂດຍລຳດັບ ສ່ວນພຣະສະມະນະໂຄຕະມະເປັນຄົນໜຸ່ມແລະບວຊແຕ່ຍັງໜຸ່ມ...

ອີກຢ່າງໜຶ່ງ ທ່ານເປັນຜູ້ອັນພຣະເຈົ້າພິມພິສາຣຈອມເສນາມະຄົທ ຊົງສັກກາຣະ ເຄົາຣົພ ນັບຖື ບູຊາ ນອບນ້ອມ...

ອີກຢ່າງໜຶ່ງ ທ່ານເປັນຜູ້ອັນພຣາມນ໌ໂປກຂະຣະສາຕິສັກການະ ເຄົາຣົພ ນັບຖື ບູຊາ ນອບນ້ອມ...

ອີກຢ່າງໜຶ່ງ ທ່ານຄອງນະຄອຣຈັມປາ ເຊິ່ງຄັບຄັ່ງດ້ວຍປະຊາຊົນແລະໝູ່ສັຕ ອຸດົມດ້ວຍຫຍ້າ ດ້ວຍໄມ້ ດ້ວຍນ້ຳສົມບູນດ້ວຍທັນຍາຫາຣ ເຊິ່ງເປັນຣາຊະສົມບັຕຂອງພຣະເຈົ້າພິມພິສາຣຈອມເສນາມະຄະຣາຊ ພຣະຣາຊະທານປູນບຳເໜັຈໃຫ້ເປັນສ່ວນພຣົມໄທຍ. ເພາະເຫຕນີ້ ທ່ານຈຶ່ງບໍ່ຄວນໄປເຝົ້າພຣະສະມະນະໂຄຕະມະ ພຣະສະມະນະໂຄຕະມະຕ່າງຫາກຄວນຈະສະເດັຈມາຫາທ່ານ ດັ່ງນີ້.

ເມື່ອພວກພຣາມນ໌ກ່າວຢ່າງນີ້ແລ້ວ ພຣາມນ໌ໂສນະທັນດະໄດ້ກ່າວວ່າ ທ່ານທັງຫລາຍ ຖ້າຢ່າງນັ້ນ ຂໍພວກທ່ານຈົ່ງຟັງຂ້າພະເຈົ້າດ້ວຍ ເຮົານີ້ແຫລະຄວນໄປເຝົ້າທ່ານພຣະໂຄຕະມະພຣະອົງຄ໌ນັ້ນ ທ່ານພຣະໂຄຕະມະບໍ່ຄວນຈະສະເດັຈມາຫາໄດ້ຍິນວ່າ ພຣະສະມະນະໂຄຕະມະເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ແລະມີພຣະຄັນພ໌ເປັນທີ່ຊົງຖືປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະ

ຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງພຣະຊາຕ ເພາະເຫຕນີ້ແຫລະທ່ານພຣະໂຄຕະມະຈຶ່ງບໍ່ຄວນສະເດັຈມາຫາເຮົາ ທີ່ຖືກຕ້ອງເຮົານີ້ແຫລະຄວນເຂົ້າໄປເຝົ້າທ່ານພຣະໂຄຕະມະ.

ໄດ້ຍິນວ່າ ພຣະສະມະນະໂຄຕະມະຊົງລະພຣະຍາຕໝູ່ໃຫຍ່ຊົງອອກຜນວຊ...

ຊົງສະລະເງິນຄຳເປັນອັນມາກ ທັງທີ່ຢູ່ໃນພື້ນດິນ ທັງທີ່ຢູ່ໃນອາກາສ ຊົງອອກຜນວຊ...

ພຣະສະມະນະໂຄຕະມະກຳລັງໜຸ່ມແໜ້ນ ມີພຣະເກສາດຳສະໜິດ ຊົງພຣະຈະເຣີນດ້ວຍປະຖົມວັຍ ສະເດັຈອອກຜນວຊເປັນບັນພະຊິຕ...

ເມື່ອພຣະມາຣດາແລະພຣະບິດາບໍ່ຊົງປາຖນາໃຫ້ຊົງຜນວຊມີພຣະພັກນອງດ້ວຍນ້ຳພຣະເນຕ ຊົງກັນແສງຢູ່ ພຣະສະມະນະໂຄຕະມະຊົງປົງພຣະເກສາແລະພຣະມັສສຸ ຊົງຄອງຜ້າກາສາວະພັສສະເດັຈອອກຜນວຊເປັນບັນພະຊິຕ...

ພຣະສະມະນະໂຄຕະມະເປັນຜູ້ມີຮູບງາມ ໜ້າເບິ່ງ ໜ້າເຫລື້ອມໃສ ປະກອບດ້ວຍພຣະສະວີວັນຜຸດຜ່ອງຢ່າງຍິ່ງ

ມີພຣະວັນນະຄ້າຍພຣົມ ມີພຣະຮູບຄ້າຍພຣົມ ໜ້າເບິ່ງ ໜ້າຊົມບໍ່ນ້ອຍ...

ພຣະສະມະນະໂຄຕະມະເປັນຜູ້ມີສິລ ມີສິລປະເສີດ ມີສິລເປັນກຸສົລ ປະກອບດ້ວຍສິລອັນເປັນກຸສົລ...

ພຣະສະມະນະໂຄຕະມະມີພຣະວາຈາມ່ວນ ມີພຣະສຳນຽງມ່ວນ ປະກອບດ້ວຍວາຈາຂອງຊາວເມືອງງົດງາມຫາໂທສບໍ່ໄດ້ ໃຫ້ຜູ້ຟັງເຂົ້າໃຈເນື້ອຄວາມໄດ້ຢ່າງແຈ່ມແຈ້ງ...

ພຣະສະມະນະໂຄຕະມະເປັນອາຈາຣຍ໌ແລະປາຈາຣຍ໌ຂອງຊົນທັງຫລາຍ...

ພຣະສະມະນະໂຄຕະມະສິ້ນກາມຣາຄະແລ້ວ ເລີກປະດັບຕົບແຕ່ງແລ້ວ...

ພຣະສະມະນະໂຄຕະມະເປັນກັມມະວາທີ ເປັນກິຣິຍາວາທີ ບໍ່ຊົງມຸ່ງຮ້າຍແກ່ພວກພຣາມນ໌...

ພຣະສະມະນະໂຄຕະມະຊົງຜນວຊຈາກສະກຸນສູງ ຄືສະກຸນກະສັຕອັນບໍ່ເຈືອປົນ...

ພຣະສະມະນະໂຄຕະມະຊົງຜນວຊຈາກສະກຸນຮັ່ງມີ ມີຊັພຍ໌ຫລາຍ ມີໂພຄະສົມບັຕຫລາຍ...

ຊົນຕ່າງຣັຖ ຕ່າງຊົນບົທພາກັນມາທູລຖາມບັນຫາພຣະສະມະນະໂຄຕະມະ...

ເທວະດາຫລາຍພັນມອບຊີວິຕເຖິງພຣະສະມະນະໂຄຕະມະເປັນສະຣະນະ...

ພຣະກິຕຕິສັທອັນງາມຂອງພຣະສະມະນະໂຄຕະມະນັ້ນຂະຈອຣໄປແລ້ວຢ່າງນີ້ວ່າ ເພາະເຫຕນີ້ໆ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ ດັ່ງນີ້...

ພຣະສະມະນະໂຄຕະມະປະກອບດ້ວຍມະຫາປຸຣິສະລັກສະນະ ໓໒ ປະການ...

ພຣະສະມະນະໂຄຕະມະມີປົກກະຕິກ່າວເຊື້ອເຊີນ ເຈຣະຈາ ຜູກໄມຕຣີ ຊ່າງປຣາສັຍ ມີພຣະພັກບໍ່ເຄັ່ງຂຶມ*(ອັພພາກຸຕິໂກ)* ມີພຣະພັກເບີກບານ*(ອຸຕຕານະມຸໂຂ)* ມີປົກກະຕິຕຣັສກ່ອນ...

ພຣະສະມະນະໂຄຕະມະເປັນຜູ້ທີ່ບໍຣິສັທ ໔ ສັກກາຣະ ເຄົາ ຣົພ ນັບຖື ບູຊາ ນອບນ້ອມ...

ເທວະດາແລະມະນຸສທັງຫລາຍເຫລື້ອມໃສໃນພຣະສະມະນະ ໂຄຕະມະຢ່າງຍິ່ງ...

ພຣະສະມະນະໂຄຕະມະຊົງພໍານັກຢູ່ໃນບ້ານຫລືນິຄົມໃດ ໃນ ບ້ານຫລືນິຄົມນັ້ນ ອະມະນຸສບໍ່ບຽດບຽນມະນຸສ...

ພຣະສະມະນະໂຄຕະມະຊົງເປັນເຈົ້າໝູ່ ເຈົ້າຄະນະ ແລະຊົງ ເປັນຄະນາຈາຣຍ໌ ໄດ້ຮັບຍົກຍ້ອງວ່າ ເປັນຍອດຂອງເຈົ້າລັທທິ ທັງຫລາຍ ສະມະນະພຣາມມ໌ເຫລົ່ານີ້ຮຸ່ງເຮືອງຍົສດ້ວຍປະ ການໃດໆ ແຕ່ພຣະສະມະນະໂຄຕະມະບໍ່ເປັນຢ່າງນັ້ນ ທີ່ແທ້ ພຣະສະມະນະໂຄຕະມະຮຸ່ງເຮືອງພຣະຍົສດ້ວຍວິຊຊາແລະ ຈະຣະນະສົມບັຕອັນຍອດຍ້ຽມ...

ພຣະເຈົ້າພິມພິສາຣຈອມເສນາມະຄະຣາຊ ພ້ອມທັງພຣະໂອຣົສແລະພຣະຊາຍາ ທັງຣາຊະບໍຣິສັທ ແລະອະມາຕຍ໌ ຊົງມອບຊີວິຕເຖິງພຣະສະມະນະໂຄຕະມະເປັນສະຣະນະ...

ພຣະເຈົ້າປະເສນທິໂກສົລ ພ້ອມທັງພຣະໂອຣົສແລະພຣະຊາຍາ ທັງຣາຊະບໍຣິສັທ ແລະອະມາຕຍ໌ ຊົງມອບຊີວິຕເຖິງພຣະສະມະນະໂຄຕະມະເປັນສະຣະນະ...

ພຣາມນ໌ໂປກຂະຣະສາຕິພ້ອມທັງບຸຕແລະພະຣິຍາ ທັງບໍຣິສັທແລະອະມາຕຍ໌ ມອບຊີວິຕເຖິງພຣະສະມະນະໂຄຕະມະເປັນສະຣະນະ...

ພຣະສະມະນະໂຄຕະມະເປັນຜູ້ອັນພຣະເຈົ້າພິມພິສາຣຈອມເສນາມະຄະຣາຊຊົງສັກກາຣະ ເຄົາຣົພ ນັບຖື ບູຊາ ນອບນ້ອມ...

ພຣະສະມະນະໂຄຕະມະເປັນຜູ້ອັນພຣະເຈົ້າປະເສນທິໂກສົລຊົງສັກກາຣະ ເຄົາຣົພ ນັບຖື ບູຊາ ນອບນ້ອມ...

ພຣະສະມະນະໂຄຕະມະເປັນຜູ້ອັນພຣາມນ໌ໂປກຂະຣະສາຕິສັກກາຣະ ເຄົາຣົພ ນັບຖື ບູຊາ ນອບນ້ອມ...

ພຣະສະມະນະໂຄຕະມະສະເດັຈເຖິງນະຄອຣຈັມປາ ປະທັບຢູ່ທີ່ຂອບສະໂບກຂະຣະນີຄັຄຄຣາໃນຈັມປານະຄອຣ.

ທ່ານທັງຫລາຍ! ສະມະນະຫລືພຣາມນ໌ເຫລົ່າໃດເຫລົ່າໜຶ່ງມາສູ່ເຂຕບ້ານຂອງເຮົາ ທ່ານເຫລົ່ານັ້ນຈັດວ່າເປັນແຂກຂອງເຮົາ ແລະເປັນແຂກທີ່ເຮົາຄວນສັກກາຣະ ເຄົາຣົພ ນັບຖືບູຊາ ນອບນ້ອມ. ພຣະສະມະນະໂຄຕະມະສະເດັຈມາເຖິງນະຄອຣຈັມປາ ປະທັບຢູ່ທີ່ຂອບສະໂບກຂະຣະນີຄັຄຄຣາໃນນະຄອຣຈັມປາ ພຣະອົງຄ໌ກໍຊື່ງເປັນແຂກຂອງພວກເຮົາ ແລະເປັນແຂກທີ່ພວກເຮົາຄວນສັກກາຣະ ເຄົາຣົພ ນັບຖື ນອບນ້ອມ ເພາະເຫຕນັ້ນແຫລະ ພຣະອົງຄ໌ຈຶ່ງບໍ່ຄວນສະເດັຈມາຫາເຮົາ ທີ່ຖືກຕ້ອງ ເຮົາຕ່າງຫາກຄວນຈະໄປເຝົ້າພຣະອົງຄ໌. ຂ້າພະເຈົ້າຊາບພຣະຄຸນຂອງພຣະອົງຄ໌ພຽງເທົ່ານີ້ ແຕ່ທ່ານພຣະໂຄຕະມະບໍ່ແມ່ນມີຄຸນພຽງເທົ່ານີ້ ຄວາມຈິງ ພຣະອົງຄ໌ມີພຣະຄຸນຫາປະມານບໍ່ໄດ້.

ເມື່ອພຣາມນ໌ໂສນະທັນດະກ່າວຢ່າງນີ້ແລ້ວ ພວກພຣາມນ໌ເຫລົ່ານັ້ນໄດ້ກ່າວວ່າ ທ່ານໂສນະທັນດະກ່າວຊົມພຣະສະມະນະໂຄຕະມະເຖິງພຽງນີ້ ເຖິງຫາກທ່ານພຣະໂຄຕະມະພຣະອົງຄ໌ນັ້ນຈະປະທັບຢູ່ໄກຈາກທີ່ນີ້ຕັ້ງຮ້ອຍໂຍຊນ໌ ກໍຄວນ

ແທ້ທີ່ກຸລະບຸຕຜູ້ມີສັທທາຈະໄປເຝົ້າ ເຖິງວ່າຈະຕ້ອງນຳສະບຽງໄປກໍຄວນ.

ພຣາມນ໌ໂສນະທັນດະກ່າວວ່າ ທ່ານທັງຫລາຍ ຖ້າເຊັ່ນນັ້ນພວກເຮົາທັງໝົດຈັກໄປເຝົ້າພຣະສະມະນະໂຄຕະມະ.

ລຳດັບນັ້ນ ພຣາມນ໌ໂສນະທັນດະພ້ອມດ້ວຍຄະນະພຣາມນ໌ໝູ່ໃຫຍ່ໄປເຖິງສະໄບກຂະຣະນີຄັຄຣາ ເມື່ອຜ່ານພົ້ນຣາວປ່າໄປແລ້ວ ໄດ້ເກີດຄວາມປະຣິວິຕົກຂຶ້ນຢ່າງນີ້ວ່າ ຖ້າເຮົາຈະຖາມບັນຫາກັບພຣະສະມະນະໂຄຕະມະ ຫາກພຣະອົງຄ໌ຈະຕຣັສກັບເຮົາຢ່າງນີ້ວ່າ ພຣາມນ໌ ບັນຫາຂໍ້ນີ້ ທ່ານບໍ່ຄວນຖາມຢ່າງນັ້ນ ທີ່ຖືກຕ້ອງ ທ່ານຄວນຖາມຢ່າງນີ້ ດັ່ງນີ້, ບໍຣິສັທນີ້ຈະດູໝິ່ນເຮົາໄດ້ດ້ວຍເຫຕນັ້ນວ່າ ພຣາມນ໌ໂສນະທັນດະເປັນຄົນໂງ່ ບໍ່ສລາດ ບໍ່ສາມາດຖາມບັນຫາໂດຍແຍບຄາຍກັບພຣະສະມະນະໂຄຕະມະໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສກໍຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສເຮົາຈຶ່ງມີໂພຄະສົມບັຕ. ຖ້າພຣະສະມະນະໂຄຕະມະຈະຕຣັສຖາມບັນຫາກັບເຮົາ ແລະເຮົາແກ້ບໍ່ຖືກພຣະທັຍ ຖ້າພຣະອົງຄ໌ຈະຕຣັສກັບເຮົາຢ່າງນີ້ວ່າ ພຣາມນ໌ ບັນຫາຂໍ້ນີ້ ທ່ານບໍ່ຄວນແກ້ຢ່າງນັ້ນ ທີ່ຖືກຕ້ອງ ທ່ານຄວນແກ້ຢ່າງນີ້ ດັ່ງນີ້, ບໍຣິສັທນີ້ຈະດູໝິ່ນເຮົາໄດ້ດ້ວຍເຫຕນັ້ນວ່າ ພຣາມນ໌ໂສນະທັນດະເປັນ

ຄົນໂງ່ ບໍ່ສລາດ ບໍ່ສາມາດແກ້ບັນຫາໃຫ້ຖືກພຣະທັຍພຣະສະມະນະໂຄຕະມະໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສກໍຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສເຮົາຈຶ່ງມີໂພຄະສົມບັຕ. ອີກຢ່າງໜຶ່ງ ເຮົາເຂົ້າມາໃກ້ເຖິງພຽງນີ້ແລ້ວຍັງບໍ່ໄດ້ເຝົ້າພຣະສະມະນະໂຄຕະມະຈະກັບໄປເສຍ ບໍຣິສັທນີ້ຈະດູໝິ່ນເຮົາໄດ້ດ້ວຍເຫຕນັ້ນວ່າ ພຣາມນ໌ໂສນະທັນດະເປັນຄົນໂງ່ ບໍ່ສລາດ ບໍ່ສາມາດເຂົ້າເຝົ້າພຣະສະມະນະໂຄຕະມະໄດ້ເຂົ້າມາໃກ້ເຖິງພຽງນີ້ແລ້ວ ຍັງບໍ່ທັນເຂົ້າເຝົ້າ ເຫຕໃດຈຶ່ງກັບເສຍ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສກໍຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສເຮົາຈຶ່ງມີໂພຄະສົມບັຕ.

ລຳດັບນັ້ນ ພຣາມນ໌ໂສນະທັນດະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ. ຝ່າຍພຣາມນ໌ແລະຄະຫະບໍດີຊາວນະຄອຣຈັມປາ ບາງພວກກໍຖວາຍອະພິວາທ ບາງພວກກໍປຣາສັຍ ບາງພວກກໍປະນົມມືອັນຊະລີໄປທາງພຣະຜູ້ມີພຣະພາຄ ບາງພວກກໍປະກາສຊື່ແລະໂຄຕ ບາງພວກກໍນິ້ງຢູ່ ແລ້ວກໍນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ໄດ້ຍິນວ່າ ໃນຂະນະນັ້ນ ພຣາມນ໌ໂສນະທັນດະນັ່ງຄິດເຖິງແຕ່ເຣື່ອງນັ້ນວ່າ ຖ້າເຮົາຈະຖາມບັນຫາກັບພຣະສະມະນະໂຄຕະມະ ຫາກພຣະອົງຄ໌ຈະຕຣັສ

ກັບເຮົາຢ່າງນີ້ວ່າ ພຣາມນ໌ ບັນຫາຂໍ້ນີ້ ທ່ານບໍ່ຄວນຖາມຢ່າງນັ້ນ ທີ່ຖືກຕ້ອງ ທ່ານຄວນຖາມຢ່າງນີ້ ດັ່ງນີ້, ບໍຣິສັທນີ້ຈະດູໝິ່ນເຮົາໄດ້ດ້ວຍເຫຕນັ້ນວ່າ ພຣາມນ໌ໂສນະທັນດະເປັນຄົນໂງ່ ບໍ່ສລາດ ບໍ່ສາມາດຖາມບັນຫາໂດຍແຍບຄາຍກັບພຣະສະມະນະໂຄຕະມະໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສກໍຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສເຮົາຈຶ່ງມີໂພຄະສົມບັຕ ຖ້າພຣະສະມະນະໂຄຕະມະຈະຕຣັສຖາມບັນຫາກັບເຮົາ ແລະເຮົາແກ້ບໍ່ຖືກພຣະທັຍ ຖ້າພຣະອົງຄ໌ຈະຕຣັສກັບເຮົາຢ່າງນີ້ວ່າ ພຣາມນ໌ ບັນຫາຂໍ້ນີ້ ທ່ານບໍ່ຄວນແກ້ຢ່າງນັ້ນ ທີ່ຖືກຕ້ອງ ທ່ານຄວນແກ້ຢ່າງນີ້ ດັ່ງນີ້, ບໍຣິສັທນີ້ຈະດູໝິ່ນເຮົາໄດ້ດ້ວຍເຫຕນັ້ນວ່າ ພຣາມນ໌ໂສນະທັນດະເປັນຄົນໂງ່ ບໍ່ສລາດ ບໍ່ສາມາດແກ້ບັນຫາໃຫ້ຖືກພຣະທັຍພຣະສະມະນະໂຄຕະມະໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສກໍຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສເຮົາຈຶ່ງມີໂພຄະສົມບັຕ. ຂໍພຣະສະມະນະໂຄຕະມະຈົ່ງໄດ້ຕຣັສຖາມບັນຫາໃນເຣື່ອງໄຕຣວິຊຊາອັນເປັນຂອງອາຈາຣຍ໌ເຮົາ ເຮົາຈະແກ້ໃຫ້ຖືກພຣະທັຍໄດ້ແນ່ນອນ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊາບຄວາມປະຣິວິຕົກຂອງພຣາມນ໌ໂສນະທັນດະດ້ວຍພຣະທັຍ ແລ້ວຊົງດຳຣິວ່າ ພຣາມນ໌ໂສນະທັນດະນີ້ລຳບາກໃຈໂຕເອງຢູ່ ຖ້າເຊັ່ນນັ້ນ ເຮົາ

ຄວນຖາມບັນຫາກັບເຂົາໃນເຣື່ອງໄຕຣວິຊຊາອັນເປັນຂອງອາຈາຣຍ໌ເຂົາ ຈາກນັ້ນຈຶ່ງໄດ້ຕຣັສຖາມພຣາມນ໌ໂສນະທັນດະວ່າ:

ພຣາມນ໌! ບຸຄຄົລຜູ້ປະກອບດ້ວຍອົງຄ໌ເທົ່າໃດ ພວກພຣາມນ໌ຈຶ່ງບັນຍັຕວ່າເປັນພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ?

ພຣາມນ໌ໂສນະທັນດະດໍາຣິວ່າ ເຮົາໄດ້ປະສົງຈໍານົງໝາຍປາຖນາໄວ້ແລ້ວວ່າ ຂໍພຣະສະມະນະໂຄຕະມະຈົ່ງໄດ້ຕຣັສຖາມບັນຫາໃນເຣື່ອງໄຕຣວິຊຊາອັນເປັນຂອງອາຈາຣຍ໌ເຮົາ ເຮົາຈະແກ້ໃຫ້ຖືກພຣະທັຍໄດ້ແນ່ນອນ.

ລໍາດັບນັ້ນ ພຣາມນ໌ໂສນະທັນດະຈຶ່ງເຜີຍກາຍຂຶ້ນຫລຽວເບິ່ງບໍຣິສັທ ແລ້ວກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໕ ປະກາຣ ພວກພຣາມນ໌ຈຶ່ງບັນຍັຕວ່າເປັນພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ; ໕ ປະກາຣເປັນຢ່າງໃດ?

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ເປັນພຣາມນ໌ໃນໂລກນີ້ ເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ມີຄັນພ໌ເປັນທີ່ຖືປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງຊາຕ.

ເປັນຜູ້ເລົ່າຮຽນ ຊົງຈຳມົນຕ໌ ຮູ້ຈົບໄຕຣເພທ ພ້ອມທັງຄັມພີຣ໌ນິຄັນທຸ ຄັມພີຣ໌ເກຕຸພະ ພ້ອມທັງປະເພດອັກສອຣມີຄັມພີຣ໌ອິຕິຫາສເປັນທີ ໕ ເປັນຜູ້ເຂົ້າໃຈຕົວບົທ ເປັນຜູ້ເຂົ້າໃຈໄວຍາກອນຊຳນານໃນຄັມພີຣ໌ໂລກາຍະຕະ ແລະມະຫາປຸຣິສະລັກສະນະ.

ເປັນຜູ້ມີຮູບງາມ ໜ້າເບິ່ງໜ້າເຫລື້ອມໃສ ປະກອບດ້ວຍຜິວພັນຜຸດຜ່ອງຢ່າງຍິ່ງ ມີວັນນະຄ້າຍພຣົມ ມີຮູບຮ່າງຄ້າຍພຣົມ ໜ້າເບິ່ງໜ້າຊົມບໍ່ນ້ອຍ.

ເປັນຜູ້ມີສິລ ມີສິລຍັ້ງຍືນ ປະກອບດ້ວຍສິລຍັ້ງຍືນ.

ເປັນບັນດິຕ ມີປັນຍາເປັນທີ ໑ ຫລືທີ ໒ ຂອງພວກປະຕິຄາຫົກຜູ້ຮັບບູຊາດ້ວຍກັນ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໕ ປະກາຣເຫລົ່ານີ້ແລ ພວກພຣາມນ໌ຈຶ່ງບັນຍັຕວ່າ

ເປັນພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍ ຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ.

ພຣະຜູ້ມີພຣະພາຄຕຣັສວ່າ:

**ພຣາມນ໌! ບັນດາອົງຄ໌ທັງ ໕ ເຫລົ່ານີ້ ຍົກເສຍອົງຄ໌ໜຶ່ງແລ້ວ ບຸຄຄົລປະກອບດ້ວຍອົງຄ໌ພຽງ ໔ ສາມາດບັນຍັຕວ່າ ເປັນພຣາມນ໌ໄດ້ຫລືບໍ່ ແລະເມື່ອເຂົາຈະກ່າວວ່າເຮົາ ເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາ ວາທດ້ວຍ?**

ພຣາມນ໌ໂສນະທັນດະໄດ້ທູລວ່າ ໄດ້ ພຣະໂຄຕະມະຜູ້ຈະເຣີນ ບັນດາອົງຄ໌ທັງ ໕ ເຫລົ່ານີ້ ຍົກວັນນະເສຍກໍໄດ້ ເພາະວັນນະ ຈັກກະທຳອັນໃດໄດ້ ດ້ວຍເຫຕວ່າບຸຄຄົລຜູ້ເປັນພຣາມນ໌.

ເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ມີຄັນພ໌ເປັນທີ່ຖື ປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະ ຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງຊາຕ.

ເປັນຜູ້ເລົ່າຮຽນ ຊົງຈຳມົນຕ໌ ຮູ້ຈົບໄຕຣເພທ ພ້ອມທັງຄັມພີຣ໌ນິ ຄັນທຸ ຄັມພີຣ໌ເກຕຸພະ ພ້ອມທັງປະເພດອັກສອຣມີຄັມພີຣ໌ອິຕິ

**ທາດເປັນທີ ໕ ເປັນຜູ້ເຂົ້າໃຈຕົວບົທ ເປັນຜູ້ເຂົ້າໃຈໄວຍາກອນ ຊຳນານໃນຄັມພີຣ໌ໂລກາຍະຕະ ແລະມະຫາປຸຣິສະລັກສະນະ.**

**ເປັນຜູ້ມີສິລ ມີສິລຍັ້ງຍືນ ປະກອບດ້ວຍສິລຍັ້ງຍືນ.**

**ເປັນບັນດິຕ ມີປັນຍາເປັນທີ ໑ ຫລືທີ ໒ ຂອງພວກປະຕິຄາຫົກຜູ້ຮັບບູຊາດ້ວຍກັນ.**

**ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໔ ປະການເຫລົ່ານີ້ແລ ພວກພຣາມນ໌ຈຶ່ງບັນຍັຕວ່າເປັນພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ.**

ພຣະຜູ້ມີພຣະພາຄຕຣັສວ່າ:

ພຣາມນ໌! ບັນດາອົງຄ໌ທັງ ໔ ເຫລົ່ານີ້ ຍົກເສຍອົງຄ໌ໜຶ່ງແລ້ວ ບຸຄຄົລປະກອບດ້ວຍອົງຄ໌ພຽງ ໓ ສາມາດບັນຍັຕວ່າເປັນພຣາມນ໌ໄດ້ຫລືບໍ່ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ?

ພຣາມນ໌ໂສນະທັນດະໄດ້ທູລວ່າ ໄດ້ ພຣະໂຄຕະມະຜູ້ຈະເຣີນ ບັນດາອົງຄ໌ທັງ ໔ ເຫລົ່ານີ້ ຍົກມົນຕ໌ເສຍກໍໄດ້ ເພາະມົນຕ໌ ຈັກກະທຳອັນໃດໄດ້ ດ້ວຍເຫຕວ່າບຸຄຄົລຜູ້ເປັນພຣາມນ໌.

ເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ມີຄັນພ໌ເປັນທີ່ຖື ປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະ ຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງຊາຕ.

ເປັນຜູ້ມີສີລ ມີສີລຍັ້ງຍືນ ປະກອບດ້ວຍສີລຍັ້ງຍືນ.

ເປັນບັນດິຕ ມີປັນຍາເປັນທີ ໑ ຫລືທີ ໔ ຂອງພວກ ປະຕິຄາຫົກຜູ້ຮັບບູຊາດ້ວຍກັນ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໓ ປະການເຫລົ່ານີ້ແລ ພວກພຣາມນ໌ຈຶ່ງບັນຍັຕວ່າເປັນ ພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມ ກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ.

**ພຣະຜູ້ມີພຣະພາຄຕຣັສວ່າ:**

ພຣາມນ໌! ບັນດາອົງຄ໌ທັງ ๕ ເຫລົ່ານີ້ ຍົກເສຍອົງຄ໌ໜຶ່ງແລ້ວ ບຸຄຄົລປະກອບດ້ວຍອົງຄ໌ພຽງ ๔ ສາມາດບັນຍັຕວ່າ ເປັນພຣາມນ໌ໄດ້ຫລືບໍ່ ແລະເມື່ອເຂົາຈະກ່າວວ່າເຮົາ ເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາ ວາທດ້ວຍ?

ພຣາມນ໌ໂສນະທັນດະໄດ້ທູລວ່າ ໄດ້ ພຣະໂຄຕະມະຜູ້ຈະເຣີນ ບັນດາອົງຄ໌ທັງ ๕ ເຫລົ່ານີ້ ຍົກຊາຕເສຍກໍໄດ້ ເພາະຊາຕ ຈັກກະທຳອັນໃດໄດ້ ດ້ວຍເຫຕວ່າບຸຄຄົລຜູ້ເປັນພຣາມນ໌.

ເປັນຜູ້ມີສີລ ມີສີລຍັ້ງຍືນ ປະກອບດ້ວຍສີລຍັ້ງຍືນ.

ເປັນບັນດິຕ ມີປັນຍາເປັນທີ ๑ ຫລືທີ ๔ ຂອງພວກ ປະຕິຄາຫົກຜູ້ຮັບບູຊາດ້ວຍກັນ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ບຸຄຄົລຜູ້ປະກອບດ້ວຍອົງຄ໌ ๔ ປະການເຫລົ່ານີ້ແລ ພວກພຣາມນ໌ຈຶ່ງບັນຍັຕວ່າເປັນ ພຣາມນ໌ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ ກໍຍ່ອມ ກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ.

ເມື່ອພຣາມນ໌ໂສນະທັນດະທູລຢ່າງນີ້ແລ້ວ ພຣາມນ໌ເຫລົ່ານັ້ນໄດ້ກ່າວວ່າ ທ່ານໂສນະທັນດະຢ່າໄດ້ກ່າວຢ່າງນັ້ນເລີຍ ທ່ານໂສນະທັນດະຢ່າໄດ້ກ່າວຢ່າງນັ້ນເລີຍ ທ່ານໂສນະທັນດະກ່າວລົບຫລູ່ວັນນະ ກ່າວລົບຫລູ່ມົນຕ໌ ກ່າວລົບຫລູ່ຊາຕ ກ່າວຄ້ອຍຕາມວາທະຂອງພຣະສະມະນະໂຄຕະມະທ່າດຽວເທົ່ານັ້ນ.

ລຳດັບນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສກັບພຣາມນ໌ເຫລົ່ານັ້ນວ່າ:

ຖ້າພວກທ່ານຄິດຢ່າງນີ້ວ່າ ພຣາມນ໌ໂສນະທັນດະອ່ອນການສຶກສາ ເວົ້າບໍ່ດີ ມີປັນຍາຊາມ ແລະບໍ່ສາມາດຈະຕອບໂຕ້ກັບພຣະສະມະນະໂຄຕະມະໃນເຣື່ອງນີ້ໄດ້ ພຣາມນ໌ໂສນະທັນດະກໍຈົ່ງຢຸດເສຍ ພວກທ່ານຈົ່ງເວົ້າກັບເຮົາເຖີດ ແຕ່ຖ້າພວກທ່ານຄິດຢ່າງນີ້ວ່າ ພຣາມນ໌ໂສນະທັນດະເປັນພະຫູສູຕ ເວົ້າດີເປັນບັນດິຕ ແລະສາມາດຈະໂຕ້ຕອບກັບພຣະສະມະນະໂຄຕະມະໃນເຣື່ອງນີ້ໄດ້ ພວກທ່ານຈົ່ງຢຸດເສຍ ພຣາມນ໌ໂສນະທັນດະຈົ່ງໂຕ້ຕອບກັບເຮົາ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພຣາມນ໌ໂສນະທັນດະໄດ້ກຣາບທູລວ່າ ຂໍພຣະໂຄຕະມະຜູ້ຈະເຣີນຊົງຢຸດເຖີດ ຂໍພຣະໂຄຕະມະຜູ້ຈະເຣີນຊົງນິ່ງເຖີດ ຂ້ານ້ອຍເອງຈັກໂຕ້

ຕອບກັບເຂົາໂດຍຊອບແກ່ເຫຕ ແລ້ວຈຶ່ງກ່າວກັບພຣາມນ໌ ເຫລົ່ານັ້ນວ່າ ທ່ານທັງຫລາຍຢ່າໄດ້ກ່າວຢ່າງນີ້ໆ ວ່າ ທ່ານໂສ ນະທັນດະກ່າວລົບຫລູ່ວັນນະ ກ່າວລົບຫລູ່ມົນຕ໌ ກ່າວລົບຫລູ່ ຊາຕ ກ່າວຄ້ອຍຕາມວາທະຂອງພຣະສະມະນະໂຄຕະມະທ່າ ດຽວຢ່າງນີ້ເລີຍ. ທ່ານທັງຫລາຍ ຂ້າພະເຈົ້າບໍ່ໄດ້ກ່າວລົບຫລູ່ ວັນນະຫລືມົນຕ໌ຫລືຊາຕເລີຍ.

ສມັຍນັ້ນ ອັງຄະກະມານົພ ຫລານຂອງພຣາມນ໌ໂສນະທັນດະ ນັ່ງຢູ່ໃນບໍຣິສັທນັ້ນດ້ວຍ ພຣາມນ໌ໂສນະທັນດະໄດ້ກ່າວ ກັບພຣາມນ໌ເຫລົ່ານັ້ນວ່າ ທ່ານທັງຫລາຍ ນີ້ອັງຄະກະມານົພ ຫລານຂອງຂ້າພະເຈົ້າ ພວກທ່ານເຫັນຫລືບໍ່? ພຣາມນ໌ ເຫລົ່ານັ້ນຕອບວ່າ ເຫັນແລ້ວທ່ານ. ພຣາມນ໌ໂສນະທັນດະ ກ່າວຕໍ່ໄປວ່າ ອັງຄະກະມານົພເປັນຄົນມີຮູບງາມ ໜ້າເບິ່ງໜ້າ ເຫລື້ອມໃສ ປະກອບດ້ວຍຜິວພັນຜຸດຜ່ອງຢ່າງຍິ່ງ ມີວັນນະ ຄ້າຍພຣົມ ມີຮູບຮ່າງຄ້າຍພຣົມ ໜ້າເບິ່ງໜ້າຊົມບໍ່ນ້ອຍ ໃນ ບໍຣິສັທນີ້ຍົກເວັ້ນພຣະໂຄຕະມະ ບໍ່ມີໃຜມີວັນນະສະເໝີອັງຄະ ກະມານົພເລີຍ ອັງຄະກະມານົພເປັນຜູ້ເລົ່າຮຽນ ຊົງຈຳມົນຕ໌ ຮູ້ຈົບໄຕຣເພທ ພ້ອມທັງຄັມພີຣ໌ນິຄັນທຸ ຄັມພີຣ໌ເກຕຸພະ ພ້ອມ ທັງປະເພດອັກສອຣມີຄັມພີຣ໌ອິຕິຫາສເປັນທີ ໕ ເປັນຜູ້ເຂົ້າໃຈ ຕົວບົທ ເປັນຜູ້ເຂົ້າໃຈໄວຍາກອນ ຊຳນານໃນຄັມພີຣ໌ໂລກາຍະ ຕະ ແລະມະຫາປຸຣິສະລັກສະນະ ຂ້າພະເຈົ້າເປັນຜູ້ບອກມົນຕ໌

ແກ່ເຂົາ. ເຂົາເປັນອຸພະໂຕສຸຊາຕທັງຝ່າຍມາຣດາແລະບິດາ ມີສັນພ໌ເປັນທີ່ຖືປະຕິສົນທິບໍຣິສຸທຕລອດ ໆ ຊົ່ວບັນພະບຸຣຸສ ບໍ່ມີໃຜຈະຄັດຄ້ານຕິຕຽນໄດ້ດ້ວຍອ້າງເຖິງຊາຕ ຂ້າພະເຈົ້າຮູ້ຈັກມາຣດາບິດາຂອງເຂົາ ເຖິງຢ່າງນັ້ນ ອັງຄະກະມານົພກໍຍັງຂ້າສັຕແດ່ ຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ແດ່ ຄົບຫາພະຣິຍາຂອງບຸຄຄົລອື່ນແດ່ ກ່າວຕົວະແດ່ ດື່ມນ້ຳເມົາແດ່, ໃນເວລານີ້ ໃນຖານະເຊັ່ນນີ້ ວັນນະຈັກກະທຳອັນໃດໄດ້ ມົນຕ໌ຈັກກະທຳອັນໃດໄດ້ ແລະຊາຕຈັກກະທຳອັນໃດໄດ້. ດ້ວຍເຫຕວ່າບຸຄຄົລຜູ້ເປັນພຣາມນ໌ ເປັນຜູ້ມີສີລ ມີສີລຍັ້ງຢືນ ປະກອບດ້ວຍສີລຍັ້ງຢືນ ແລະເປັນບັນດິຕ ມີປັນຍາເປັນທີ ໑ ຫລືທີ ໔ ຂອງພວກປະຕິຄາຫົກຜູ້ຮັບບູຊາດ້ວຍກັນ. ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໔ ປະການເຫລົ່ານີ້ແລ ພວກພຣາມນ໌ຈະບັນຍັຕວ່າເປັນພຣາມນ໌ກໍໄດ້ ແລະເມື່ອເຂົາຈະກ່າວວ່າເຮົາເປັນພຣາມນ໌ກໍຈະກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ.

ພຣະຜູ້ມີພຣະພາຄຕຣັສວ່າ:

**ພຣາມນ໌! ບັນດາອົງຄ໌ທັງ ໔ ເຫລົ່ານີ້ ຍົກເສຍອົງຄ໌ໜຶ່ງແລ້ວບຸຄຄົລປະກອບດ້ວຍອົງຄ໌ພຽງອົງຄ໌ດຽວ ສາມາດບັນຍັຕວ່າເປັນພຣາມນ໌ໄດ້ຫລືບໍ່ ແລະເມື່ອເຂົາຈະກ່າວວ່າເຮົາ**

**ເປັນພຣາມນ໌ ກໍຍ່ອມກ່າວໄດ້ໂດຍຊອບ ທັງບໍ່ຕ້ອງເຖິງມຸສາວາທດ້ວຍ?**

ພຣາມນ໌ໂສນະທັນດະໄດ້ທູລວ່າ ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ ຂໍ້ນີ້ບໍ່ໄດ້ ເພາະວ່າ ສີລຍ່ອມຊໍາຣະປັນຍາໃຫ້ບໍຣິສຸທ
ປັນຍາຍ່ອມຊໍາຣະສີລໃຫ້ບໍຣິສຸທ,
ສີລມີໃນບຸຄຄົລໃດ
ປັນຍາກໍມີໃນບຸຄຄົລນັ້ນ
ປັນຍາມີໃນບຸຄຄົລໃດ
ສີລກໍມີໃນບຸຄຄົລນັ້ນ,
ປັນຍາເປັນຂອງບຸຄຄົລຜູ້ມີສີລ
ສີລເປັນຂອງບຸຄຄົລຜູ້ມີປັນຍາ,
ບັນດິຕຍ່ອມກ່າວສີລກັບປັນຍາວ່າ ເປັນຍອດໃນໂລກ ເໝືອນບຸຄຄົລລ້າງມືດ້ວຍມື ຫລືລ້າງເທົ້າດ້ວຍເທົ້າ ສັນນັ້ນ.

ພຣະຜູ້ມີພຣະພາຄຕຣັສວ່າ:

**ພຣາມນ໌! ຂໍ້ນີ້ເປັນຢ່າງນັ້ນ ຂໍ້ນີ້ເປັນຢ່າງນັ້ນ**
**ສີລຍ່ອມຊໍາຣະປັນຍາໃຫ້ບໍຣິສຸທ**
**ປັນຍາຍ່ອມຊໍາຣະສີລໃຫ້ບໍຣິສຸທ,**
**ສີລມີໃນບຸຄຄົລໃດ**

**ປັນຍາກໍມີໃນບຸຄຄົລນັ້ນ**
**ປັນຍາມີໃນບຸຄຄົລໃດ**
**ສີລກໍມີໃນບຸຄຄົລນັ້ນ,**
**ປັນຍາເປັນຂອງບຸຄຄົລຜູ້ມີສີລ**
**ສີລເປັນຂອງບຸຄຄົລຜູ້ມີປັນຍາ,**

**ບັນດິຕຍ່ອມກ່າວສີລກັບປັນຍາວ່າ ເປັນຍອດໃນໂລກ ເໝືອນບຸຄຄົລລ້າງມືດ້ວຍມື ຫລືລ້າງເທົ້າດ້ວຍເທົ້າ ສັນນັ້ນ.**

ພຣາມນ໌! ສີລນັ້ນເປັນຢ່າງໃດ ປັນຍານັ້ນເປັນຢ່າງໃດ?

ພຣາມນ໌ໂສນະທັນດະທູລວ່າ ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ ພວກຂ້ານ້ອຍມີຄວາມຮູ້ເທົ່ານີ້ເອງ ເມື່ອເນື້ອຄວາມມີເຊັ່ນໃດ ຂໍເນື້ອຄວາມແຫ່ງພາສິຕນີ້ ຈົ່ງແຈ່ມແຈ້ງກັບພຣະໂຄຕະມະຜູ້ຈະເຣີນເອງເຖີດ.

ພຣາມນ໌! ຖ້າຢ່າງນັ້ນ ທ່ານຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ.

ພຣາມນ໌ໂສນະທັນດະຮັບສະໜອງພຣະພຸທທະດຳຣັສແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສກັບພຣາມນ໌ໂສນະທັນດະວ່າ:

ພຣາມນ໌! ພຣະຕະຖາຄົຕສະເດັຈອຸບັຕຂຶ້ນໃນໂລກນີ້ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ. ພຣະຕະຖາຄົຕນັ້ນຊົງທຳໂລກນີ້ ພ້ອມທັງເທວະໂລກມາຣໂລກ ພຣົມມະໂລກ ໃຫ້ແຈ້ງຊັດດ້ວຍພຣະປັນຍາອັນຍິ່ງຂອງພຣະອົງຄ໌ເອງແລ້ວ ຊົງສອນໝູ່ສັຕພ້ອມທັງສະມະນະພຣາມນ໌ ເທວະດາ ແລະມະນຸສໃຫ້ຮູ້ຕາມ ຊົງສະແດງທັມງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ຊົງປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທບໍຣິບູນສິ້ນເຊີງ, ຄະຫະບໍດີ ບຸຕຂອງຄະຫະບໍດີ ຫລືຜູ້ເກີດສະເພາະໃນຕະກຸນໃດຕະກຸນໜຶ່ງຍ່ອມຟັງທັມນັ້ນ ຄັນຟັງແລ້ວໄດ້ສັທທາໃນພຣະຕະຖາຄົຕ ເມື່ອໄດ້ສັທທາແລ້ວ ຍ່ອມເຫັນວ່າ ຄະຣາວາສຄັບແຄບ ເປັນທາງມາແຫ່ງທຸລີ ບັນພະຊາເປັນທາງປອດໂປ່ງ ການທີ່ບຸຄຄົລຜູ້ຄອງເຮືອນຈະປະພຶຕພຣົມມະຈັນຍ໌ໃຫ້ບໍຣິສຸທ ບໍຣິບູນໂດຍສ່ວນດຽວເໝືອນສັງຂ໌ທີ່ຂັດດີແລ້ວບໍ່ກະທຳໄດ້ໂດຍງ່າຍ ຖ້າເຊັ່ນນັ້ນ ເຮົາຄວນປົງຜົມແລະໜວດນຸ່ງຫົ່ມຜ້າກາສາວະພັສອອກບວຊເປັນບັນພະຊິຕ ສມັຍຕໍ່ມາເຂົາລະກອງໂພຄະສົມບັຕນ້ອຍໃຫຍ່ ລະເຄືອຍາຕນ້ອຍໃຫຍ່ປົງຜົມແລະໜວດ ນຸ່ງຫົ່ມຜ້າກາສາວະພັສອອກບວຊເປັນບັນ

ພະຊິຕ ເມື່ອບວຊແລ້ວ ສັງຮວມຣະວັງໃນປາຕິໂມກຂ໌ຢູ່ ເຖິງພ້ອມດ້ວຍມະຣະຍາທແລະໂຄຈອຣ ມີປົກກະຕິເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍ ປະກອບດ້ວຍກາຍກັມ ວະຈີກັມທີ່ເປັນກຸສົລ ມີອາຊີພບໍຣິສຸທ ເຖິງພ້ອມດ້ວຍສີລ ຄຸ້ມຄອງທະວາຣໃນອິນຊີທັງຫລາຍ ປະກອບດ້ວຍສະຕິສັມປະຊັນຍະ ເປັນຜູ້ສັນໂດດ.

ພຣາມນ໌! ຢ່າງໃດ ພິກຂຸຈຶ່ງຊື່ວ່າເປັນຜູ້ເຖິງພ້ອມດ້ວຍສີລ? ພຣາມນ໌! ພິກຂຸໃນທັມວິນັຍນີ້ ລະການຂ້າສັຕ ເວັ້ນຂາດຈາກການຂ້າສັຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ມີຄວາມເອັນດູ ມີຄວາມກະຣຸນາ ຫວັງປະໂຍຊນ໌ເກື້ອກູນແກ່ສັຕທັງປວງຢູ່ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະການລັກຊັພຍ໌ ເວັ້ນຂາດຈາກການລັກຊັພຍ໌ ຮັບແຕ່ຂອງທີ່ເຂົາໃຫ້ ຫວັງແຕ່ຂອງທີ່ເຂົາໃຫ້ ບໍ່ປະພຶຕຕົນເປັນຂະໂມຍ ເປັນຜູ້ສະອາດຢູ່ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະກັມອັນເປັນຂ້າເສິກແກ່ພຣົມມະຈັນຍ໌ ປະພຶຕຫ່າງໄກເວັ້ນຂາດຈາກເມຖຸນອັນເປັນທັມຂອງຊາວບ້ານ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະການເວົ້າຕົວະ ເວັ້ນຂາດຈາກການເວົ້າຕົວະ ເວົ້າແຕ່ຄຳຈິງ ດຳຣົງຄຳສັຈ ມີຖ້ອຍຄຳເປັນຫລັກຖານຄວນເຊື່ອໄດ້ ບໍ່ເວົ້າລວງໂລກ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະຄຳສຽດສີ ເວັ້ນຂາດຈາກຄຳສຽດສີ ຟັງຈາກຂ້າງນີ້ແລ້ວບໍ່ໄປບອກຂ້າງນັ້ນ ເພື່ອໃຫ້ຄົນໝູ່ນີ້ແຕກລ້າວກັນ ຫລືຟັງຈາກຂ້າງນັ້ນແລ້ວບໍ່ມາບອກຂ້າງນີ້ ເພື່ອໃຫ້ຄົນໝູ່ນັ້ນແຕກລ້າວກັນ ສະໝານຄົນທີ່ແຕກລ້າວກັນແລ້ວແດ່ ສົ່ງເສີມຄົນທີ່ພ້ອມພຽງກັນແລ້ວແດ່ ຊອບຄົນຜູ້ພ້ອມພຽງກັນ ຍິນດີໃນຄົນຜູ້ພ້ອມພຽງກັນ ເພີດເພີນໃນຄົນຜູ້ພ້ອມພຽງກັນ ກ່າວແຕ່ຄຳທີ່ກະທຳໃຫ້ພ້ອມພຽງກັນ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະຄຳຫຍາບ ເວັ້ນຂາດຈາກຄຳຫຍາບ ກ່າວແຕ່ຄຳທີ່ບໍ່ມີໂທສ ມ່ວນຫູ ຊວນໃຫ້ຮັກ ຈັບໃຈ ເປັນຂອງຊາວເມືອງ ຄົນສ່ວນໃຫຍ່ຮັກໃຄ່ພໍໃຈ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາລະຄຳສັມຜັປປລາປະ ເວັ້ນຂາດຈາກຄຳສັມຜັປປລາປາ *(ສັມຜັປປລາປັງ ປະຫາຍະ ສັມຜັປປລາປາ ປະຕິວິຣະໂຕ)* ເວົ້າຖືກກາລ ເວົ້າແຕ່ຄຳທີ່ເປັນຈິງ ເວົ້າອີງອັຕຖະ ເວົ້າອີງທັມ ເວົ້າອີງວິນັຍ ເວົ້າແຕ່ຄຳທີ່ມີຫລັກຖານ ມີທີ່ອ້າງ ມີທີ່ກຳນົດ

ປະກອບດ້ວຍປະໂຍຊນ໌ ໂດຍກາລອັນສົມຄວນ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ເຂົາເວັ້ນຂາດຈາກການພາກພືຊຄາມແລະພູຕະຄາມ.

ເຂົາສັນຄັ້ງດຽວ ງົດການສັນໃນຣາຕຣີ ເວັ້ນຈາກການສັນໃນເວລາວິກາລ.

ເຂົາເວັ້ນຂາດຈາກການຟ້ອນລຳ ຂັບຮ້ອງ ປະໂຄມດົນຕຣີ ແລະເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ.

ເຂົາເວັ້ນຂາດຈາກການປະດັບຕົບແຕ່ງຮ່າງກາຍດ້ວຍດອກໄມ້ຂອງຫອມ ແລະເຄື່ອງລູບທາ ອັນເປັນຖານແຫ່ງການແຕ່ງໂຕ.

ເຂົາເວັ້ນຂາດຈາກທີ່ນອນອັນສູງໃຫຍ່.

ເຂົາເວັ້ນຂາດຈາກການຮັບເງິນແລະຄຳ.

ເຂົາເວັ້ນຂາດຈາກການຮັບທັນຍາຫານດິບ.

ເຂົາເວັ້ນຂາດຈາກການຮັບເນື້ອດິບ.

ເຂົາເວັ້ນຂາດຈາກການຮັບສະຕຣີແລະກຸມາຣີ.

ເຂົາເວັ້ນຂາດຈາກການຮັບທາສີແລະທາສ.

ເຂົາເວັ້ນຂາດຈາກການຮັບແບ້ແລະແກະ.

ເຂົາເວັ້ນຂາດຈາກການຮັບໄກ່ແລະໝູ.

ເຂົາເວັ້ນຂາດຈາກການຮັບຊ້າງ ງົວ ມ້າ ແລະລາ.

ເຂົາເວັ້ນຂາດຈາກການຮັບໄຮ່ນາແລະທີ່ດິນ.

ເຂົາເວັ້ນຂາດຈາກການປະກອບທູຕກັມແລະການຮັບໃຊ້.

ເຂົາເວັ້ນຂາດຈາກການຊື້ ການຂາຍ.

ເຂົາເວັ້ນຂາດຈາກການໂກງດ້ວຍຕາຊິງ ການໂກງດ້ວຍຂອງປອມ ແລະການໂກງດ້ວຍເຄື່ອງຕວງວັດ.

ເຂົາເວັ້ນຂາດຈາກການຮັບສິນບົນ ການລໍ້ລວງ ແລະການຕະລົບຕະແລງ.

ເຂົາເວັ້ນຂາດຈາກການຕັດ ການຂ້າ ການຈອງຈຳ ການຕີຊີງ ການປຸ້ນ ແລະການຂົ່ມຂູ່ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການພາກພືຊຄາມແລະພູຕະຄາມ ເຊັ່ນ ຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງປະກອບການພາກພືຊຄາມແລະພູຕະຄາມເຫັນປານນີ້ຄື ພືຊເກີດແຕ່ເຫງົ້າ ພືຊເກີດແຕ່ລຳຕົ້ນ ພືຊເກີດແຕ່ຜົລ ພືຊເກີດແຕ່ຍອດ ພືຊເກີດແຕ່ໄນ ເປັນທີ່ຄົບຫ້າ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການບໍຣິໂພຄຂອງທີ່ທຳການສະສົມໄວ້ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງປະກອບການບໍຣິໂພຄຂອງທີ່ທຳການສະສົມໄວ້ເຫັນປານນີ້ຄື ສະສົມເຂົ້າ ສະສົມນ້ຳ ສະສົມຜ້າ ສະສົມຍານ ສະສົມທີ່ນອນ ສະສົມເຄື່ອງປະເທືອງຜິວ ສະສົມຂອງຫອມ ສະສົມອາມິສ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການເບິ່ງການຫລິ້ນອັນເປັນຂ້າເສິກແກ່ກຸສົລ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງຂວນຂວາຍເບິ່ງການ

ຫລິ້ນອັນເປັນຂ້າເສິກແກ່ກຸສົລເຫັນປານນີ້ຄື ການຟ້ອນ ການຂັບຮ້ອງ ການປະໂຄມດົນຕຣີ ການເລົ່ານິຍາຍ ການຫລິ້ນຕົບມື ການຫລິ້ນປຸກຜີ ການຫລິ້ນຕີກອງ ສາກພາບບ້ານເມືອງທີ່ສວຍງາມ ການຫລິ້ນຂອງຄົນຈັນທາລ ການຫລິ້ນໄມ້ສູງ ການຫລິ້ນໜ້າສົບ ຊົນຊ້າງ ຊົນມ້າ ຊົນຄວາຍ ຊົນງົວ ຊົນແບ້ ຊົນແກະ ຊົນໄກ່ ຣົບນົກກະທາ ລຳກະບີ່ກະບອງ ມວຍຊົກ ມວຍປ້ຳ ການຣົບ ການກວດພົລ ການຈັດຂະບວນທັບ ກອງທັບ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການຂົນຂວາຍຫລິ້ນການພະນັນ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງຂົນຂວາຍຫລິ້ນການພະນັນ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ເຫັນປານນີ້ຄື ຫລິ້ນໝາກດາມແຖວລະແປດຕາ ແຖວລະສິບຕາ ຫລິ້ນໝາກເກັບ ຫລິ້ນວົງວຽນ*(ປຣິຫາຣະປະຖັງ)* ຫລິ້ນໝາກປີ່ນ ຫລິ້ນໂຍນບ້ວງ ຫລິ້ນໄມ້ຫຶ່ງ ຫລິ້ນກຳທາຍ ຫລິ້ນສະກາ ຫລິ້ນເປົ່າໃບໄມ້ ຫລິ້ນໄຖນ້ອຍໆ ຫລິ້ນຕີລັງກາ ຫລິ້ນກັງຫັນ ຫລິ້ນຕວງທວາຍ ຫລິ້ນຣົຖນ້ອຍໆ ຫລິ້ນທະນູນ້ອຍ ຫລິ້ນຂຽນທາຍກັນ ຫລິ້ນທາຍໃຈ ຫລິ້ນຮຽນແບບຄົນພິການ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກທີ່ນອນອັນສູງໃຫຍ່ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງນອນເທິງທີ່ນອນອັນສູງໃຫຍ່ເຫັນປານນີ້ຄື ຕຽງມີເທົ້າເກີນປະມານ ຕຽງມີເທົ້າເຮັດດ້ວຍຮູບສັດຮ້າຍ ຜ້າໂກເຊົາວ໌ຂົນຍາວ ເຄື່ອງລາດທີ່ເຮັດດ້ວຍຂົນແກະວິຈິຕດ້ວຍລວດລາຍ ເຄື່ອງລາດທີ່ເຮັດດ້ວຍຂົນແກະສີຂາວ ເຄື່ອງລາດທີ່ມີສັນຖານເປັນຊໍ່ດອກໄມ້ ເຄື່ອງລາດທີ່ຍັດນຸ່ນ ເຄື່ອງລາດຂົນແກະມີຂົນຕັ້ງ ເຄື່ອງລາດຂົນແກະວິຈິຕດ້ວຍຮູບສັດຮ້າຍ ມີສີຫະແລະເສືອເປັນຕົ້ນ ເຄື່ອງລາດຂົນແກະມີຂົນຂ້າງດຽວ ເຄື່ອງລາດຄຳແລະເງິນແກມໄໝ ເຄື່ອງລາດໄໝກັບຄຳແລະເງິນ ເຄື່ອງລາດຂົນແກະຈຸນາງຟ້ອນ ໑໖ ຄົນ ເຄື່ອງລາດຫລັງຊ້າງ ເຄື່ອງລາດຫລັງມ້າ ເຄື່ອງລາດໃນຣົຖ ເຄື່ອງລາດທີ່ເຮັດດ້ວຍໜັງສັດຊື່ອະຊິນະອັນມີຂົນອ່ອນນຸ້ມ ເຄື່ອງລາດຢ່າງດີເຮັດດ້ວຍໜັງເຫັນ ເຄື່ອງລາດມີແພດານ ເຄື່ອງລາດມີໝອນຂ້າງ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການປະກອບການປະດັບຕົບແຕ່ງຮ່າງກາຍອັນເປັນຖານແຫ່ງການແຕ່ງໂຕ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວຍັງປະກອບການປະດັບຕົບແຕ່ງຮ່າງກາຍ ອັນເປັນຖານແຫ່ງການແຕ່ງໂຕເຫັນປານນີ້ຄື ອົບໂຕ ບີບ*(ປຣິມັທທະນັງ)* ອາບນ້ຳ

ຫອມ ນວດ*(ສັມພາຫະນັງ)* ແຍງແວ່ນ ແຕ້ມຕາ ປະດັບດອກໄມ້ ທາຜິວ ຜັດໜ້າ ທາປາກ ປະດັບຂໍ້ມື ສວມແຫວນ ໃຊ້ໄມ້ເທົ້າ ໃຊ້ກັກຢາ*(ນາລິກັງ)* ໃຊ້ດາບ*(ອະສິງ)* ໃຊ້ຂັນຄ໌*(ຂັຄຄັງ)* ໃຊ້ຄັນຮົ່ມ ສວມເກີບປະດັບວິຈິຕ ຕິດກອບໜ້າ ປັກປິ່ນ ໃຊ້ພັດວາລວິຊນີ *(ວາລະວີຊະນີງ)* ນຸ່ງຫົ່ມຜ້າຂາວ ນຸ່ງຫົ່ມຜ້າມີຊາຍ ຂໍ້ນີ້ກໍເປັນສີລ ຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກຕິຣັຈສານກະຖາ ເຊັ່ນຢ່າງທີ່ສະມະນະ ພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາ ແລ້ວ ຍັງປະກອບຕິຣັຈສານກະຖາເຫັນປານນີ້ຄື ເວົ້າ ເຣື່ອງພຣະຣາຊາ, ເຣື່ອງໂຈຣ, ເຣື່ອງມະຫາອະມາຕຍ໌, ເຣື່ອງ ກອງທັບ, ເຣື່ອງພັຍ, ເຣື່ອງຣົບ, ເຣື່ອງເຂົ້າ, ເຣື່ອງນ້ຳ, ເຣື່ອງ ຜ້າ, ເຣື່ອງທີ່ນອນ, ເຣື່ອງດອກໄມ້, ເຣື່ອງຂອງຫອມ, ເຣື່ອງ ຍາຕ, ເຣື່ອງຍານ, ເຣື່ອງບ້ານ, ເຣື່ອງນິຄົມ, ເຣື່ອງຣາຊະ ທານີ, ເຣື່ອງຊົນບົທ, ເຣື່ອງສະຕຣີ, ເຣື່ອງບຸຣຸສ, ເຣື່ອງຄົນ ກ້າຫານ, ເຣື່ອງທາງຮ່ອມ, ເຣື່ອງທ່ານ້ຳ, ເຣື່ອງຄົນທີ່ລ່ວງລັບ ໄປແລ້ວ, ເຣື່ອງເລັກໆນ້ອຍໆ, ເຣື່ອງໂລກ, ເຣື່ອງທະເລ, ເຣື່ອງຄວາມຈະເຣີນແລະຄວາມເສື່ອມ ດ້ວຍປະການນັ້ນໆ. ຂໍ້ ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການກ່າວຖ້ອຍຄຳຂັດແຍ່ງກັນ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງກ່າວຖ້ອຍຄຳຂັດແຍ່ງກັນເຫັນປານນີ້ຄື ທ່ານບໍ່ຮູ້ທົ່ວເຖິງທັມວິນັຍນີ້ ຂ້າພະເຈົ້າຮູ້ທົ່ວເຖິງ ທ່ານຈັກຮູ້ທົ່ວເຖິງທັມວິນັຍນີ້ໄດ້ຢ່າງໃດ ທ່ານປະຕິບັຕຜິດ ຂ້າພະເຈົ້າປະຕິບັຕຖືກ ຖ້ອຍຄຳຂອງຂ້າພະເຈົ້າເປັນປະໂຍຊນ໌ ຂອງທ່ານບໍ່ເປັນປະໂຍຊນ໌ ຄຳທີ່ຄວນຈະກ່າວກ່ອນ ທ່ານກັບກ່າວພາຍຫລັງ ຄຳທີ່ຄວນຈະກ່າວພາຍຫລັງ ທ່ານກັບກ່າວກ່ອນ ຂໍ້ນີ້ທ່ານເຄີຍຊຳນານກັບມາຜັນແປໄປແລ້ວ ຂ້າພະເຈົ້າຈັບຜິດວາທະຂອງທ່ານໄດ້ແລ້ວ ຂ້າພະເຈົ້າຂົ່ມທ່ານໄດ້ແລ້ວ ທ່ານຈົ່ງຖອນວາທະເສຍ ບໍ່ສະນັ້ນ ກໍຈົ່ງແກ້ໄຂເສຍຖ້າສາມາດ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການປະກອບທູຕກັມແລະການຮັບໃຊ້ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງຂວນຂວາຍປະກອບທູຕກັມແລະການຮັບໃຊ້ເຫັນປານນີ້ຄື ຮັບເປັນທູຕຂອງພຣະຣາຊາ ຣາຊະມະຫາອະມາຕຍ໌ ກະສັຕ ພຣາມນ໌ ຄະຫະບໍດີ ແລະກຸມາຣີວ່າ ທ່ານຈົ່ງໄປໃນທີ່ນີ້ ທ່ານຈົ່ງໄປໃນທີ່ນັ້ນ ທ່ານຈົ່ງນຳເອົາສິ່ງນີ້ໄປ ທ່ານຈົ່ງນຳເອົາສິ່ງນີ້ໃນທີ່ນັ້ນມາ ດັ່ງນີ້ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການເວົ້າຫລອກລວງແລະການເວົ້າລຽບຄຽງ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໄພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງເວົ້າຫລອກລວງ ເວົ້າລຽບຄຽງ ເວົ້າຫວ່ານລ້ອມ ເວົ້າແລະເລັມ ສະແຫວງຫາລາພດ້ວຍລາພ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໄພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ທາຍອະວັຍວະ ທາຍນິມິຕທາຍອຸປບາຕ ທຳນາຍຝັນ ທຳນາຍລັກສະນະ ທຳນາຍໜູກັດຜ້າ ທຳພິທີບູຊາໄຟ ທຳພິທີເບີກແວ່ນວຽນທຽນ ທຳພິທີຊັດແກບບູຊາໄຟ ທຳພິທີຊັດຮຳບູຊາໄຟ ທຳພິທີຊັດເຂົ້າສານບູຊາໄຟ ທຳພິທີເຕີມເນີຍບູຊາໄຟ ທຳພິທີເຕີມນ້ຳມັນບູຊາໄຟ ທຳພິທີເສກເປົ່າບູຊາໄຟ ທຳພລີກັມດ້ວຍໂລຫິຕ ເປັນໝໍດູອະວັຍວະ ດູລັກສະນະທີ່ບ້ານ ດູລັກສະນະທີ່ນາ ເປັນໝໍປຸກເສກ ເປັນໝໍຜີ ເປັນໝໍລົງເລັກຍັນຄຸ້ມກັນບ້ານເຮືອນ ເປັນໝໍງູເປັນໝໍຢາພິດ ເປັນໝໍແມງງອດ ເປັນໝໍຮັກສາແຜໜູກັດ ເປັນໝໍທາຍສຽງນົກ ເປັນໝໍທາຍສຽງກາ ເປັນໝໍທາຍອາຍຸ ເປັນໝໍເສກກັນລູກສອນ ເປັນໝໍທາຍສຽງສັຕ, ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ທາຍລັກສະນະແກ້ວມະນີ ທາຍລັກສະນະໄມ້ພອງ ທາຍລັກສະນະຜ້າ ທາຍລັກສະນະສັສຕຣາ ທາຍລັກສະນະດາບ ທາຍລັກສະນະສອຣ ທາຍລັກສະນະທະນູ ທາຍລັກສະນະອາວຸທ ທາຍລັກສະນະສະຕຣີ ທາຍລັກສະນະບຸຣຸສ ທາຍລັກສະນະກຸມາຣ ທາຍລັກສະນະກຸມາຣີ ທາຍລັກສະນະຄວາຍ ທາຍລັກສະນະງົວອຸສະພະ ທາຍລັກສະນະງົວ ທາຍລັກສະນະແບ້ ທາຍລັກສະນະແກະ ທາຍລັກສະນະໄກ່ ທາຍລັກສະນະນົກ ທາຍລັກສະນະເຫ້ຍ ທາຍລັກສະນະເຕົ່າ ທາຍລັກສະນະກວາງ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ດູເຣີກຍາຕຣາທັບວ່າພຣະຣາຊາຈັກຍົກອອກ ພຣະຣາຊາຈັກບໍ່ຍົກອອກ ພຣະຣາຊາພາຍໃນຈັກຍົກເຂົ້າປະຊິດ ພຣະຣາຊາພາຍນອກຈັກຖອຍ ພຣະຣາຊາພາຍນອກຈັກຍົກເຂົ້າປະຊິດ ພຣະຣາຊາພາຍໃນ

ຈັກຖອຍ ພຣະຣາຊາພາຍໃນຈັກມີຊັຍ ພຣະຣາຊາພາຍນອກຈັກປຣາຊັຍ ພຣະຣາຊາພາຍນອກຈັກມີຊັຍ ພຣະຣາຊາພາຍໃນຈັກປຣາຊັຍ ພຣະຣາຊາອົງຄ໌ນີ້ຈັກມີຊັຍ ພຣະຣາຊາອົງຄ໌ນີ້ຈັກປຣາຊັຍ ເພາະເຫຕນີ້ໆ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ພະຍາກອນວ່າ ຈັກມີຈັນທະຄາສ ຈັກມີສຸຣິຍະຄາສ ຈັກມີນັກຂັຕຕະຄາສ ດວງຈັນທ໌ດວງອາທິຕຈັກເດີນຖືກທາງ ດວງຈັນທ໌ດວງອາທິຕຈັກເດີນຜິດທາງ ດາວນັກຂັຕຕະຈັກເດີນຖືກທາງ ດາວນັກຂັຕຕະຈັກເດີນຜິດທາງ ຈັກມີອຸກກາບາຕ ຈັກມີດາວຫາງ ຈັກມີແຜ່ນດິນໄຫວ ຈັກມີຟ້າຮ້ອງ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຈັກຂຶ້ນ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຈັກຕົກ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຈັກມົວໝອງ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຈັກກະຈ່າງຈັນທະຄາສຈັກມີຜົລເປັນຢ່າງນີ້ ສຸຣິຍະຄາສຈັກມີຜົລເປັນຢ່າງນີ້ ນັກຂັຕຕະຄາສຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕເດີນຖືກທາງຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕເດີນ

ຜິດທາງຈັກມີຜົລເປັນຢ່າງນີ້ ດາວນັກຂັຕຕະເດີນຖືກທາງຈັກມີຜົລເປັນຢ່າງນີ້ ດາວນັກຂັຕຕະເດີນຜິດທາງຈັກມີຜົລເປັນຢ່າງນີ້ ມີອຸກກາບາຕຈັກມີຜົລເປັນຢ່າງນີ້ ມີດາວຫາງຈັກມີຜົລເປັນຢ່າງນີ້ ແຜ່ນດິນໄຫວຈັກມີຜົລເປັນຢ່າງນີ້ ຟ້າຮ້ອງຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຂຶ້ນຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະຕົກຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະມົວໝອງຈັກມີຜົລເປັນຢ່າງນີ້ ດວງຈັນທ໌ດວງອາທິຕແລະດາວນັກຂັຕຕະກະຈ່າງຈັກມີຜົລເປັນຢ່າງນີ້ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໂພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ພະຍາກອນວ່າ ຈັກມີຝົນດີ ຈັກມີຝົນແລ້ງ ຈັກມີພິກສາຫາໄດ້ງ່າຍ ຈັກມີພິກສາຫາໄດ້ຍາກ ຈັກມີຄວາມກະເສມ ຈັກມີພັຍ ຈັກເກີດໂຣຄ ຈັກມີຄວາມສຳຣານຫາໂຣຄບໍ່ໄດ້ ຫລືນັບຄະແນນ ຄຳນວນ ນັບປະມວນແຕ່ງກາພຍ໌ໂລກາຍະຕະສາສຕຣ໌ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໄພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ໃຫ້ເຣີກອາວາຫະມຸງຄຸລໃຫ້ເຣີກວິວາຫະມຸງຄຸລ ດູເຣີກຮຽງໝອນ ດູເຣີກຢ່າຮ້າງ ດູເຣີກເກັບຊັພຍ໌ ດູເຣີກຈ່າຍຊັພຍ໌ ດູໂຊກດີ ດູເຄາະຮ້າຍ ໃຫ້ຢາຜະດຸງຄັນພ໌ ຮ່າຍມົນຕ໌ໃຫ້ລີ້ນກະດ້າງ ຮ່າຍມົນຕ໌ໃຫ້ຄາງແຂ້ງ ຮ່າຍມົນຕ໌ໃຫ້ມືສັ່ນ ຮ່າຍມົນຕ໌ບໍ່ໃຫ້ຫູໄດ້ຍິນສຽງ ເປັນໝໍຊົງແວ່ນ ເປັນໝໍຊົງຍິງສາວ ເປັນໝໍຊົງເຈົ້າ ບວງສວງພຣະອາທິຕ ບວງສວງທ້າວມະຫາພຣົມ ຮ່າຍມົນຕ໌ ພົ່ນໄຟ ທຳພິທີເຊີນຂວັນ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພິກຂຸເວັ້ນຂາດຈາກການລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາ ເຊັ່ນຢ່າງທີ່ສະມະນະພຣາມນ໌ຜູ້ຈະເຣີນບາງພວກສັນໄພຊະນະທີ່ເຂົາໃຫ້ດ້ວຍສັທທາແລ້ວ ຍັງລ້ຽງຊີພໂດຍທາງຜິດດ້ວຍຕິຣັຈສານວິຊຊາເຫັນປານນີ້ຄື ທຳພິທີບົນບານ ທຳພິທີແກ້ບົນ ຮ່າຍມົນຕ໌ຂັບຜີ ສອນມົນຕ໌ປ້ອງກັນບ້ານເຮືອນ ທຳກະເທີຍໃຫ້ກັບເປັນຊາຍ ທຳຊາຍໃຫ້ກາຍເປັນກະເທີຍ ທຳພິທີປຸກເຮືອນ ທຳພິທີບວງສວງພື້ນທີ່ **ພົ່ນນ້ຳມົນຕ໌ ຣົດນ້ຳມົນຕ໌** ທຳພິທີບູຊາໄຟ ປຸງຢາສຳຣອກ ປຸງຢາຖ່າຍ ປຸງຢາຖ່າຍໂທສເບື້ອງເທິງ ປຸງຢາຖ່າຍໂທສເບື້ອງລຸ່ມ ປຸງຢາແກ້ປວດຫົວ ຫຸງ

ນ້ຳມັນຍອດຫູ ປຸງຢາຕາ ປຸງຢານັດຖ໌ ປຸງຢາທາກັດ ປຸງຢາທາສະໝານ ປ້າຍຢາຕາ ທຳການຜ່າຕັດ ຮັກສາເດັກ ໃສ່ຢາຊະແຜ ຂໍ້ນີ້ກໍເປັນສີລຂອງເຂົາປະການໜຶ່ງ.

ພຣາມນ໌! ພິກຂຸສົມບູນດ້ວຍສີລຢ່າງນີ້ ຍ່ອມບໍ່ປະສົບພັຍແຕ່ໃດໆເລີຍ ເພາະສີລສັງວອຣນັ້ນ ປຽບເໝືອນກະສັຕຜູ້ໄດ້ມູຣະທາພິເສກ ກຳຈັດຣາຊະສັດຕູໄດ້ແລ້ວ ຍ່ອມບໍ່ປະສົບພັຍແຕ່ໃດໆ ເພາະຣາຊະສັດຕູນັ້ນ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນ ສົມບູນດ້ວຍສີລຢ່າງນີ້ແລ້ວ ຍ່ອມບໍ່ປະສົບພັຍແຕ່ໃດໆ ເພາະສີລສັງວອຣນັ້ນ. **ພຣາມນ໌ ພິກຂຸສົມບູນດ້ວຍອະຣິຍະສີລຂັນທ໌ຢ່າງນີ້** ຍ່ອມໄດ້ສເວີຍສຸຂອັນປາສະຈາກໂທສໃນພາຍໃນ. ພຣາມນ໌ ດ້ວຍປະການດັ່ງທີ່ກ່າວມານີ້ແລ ພິກຂຸຊື່ວ່າເປັນຜູ້ເຖິງພ້ອມດ້ວຍສີລ ນີ້ແລ ຄືສີລນັ້ນ.

ພຣາມນ໌! ຢ່າງໃດ ພິກຂຸຊື່ວ່າເປັນຜູ້ຄຸ້ມຄອງທະວາຣໃນອິນຊີທັງຫລາຍ?

ພຣາມນ໌! ພິກຂຸໃນທັມວິນັຍນີ້ ເຫັນຮູປດ້ວຍຈັກຂຸແລ້ວ ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸພະຍັນຊະນະ ເຂົາຍ່ອມປະຕິບັຕເພື່ອສັງຣວມຈັກຂຸນທຣີຍ໌ ທີ່ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບຄືອະພິຊຊາແລະໂທມະ

ນັສຄອບງໍາໄດ້ ຊື່ວ່າຮັກສາຈັກຂຸນທຣິຍ໌ ຊື່ວ່າສັງຣວມໃນ
ຈັກຂຸນທຣິຍ໌.

ຟັງສຽງດ້ວຍໂສຕະແລ້ວ ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸ
ພະຍັນຊະນະ ເຂົາຍ່ອມປະຕິບັດເພື່ອສັງຣວມໂສຕິນທຣິຍ໌ ທີ່
ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບ
ຄືອະພິຊຊາແລະໂທມະນັສຄອບງໍາໄດ້ ຊື່ວ່າຮັກສາໂສ
ຕິນທຣິຍ໌ ຊື່ວ່າສັງຣວມໃນໂສຕິນທຣິຍ໌.

ດົມກິ່ນດ້ວຍຄານະແລ້ວ ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸ
ພະຍັນຊະນະ ເຂົາຍ່ອມປະຕິບັດເພື່ອສັງຣວມຄານິນທຣິຍ໌ ທີ່
ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບ
ຄືອະພິຊຊາແລະໂທມະນັສຄອບງໍາໄດ້ ຊື່ວ່າຮັກສາຄາ
ນິນທຣິຍ໌ ຊື່ວ່າສັງຣວມໃນຄານິນທຣິຍ໌.

ຊີມຣົສດ້ວຍຊິວຫາແລ້ວ ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸ
ພະຍັນຊະນະ ເຂົາຍ່ອມປະຕິບັດເພື່ອສັງຣວມຊິວຫິນທຣິຍ໌ ທີ່
ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບ
ຄືອະພິຊຊາແລະໂທມະນັສຄອບງໍາໄດ້ ຊື່ວ່າຮັກສາຊິວ
ຫິນທຣິຍ໌ ຊື່ວ່າສັງຣວມໃນຊິວຫິນທຣິຍ໌.

ຖືກຕ້ອງໂຜຕຖັພພະດ້ວຍກາຍແລ້ວ ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸພະຍັນຊະນະ ເຂົາຍ່ອມປະຕິບັຕເພື່ອສັງຣວມກາຍິນທຣິຍ໌ ທີ່ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບຄືອະພິຊຊາແລະໂທມະນັສຄອບງຳໄດ້ ຊື່ວ່າຮັກສາກາຍິນທຣິຍ໌ ຊື່ວ່າສັງຣວມໃນກາຍິນທຣິຍ໌.

ຮູ້ແຈ້ງທັມມ໌ດ້ວຍໃຈແລ້ວ*(ມະນະສາ ທັມມັງ ວິນຍາຍະ)* ບໍ່ຖືເອົາໂດຍນິມິຕ ບໍ່ຖືເອົາໂດຍອະນຸພະຍັນຊະນະ ເຂົາຍ່ອມປະຕິບັຕເພື່ອສັງຣວມມະນິນທຣິຍ໌ ທີ່ເມື່ອບໍ່ສັງຣວມແລ້ວ ຈະເປັນເຫຕໃຫ້ອະກຸສົລທັມອັນເປັນບາບຄືອະພິຊຊາແລະໂທມະນັສຄອບງຳໄດ້ ຊື່ວ່າຮັກສາມະນິນທຣິຍ໌ ຊື່ວ່າສັງຣວມໃນມະນິນທຣິຍ໌.

ພຣາມນ໌! ດ້ວຍປະກາຣດັ່ງທີ່ກ່າວມານີ້ແລ ພິກຂຸຊື່ວ່າເປັນຜູ້ຄຸ້ມຄອງທະວາຣໃນອິນຊີທັງຫລາຍ.

ພຣາມນ໌! ຢ່າງໃດ ພິກຂຸຊື່ວ່າເປັນຜູ້ປະກອບດ້ວຍສະຕິສັມປະຊັນຍະ?

ພຣາມນ໌! ພິກຂຸໃນທັມວິນັຍນີ້ ຍ່ອມທຳຄວາມຮູ້ສຶກຕົວໃນກາຣກ້າວໄປ ໃນກາຣຖອຍ ໃນກາຣແລ ໃນກາຣຫລຽວ ໃນກາຣຄູ້

ເຂົ້າ ໃນການຢຽດອອກ ໃນການຊົງສັງຄາຕິ ບາຕ ແລະ ຈີວອຣ ໃນການສັນ ການດື່ມ ການຄ້ຽວ ການຊີມ ໃນການ ຖ່າຍອຸຈຈາຣະ ການຖ່າຍປັສສາວະ ຍ່ອມທຳຄວາມຮູ້ສຶກຕົວ ໃນການເດີນ ການຢືນ ການນັ່ງ ການນອນ ການຫລັບ ການ ຕື່ນ ການເວົ້າ ການນິ້ງ. ພຣາມນ໌ ດ້ວຍປະການດັ່ງທີ່ກ່າວມາ ນີ້ແລ ພິກຂຸຊື່ວ່າເປັນຜູ້ປະກອບດ້ວຍສະຕິສັມປະຊັນຍະ.

ພຣາມນ໌! ຢ່າງໃດ ພິກຂຸຊື່ວ່າເປັນຜູ້ສັນໂດດ?

ພຣາມນ໌! ພິກຂຸໃນທັມວິນັຍນີ້ ເປັນຜູ້ສັນໂດດດ້ວຍຈີວອຣເປັນ ເຄື່ອງບໍຣິຫານກາຍ ດ້ວຍບິນທະບາຕເປັນເຄື່ອງບໍຣິຫານທ້ອງ ເຂົາຈະໄປທາງທິສໃດໆ ກໍຖືໄປໄດ້ເອງ. ພຣາມນ໌ ນົກມີປີກ ຈະບິນໄປທາງທິສໃດໆ ກໍມີແຕ່ປີກຂອງຕົນເປັນພາຣະບິນໄປ ສັນໃດ; ພິກຂຸກໍສັນນັ້ນແລ ເປັນຜູ້ສັນໂດດດ້ວຍຈີວອຣເປັນ ເຄື່ອງບໍຣິຫານກາຍ ດ້ວຍບິນທະບາຕເປັນເຄື່ອງບໍຣິຫານທ້ອງ ເຂົາຈະໄປທາງທິສໃດໆ ກໍຖືໄປໄດ້ເອງ. ພຣາມນ໌ ດ້ວຍປະ ການດັ່ງທີ່ກ່າວມານີ້ແລ ພິກຂຸຊື່ວ່າ ເປັນຜູ້ສັນໂດດ.

ເຂົາປະກອບດ້ວຍສີລຂັນທ໌ອັນເປັນອະຣິຍະເຊັ່ນນີ້, ປະກອບ ດ້ວຍອິນຊີສັງວອຣອັນເປັນອະຣິຍະເຊັ່ນນີ້, ປະກອບດ້ວຍ ສະຕິສັມປະຊັນຍະອັນເປັນອະຣິຍະເຊັ່ນນີ້, ປະກອບດ້ວຍ

ຄວາມສັນໂດດອັນເປັນອະຣິຍະເຊັ່ນນີ້ແລ້ວ *(ໂສ ອິມິນາ ຈະ ອະຣິເຍນະ ສີລັກຂັນເທນະ ສະມັນນາຄະໂຕ ອິມິນາ ຈະ ອະຣິເຍນະ ອິນທຣິຍະສັງວະເຣນະ ສະມັນນາຄະໂຕ ອິມິນາ ຈະ ອະຣິເຍນະ ສະຕິສັມປະຊັນເຍນະ ສະມັນນາຄະໂຕ ອິມາຍະ ຈະ ອະຣິຍາຍະ ສັນຕຸຕຖິຍາ ສະມັນນາຄະໂຕ)* ຍ່ອມເສພເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູຜາ ຮ່ອມພູ ຖໍ້າ ປ່າຊ້າ ປ່າດົງໜາ ທີ່ແຈ້ງ ປ່າເຫລົ່າ ເຂົາກັບຈາກບິນທະບາຕແລ້ວ ໃນເວລາພາຍຫລັງພັຕ ນັ່ງຄູ້ບັລລັງກ໌ ຕັ້ງກາຍຕົງ ດໍາຣົງສະຕິສະເພາະໜ້າ ເຂົາລະອະພິຊຊາໃນໂລກ ມີໃຈປາສະຈາກອະພິຊຊາຢູ່ ຍ່ອມຊໍາຣະຈິຕໃຫ້ບໍຣິສຸທຈາກອະພິຊຊາໄດ້. ລະພາຍາບາທ ບໍ່ມີຈິຕພະຍາບາທ ມີຄວາມກະຣຸນາຫວັງປະໂຍຊນ໌ແກ່ສັຕທັງປວງຢູ່ ຍ່ອມຊໍາຣະຈິຕໃຫ້ບໍຣິສຸທຈາກພະຍາບາທໄດ້. ລະຖີນະມິທທະ ເປັນຜູ້ປາສະຈາກຖີນະມິທທະ ມີຄວາມກໍານົດໝາຍຢູ່ທີ່ແສງສວ່າງ ມີສະຕິສັມປະຊັນຍະຢູ່ ຍ່ອມຊໍາຣະຈິຕໃຫ້ບໍຣິສຸທຈາກຖີນະມິທທະໄດ້. ລະອຸທທັຈຈະກຸກກຸຈຈະ ເປັນຜູ້ບໍ່ຟຸ້ງຊ່ານ ມີຈິຕສງົບໃນພາຍໃນຢູ່ ຍ່ອມຊໍາຣະຈິຕໃຫ້ບໍຣິສຸທຈາກອຸທທັຈຈະກຸກກຸຈຈະໄດ້. ລະວິຈິກິຈສາ ເປັນຜູ້ຂ້າມພົ້ນວິຈິກິຈສາ ບໍ່ມີຄວາມເຄືອບແຄງສົງສັຍໃນກຸສົລທັມທັງຫລາຍຢູ່ ຍ່ອມຊໍາຣະຈິຕໃຫ້ບໍຣິສຸທຈາກວິຈິກິຈສາໄດ້.

ພຣາມນ໌! ປຽບເໝືອນບຸຣຸສກູ້ໜີ້ໄປປະກອບການງານ ການງານຂອງເຂົາສໍາເຣັຈຜົລ ເຂົາຍ່ອມໃຊ້ໜີ້ທີ່ເປັນຕົ້ນທຶນເດີມໃຫ້

ໝົດສິ້ນ ແລະຊັພຍ໌ທີ່ເປັນກຳໄຣຂອງເຂົາຍ່ອມມີເຫລືອຢູ່ສຳລັບລ້ຽງພະຣິຍາ ເຂົາຈະມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນເຮົາກູ້ໜີ້ໄປປະກອບການງານ ບັດນີ້ ການງານຂອງເຮົາສຳເຣັຈຜົລແລ້ວ ເຮົາໄດ້ໃຊ້ໜີ້ທີ່ເປັນຕົ້ນທຶນເດີມໃຫ້ໝົດສິ້ນແລ້ວ ແລະຊັພຍ໌ທີ່ເປັນກຳໄຣຂອງເຮົາຍັງມີເຫລືອຢູ່ສຳລັບລ້ຽງພະຣິຍາ ດັ່ງນີ້, ເຂົາຍ່ອມໄດ້ຄວາມປຣາໂມທຍ໌ ເຖິງຄວາມໂສມະນັສ ທີ່ມີຄວາມບໍ່ມີໜີ້ນັ້ນເປັນເຫຕ ສັນໃດ;

ພຣາມນ໌! ປຽບເໝືອນບຸຣຸສເປັນຜູ້ມີອາພາທ ເຖິງຄວາມລຳບາກ ເຈັບໜັກ ບໍຣິໂພຄອາຫານບໍ່ໄດ້ ແລະບໍ່ມີກຳລັງກາຍ ສມັຍຕໍ່ມາ ເຂົາຍ່ອມຫາຍຈາກອາພາທນັ້ນ ບໍຣິໂພຄອາຫານໄດ້ ແລະມີກຳລັງກາຍ ເຂົາຈະມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນເຮົາເປັນຜູ້ມີອາພາທ ເຖິງຄວາມລຳບາກ ເຈັບໜັກ ບໍຣິໂພຄອາຫານບໍ່ໄດ້ ແລະບໍ່ມີກຳລັງກາຍ ບັດນີ້ ເຮົາຍ່ອມຫາຍຈາກອາພາທນັ້ນແລ້ວ ບໍຣິໂພຄອາຫານໄດ້ ແລະມີກຳລັງກາຍເປັນປົກກະຕິ ດັ່ງນີ້, ເຂົາຍ່ອມໄດ້ຄວາມປຣາໂມທຍ໌ ເຖິງຄວາມໂສມະນັສ ທີ່ມີຄວາມບໍ່ມີໂຣຄນັ້ນເປັນເຫຕ ສັນໃດ;

ພຣາມນ໌! ປຽບເໝືອນບຸຣຸສຖືກຈອງຈຳຢູ່ໃນຄຸກ ສມັຍຕໍ່ມາ ເຂົາໄດ້ພົ້ນຈາກຄຸກນັ້ນໂດຍສວັສດີ ບໍ່ມີພັຍ ບໍ່ຕ້ອງເສຍຊັພຍ໌ອັນໃດໆເລີຍ ເຂົາຈະມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນເຮົາຖືກ

ຈອງຈຳຢູ່ໃນຄຸກ ບັດນີ້ ເຮົາພົ້ນຈາກຄຸກນັ້ນໂດຍສວັສດີ ບໍ່ມີພັຍ ແລະເຮົາບໍ່ຕ້ອງເສຍຊັພຍ໌ອັນໃດໆເລີຍ ດັ່ງນີ້, ເຂົາຍ່ອມໄດ້ຄວາມປຣາໂມທຍ໌ ເຖິງຄວາມໂສມະນັສ ທີ່ມີການພົ້ນຈາກຄຸກນັ້ນເປັນເຫຕ ສັນໃດ;

ພຣາມນ໌! ປຽບເໝືອນບຸຣຸສເປັນທາສ ບໍ່ໄດ້ເພິ່ງຕົວເອງ ອາສັຍເພິ່ງຜູ້ອື່ນ ໄປໃສຕາມຄວາມພໍໃຈບໍ່ໄດ້ ສມັຍຕໍ່ມາ ເຂົາໄດ້ພົ້ນຈາກຄວາມເປັນທາສນັ້ນ ເພິ່ງຕົນເອງ ບໍ່ຕ້ອງເພິ່ງຜູ້ອື່ນ ເປັນອິສສະຣະແກ່ຕົນ ໄປໃສໄດ້ຕາມຄວາມພໍໃຈ ເຂົາຈະມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນເຮົາເປັນທາສ ບໍ່ໄດ້ເພິ່ງຕົວເອງ ອາສັຍເພິ່ງຜູ້ອື່ນ ໄປໃສຕາມຄວາມພໍໃຈບໍ່ໄດ້ ບັດນີ້ ເຮົາໄດ້ພົ້ນຈາກຄວາມເປັນທາສນັ້ນ ເພິ່ງຕົນເອງ ບໍ່ຕ້ອງເພິ່ງຜູ້ອື່ນ ເປັນອິສສະຣະແກ່ຕົນ ໄປໃສໄດ້ຕາມຄວາມພໍໃຈ ດັ່ງນີ້, ເຂົາຍ່ອມໄດ້ຄວາມປຣາໂມທຍ໌ ເຖິງຄວາມໂສມະນັສ ທີ່ມີຄວາມເປັນອິສສະຣະນັ້ນເປັນເຫຕ ສັນໃດ;

ພຣາມນ໌! ປຽບເໝືອນບຸຣຸສມີຊັພຍ໌ ມີໂພຄະສົມບັຕທີ່ຈະເດີນທາງໄກກັນດານ ຫາອາຫານໄດ້ຍາກ ມີພັຍສະເພາະໜ້າ ສມັຍຕໍ່ມາ ເຂົາຍ່ອມຂ້າມພົ້ນທາງກັນດານນັ້ນໄດ້ ບັນລຸເຖິງໝູ່ບ້ານອັນກະເສມ ປອດພັຍໂດຍສວັສດີ ເຂົາຈະມີຄວາມຄິດຢ່າງນີ້ວ່າ ເມື່ອກ່ອນເຮົາມີຊັພຍ໌ ມີໂພຄະສົມບັຕເດີນທາງໄກ

ກັນດານ ຫາອາຫານໄດ້ຍາກ ມີພັຍສະເພາະໜ້າ ບັດນີ້ ເຮົາຂ້າມພົ້ນທາງກັນດານນັ້ນໄດ້ ບັນລຸເຖິງໝູ່ບ້ານອັນກະເສມປອດພັຍໂດຍສວັສດີແລ້ວ ດັ່ງນີ້, ເຂົາຍ່ອມໄດ້ຄວາມປຣາໂມທຍ໌ ເຖິງຄວາມໂສມະນັສ ທີ່ມີພູມິສະຖານອັນກະເສມນັ້ນເປັນເຫຕຸ ສັນໃດ;

ພຣາມມ໌! ພິກຂຸພິຈາຣະນາເຫັນນິວອຣນ໌ ໕ ປະການເຫລົ່ານີ້ທີ່ຍັງລະບໍ່ໄດ້ໃນຕົນ ເໝືອນໜີ້ ເໝືອນໂຣຄ ເໝືອນຄຸກ ເໝືອນຄວາມເປັນທາສ ເໝືອນທາງໄກກັນດານ ແລະເຂົາພິຈາຣະນາເຫັນນິວອຣນ໌ ໕ ປະການເຫລົ່ານີ້ທີ່ລະໄດ້ແລ້ວໃນຕົນ ເໝືອນຄວາມບໍ່ມີໜີ້ ເໝືອນຄວາມບໍ່ມີໂຣຄ ເໝືອນການພົ້ນຈາກຄຸກເໝືອນຄວາມເປັນອິສສະຣະແກ່ຕົນ ເໝືອນພູມິສະຖານອັນກະເສມ ສັນນັ້ນແລ.

ເມື່ອເຂົາພິຈາຣະນາເຫັນນິວອຣນ໌ ໕ ເຫລົ່ານີ້ທີ່ລະໄດ້ແລ້ວໃນຕົນ ຍ່ອມເກີດປຣາໂມທຍ໌ ເມື່ອເກີດປຣາໂມທຍ໌ແລ້ວ ຍ່ອມເກີດປີຕິ ເມື່ອໃຈມີປີຕິ ກາຍຍ່ອມສງົບ ເຂົາມີກາຍສງົບແລ້ວຍ່ອມໄດ້ສເວີຍສຸຂ ເມື່ອມີສຸຂ ຈິຕຍ່ອມຕັ້ງໝັ້ນ. ເຂົາສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກ ມີວິຈານ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່ ເຂົາກະທຳກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍ

ປີຕິແລະສຸຂອັນເກີດແຕ່ວິເວກ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ປີຕິແລະສຸຂອັນເກີດແຕ່ວິເວກຈະບໍ່ຖືກຕ້ອງ. ພຣາມມ໌ ປຽບເໝືອນພະນັກງານສົງສນານຫລືລູກນ້ອງຂອງພະນັກງານສົງສນານຜູ້ສລາດ ໃສ່ຈຸນສີໂຕລົງໃນພາຊະນະສຳຣິດ ແລ້ວພຣົມດ້ວຍນ້ຳ ໝັກໄວ້ ເຖິງເວລາຕອນແລງ ກ້ອນຈຸນສີໂຕເຊິ່ງຢ່າງຊຶມໄປຈັບຕິດກັນທົ່ວທັງໝົດຍ່ອມບໍ່ກະແຈກກະຈາຍອອກ ສັນໃດ; ພຣາມມ໌ ພິກຂຸກໍສັນນັ້ນແລ ກະທຳກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍປີຕິແລະສຸຂອັນເກີດແຕ່ວິເວກ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ປີຕິແລະສຸຂອັນເກີດແຕ່ວິເວກຈະບໍ່ຖືກຕ້ອງ.[2]

ພຣາມມ໌! ອີກປະການໜຶ່ງ ພິກຂຸບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ເພາະວິຕົກ ວິຈາຣສງົບໄປ ບໍ່ມີວິຕົກ ບໍ່ມີວິຈາຣ ມີປີຕິແລະສຸຂອັນເກີດແຕ່ສະມາທິຢູ່ ເຂົາກະທຳກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍປີຕິແລະສຸຂອັນເກີດແຕ່ສະມາທິ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ປີຕິແລະສຸຂອັນເກີດແຕ່

---

[2] *ໃນພຣະສູຕພາສາອັງກິດ ແປໂດຍ T.W Rhys Davids from Soṇadaṇḍasutta DN 4* [*https://suttacentral.net/dn4*](https://suttacentral.net/dn4) *ມີຂໍ້ຄວາມເພີ່ມເຕີມວ່າ ພຣາມມ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ. This, Brahman, pertains to his wisdom*

ສະມາທິຈະບໍ່ຖືກຕ້ອງ. ພຣາມນ໌ ປຽບເໝືອນວັງນໍ້າເລິກມີນໍ້າປັ່ນປ່ວນ ບໍ່ມີທາງທີ່ນໍ້າຈະໄຫລມາໄດ້ ທັງໃນດ້ານຕາເວັນອອກ ດ້ານໃຕ້ ດ້ານຕາເວັນຕົກ ດ້ານເໜືອ ທັງຝົນກໍບໍ່ຕົກເພີ່ມຕາມລະດູການ ແຕ່ສາຍນໍ້າເຢັນພຸຂຶ້ນຈາກວັງນໍ້ານັ້ນແລ້ວຍ່ອມກະທຳວັງນໍ້ານັ້ນແລໃຫ້ຊຸ່ມຊື່ນເອີບອາບຊາບຊຶມດ້ວຍນໍ້າເຢັນ ບໍ່ມີເອກະເທສໃດໆແຫ່ງວັງນໍ້ານັ້ນທັງໝົດ ທີ່ນໍ້າເຢັນຈະບໍ່ຖືກຕ້ອງ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ຍ່ອມກະທຳກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍປິຕິແລະສຸຂອັນເກີດແຕ່ສະມາທິ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ປີຕິແລະສຸຂອັນເກີດແຕ່ສະມາທິຈະບໍ່ຖືກຕ້ອງ.

ພຣາມນ໌! ອີກປະການໜຶ່ງ ພິກຂຸມີອຸເປກຂາ ມີສະຕິສັມປະຊັນຍະ ສເວີຍສຸຂດ້ວຍກາຍ ເພາະປີຕິສິ້ນໄປ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິ ຢູ່ເປັນສຸຂ ເຂົາກະທຳກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍສຸຂອັນປາສະຈາກປີຕິ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕທີ່ສຸຂປາສະຈາກປີຕິຈະບໍ່ຖືກຕ້ອງ. ພຣາມນ໌ ປຽບເໝືອນໃນກໍບົວອຸບົລ ໃນກໍບົວປະທຸມ ຫລືໃນກໍບົວບຸນທະຣິກ, ດອກບົວອຸບົລ ດອກບົວປະທຸມ ຫລືດອກບົວບຸນທະຣິກ ບາງເຫລົ່າເຊິ່ງເກີດໃນນໍ້າ ຈະເຣີນໃນນໍ້າ ຍັງບໍ່ພົ້ນນໍ້າ ຈົມຢູ່ໃນນໍ້າ ອັນນໍ້າ

ຫລໍ່ລ້ຽງໄວ້ ດອກບົວເຫລົ່ານັ້ນ ຊຸ່ມຊື່ນເອີບອາບຊາບຊຶມດ້ວຍນໍ້າເຢັນຕລອດຍອດ ຕລອດເຫງົ້າ ບໍ່ມີເອກະເທສໃດໆແຫ່ງດອກບົວອຸບົລ ດອກບົວປະທຸມ ຫລືດອກບົວບຸນທະຣິກທົ່ວທຸກສ່ວນ ທີ່ນໍ້າເຢັນຈະບໍ່ຖືກຕ້ອງ ສັນໃດ; ພຣາມມ໌ ພິກຂຸກໍສັນນັ້ນແລ ຍ່ອມກະທໍາກາຍນີ້ແລ ໃຫ້ຊຸ່ມຊື່ນເອີບອາບຊາບຊ່ານດ້ວຍສຸຂອັນປາສະຈາກປີຕິ ບໍ່ມີເອກະເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕທີ່ສຸຂປາສະຈາກປີຕິຈະບໍ່ຖືກຕ້ອງ.

ພຣາມມ໌! ອີກປະການໜຶ່ງ ພິກຂຸບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ ບໍ່ມີສຸຂ ເພາະລະສຸຂລະທຸກຂ໌ ແລະດັບໂສມະນັສໂທມະນັສກ່ອນໆໄດ້ ມີອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່ ເຂົານັ່ງແຜ່ໄປທົ່ວກາຍນີ້ແລ ດ້ວຍໃຈອັນບໍຣິສຸທຜຸດຜ່ອງ ບໍ່ມີເອກເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ໃຈອັນບໍຣິສຸທຜຸດຜ່ອງຈະບໍ່ຖືກຕ້ອງ. ພຣາມມ໌ ປຽບເໝືອນບຸຣຸສນັ່ງຄຸມໂຕຕລອດຫົວດ້ວຍຜ້າຂາວ ບໍ່ມີເອກເທສໃດໆແຫ່ງກາຍທຸກໆສ່ວນຂອງເຂົາທີ່ຜ້າຂາວຈະບໍ່ຖືກຕ້ອງ ສັນໃດ; ພຣາມມ໌ ພິກຂຸກໍສັນນັ້ນແລ ເຂົານັ່ງແຜ່ໄປທົ່ວກາຍນີ້ແລ ດ້ວຍໃຈອັນບໍຣິສຸທຜຸດຜ່ອງ ບໍ່ມີເອກເທສໃດໆແຫ່ງກາຍຂອງເຂົາທົ່ວທັງໂຕ ທີ່ໃຈອັນບໍຣິສຸທຜຸດຜ່ອງຈະບໍ່ຖືກຕ້ອງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອຍານທັສສະນະ ເຂົາຍ່ອມຮູ້ຊັດຢ່າງນີ້ວ່າ ກາຍຂອງເຮົານີ້ແລ ມີຣູປປະກອບດ້ວຍມະຫາພູຕະທັງ ໔ ເກີດແຕ່ມາຣດາບິດາ ເຕີບໂຕຂຶ້ນດ້ວຍເຂົ້າສຸກແລະຂະໜົມສົດ ບໍ່ທ່ຽງ ຕ້ອງອົບ ຕ້ອງນວດຟັ້ນ ມີອັນທຳລາຍແລະກະແຈກກະຈາຍໄປເປັນທັມມະດາ ແລະວິນຍານຂອງເຮົານີ້ກໍອາສັຍ ເນື່ອງຢູ່ໃນກາຍນີ້. ພຣາມມ໌ ປຽບເໝືອນແກ້ວໄພທູຣຍ໌ອັນງາມ ເກີດເອງຢ່າງບໍຣິສຸທ ແປດຫລ່ຽມ ນາຍຊ່າງເຈຍຣະໄນດີແລ້ວ ສຸກໃສ ແວວວາວ ສົມສ່ວນທຸກຢ່າງ ມີດ້າຍຂຽວ ເຫລືອງ ແດງ ຂາວ ຫລືນວນຮ້ອຍຢູ່ໃນນັ້ນ ບຸຣຸສຜູ້ມີຈັກຂຸຢິບເອົາແກ້ວໄພທູຣຍ໌ນັ້ນວາງໄວ້ໃນມືແລ້ວ ພິຈາຣະນາເຫັນວ່າ ແກ້ວໄພທູຣຍ໌ນີ້ງາມ ເກີດເອງຢ່າງບໍຣິສຸທ ແປດຫລ່ຽມ ນາຍຊ່າງເຈຍຣະໄນດີແລ້ວ ສຸກໃສ ແວວວາວ ສົມສ່ວນທຸກຢ່າງ ມີດ້າຍຂຽວ ເຫລືອງ ແດງ ຂາວ ຫລືນວນຮ້ອຍຢູ່ໃນແກ້ວໄພທູຣຍ໌ນັ້ນ ສັນໃດ; ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອຍານທັສສະນະ ເຂົາຍ່ອມຮູ້ຊັດຢ່າງນີ້ວ່າ ກາຍຂອງເຮົານີ້ແລ ມີຣູປປະກອບດ້ວຍມະຫາພູຕະທັງ ໔ ເກີດແຕ່ມາຣດາບິດາ ເຕີບໂຕຂຶ້ນດ້ວຍເຂົ້າສຸກແລະຂະໜົມສົດ

ບໍ່ທ່ຽງ ຕ້ອງອົບ ຕ້ອງນວດຟັ້ນ ມີອັນທຳລາຍແລະກະແຈກກະຈາຍໄປເປັນທັມມະດາ ແລະວິນຍານຂອງເຮົານີ້ກໍອາສັຍເນື່ອງຢູ່ໃນກາຍນີ້. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອນິຣະມິຕຣູປອັນເກີດແຕ່ໃຈ ຄື ນິຣະມິຕກາຍອື່ນຈາກກາຍນີ້ອັນມີຣູປເກີດແຕ່ໃຈ ມີອະວັຍວະນ້ອຍໃຫຍ່ຄົບຖ້ວນ ມີອິນຊີບໍ່ບົກຜ່ອງ. ພຣາມນ໌ ປຽບເໝືອນບຸຣຸສຊັກໄສ້ອອກຈາກຫຍ້າປ້ອງ ເຂົາຈະມີຄວາມຄິດຢ່າງນີ້ວ່າ ນີ້ຫຍ້າປ້ອງ ນີ້ໄສ້ ຫຍ້າປ້ອງຢ່າງໜຶ່ງ ໄສ້ຢ່າງໜຶ່ງ ກໍແຕ່ວ່າໄສ້ຊັກອອກຈາກຫຍ້າປ້ອງນັ້ນເອງ. ພຣາມນ໌ ອີກນັຍໜຶ່ງ ປຽບເໝືອນບຸຣຸສຊັກດາບອອກຈາກຝັກ ເຂົາຈະມີຄວາມຄິດຢ່າງນີ້ວ່າ ນີ້ດາບ ນີ້ຝັກ ດາບຢ່າງໜຶ່ງ ຝັກຢ່າງໜຶ່ງ ກໍແຕ່ວ່າດາບຊັກອອກຈາກຝັກນັ້ນເອງ. ພຣາມນ໌ ອີກນັຍໜຶ່ງ ປຽບເໝືອນບຸຣຸສຊັກງູອອກຈາກຄາບ ເຂົາຈະມີຄວາມຄິດຢ່າງນີ້ວ່າ ນີ້ງູ ນີ້ຄາບ ງູຢ່າງໜຶ່ງ ຄາບຢ່າງໜຶ່ງ ກໍແຕ່ວ່າງູຊັກອອກຈາກຄາບນັ້ນເອງ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວ

ຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອນິຣະມິຕຮູປອັນເກີດແຕ່ໃຈ ຄື ນິຣະມິຕກາຍອື່ນຈາກກາຍນີ້ອັນມີຮູປເກີດແຕ່ໃຈ ມີອະວັຍວະນ້ອຍໃຫຍ່ຄົບຖ້ວນ ມີອິນຊີບໍ່ບົກພ່ອງ. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອອິທທິວິທີ ເຂົາບັນລຸອິທທິວິທີຫລາຍປະການຄື ຄົນດຽວເປັນຫລາຍຄົນກໍໄດ້; ຫລາຍຄົນເປັນຄົນດຽວກໍໄດ້; ຫາຍໂຕໄປນອກຝາ ນອກກຳແພງ ນອກພູເຂົາໄດ້ໂດຍບໍ່ຕິດຂັດເໝືອນໄປໃນທີ່ວ່າງກໍໄດ້; ກະທຳການຜຸດຂຶ້ນຫລືມຸດລົງໃນແຜ່ນດິນເໝືອນໃນນ້ຳກໍໄດ້; ເດີນເທິງນ້ຳບໍ່ແຕກເໝືອນເດີນເທິງແຜ່ນດິນກໍໄດ້; ເຫາະໄປໃນອາກາສທັງໆທີ່ຍັງນັ່ງຄູ້ບັນລັງເໝືອນນົກກໍໄດ້; ລູບຄຳດວງຈັນທ໌ ດວງອາທິຕເຊິ່ງມີລິທຫລາຍ ມີອານຸພາບຫລາຍດ້ວຍຝາມືກໍໄດ້; ໃຊ້ອຳນາຈທາງກາຍໄປຕລອດພຣົມມະໂລກກໍໄດ້. ພຣາມນ໌ ປຽບເໝືອນຊ່າງໝໍ້ຫລືລູກນ້ອງຂອງຊ່າງໝໍ້ຜູ້ສລາດ ເມື່ອນວດດິນດີແລ້ວ ຕ້ອງການພາຊະນະຊະນິດໃດໆຍ່ອມກະທຳພາຊະນະຊະນິດນັ້ນໆໃຫ້ສຳເຣັຈໄດ້. ພຣາມນ໌ ອີກນັຍໜຶ່ງ ປຽບເໝືອນນາຍຊ່າງງາຫລືລູກນ້ອງຂອງນາຍຊ່າງງາຜູ້ສລາດ ເມື່ອແຕ່ງງາດີແລ້ວ ຕ້ອງການເຄື່ອງງາຊະນິດ

ໃດໆ ຍ່ອມກະທຳເຄື່ອງງາຊະນິດນັ້ນໆໃຫ້ສຳເຣັຈໄດ້. ພຣາມນ໌ ອີກນັຍໜຶ່ງ ປຽບເໝືອນຊ່າງຄຳຫລືລູກນ້ອງຂອງຊ່າງຄຳຜູ້ສລາດ ເມື່ອຫລອມຄຳດີແລ້ວ ຕ້ອງການຄຳຮູປະພັນຊະນິດໃດໆ ຍ່ອມກະທຳຄຳຮູປະພັນຊະນິດນັ້ນໆໃຫ້ສຳເຣັຈໄດ້ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອອິທທິວິທີ ເຂົາບັນລຸອິທທິວິທີຫລາຍປະການຄື ຄົນດຽວເປັນຫລາຍຄົນກໍໄດ້; ຫລາຍຄົນເປັນຄົນດຽວກໍໄດ້; ຫາຍໂຕໄປນອກຝາ ນອກກຳແພງ ນອກພູເຂົາໄດ້ໂດຍບໍ່ຕິດຂັດເໝືອນໄປໃນທີ່ວ່າງກໍໄດ້; ກະທຳການຜຸດຂຶ້ນຫລືມຸດລົງໃນແຜ່ນດິນເໝືອນໃນນ້ຳກໍໄດ້; ເດີນເທິງນ້ຳບໍ່ແຕກເໝືອນເດີນເທິງແຜ່ນດິນກໍໄດ້; ເຫາະໄປໃນອາກາສທັງໆທີ່ຍັງນັ່ງຄູ້ບັນລັງເໝືອນນົກກໍໄດ້; ລູບຄຳດວງຈັນທ໌ ດວງອາທິຕເຊິ່ງມີລິທຫລາຍ ມີອານຸພາບຫລາຍດ້ວຍຝາມືກໍໄດ້; ໃຊ້ອຳນາຈທາງກາຍໄປຕລອດພຣົມມະໂລກກໍໄດ້. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອທິພພະໂສຕະທາຕ

ເຂົາຍ່ອມໄດ້ຍິນສຽງ ໒ ຊະນິດຄື ສຽງທິພແລະສຽງມະນຸສ ທັງທີ່ຢູ່ໄກແລະຢູ່ໃກ້ ດ້ວຍທິພພະໂສຕະອັນບໍຣິສຸທ ລ່ວງໂສຕະຂອງມະນຸສ. ພຣາມນ໌ ປຽບເໝືອນບຸຣຸສເດີນທາງໄກ ເຂົາໄດ້ຍິນສຽງກອງແດ່ ສຽງຕະໂພນແດ່ ສຽງສັງຂ໌ແດ່ ສຽງປະນະວະແດ່*(ກອງສອງໜ້າຂະໜາດນ້ອຍຊະນິດໜຶ່ງ)* ສຽງເປິ່ງໝາງແດ່ ເຂົາຍ່ອມເຂົ້າໃຈວ່າ ສຽງກອງດັ່ງນີ້ແດ່ ສຽງຕະໂພນດັ່ງນີ້ແດ່ ສຽງສັງຂ໌ດັ່ງນີ້ແດ່ ສຽງປະນະວະດັ່ງນີ້ແດ່ ສຽງເປິ່ງໝາງດັ່ງນີ້ແດ່ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອທິພພະໂສຕະທາຕ ເຂົາຍ່ອມໄດ້ຍິນສຽງ ໒ ຊະນິດຄື ສຽງທິພແລະສຽງມະນຸສ ທັງທີ່ຢູ່ໄກແລະຢູ່ໃກ້ ດ້ວຍທິພພະໂສຕະອັນບໍຣິສຸທ ລ່ວງໂສຕະຂອງມະນຸສ. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພຣາມນ໌! ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອເຈໂຕປະຣິຍະຍານ ເຂົາຍ່ອມກຳນົດຮູ້ໃຈຂອງສັຕອື່ນ ຂອງບຸຄຄົລອື່ນໄດ້ດ້ວຍໃຈຄື ຈິຕມີຣາຄະ ກໍຮູ້ວ່າ ຈິຕມີຣາຄະ; ຈິຕປາສະຈາກຣາຄະ ກໍຮູ້ວ່າ ຈິຕປາສະຈາກຣາຄະ; ຈິຕມີໂທສະ ກໍຮູ້ວ່າ ຈິຕມີ

ໂທສະ; ຈິຕປາສະຈາກໂທສະ ກໍຮູ້ວ່າ ຈິຕປາສະຈາກໂທສະ; ຈິຕມີໂມຫະ ກໍຮູ້ວ່າ ຈິຕມີໂມຫະ; ຈິຕປາສະຈາກໂມຫະ ກໍຮູ້ວ່າ ຈິຕປາສະຈາກໂມຫະ; ຈິຕຫົດຫູ່ ກໍຮູ້ວ່າ ຈິຕຫົດຫູ່; ຈິຕຟຸ້ງຊ່ານ ກໍຮູ້ວ່າ ຈິຕຟຸ້ງຊ່ານ; ຈິຕເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕເປັນມະຫັຄຄະຕະ; ຈິຕບໍ່ເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕບໍ່ເປັນມະຫັຄຄະຕະ; ຈິຕມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕມີຈິຕອື່ນຍິ່ງກວ່າ; ຈິຕບໍ່ມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕບໍ່ມີຈິຕອື່ນຍິ່ງກວ່າ; ຈິຕຕັ້ງໝັ້ນ ກໍຮູ້ວ່າ ຈິຕຕັ້ງໝັ້ນ; ຈິຕບໍ່ຕັ້ງໝັ້ນ ກໍຮູ້ວ່າ ຈິຕບໍ່ຕັ້ງໝັ້ນ; ຈິຕຫລຸດພົ້ນ ກໍຮູ້ວ່າ ຈິຕຫລຸດພົ້ນ; ຈິຕບໍ່ຫລຸດພົ້ນ ກໍຮູ້ວ່າ ຈິຕບໍ່ຫລຸດພົ້ນ. ພຣາມນ໌ ປຽບເໝືອນຍິງສາວຫລືຊາຍໜຸ່ມທີ່ຊອບແຕ່ງໂຕ ເມື່ອສ່ອງເບິ່ງເງົາໜ້າຂອງຕົນໃນແວ່ນອັນບໍຣິສຸທ ສະອາດ ຫລືໃນພາຊະນະນ້ຳໃສ ໜ້າມີໄຝກໍຈະຮູ້ວ່າ ໜ້າມີໄຝ ຫລືໜ້າບໍ່ມີໄຝ ກໍຈະຮູ້ວ່າ ໜ້າບໍ່ມີໄຝ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອເຈໂຕປະຣິຍະຍານ ເຂົາຍ່ອມກຳນົດຮູ້ໃຈຂອງສັຕອື່ນ ຂອງບຸຄຄົລອື່ນໄດ້ດ້ວຍໃຈຄື ຈິຕມີຣາຄະ ກໍຮູ້ວ່າ ຈິຕມີຣາຄະ; ຈິຕປາສະຈາກຣາຄະ ກໍຮູ້ວ່າ ຈິຕປາສະຈາກຣາຄະ; ຈິຕມີໂທສະ ກໍຮູ້ວ່າ ຈິຕມີໂທສະ; ຈິຕປາສະຈາກໂທສະ ກໍຮູ້ວ່າ ຈິຕປາສະຈາກໂທສະ; ຈິຕມີໂມຫະ ກໍຮູ້ວ່າ ຈິຕມີໂມຫະ;

ຈິຕປາສະຈາກໂມຫະ ກໍຮູ້ວ່າ ຈິຕປາສະຈາກໂມຫະ; ຈິຕຫົດຫູ່ ກໍຮູ້ວ່າ ຈິຕຫົດຫູ່; ຈິຕຟຸ້ງຊ່ານ ກໍຮູ້ວ່າ ຈິຕຟຸ້ງຊ່ານ; ຈິຕເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕເປັນມະຫັຄຄະຕະ; ຈິຕບໍ່ເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕບໍ່ເປັນມະຫັຄຄະຕະ; ຈິຕມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕມີຈິຕອື່ນຍິ່ງກວ່າ; ຈິຕບໍ່ມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕບໍ່ມີຈິຕອື່ນຍິ່ງກວ່າ; ຈິຕຕັ້ງໝັ້ນ ກໍຮູ້ວ່າ ຈິຕຕັ້ງໝັ້ນ; ຈິຕບໍ່ຕັ້ງໝັ້ນ ກໍຮູ້ວ່າ ຈິຕບໍ່ຕັ້ງໝັ້ນ; ຈິຕຫລຸດພົ້ນ ກໍຮູ້ວ່າ ຈິຕຫລຸດພົ້ນ; ຈິຕບໍ່ຫລຸດພົ້ນ ກໍຮູ້ວ່າ ຈິຕບໍ່ຫລຸດພົ້ນ. ພຣາມມ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອປຸພເພນິວາສານຸສະຕິຍານ ເຂົາຍ່ອມຣະນຶກຊາຕກ່ອນໄດ້ເປັນອັນມາກຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນຊາຕແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິ

ຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸເທົ່ານັ້ນ ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ມາບັງເກີດໃນພົພນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອັນມາກ ພ້ອມທັງອາກາຣພ້ອມທັງອຸເທສ ດ້ວຍປະກາຣຢ່າງນີ້. ພຣາມນ໌ ປຽບເໝືອນບຸຣຸສຈາກບ້ານຂອງຕົນໄປບ້ານອື່ນ ແລ້ວຈາກບ້ານນັ້ນໄປຍັງບ້ານອື່ນອີກ ຈາກບ້ານນັ້ນກັບມາບ້ານຂອງຕົນຕາມເດີມ ເຂົາຈະຣະນຶກໄດ້ຢ່າງນີ້ວ່າ ເຮົາໄດ້ຈາກບ້ານຂອງເຮົາໄປບ້ານນັ້ນໃນບ້ານນັ້ນເຮົາໄດ້ຢືນຢ່າງນັ້ນ ໄດ້ນັ່ງຢ່າງນັ້ນ ໄດ້ເວົ້າຢ່າງນັ້ນ ໄດ້ນິ້ງຢ່າງນັ້ນ; ເຮົາໄດ້ຈາກບ້ານນັ້ນໄປຍັງບ້ານນັ້ນແມ່ນແຕ່ໃນບ້ານນັ້ນ ເຮົາກໍໄດ້ຢືນຢ່າງນັ້ນ ໄດ້ນັ່ງຢ່າງນັ້ນ ໄດ້ເວົ້າຢ່າງນັ້ນ ໄດ້ນິ້ງຢ່າງນັ້ນ ແລ້ວເຮົາກັບຈາກບ້ານນັ້ນ ມາສູ່ບ້ານຂອງຕົນຕາມເດີມ ດັ່ງນີ້ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອປຸພເພນິວາສານຸສະຕິຍານ ເຂົາຍ່ອມຣະນຶກຊາຕກ່ອນໄດ້ເປັນອັນມາກຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນຊາຕ

ແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸເທົ່ານັ້ນ ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ມາບັງເກີດໃນພົພນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອັນມາກ ພ້ອມທັງອາການພ້ອມທັງອຸເທສ ດ້ວຍປະການຢ່າງນີ້. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອຈຸຕູປະປາຕະຍານ ເຂົາຍ່ອມມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຍຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອ

ແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຍຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຂົາຍ່ອມເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້. ພຣາມນ໌ ປຽບເໝືອນປາສາທຕັ້ງຢູ່ທີ່ທາງສາມແຍກ ໃຈກາງພຣະນະຄອຣ ບຸຣຸສຜູ້ມີຈັກຂຸຢືນຢູ່ເທິງປາສາທນັ້ນ ຈະເຫັນໝູ່ຊົນກຳລັງເຂົ້າໄປສູ່ເຮືອນແດ່ ກຳລັງອອກຈາກເຮືອນແດ່ ກຳລັງສັນຈອຣເປັນແຖວຢູ່ໃນຖະໜົນແດ່ ນັ່ງຢູ່ທີ່ທາງສາມແຍກ ໃຈກາງພຣະນະຄອຣແດ່ ເຂົາຈະຮູ້ວ່າ ຄົນເຫລົ່ານີ້ເຂົ້າໄປສູ່ເຮືອນ ເຫລົ່ານີ້ອອກຈາກເຮືອນ ເຫລົ່ານີ້ສັນຈອຣເປັນແຖວຢູ່ໃນຖະໜົນ ເຫລົ່ານີ້ນັ່ງຢູ່ທີ່ທາງສາມແຍກໃຈກາງພຣະນະຄອຣ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອຈຸຕູປະປາຕະຍານ ເຂົາຍ່ອມມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະ

ຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຢຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຂົາຍ່ອມເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອອາສະວັກຂະຍະຍານ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣທ ນີ້ທຸກຂະນິໂຣທະຄາມິນີປະຕິປະທາ ເຫລົ່ານີ້ອາສະວະ ນີ້ເຫຕເກີດແຫ່ງອາສະວະ ນີ້ຄວາມດັບແຫ່ງອາສະວະ

ນີ້ປະຕິປະທາໃຫ້ເຖິງຄວາມດັບແຫ່ງອາສະວະ ເມື່ອເຂົານັ້ນຮູ້ເຫັນຢ່າງນີ້ແລ້ວ ຈິຕຍ່ອມຫລຸດພົ້ນຈາກກາມາສະວະ ຈາກພະວາສະວະ ຈາກອະວິຊຊາສະວະ ເມື່ອຈິຕຫລຸດພົ້ນແລ້ວ ກໍມີຍານຢັ່ງຮູ້ວ່າ ຫລຸດພົ້ນແລ້ວ ຍ່ອມຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳ ໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ. ພຣາມນ໌ ປຽບເໝືອນສະນ້ຳເທິງຈອມພູໃສສະອາດບໍ່ຂຸ່ນມົວ ບຸຣຸສຜູ້ມີຈັກຂຸຢືນຢູ່ເທິງຂອບສະນ້ຳນັ້ນ ຍ່ອມເຫັນຫອຍໂຂ່ງແລະຫອຍກາບຕ່າງໆແດ່ກ້ອນກວດແລະກ້ອນຫີນແດ່ ຝູງປາແດ່ ກຳລັງລອຍຢູ່ແດ່ ຢຸດຢູ່ແດ່ ໃນສະນ້ຳນັ້ນ ເຂົາຈະມີຄວາມຄິດຢ່າງນີ້ວ່າ ສະນ້ຳນີ້ໃສສະອາດບໍ່ຂຸ່ນມົວ ມີຫອຍໂຂ່ງແລະຫອຍກາບຕ່າງໆແດ່ກ້ອນກວດແລະກ້ອນຫີນແດ່ ຝູງປາແດ່ ກຳລັງລອຍຢູ່ແດ່ກຳລັງຢຸດຢູ່ແດ່ ໃນສະນ້ຳນັ້ນ ດັ່ງນີ້ ສັນໃດ; ພຣາມນ໌ ພິກຂຸກໍສັນນັ້ນແລ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອອາສະວັກຂະຍະຍານຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣທ ນີ້ທຸກຂະນິໂຣທະຄາມິນີປະຕິປະທາ ເຫລົ່ານີ້ອາສະວະ ນີ້ເຫຕເກີດແຫ່ງອາສະວະ ນີ້ຄວາມດັບແຫ່ງອາສະວະນີ້ປະຕິປະທາໃຫ້ເຖິງຄວາມດັບແຫ່ງອາສະວະ ເມື່ອເຂົານັ້ນຮູ້ເຫັນຢ່າງນີ້ແລ້ວ ຈິຕຍ່ອມຫລຸດພົ້ນຈາກກາມາສະວະ ຈາກພະ

ວາສະວະ ຈາກອະວິຊຊາສະວະ ເມື່ອຈິຕຫລຸດພົ້ນແລ້ວ ກໍມີຍານຢັ່ງຮູ້ວ່າ ຫລຸດພົ້ນແລ້ວ ຍ່ອມຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳ ໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ. ພຣາມນ໌ ຂໍ້ນີ້ກໍເປັນປັນຍາຂອງເຂົາປະການໜຶ່ງ.

ພຣາມນ໌! ນີ້ແລ ຄືປັນຍານັ້ນ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພຣາມນ໌ໂສນະທັນດະໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ ຂ້າແຕ່ທ່ານພຣະໂຄຕະມະຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ, ຂ້າແຕ່ທ່ານພຣະໂຄຕະມະຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະໂຄຕະມະຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງພຣະໂຄຕະມະ ພຣະທັມ ແລະພຣະພິກຂຸສົງຄ໌ວ່າ ເປັນສະຣະນະ ຂໍພຣະໂຄຕະມະໂປດຊົງຈຳຂ້ານ້ອຍໄວ້ວ່າ ເປັນອຸປາສົກຜູ້ເຖິງສະຣະນະຕລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ ແລະຂໍພຣະໂຄຕະມະຜູ້ຈະເຣີນຊົງຮັບພັຕຕາຫາຣຂອງຂ້ານ້ອຍເພື່ອສເວີຍໃນມື້ອື່ນພ້ອມດ້ວຍພິກຂຸສົງຄ໌ ພຣະຜູ້

ມີພຣະພາຄຊົງຮັບດ້ວຍດຸສນີພາບແລ້ວ. ລຳດັບນັ້ນ ພຣາມນ໌ໂສນະທັນດະຊາບວ່າ ພຣະຜູ້ມີພຣະພາຄຊົງຮັບນິມົນແລ້ວ ລຸກຈາກອາສະນະ ຖວາຍອະພິວາທ ກະທຳປະທັກຂິນແລ້ວ ກັບໄປ.

ຄັນລ່ວງຣາຕຣີນັ້ນແລ້ວ ພຣາມນ໌ໂສນະທັນດະໃຫ້ຕົກແຕ່ງຂອງຄ້ຽວຂອງສັນອັນປະນີຕໃນນິເວສຂອງຕົນ ສຳເຣັຈແລ້ວ ໃຫ້ຄົນໄປກຣາບທູລພັຕຕະກາລແດ່ພຣະຜູ້ມີພຣະພາຄວ່າ ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ ເຖິງເວລາແລ້ວ ພັຕຕາຫາຣສຳເຣັຈແລ້ວ.

ຄັ້ງນັ້ນ ເປັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງນຸ່ງແລ້ວ ຊົງຖືບາຕແລະຈີວອຣ ສະເດັຈໄປຍັງນິເວສຂອງໂສນະທັນດະພຣາມນ໌ ພ້ອມດ້ວຍພິກຂຸສົງຄ໌ ແລ້ວປະທັບນັ່ງເທິງອາສະນະທີ່ເຂົາຈັດໄວ້ ພຣາມນ໌ໂສນະທັນດະໄດ້ຖວາຍພິກຂຸສົງຄ໌ມີພຣະພຸທທະເຈົ້າເປັນປະມຸຂ ດ້ວຍຂອງຄ້ຽວຂອງສັນອັນປະນີຕໃຫ້ອິ່ມໜຳດ້ວຍມືຂອງຕົນສຳເຣັຈແລ້ວ.

ຄັ້ງນັ້ນ ພຣາມນ໌ໂສນະທັນດະຊາບວ່າພຣະຜູ້ມີພຣະພາຄສເວີຍສຳເຣັຈແລ້ວ ວາງພຣະຫັຕຖ໌ຈາກບາຕແລ້ວ ຈຶ່ງຖືເອົາ

ອາສະນະຕ່ຳກວ່າ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລ້ວກຣາບທູລວ່າ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ຖ້າຂ້ານ້ອຍກຳລັງຢູ່ໃນທ່າມກາງບໍຣິສັທຈະລຸກຈາກອາສະນະຖວາຍອະພິວາທພຣະໂຄຕະມະຜູ້ຈະເຣີນ ບໍຣິສັທນັ້ນຈະດູໝິ່ນຂ້ານ້ອຍເພາະເຫຕນັ້ນໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສຍ່ອມເສື່ອມໂພຄະສົມບັຕ ເພາະໄດ້ຍົສຂ້ານ້ອຍຈຶ່ງມີໂພຄະສົມບັຕ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ຖ້າຂ້ານ້ອຍກຳລັງຢູ່ໃນທ່າມກາງບໍຣິສັທປະຄອງອັນຊະລີ ຂໍພຣະໂຄຕະມະຜູ້ຈະເຣີນຈົ່ງເຂົ້າພຣະທັຍວ່າ ແທນການລຸກຈາກອາສະນະ. ຖ້າຂ້ານ້ອຍກຳລັງຢູ່ໃນທ່າມກາງບໍຣິສັທເປື້ອງຜ້າໂພກອອກ ຂໍພຣະໂຄຕະມະຜູ້ຈະເຣີນຈົ່ງເຂົ້າພຣະທັຍວ່າ ແທນການອະພິວາທດ້ວຍສຽນເກົ້າ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ຖ້າຂ້ານ້ອຍກຳລັງໄປໃນຍານຈະລົງຈາກຍານແລ້ວຖວາຍອະພິວາທພຣະໂຄຕະມະຜູ້ຈະເຣີນ ບໍຣິສັທນັ້ນຈະດູໝິ່ນຂ້ານ້ອຍເພາະເຫຕນັ້ນໄດ້ ຜູ້ທີ່ຖືກບໍຣິສັທດູໝິ່ນຍ່ອມເສື່ອມຍົສ ຜູ້ເສື່ອມຍົສ ຍ່ອມເສື່ອມໂພຄະສົມບັຕເພາະໄດ້ຍົສຂ້ານ້ອຍຈຶ່ງມີໂພຄະສົມບັຕ.

ຂ້າແຕ່ພຣະໂຄຕະມະຜູ້ຈະເຣີນ! ຖ້າຂ້ານ້ອຍກຳລັງໄປໃນຍານຍົກປະຕັກຂຶ້ນ ຂໍພຣະໂຄຕະມະຜູ້ຈະເຣີນຈົ່ງເຂົ້າພຣະທັຍວ່າແທນການລົງຈາກຍານຂອງຂ້ານ້ອຍ. ຖ້າຂ້ານ້ອຍກຳລັງໄປໃນຍານລົດຮົ່ມລົງ ຂໍພຣະໂຄຕະມະຜູ້ຈະເຣີນຈົ່ງເຂົ້າພຣະທັຍວ່າແທນການອະພິວາທດ້ວຍສຽນເກົ້າຂອງຂ້ານ້ອຍ ດັ່ງນີ້.

ລຳດັບນັ້ນ ພຣະຜູ້ມີພຣະພາຄໄດ້ຊີ້ງຍັງພຣາມນ໌ໂສນະທັນດະໃຫ້ເຫັນແຈ້ງ ໃຫ້ສະມາທານ ໃຫ້ອາດຫານ ໃຫ້ຣ່າເຣີງດ້ວຍທັມມີກະຖາແລ້ວ ສະເດັຈລຸກຈາກອາສະນະສະເດັຈກັບໄປດັ່ງນີ້ແລ.

---

*ທີຄະນິກາຍ ສີລະຂັນທະວັຄ ໙/໑໑໗-໑໔໘/໑໗໗-໑໙໗*



# ບັນດິຕປາຖນາຄວາມສຸຂ ໑ ປະກາຣ ຈຶ່ງຮັກສາສີລ

ພິກຂຸທັງຫລາຍ! ບັນດິຕປາຖນາຄວາມສຸຂ ໑ ປະກາຣ ຈຶ່ງຮັກສາສີລ; ໑ ປະກາຣເປັນຢ່າງໃດ? ຄື ບັນດິຕປາຖນາຢູ່ວ່າ:

**ຂໍຄວາມສັນລະເສີນຈົ່ງມາເຖິງເຮົາ,**

**ຂໍໂພຄະສົມບັຕຈົ່ງເກີດຂຶ້ນແກ່ເຮົາ,**

**ເມື່ອແຕກກາຍຕາຍໄປ ຂໍເຮົາໄດ້ເຂົ້າເຖິງສຸຄະຕິໂລກສວັນ,**

ພິກຂຸທັງຫລາຍ! ບັນດິຕປາຖນາຄວາມສຸຂ ໑ ປະກາຣນີ້ແລ ຈຶ່ງຮັກສາສີລ.

**ຊົນຜູ້ມີປັນຍາປາຖນາຄວາມສຸຂ ໓ ປະການຄື ຄວາມສັນລະເສີນ, ການໄດ້ມາເຊິ່ງໂພຄະຊັພຍ໌ເຄື່ອງປື້ມໃຈ, ຄວາມບັນເທີງໃນສວັນໃນໂລກໜ້າ ຈຶ່ງຮັກສາສີລ.**

ຖ້າວ່າບຸຄຄົລບໍ່ກະທຳຄວາມຊົ່ວ ແຕ່ເຂົ້າໄປສະມາຄົມກັບບຸຄຄົລຜູ້ກະທຳຄວາມຊົ່ວຢູ່ ບຸຄຄົລນັ້ນເປັນຜູ້ທີ່ຄົນເຂົາລັງກຽດເພາະຄວາມຊົ່ວ ແລະໂທສຂອງບຸຄຄົລຜູ້ສະມາຄົມກັບຄົນຊົ່ວນີ້ຍ່ອມງອກງາມ.

ບຸຄຄົລທີ່ກະທຳຄົນເຊັ່ນໃດໃຫ້ເປັນມິຕ ແລະເຂົ້າໄປສະມາຄົມກັບຄົນເຊັ່ນໃດ ບຸຄຄົລນັ້ນແຫລະຊື່ວ່າເປັນເຊັ່ນດຽວກັບບຸຄຄົລນັ້ນ ເພາະເຫຕແຫ່ງການຢູ່ຮ່ວມກັນ.

ຄົນຊົ່ວຊ້ອງເສພບຸຄຄົລອື່ນຜູ້ບໍຣິສຸທໂດຍປົກກະຕິຢູ່ ຍ່ອມກະທຳບຸຄຄົລຜູ້ບໍຣິສຸທໂດຍປົກກະຕິທີ່ຊ້ອງເສພຕົນໃຫ້ຕິດເປື້ອນດ້ວຍຄວາມຊົ່ວ ເໝືອນລູກສອນທີ່ແຊ່ຢາພິດ ຖືກຢາພິດຕິດເປື້ອນແລ້ວ ຍ່ອມກະທຳໂບກລູກສອນທີ່ບໍ່ຕິດເປື້ອນ ໃຫ້ຕິດເປື້ອນດ້ວຍຢາພິດ ສັນນັ້ນ.

ຜູ້ມີປັນຍາຍ່ອມບໍ່ມີຄົນຊົ່ວເປັນເພື່ອນເລີຍ ເພາະຄວາມຢ້ານກົວຄວາມເປິເປື້ອນ.

ຄົນໃດຫໍ່ປາເນົ່າໄວ້ດ້ວຍໃບຫຍ້າຄາ ຫຍ້າຄາຂອງຄົນນັ້ນຍ່ອມມີກິ່ນເໝັນຟຸ້ງໄປ ການເຂົ້າໄປສະມາຄົມກັບຄົນພາລຍ່ອມເປັນເຊັ່ນນັ້ນ.

ສ່ວນຄົນໃດຫໍ່ກິດສນາໄວ້ດ້ວຍໃບໄມ້ ແມ່ນແຕ່ໃບໄມ້ຂອງຄົນນັ້ນຍ່ອມມີກິ່ນຫອມຟຸ້ງໄປ ການເຂົ້າໄປສະມາຄົມກັບບັນດິຕຍ່ອມເປັນເຊັ່ນນັ້ນ.

ເພາະສະນັ້ນ ບັນດິຕຮູ້ຄວາມສຳເຣັຈຜົລແຫ່ງຕົນເໝືອນຫໍ່ໃບໄມ້ແລ້ວ ຍ່ອມບໍ່ເຂົ້າໄປສະມາຄົມກັບອະສັປບຸຣຸສ ຍ່ອມສະມາຄົມກັບສັປບຸຣຸສ ເພາະວ່າ ອະສັປບຸຣຸສຍ່ອມນຳໄປສູ່ນະຣົກ ສັປບຸຣຸສຍ່ອມນຳໄປສູ່ສຸຄະຕິ.

---

*ຂຸທທະກະນິກາຍ. ຂຸທທ-ທັມມະປົທ-*
*ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໒໑໗-໒໑໘/໒໕໔*



# ເປັນທັມມະດາທີ່ອະວິປປະຕິສາຣ ຍ່ອມເກີດຂຶ້ນແກ່ບຸຄຄົລຜູ້ມີສີລ ຜູ້ສົມບູນດ້ວຍສີລ

ພິກຂຸທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ສົມບູນດ້ວຍສີລບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍອະວິປປະຕິສາຣຈົ່ງເກີດຂຶ້ນແກ່ເຮົາເຖີດ ພິກຂຸທັງຫລາຍ ຂໍ້ທີ່ອະວິປປະຕິສາຣເກີດຂຶ້ນແກ່ບຸຄຄົລຜູ້ມີສີລ ຜູ້ສົມບູນດ້ວຍສີລນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີອະວິປປະຕິສາຣ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍຄວາມປຣາໂມທຍ໌ຈົ່ງເກີດຂຶ້ນແກ່ເຮົາເຖີດ ພິກຂຸທັງຫລາຍ ຂໍ້ທີ່ຄວາມປຣາໂມທຍ໌ເກີດຂຶ້ນແກ່ບຸຄຄົລຜູ້ມີອະວິປປະຕິສາຣນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີຄວາມປຣາໂມທຍ໌ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍປີຕິຈົ່ງເກີດຂຶ້ນແກ່ເຮົາເຖີດ ພິກຂຸທັງຫລາຍ ຂໍ້ທີ່ປີຕິເກີດຂຶ້ນແກ່ບຸຄຄົລຜູ້ມີຄວາມປຣາໂມທຍ໌ນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີໃຈປະກອບດ້ວຍປີຕິ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍກາຍຂອງເຮົາຈົ່ງສງົບເຖີດ ພິກຂຸທັງຫລາຍ ຂໍ້ທີ່ກາຍຂອງບຸຄຄົລຜູ້ມີໃຈປະກອບດ້ວຍປີຕິສງົບນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີກາຍສງົບແລ້ວ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍເຮົາຈົ່ງສເວີຍສຸຂເຖີດ ພິກຂຸທັງຫລາຍ ຂໍ້ທີ່ບຸຄຄົລຜູ້ມີກາຍສງົບແລ້ວຍ່ອມສເວີຍສຸຂນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີສຸຂ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍຈິຕຂອງເຮົາຈົ່ງຕັ້ງໝັ້ນເຖີດ ພິກຂຸທັງຫລາຍ ຂໍ້ທີ່ຈິຕບຸຄຄົລຜູ້ມີສຸຂຍ່ອມຕັ້ງໝັ້ນນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍເຮົາຈົ່ງຮູ້ເຫັນຕາມຄວາມເປັນຈິງເຖີດ ພິກຂຸທັງຫລາຍ ຂໍ້ທີ່ບຸຄຄົລຜູ້ມີຈິຕຕັ້ງໝັ້ນແລ້ວຍ່ອມຮູ້ເຫັນຕາມຄວາມເປັນຈິງນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ຮູ້ເຫັນຕາມຄວາມເປັນຈິງ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍເຮົາຈົ່ງເບື່ອໜ່າຍເຖີດ ພິກຂຸທັງຫລາຍ ຂໍ້ທີ່ບຸຄຄົລຜູ້ຮູ້ເຫັນຕາມຄວາມເປັນຈິງຍ່ອມເບື່ອໜ່າຍນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ເບື່ອໜ່າຍ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍເຮົາຈົ່ງຄາຍກຳນັດເຖີດ ພິກຂຸທັງຫລາຍ ຂໍ້ທີ່ບຸຄຄົລຜູ້ເບື່ອໜ່າຍຍ່ອມຄາຍກຳນັດນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ບຸຄຄົລຜູ້ຄາຍກຳນັດແລ້ວ ບໍ່ຕ້ອງກະທຳດ້ວຍເຈຕະນາວ່າ ຂໍເຮົາຈົ່ງກະທຳໃຫ້ແຈ້ງເຊິ່ງວິມຸຕຕິຍານທັສ

ສະນະເກີດ ພິກຂຸທັງຫລາຍ ຂໍ້ທີ່ບຸຄຄົລຜູ້ຄາຍກຳນັດແລ້ວກະທຳໃຫ້ແຈ້ງເຊິ່ງວິມຸຕຕິຍານທັສສະນະນີ້ ເປັນທັມມະດາ.

ພິກຂຸທັງຫລາຍ! ວິຣາຄະມີວິມຸຕຕິຍານທັສສະນະເປັນຜົລ ມີວິມຸຕຕິຍານທັສສະນະເປັນອານິສົງສ໌.

ນິພພິທາມີວິຣາຄະເປັນຜົລ ມີວິຣາຄະເປັນອານິສົງສ໌.

ຍະຖາພູຕະຍານທັສສະນະມີນິພພິທາເປັນຜົລ ມີນິພພິທາເປັນອານິສົງສ໌.

ສະມາທິມີຍະຖາພູຕະຍານທັສສະນະເປັນຜົລ ມີຍະຖາພູຕະຍານທັສສະນະເປັນອານິສົງສ໌.

ສຸຂມີສະມາທິເປັນຜົລ ມີສະມາທິເປັນອານິສົງສ໌.

ປັສສັທທິມີສຸຂເປັນຜົລ ມີສຸຂເປັນອານິສົງສ໌.

ປີຕິມີປັສສັທທິເປັນຜົລ ມີປັສສັທທິເປັນອານິສົງສ໌.

ຄວາມປຣາໂມທຍ໌ມີປີຕິເປັນຜົລ ມີປີຕິເປັນອານິສົງສ໌.

ອະວິປປະຕິສາຣມີຄວາມປຣາໂມທຍ໌ເປັນຜົລ ມີຄວາມປຣາໂມທຍ໌ເປັນອານິສົງສ໌.

ສີລທີ່ເປັນກຸສົລມີອະວິປປະຕິສາຣເປັນຜົລ ມີອະວິປປະຕິສາຣເປັນອານິສົງສ໌ ດ້ວຍປະການດັ່ງນີ້ແລ.

**ພິກຂຸທັງຫລາຍ! ທັມທັງຫລາຍຍ່ອມຫລັ່ງໄຫລໄປສູ່ທັມທັງຫລາຍ ທັມທັງຫລາຍຍ່ອມຍັງທັມທັງຫລາຍໃຫ້ບໍຣິບູນເພື່ອການເຖິງຝັ່ງຈາກສະຖານທີ່ທີ່ບໍ່ແມ່ນຝັ່ງ ດ້ວຍປະການຢ່າງນີ້ແລ.**

---

*ອັງຄຸຕຕະຣະນິກາຍ ທະສະກະ-*
*ເອກາທະສະກະນິບາຕ ໒໔/໒໗໙/໒໐໙*



# ສີລຍ່ອມຮູ້ໄດ້ດ້ວຍການຢູ່ຮ່ວມກັນ...

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ປຸພພາຣາມ ປາສາທຂອງນາງວິສາຂາມີຄາຣະມາຣດາ ໃກ້ພຣະນະຄອຣສາວັຕຖີ, ກໍໃນສມັຍນັ້ນແລ ໃນເວລາແລງ ພຣະຜູ້ມີພຣະພາຄສະເດັຈອອກຈາກທີ່ຫລີກເຣັ້ນ ປະທັບນັ່ງຢູ່ພາຍນອກຊຸ້ມປະຕູ. ລຳດັບນັ້ນແລ ພຣະເຈົ້າປະເສນທິໂກສົລສະເດັຈເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ປະທັບນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ກໍສມັຍນັ້ນ ຊະດິລ ໗ ຄົນ, ນິຄຣົນຖ໌ ໗ ຄົນ, ອະເຈຣະກະ ໗ ຄົນ, ເອກະສາຕະກະ ໗ ຄົນ ແລະປະຣິພາຊົກ ໗ ຄົນ ມີຂົນກັຈສະແລະເລັບ

ງອກຍາວ ຫາບບໍຣິຂາຣຫລາຍຢ່າງ ເດີນຜ່ານໄປໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ ພຣະເຈົ້າປະເສນທິໂກສົລໄດ້ທອດພຣະເນຕເຫັນຊະດິລ ໗ ຄົນ, ນິຄຣົນຖ໌ ໗ ຄົນ, ອະເຈຣະກະ ໗ ຄົນ, ເອກະສາຕະກະ ໗ ຄົນ ແລະປະຣິພາຊົກ ໗ ຄົນເຫລົ່ານັ້ນ ຜູ້ມີຂົນກັຈສະແລະເລັບງອກຍາວ ຫາບບໍຣິຂາຣຫລາຍຢ່າງ ເດີນຜ່ານໄປໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ ຄັນແລ້ວຊົງລຸກຈາກອາສະນະ ຊົງກະທຳຜ້າບ່ຽງບ່າຂ້າງໜຶ່ງ ແລ້ວຄຸພຣະຊານຸມົນທົລເບື້ອງຂວາລົງທີ່ແຜ່ນດິນ ຊົງປະນົມອັນຊະລີໄປທາງທີ່ຊະດິລ ໗ ຄົນ, ນິຄຣົນຖ໌ ໗ ຄົນ, ອະເຈຣະກະ ໗ ຄົນ, ເອກະສາຕະກະ ໗ ຄົນ ແລະປະຣິພາຊົກ ໗ ຄົນ ແລ້ວຊົງປະກາສພຣະນາມ ໓ ຄັ້ງວ່າ:

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍຄືພຣະເຈົ້າປະເສນທິໂກສົລ
ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍຄືພຣະເຈົ້າປະເສນທິໂກສົລ
ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍຄືພຣະເຈົ້າປະເສນທິໂກສົລ

ລຳດັບນັ້ນແລ ເມື່ອຊະດິລ ໗ ຄົນ, ນິຄຣົນຖ໌ ໗ ຄົນ, ອະເຈຣະກະ ໗ ຄົນ, ເອກະສາຕະກະ ໗ ຄົນ ແລະປະຣິພາຊົກ ໗ ຄົນເຫລົ່ານັ້ນຫລີກໄປແລ້ວບໍ່ນານ ພຣະເຈົ້າປະເສນທິໂກສົລສະເດັຈເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຊົງ

ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ປະທັບນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກໍທ່ານເຫລົ່ານັ້ນເປັນຄົນໜຶ່ງໃນຈໍານວນພຣະອະຣະຫັນຕ໌ຫລືໃນຈໍານວນຜູ້ບັນລຸອະຣະຫັຕຕະມັຄໃນໂລກ.

ພຣະຜູ້ມີພຣະພາຄຕຣັສວ່າ:

ມະຫາຣາຊ! ມະຫາຣາຊເປັນຄຣືຫັສຖ໌ບໍຣິໂພຄກາມ ຊຶ່ງຄອງຄະຣາວາສອັນຄັບຄັ່ງດ້ວຍພຣະໂອຣົສແລະພຣະຊາຍາ ຊຶ່ງໃຊ້ສອຍຜ້າຈາກແຄວັ້ນກາສີແລະຈັນທນ໌ຢູ່ ຊຶ່ງທັດຊົງດອກໄມ້ຂອງຫອມ ແລະເຄື່ອງລູບທາຢູ່ ຊຶ່ງຍິນດີເງິນແລະຄໍາຢູ່ ຍາກທີ່ຈະຊົງຊາບໄດ້ວ່າ ທ່ານເຫລົ່ານີ້ເປັນພຣະອະຣະຫັນຕ໌ຫລືວ່າທ່ານເຫລົ່ານີ້ບັນລຸອະຣະຫັຕຕະມັຄ.

ມະຫາຣາຊ! ສີລ ຍ່ອມຮູ້ໄດ້ດ້ວຍການຢູ່ຮ່ວມກັນ ແລະສີລນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ຄວາມສະອາດ ຍ່ອມຮູ້ໄດ້ດ້ວຍການເຈຣະຈາ ແລະຄວາມສະອາດນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ກຳລັງ*(ຖາໂມ)* ຍ່ອມຮູ້ໄດ້ໃນຄາວມີອັນຕຣາຍ ແລະກຳລັງນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ປັນຍາ ຍ່ອມຮູ້ໄດ້ດ້ວຍການສົນທະນາ ແລະປັນຍານັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ພຣະເຈົ້າປະເສນທິໂກສົລກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໜ້າອັຈສະຈັນຍ໌
ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ບໍ່ເຄີຍມີມາ
ພຣະຜູ້ມີພຣະພາຄໄດ້ຕຣັສພຣະດຳຣັສນີ້ວ່າ:

ມະຫາຣາຊ! ມະຫາຣາຊເປັນຄຣືຫັສຖ໌ບໍຣິໂພຄກາມ ຊົງຄອງຄະຣາວາສອັນຄັບຄັ່ງດ້ວຍພຣະໂອຣົສແລະພຣະຊາຍາ ຊົງໃຊ້ສອຍຜ້າຈາກແຄວ້ນກາສີແລະຈັນທນ໌ຢູ່ ຊົງທັດຊົງດອກໄມ້ຂອງຫອມ ແລະເຄື່ອງລູບທາຢູ່ ຊົງຍິນດີເງິນແລະຄຳຢູ່ ຍາກທີ່ຈະຊົງຊາບໄດ້ວ່າ ທ່ານເຫລົ່ານີ້ເປັນພຣະອະຣະຫັນຕ໌ຫລືວ່າທ່ານເຫລົ່ານີ້ບັນລຸອະຣະຫັຕຕະມັຄ.

ມະຫາຣາຊ! ສີລ ຍ່ອມຮູ້ໄດ້ດ້ວຍການຢູ່ຮ່ວມກັນ ແລະສີລນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ຄວາມສະອາດ ຍ່ອມຮູ້ໄດ້ດ້ວຍການເຈຣະຈາ ແລະຄວາມສະອາດນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ກຳລັງ ຍ່ອມຮູ້ໄດ້ໃນຄາວມີອັນຕຣາຍ ແລະກຳລັງນັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍ

ໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການ ຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ມະຫາຣາຊ! ປັນຍາ ຍ່ອມຮູ້ໄດ້ດ້ວຍການສົນທະນາ ແລະ ປັນຍານັ້ນແລ ຍ່ອມຮູ້ໄດ້ໂດຍໃຊ້ເວລານານ ບໍ່ແມ່ນຮູ້ໄດ້ໂດຍ ໃຊ້ເວລາເລັກນ້ອຍ, ເມື່ອມະນະສິການຈຶ່ງຮູ້ໄດ້ ບໍ່ມະນະສິການ ຍ່ອມບໍ່ຮູ້, ຜູ້ມີປັນຍາຈຶ່ງຮູ້ໄດ້ ຜູ້ມີປັນຍາຊາມຍ່ອມບໍ່ຮູ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຣາຊະບຸຣຸສເຫລົ່ານັ້ນເປັນຄົນ ຂອງຂ້ານ້ອຍເອງ ປອມໂຕເປັນນັກບວຊທ່ຽວສອດແນມ ເປັນ ສາຍລັບທ່ຽວສອດແນມໄປຍັງຊົນບົທແລ້ວພາກັນກັບມາ. ຂ້ານ້ອຍຈະຮູ້ເຣື່ອງຣາວຫລັງຈາກທີ່ຄົນເຫລົ່ານັ້ນສືບມາ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ບັດນີ້ ພວກເຂົາລອຍທຸລີແລະ ມົລທິນແລ້ວ ອາບດີແລ້ວ ລູບທາດີແລ້ວ ປີ້ງຜົມແລະໜວດ ແລ້ວ ນຸ່ງຫົ່ມຜ້າຂາວ ອີ່ມເອີບ ພັ່ງພ້ອມດ້ວຍກາມຄຸນ ໕ ບຳ ເຣີຕົນຢູ່.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊາບເນື້ອຄວາມນັ້ນແລ້ວ ຊົງ ເປັ່ງອຸທານນີ້ໃນເວລານັ້ນວ່າ:

ບັນພະຊິດບໍ່ຄວນພະຍາຍາມໃນບາບກັມທັງປວງ,
ບໍ່ຄວນເປັນຄົນໃຊ້ຂອງຜູ້ອື່ນ,
ບໍ່ຄວນອາສັຍຜູ້ອື່ນເປັນຢູ່,
ບໍ່ຄວນສະແດງທັມເພື່ອປະໂຍຊນ໌ແຕ່ຊັພຍ໌ນັ້ນໆ.

---

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໑໘໘-໑໘໔/໑໘໘-໑໘໔*



*Sattajaṭilasutta SN 3.11 https://suttacentral.net/sn3.11*
*Translated by Bhikkhu Sujato*

# You Can Get to Know a Person's Ethics by Living with Them…

At one time the Buddha was staying near Sāvatthī in the Eastern Monastery, the stilt longhouse of Migāra's mother.

Then in the late afternoon, the Buddha came out of retreat and sat outside the gate. Then King Pasenadi of Kosala went up to the Buddha, bowed, and sat down to one side.

Now at that time seven matted-hair ascetics, seven Jain ascetics, seven naked ascetics, seven one-cloth ascetics, and seven wanderers passed by not far from the Buddha. Their armpits and bodies were hairy, and their nails were long; and they carried their stuff with shoulder-poles.

Then King Pasenadi got up from his seat, arranged his robe over one shoulder, knelt with his right knee on the ground, raised his joined palms toward those various ascetics, and pronounced his name three times: "Sirs, I am Pasenadi, king of Kosala! … I am Pasenadi, king of Kosala!"

Then, soon after those ascetics had left, King Pasenadi went up to the Buddha, bowed, sat down to one side, and said to him, "Sir, are they among those in the world who are perfected ones or who are on the path to perfection?"

"Great king, as a layman enjoying sensual pleasures, living at home with your children, using sandalwood imported from Kāsi, wearing

garlands, perfumes, and makeup, and accepting gold and money, it's hard for you to know who is perfected or on the path to perfection.

**You can get to know a person's ethics by living with them. But only after a long time, not casually; only when paying attention, not when inattentive; and only by the wise, not the witless.**

You can get to know **a person's purity** by dealing with them. …

You can get to know **a person's resilience** in times of trouble. …

You can get to know **a person's wisdom** by discussion. But only after a long time, not casually; only when paying attention, not when inattentive; and only by the wise, not the witless."

"It's incredible, sir, it's amazing, how well said this was by the Buddha. …

Sir, these are my spies, my undercover agents returning after spying on the country. First, they go undercover, then I have them report to me. And now—when they have washed off the dust and dirt, and are nicely bathed and anointed, with hair and beard dressed, and dressed in white—they will amuse themselves, supplied and provided with the five kinds of sensual stimulation."

Then, knowing the meaning of this, on that occasion the Buddha recited these verses:

"It's not easy to know a man by his appearance.
You shouldn't trust them at first sight.
For undisciplined men live in this world
disguised as the disciplined.

Like a fake earring made of clay,
like a copper penny coated with gold,
they live hidden in the world,
corrupt inside but impressive outside."



# ສີລເປັນໜຶ່ງໃນທັມທີ່ເປັນເຫຕໃຫ້ສົມປາຖນາ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣສາວັຕຖີ ສມັຍນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍວ່າ ພິກຂຸທັງຫລາຍ! ພິກຂຸເຫລົ່ານັ້ນທູລຮັບພຣະດຳຣັສແລ້ວ.

ພຣະຜູ້ມີພຣະພາຄໄດ້ຕຣັສດັ່ງນີ້ວ່າ:

ພິກຂຸທັງຫລາຍ! ເຮົາຈັກສະແດງເຫຕສົມປາຖນາແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງເຫຕສົມປາຖນານັ້ນ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄວ່າ ຊອບແລ້ວ ພຣະອົງຄ໌ຜູ້ຈະເຣີນ.

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັຕມະຫາສາລເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງກະສັຕມະຫາສາລ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງພຣາມນ໌ມະຫາສາລເຖີດ ດັ່ງນີ້ ເຂົາ

ຈຶ່ງຕັ້ງຈິດນັ້ນ ອະທິຕຖານຈິດນັ້ນ ຈະເຣີນຈິດນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງພຣາມມ໌ມະຫາສາລ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງຄະຫະບໍດີມະຫາສາລເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິດນັ້ນ ອະທິຕຖານຈິດນັ້ນ ຈະເຣີນຈິດນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງຄະຫະບໍດີມະຫາສາລ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນຈາຕຸມມະຫາຣາຊິກາ ມີອາຍຸຍືນ ມີວັນນະງາມ ມີຄວາມ

ສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມມະຫາຣາຊິກາເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມມະຫາຣາຊິກາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນຕາວະຕິງສາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕາວະຕິງສາເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນຕາວະຕິງສາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນຍາມາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຍາມາເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນຍາມາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນຕຸສິຕາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຕຸສິຕາເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້

ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນຕຸສິຕາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນນິມມານະຣະຕີ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນນິມມານະຣະຕີເຖີດ ດັ່ງນີ້ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນນິມມານະຣະຕີ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນປະຣະນິມມິຕະວະສວັຕຕີ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສວັຕຕີເຖີດ ດັ່ງນີ້ ເຂົາຈຶ່ງ

ຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາ ແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສວັຕຕີ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໑,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນບຸຣຸສຜູ້ມີຕາດີ ວາງໝາກຂາມປ້ອມໜຶ່ງໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ ສັນໃດ; ພິກຂຸທັງຫລາຍ ສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໑,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວ

ຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ທະວິສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ທະວິສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໒,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນທະວິສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນບຸຣຸສຜູ້ມີຕາດີ ວາງໝາກຂາມປ້ອມສອງໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ ສັນໃດ; ພິກຂຸທັງຫລາຍ ທະວິສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໒,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນທະວິສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງທະວິສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນ

ພາວະນັ້ນ. ພິກຂຸທັງຫລາຍ ນີ້ມັດ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງທະວິສະທັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ຕິສະທັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ຕິສະທັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໓,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນຕິສະທັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນບຸຣຸສຜູ້ມີຕາດີວາງໝາກຂາມປ້ອມສາມໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ສັນໃດ; ພິກຂຸທັງຫລາຍ ຕິສະທັສສະພຣົມກໍສັນນັ້ນເໝືອນກັນຍ່ອມນ້ອມຈິຕແຜ່ໄປຕລອດ ໓,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນຕິສະທັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງຕິສະທັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັດ ນີ້

ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງຕິສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ຈະຕຸສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ຈະຕຸສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໔,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນຈະຕຸສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນບຸຣຸສຜູ້ມີຕາດີ ວາງໝາກຂາມປ້ອມສີ່ໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ ສັນໃດ; ພິກຂຸທັງຫລາຍ ຈະຕຸສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໔,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນຈະຕຸສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງຈະຕຸສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອ

ຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງຈະຕຸສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ປັນຈະສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ປັນຈະສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໕,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນປັນຈະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນບຸຣຸສຜູ້ມີຕາດີ ວາງໝາກຂາມປ້ອມຫ້າໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ ສັນໃດ; ພິກຂຸທັງຫລາຍ ປັນຈະສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໕,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນປັນຈະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງປັນຈະສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອ

ຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງປັນຈະສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ທະສະສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ທະສະສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໑໐,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນທະສະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນແກ້ວໄພທູຣຍ໌ງາມແປດຫລ່ຽມອັນເຂົາເຈຍຣະໄນດີແລ້ວ ວາງໄວ້ເທິງຜ້າກັມພົນເຫລືອງ ຍ່ອມສ່ອງແສງເຮືອງຮຸ່ງ ສັນໃດ; ພິກຂຸທັງຫລາຍ ທະສະສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໑໐,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນທະສະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງທະສະສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ

ນີ້ມັດ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງທະສະສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ສະຕະສະຫັສສະພຣົມ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ. ພິກຂຸທັງຫລາຍ ສະຕະສະຫັສສະພຣົມຍ່ອມນ້ອມຈິຕແຜ່ໄປຕລອດ ໑໐໐,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນສະຕະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ປຽບເໝືອນແທ່ງຄຳຊົມພູນຸທ ທີ່ເຂົາຫລອມດ້ວຍຄວາມຊຳນານດີໃນເບົ້າຂອງຊ່າງຄຳຜູ້ສລາດແລ້ວ ວາງໄວ້ເທິງຜ້າກັມພົນເຫລືອງ ຍ່ອມສ່ອງແສງເຮືອງຮຸ່ງ ສັນໃດ; ພິກຂຸທັງຫລາຍສະຕະສະຫັສສະພຣົມກໍສັນນັ້ນເໝືອນກັນ ຍ່ອມນ້ອມຈິຕແຜ່ໄປຕລອດ ໑໐໐,໐໐໐ ໂລກະທາຕຢູ່ ແມ່ນແຕ່ສັຕທັງຫລາຍທີ່ເກີດໃນສະຕະສະຫັສສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງສະຕະສະຫັສສະພຣົມເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັດ ນີ້ປະຕິປະທາ ທີ່

ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງສະຕະສະຫັສສະພຣົມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອາພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອາພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອາພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນປະຣິຕຕາພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣິຕຕາພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະ

ເຮີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຮີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣິຕຕາພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອັປປະມານາພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອັປປະມານາພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຮີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຮີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອັປປະມານາພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອາພັສສະຣາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ

ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອາພັສສະຣາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອາພັສສະຣາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນສຸພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນປະຣິຕຕະສຸພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣິຕຕະສຸພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣິຕຕະສຸພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອັປປະມານະສຸພາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອັປປະມານະສຸພາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸ

ທັງຫລາຍ ນີ້ມັດ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈ ໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອັປປະມານະສຸພາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາ ຊັ້ນສຸພະກິນຫາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍ ໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນ ສຸພະກິນຫາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະ ເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາ ຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນ ໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັດ ນີ້ ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນ ສະຫາຍແຫ່ງເທວະດາຊັ້ນສຸພະກິນຫາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາ ຊັ້ນເວຫັປຜະລາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍ ໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນ ເວຫັປຜະລາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະ

ເອີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເອີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນເວຫັປຜະລາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອະວິຫາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອະວິຫາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເອີນຈິຕນັ້ນຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເອີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອະວິຫາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອະຕັປປາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ

ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອະຕັປປາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອະຕັປປາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນສຸທັສສາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸທັສສາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸທັສສາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນສຸທັສສີ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸທັສສີເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນສຸທັສສີ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອະກະນິຕຖາ ມີອາຍຸຍືນ ມີວັນນະງາມ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອະກະນິຕຖາເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້

ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເລັຈໃນຄວາມເປັນສະຫາຍແຫ່ງເທວະດາຊັ້ນອະກະນິຕຖາ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຜູ້ເຂົ້າເຖິງອາກາສານັນຈາຍະຕະນະພົພ ມີອາຍຸຍືນ ດຳຣົງຢູ່ນານ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງອາກາສານັນຈາຍະຕະນະພົພເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເລັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເລັຈໃນຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງອາກາສານັນຈາຍະຕະນະພົພ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຜູ້ເຂົ້າເຖິງວິນຍານັນຈາຍະຕະນະພົພ ມີອາຍຸຍືນ ດຳຣົງຢູ່ນານມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍ

ແຫ່ງເທວະດາຜູ້ເຂົ້າເຖິງວິນຍານັນຈາຍະຕະນະພົພເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງວິນຍານັນຈາຍະຕະນະພົພ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຜູ້ເຂົ້າເຖິງອາກິນຈັນຍາຍະຕະນະພົພ ມີອາຍຸຍືນ ດຳຣົງຢູ່ນານມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງອາກິນຈັນຍາຍະຕະນະພົພເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງອາກິນຈັນຍາຍະຕະນະພົພ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາ ຜູ້ເຂົ້າເຖິງເນວະສັນຍານາສັນຍາຍະຕະນະພົພ ມີອາຍຸຍືນ ດຳຣົງຢູ່ນານ ມີຄວາມສຸຂຫລາຍ ເຂົາມີຄວາມປາຖນາຢ່າງນີ້ ວ່າ ໂອໜໍ ເມື່ອເຮົາແຕກກາຍຕາຍໄປ ຂໍເຮົາຈົ່ງເຂົ້າເຖິງ ຄວາມເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງເນວະສັນຍານາ ສັນຍາຍະຕະນະພົພເຖີດ ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຕຖານຈິຕ ນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫລົ່ານັ້ນ ອັນເຂົາຈະເຣີນແລ້ວຢ່າງນີ້ ກະທຳໃຫ້ຫລາຍແລ້ວຢ່າງນີ້ ຍ່ອມ ເປັນໄປເພື່ອຄວາມສຳເຣັຈໃນພາວະນັ້ນ. ພິກຂຸທັງຫລາຍ ນີ້ມັຄ ນີ້ປະຕິປະທາ ທີ່ເປັນໄປເພື່ອຄວາມສຳເຣັຈໃນຄວາມ ເປັນສະຫາຍແຫ່ງເທວະດາຜູ້ເຂົ້າເຖິງເນວະສັນຍານາສັນຍາ ຍະຕະນະພົພ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປະກອບດ້ວຍ ສັທທາ ສີລ ສຸຕະ ຈາຄະ ປັນຍາ ເຂົາມີຄວາມປາຖນາຢ່າງນີ້ ວ່າ ໂອໜໍ ຂໍເຮົາຈົ່ງເຂົ້າເຖິງເຈໂຕວິມຸຕ ປັນຍາວິມຸຕ ອັນຫາ ອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປດ້ວຍປັນຍາ ອັນຍິ່ງເອງ ໃນປັຈຈຸບັນເຂົ້າເຖິງຢູ່ ເຂົາຈຶ່ງເຂົ້າເຖິງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍ

ສິ້ນໄປດ້ວຍປັນຍາອັນຍິ່ງເອງ ໃນປັຈຈຸບັນເຂົ້າເຖິງຢູ່. ພິກຂຸທັງຫລາຍ ພິກຂຸນີ້ຍ່ອມບໍ່ເກີດໃນທີ່ໃດໆ.

ພຣະຜູ້ມີພຣະພາຄໄດ້ຕຣັສພຣະພາສິຕນີ້ແລ້ວ ພິກຂຸເຫລົ່ານັ້ນຕ່າງຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໑໓໘-໑໓໙/໒໑໙-໒໒໘*



# ຄວາມສຳຄັນຂອງການສະມາທານສັທທາ ສະມາທານສີລ ສະມາທານສຸຕະ ສະມາທານຈາຄະ ສະມາທານປັນຍາ ໃນທັມວິນັຍທີ່ພຣະຕະຖາຄົຕປະກາສແລ້ວ

*ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເວລຸວັນກລັນທະກະນິວາປະສະຖານ ເຂຕພຣະນະຄອຣຣາຊະຄືຫ໌ ໃນຄັ້ງນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍວ່າ:*
ພິກຂຸທັງຫລາຍ!

*ພິກຂຸເຫລົ່ານັ້ນທູລຮັບພຣະດຳຣັສແລ້ວ. ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:*

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ໃນພຣະນະຄອຣຣາຊະຄຶຫ໌ນີ້ແລ ໄດ້ມີບຸຣຸສຄົນໜຶ່ງເປັນມະນຸສຂັດສົນ ເປັນມະນຸສກຳພ້າ ເປັນມະນຸສຍາກໄຮ້ **ແຕ່ເຂົາສະມາທານສັທທາ ສະມາທານສີລ ສະມາທານສຸຕະ ສະມາທານຈາຄະ ສະມາທານປັນຍາ ໃນທັມວິນັຍທີ່ຕະຖາຄົຕປະກາສແລ້ວ** *(ໂສ ຕະຖາຄະຕັປປເວທິເຕ ທັມມະວິນະເຍ ສັທທັງ ສະມາທິຍິຕວາ ສີລັງ ສະມາທິຍິຕວາ ສຸຕັງ ສະມາທິຍິຕວາ ຈາຄັງ ສະມາທິຍິຕວາ ປັນຍັງ ສະມາທິຍິຕວາ)*

ຄັນເຂົາສະມາທານສັທທາ ສະມາທານສີລ ສະມາທານສຸຕະ ສະມາທານຈາຄະ ສະມາທານປັນຍາ ໃນທັມວິນັຍທີ່ຕະຖາຄົຕປະກາສແລ້ວ ເມື່ອແຕກກາຍຕາຍໄປ ໄດ້ໄປບັງເກີດໃນສຸຄະຕິໂລກສວັນ ຄືຄວາມເປັນສະຫາຍຂອງເທວະດາຊັ້ນດາວະດຶງສ໌ ເທວະບຸຕນັ້ນຮຸ່ງເຮືອງກວ່າເທວະດາເຫລົ່າອື່ນດ້ວຍວັນນະແລະຍົສ.

ພິກຂຸທັງຫລາຍ! ໃນຄັ້ງນັ້ນແລ ພວກເທວະດາຊັ້ນດາວະດຶງສ໌ພາກັນຍົກໂທສຕຳນິ ຕິຕຽນວ່າ ທ່ານຜູ້ຈະເຣີນທັງຫລາຍ ໜ້າອັຈສະຈັນຍ໌ຫລາຍ ທ່ານຜູ້ຈະເຣີນທັງຫລາຍ ຍັງບໍ່ເຄີຍມີມາ

ເລີຍ ເທວະບຸຕຜູ້ນີ້ ເມື່ອຍັງເປັນມະນຸສຢູ່ໃນກາລກ່ອນ ເປັນມະນຸສຂັດສົນ ເປັນມະນຸສກຳພ້າ ເປັນມະນຸສຍາກໄຮ້ ເມື່ອແຕກກາຍຕາຍແລ້ວ ເຂົາອຸບັຕຍັງສຸຄະຕິໂລກສວັນ ຄືຄວາມເປັນສະຫາຍຂອງເທວະດາຊັ້ນດາວະດຶງສ໌ ຮຸ່ງເຮືອງກວ່າເທວະດາເຫລົ່າອື່ນດ້ວຍວັນນະແລະຍົສ.

ພິກຂຸທັງຫລາຍ! ຄັ້ງນັ້ນແລ ທ້າວສັກກະຈອມເທພຕຣັສກັບເທວະດາຊັ້ນດາວະດຶງສ໌ວ່າ:

ທ່ານຜູ້ນິຣະທຸກຂ໌ທັງຫລາຍ! ທ່ານທັງຫລາຍຢ່າຍົກໂທສຕໍ່ເທວະບຸຕນີ້ເລີຍ.

ທ່ານຜູ້ນິຣະທຸກຂ໌ທັງຫລາຍ! ເທວະບຸຕນີ້ແລ ເມື່ອຍັງເປັນມະນຸສຢູ່ໃນກາລກ່ອນ ເຂົາສະມາທານສັທທາ ສະມາທານສີລ ສະມາທານສຸຕະ ສະມາທານຈາຄະ ສະມາທານປັນຍາ ໃນທັມວິນັຍທີ່ພຣະຕະຖາຄົຕປະກາສແລ້ວ ເມື່ອແຕກກາຍຕາຍໄປ ຈຶ່ງມາອຸບັຕຍັງສຸຄະຕິໂລກສວັນ ຄືຄວາມເປັນສະຫາຍຂອງເທວະດາຊັ້ນດາວະດຶງສ໌ ຍ່ອມຮຸ່ງເຮືອງກວ່າເທວະດາເຫລົ່າອື່ນດ້ວຍວັນນະແລະຍົສ.

ພິກຂຸທັງຫລາຍ! ລຳດັບນັ້ນແລ ທ້າວສັກກະຈອມເທພກໍພອຍ ຍິນດີກັບພວກເທວະດາຊັ້ນດາວະດຶງສ໌ ໄດ້ກ່າວຄາຖາໃນເວລາ ນັ້ນວ່າ:

**"ບຸຄຄົລໃດ ມີສັທທາຕັ້ງໝັ້ນບໍ່ຫວັ່ນໄຫວໃນພຣະຕະຖາຄົຕ ມີສີລອັນງາມທີ່ພຣະອະຣິຍະເຈົ້າພໍໃຈສັນລະເສີນ ມີຄວາມເຫລື້ອມໃສໃນພຣະສົງຄ໌ ແລະມີຄວາມເຫັນຕົງ ບັນດິຕທັງຫລາຍຮຽກບຸຄຄົລນັ້ນວ່າ ເປັນຄົນບໍ່ຂັດສົນ ຊີວິຕຂອງເຂົາບໍ່ເປົ່າປະໂຍຊນ໌ ເພາະສະນັ້ນແລ ບຸຄຄົລຜູ້ມີປັນຍາ ເມື່ອຣະນຶກເຖິງຄຳສອນຂອງພຣະພຸທທະເຈົ້າທັງຫລາຍ ຄວນປະກອບເນື່ອງໆເຊິ່ງສັທທາ ສີລ ຄວາມເຫລື້ອມໃສ ແລະການເຫັນທັມ."**

---

*ສັງຍຸຕຕະນິກາຍ ສະຄາຖະວັກ ໑໕/໔໗໘-໔໗໙/໙໑໖-໙໑໙*



# ສີລທີ່ເປັນກຸສົລມີອະວິປປະຕິສາຣ ເປັນຜົລ ມີອະວິປປະຕິສາຣເປັນ ອານິສົງສ໌

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ໃກ້ພຣະນະຄອຣ ສາວັຕຖີ. ຄັ້ງນັ້ນແລ ທ່ານພຣະອານົນທ໌ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກາຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ສີລທີ່ເປັນກຸສົລມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

**ອານົນທ໌! ສີລທີ່ເປັນກຸສົລມີອະວິປປະຕິສາຣເປັນຜົລ ມີອະວິປປະຕິສາຣເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອະວິປປະຕິສາຣມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ອະວິປປະຕິສາຣມີປຣາໂມທຍ໌ເປັນຜົລ ມີປຣາໂມທຍ໌ເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ປຣາໂມທຍ໌ມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ປຣາໂມທຍ໌ມີປີຕິເປັນຜົລ ມີປີຕິເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ປີຕິມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ປີຕິມີປັສສັທທິເປັນຜົລ ມີປັສສັທທິເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ປັສສັທທິມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ປັສສັທທິມີສຸຂເປັນຜົລ ມີສຸຂເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ສຸຂມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ສຸຂມີສະມາທິເປັນຜົລ ມີສະມາທິເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ສະມາທິມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ສະມາທິມີຍະຖາພູຕະຍານທັສສະນະເປັນຜົລ ມີຍະຖາພູຕະຍານທັສສະນະເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຍະຖາພູຕະຍານທັສສະນະມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ຍະຖາພູຕະຍານທັສສະນະມີນິພພິທາເປັນຜົລ ມີນິພພິທາເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ນິພພິທາມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ນິພພິທາມີວິຣາຄະເປັນຜົລ ມີວິຣາຄະເປັນອານິສົງສ໌.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ວິຣາຄະມີອັນໃດເປັນຜົລ ມີອັນໃດເປັນອານິສົງສ໌?

**ອານົນທ໌! ວິຣາຄະມີວິມຸຕຕິຍານທັສສະນະເປັນຜົລ ມີວິມຸຕຕິຍານທັສສະນະເປັນອານິສົງສ໌.**

ອານົນທ໌! ສີລທີ່ເປັນກຸສົລມີອະວິປປະຕິສາຣເປັນຜົລ ມີອະວິປປະຕິສາຣເປັນອານິສົງສ໌ ອະວິປປະຕິສາຣມີປຣາໂມທຍ໌ເປັນຜົລ ມີປຣາໂມທຍ໌ເປັນອານິສົງສ໌ ປຣາໂມທຍ໌ມີປີຕິເປັນຜົລ ມີປີຕິເປັນອານິສົງສ໌ ປີຕິມີປັສສັທທິເປັນຜົລ ມີປັສສັທທິເປັນອານິສົງສ໌ ປັສສັທທິມີສຸຂເປັນຜົລ ມີສຸຂເປັນອານິສົງສ໌ ສຸຂມີສະມາທິເປັນຜົລ ມີສະມາທິເປັນອານິສົງສ໌ ສະມາທິມີ

ຍະຖາພູຕະຍານທັສສະນະເປັນຜົລ ມີຍະຖາພູຕະຍານທັສສະນະເປັນອານິສົງສ໌ ຍະຖາພູຕະຍານທັສສະນະມີນິພພິທາເປັນຜົລ ມີນິພພິທາເປັນອານິສົງສ໌ ນິພພິທາມີວິຣາຄະເປັນຜົລ ມີວິຣາຄະເປັນອານິສົງສ໌ ວິຣາຄະມີວິມຸຕຕິຍານທັສສະນະເປັນຜົລ ມີວິມຸຕຕິຍານທັສສະນະເປັນອານິສົງສ໌ ດ້ວຍປະການຢ່າງນີ້.

ອານົນທ໌! ສີລທີ່ເປັນກຸສົລຍ່ອມເຖິງອະຣະຫັນຕ໌ໂດຍລຳດັບ ດ້ວຍປະການຢ່າງນີ້.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໑/໑*


“ດູກ່ອນຊ່າງໄມ້ ກາຍະກັມທີ່ເປັນອະກຸສົລ, ວະຈີກັມທີ່ເປັນ
ອະກຸສົລ, ການລ້ຽງຊີພຊົ່ວ. ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ
ສີລທີ່ເປັນອະກຸສົລ.”

“ດູກ່ອນຊ່າງໄມ້ ເຮົາຍ່ອມກ່າວເຊິ່ງກາຍະ
ກັມທີ່ເປັນກຸສົລ, ວະຈີກັມທີ່ເປັນກຸສົລ
ແລະອາຊີພບໍຣິສຸທ ລົງໃນສີລເຫລົ່ານີ້.
ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ ສີລທີ່
ເປັນກຸສົລ.”



# ສິລທີ່ເປັນອະກຸສົລ ສິລທີ່ເປັນກຸສົລ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ ສມັຍນັ້ນ ປະຣິພາຊິກຊື່ ອຸຄຄາຫະມານະ ຜູ້ເປັນບຸຕ ຂອງນາງສະມະນະມຸນດິກາ ພ້ອມດ້ວຍບໍຣິສັທໝູ່ໃຫຍ່ປະມານ ໕໐໐ ອາສັຍຢູ່ໃນອາຣາມຂອງພຣະນາງມັລລິກາຣາຊະເທວີ ໃນໝູ່ບ້ານເອກະສາລາຊື່ ຕິນດຸກາຈີຣະ ເຊິ່ງເປັນບ່ອນປະຊຸມ ສະແດງລັທທິຂອງນັກບວຊ. ຄັ້ງນັ້ນ ຊ່າງໄມ້ຜູ້ໜຶ່ງຊື່ ປັນຈະ ກັງຄະ ອອກຈາກເມືອງສາວັຕຖີເພື່ອຈະໄປເຝົ້າພຣະຜູ້ມີພຣະ

ພາຄໃນເວລາທ່ຽງ. ຄັ້ງນັ້ນ ເຂົາມີຄວາມດຳຣິວ່າ ເວລານີ້ບໍ່ແມ່ນກາລທີ່ຈະເຂົ້າເຝົ້າພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຊົງຫລີກເຮັ້ນຢູ່ ບໍ່ແມ່ນສມັຍທີ່ຈະໄປຫາພິກຂຸທັງຫລາຍຜູ້ຈະເຣີນທາງໃຈ ພິກຂຸທັງຫລາຍຜູ້ຈະເຣີນທາງໃຈກໍຫລີກເຮັ້ນຢູ່. ຖ້າເຊັ່ນນັ້ນ ເຮົາຄວນເຂົ້າໄປຫາອຸຄຄາຫະມານະປະຣິພາຊົກ ສະມະນະມຸນດິກາບຸຕ ທີ່ອາຣາມຕິນດຸກາຈີຣະຂອງພຣະນາງມັລລິກາຣາຊະເທວີ ໃນໝູ່ບ້ານເອກະສາລາ ເຊິ່ງເປັນບ່ອນປະຊຸມສະແດງລັທທິຂອງນັກບວຊເຖີດ.

ລຳດັບນັ້ນ ຊ່າງໄມ້ປັນຈະກັງຄະຈຶ່ງເຂົ້າໄປຍັງອາຣາມຕິນດຸກາຈີຣະຂອງພຣະນາງມັລລິກາຣາຊະເທວີ ໃນໝູ່ບ້ານເອກະສາລາ.

ສມັຍນັ້ນ ອຸຄຄາຫະມານະປະຣິພາຊົກ ສະມະນະມຸນດິກາບຸຕ ນັ່ງຢູ່ກັບປະຣິພາຊົກບໍຣິສັທໝູ່ໃຫຍ່ເຊິ່ງກຳລັງເວົ້າຕິຣັຈສານກະຖາຫລາຍປະການ ສົ່ງສຽງອື້ອຶງອຶກະທຶກຄຶ ເວົ້າເຣື່ອງພຣະຣາຊາ, ເຣື່ອງໂຈຣ, ເຣື່ອງມະຫາອະມາຕຍ໌, ເຣື່ອງກອງທັບ, ເຣື່ອງພັຍ, ເຣື່ອງຣົບ, ເຣື່ອງເຂົ້າ, ເຣື່ອງນ້ຳ, ເຣື່ອງຜ້າ, ເຣື່ອງທີ່ນອນ, ເຣື່ອງດອກໄມ້, ເຣື່ອງຂອງຫອມ, ເຣື່ອງຍາຕ, ເຣື່ອງຍານ, ເຣື່ອງບ້ານ, ເຣື່ອງນິຄົມ, ເຣື່ອງຣາຊະທານີ, ເຣື່ອງຊົນບົທ, ເຣື່ອງສະຕຣີ, ເຣື່ອງຄົນກ້າຫານ, ເຣື່ອງທາງ

ຮ່ອມ, ເຣື່ອງທ່ານ້ຳ, ເຣື່ອງທາສີຕັກນ້ຳ*(ກຸມພະທາສີກະຖັງ)*, ເຣື່ອງຄົນທີ່ລ່ວງລັບໄປແລ້ວ, ເຣື່ອງເລັກໆນ້ອຍໆ, ເຣື່ອງໂລກ ເຣື່ອງທະເລ, ເຣື່ອງຄວາມຈະເຣີນແລະຄວາມເສື່ອມ ດ້ວຍປະການັ້ນໆ.

ອຸຄຄາຫະມານະປະຣິພາຊົກ ສະມະນະມຸນດິກາບຸຕໄດ້ເຫັນຊ່າງໄມ້ປັນຈະກັງຄະເຊິ່ງກຳລັງມາແຕ່ໄກ ຈຶ່ງຫ້າມບໍຣິສັທຂອງຕົນໃຫ້ສງົບວ່າ ຂໍທ່ານທັງຫລາຍຈົ່ງເບົາສຽງ ຢ່າສົ່ງສຽງແຮງ ຊ່າງໄມ້ປັນຈະກັງຄະຜູ້ເປັນສາວົກຂອງພຣະສະມະນະໂຄດົມກຳລັງມາ ບັນດາສາວົກຂອງພຣະສະມະນະໂຄດົມທີ່ເປັນຄະຣືຫັສຖ໌ຜູ້ນຸ່ງຂາວຫົ່ມຂາວມີປະມານເທົ່າໃດທີ່ອາສັຍຢູ່ໃນພຣະນະຄອຣສາວັຕຖີ ນາຍຊ່າງໄມ້ປັນຈະກັງຄະນີ້ເປັນຜູ້ໜຶ່ງໃນບັນດາສາວົກເຫລົ່ານັ້ນ **ທ່ານເຫລົ່ານັ້ນຊອບສຽງເບົາ ໄດ້ຮັບຄຳແນະນຳໃນການໃຊ້ສຽງເບົາ ກ່າວສັນລະເສີນຄຸນຂອງສຽງເບົາ** ບາງທີຊ່າງໄມ້ປັນຈະກັງຄະຊາບວ່າບໍຣິສັທມີສຽງເບົາ ຈະສຳຄັນທີ່ຈະເຂົ້າມາຫາກໍໄດ້. ປະຣິພາຊົກເຫລົ່ານັ້ນຈຶ່ງພາກັນນິ້ງຢູ່. ລຳດັບນັ້ນ ນາຍຊ່າງໄມ້ປັນຈະກັງຄະໄດ້ເຂົ້າໄປຫາອຸຄຄາຫະມານະປະຣິພາຊົກສະມະນະມຸນດິກາບຸຕເຖິງທີ່ໃກ້ ໄດ້ປຣາສັຍກັບອຸຄຄາຫະມານະປະຣິພາຊົກສະມະນະມຸນດິກາບຸຕ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ກໍນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ.

ອຸຄຄາຫະມານະປະຣິພາຊົກສະມະນະມຸນດິກາບຸຕໄດ້ກ່າວກັບ
ນາຍຊ່າງໄມ້ປັນຈະກັງຄະຜູ້ນັ່ງຢູ່ໃນທີ່ຄວນສ່ວນຂ້າງໜຶ່ງວ່າ:

ນາຍຊ່າງໄມ້! ເຮົາບັນຍັຕບຸຣຸສບຸຄຄົລຜູ້ປະກອບດ້ວຍທັມ ໔ ປະກາຣວ່າ ເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້. ທັມ ໔ ປະກາຣເປັນຢ່າງໃດ?

ນາຍຊ່າງໄມ້! ບຸຄຄົລໃນກໍຣະນີນີ້ ບໍ່ກະທຳຊົ່ວດ້ວຍກາຍ ບໍ່ກ່າວວາຈາຊົ່ວ ບໍ່ດຳຣິເຖິງຄວາມດຳຣິຊົ່ວ ບໍ່ລ້ຽງຊີພຊົ່ວ ເຮົາບັນຍັຕບຸຣຸສບຸຄຄົລຜູ້ປະກອບດ້ວຍທັມ ໔ ປະກາຣນີ້ວ່າ ເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້ ດັ່ງນີ້.

ລຳດັບນັ້ນ ນາຍຊ່າງໄມ້ປັນຈະກັງຄະບໍ່ຍິນດີ ບໍ່ຄັດຄ້ານພາສິຕຂອງອຸຄຄາຫະມານະປະຣິພາຊົກສະມະນະມຸນດິກາບຸຕ ແລ້ວລຸກຈາກອາສະນະຫລີກໄປ ດ້ວຍຄິດວ່າ ເຮົາຈັກຮູ້ແຈ້ງເນື້ອຄວາມແຫ່ງພາສິຕນີ້ໃນສຳນັກຂອງພຣະຜູ້ມີພຣະພາຄ. ເຂົາເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລ້ວກຣາບທູລ

ເຣື່ອງທີ່ສົນທະນາປຣາສັຍກັບອຸຄຄາຫະມານະປະຣິພາຊິກສະມະນະມຸນດິກາບຸຕທັງໝົດແດ່ພຣະຜູ້ມີພຣະພາຄ.

ເມື່ອນາຍຊ່າງໄມ້ປັນຈະກັງຄະກຣາບທູລຢ່າງນີ້ແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

ດູກ່ອນຊ່າງໄມ້! ຖ້າເປັນເໝືອນຢ່າງຄຳຂອງອຸຄຄາຫະມານະປະຣິພາຊິກສະມະນະມຸນດິກາບຸຕກ່າວ ເດັກອ່ອນທີ່ຍັງນອນຫງາຍຢູ່ ກໍຈັກເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້.

ດູກ່ອນຊ່າງໄມ້! ເດັກອ່ອນທີ່ຍັງນອນຫງາຍຢູ່ ແມ່ນແຕ່ຈະຮູ້ວ່າ ກາຍ ດັ່ງນີ້ ກໍຍັງບໍ່ຮູ້ ແລ້ວຈັກກະທຳກັມຊົ່ວດ້ວຍກາຍໄດ້ຢ່າງໃດ ນອກຈາກຈະມີພຽງອາການດິ້ນຣົນ. ເດັກອ່ອນທີ່ຍັງນອນຫງາຍຢູ່ ແມ່ນແຕ່ຈະຮູ້ວ່າ ວາຈາ ດັ່ງນີ້ ກໍຍັງບໍ່ຮູ້ ແລ້ວຈັກກະທຳກັມຊົ່ວດ້ວຍວາຈາໄດ້ຢ່າງໃດ ນອກຈາກຈະມີພຽງອາການຮ້ອງໄຫ້ແລະການຫົວ. ເດັກອ່ອນທີ່ຍັງນອນຫງາຍຢູ່ ແມ່ນແຕ່ຈະຮູ້ວ່າ ອາຊີພ ດັ່ງນີ້ ກໍຍັງບໍ່ຮູ້ ແລ້ວຈັກລ້ຽງຊີພຊົ່ວໄດ້ຢ່າງໃດ ນອກຈາກນ້ຳນົມຂອງມາຣດາ.

ດູກ່ອນຊ່າງໄມ້! ຖ້າເປັນເໝືອນຢ່າງຄຳຂອງອຸຄຄາຫະມານະປະຣິພາຊົກສະມະນະມຸນດິກາບຸຕກ່າວ ເດັກອ່ອນທີ່ຍັງນອນຫງາຍຢູ່ ກໍຈັກເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້.

ດູກ່ອນຊ່າງໄມ້! ເຮົາບັນຍັຕບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການວ່າ ບໍ່ແມ່ນຜູ້ມີກຸສົລສົມບູນ ບໍ່ແມ່ນຜູ້ມີກຸສົລຢ່າງຍິ່ງ ບໍ່ແມ່ນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມບໍ່ມີໃຜຊະນະໄດ້ ກໍແຕ່ວ່າບຸຄຄົລນີ້ຍັງດີກວ່າເດັກອ່ອນນອນຫງາຍຢູ່ແດ່ ທັມ ໔ ປະການເປັນຢ່າງໃດ?

ດູກ່ອນຊ່າງໄມ້! ບຸຄຄົລໃນກໍຣະນີນີ້ ບໍ່ກະທຳຊົ່ວດ້ວຍກາຍ ບໍ່ກ່າວວາຈາຊົ່ວ ບໍ່ດຳຣິເຖິງຄວາມດຳຣິຊົ່ວ ບໍ່ລ້ຽງຊີພຊົ່ວ ເຮົາບັນຍັຕບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການນີ້ວ່າ ບໍ່ແມ່ນຜູ້ມີກຸສົລສົມບູນ ບໍ່ແມ່ນຜູ້ມີກຸສົລຢ່າງຍິ່ງ ບໍ່ແມ່ນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມບໍ່ມີໃຜຊະນະໄດ້ ກໍແຕ່ວ່າບຸຄຄົລນີ້ຍັງດີກວ່າເດັກອ່ອນນອນຫງາຍຢູ່ແດ່.

ດູກ່ອນຊ່າງໄມ້! ເຮົາບັນຍັຕບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການວ່າ ເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້.

**ດູກ່ອນຊ່າງໄມ້! ຂໍ້ທີ່ສີລເຫລົ່ານີ້ເປັນອະກຸສົລ ເຮົາກ່າວວ່າ ຄວນຮູ້** *(ອິເມ ອະກຸສະລາ ສີລາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ສະມຸຕຖານແຫ່ງສີລທີ່ເປັນອະກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້** *(ອິໂຕສະມຸຕຖານາ ອະກຸສະລາ ສີລາ ຕະ-ມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ສີລທີ່ເປັນອະກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ນີ້ ເຮົາກ່າວວ່າ ຄວນຮູ້** *(ອິທະ ອະກຸສະລາ ສີລາ ອະປະຣິ-ເສສາ ນິຣຸຊຊັນຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ຜູ້ປະຕິບັຕຢ່າງນີ້ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສີລທີ່ເປັນອະກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້** *(ເອວັງ ປະຕິປັນໂນ ອະກຸສະລານັງ ສີລານັງ ນິໂຣທາຍະ ປະຕິປັນໂນ ໂຫຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ).*

ດູກ່ອນຊ່າງໄມ້! ຂໍ້ທີ່ສີລເຫລົ່ານີ້ເປັນກຸສົລ ເຮົາກ່າວວ່າ ຄວນຮູ້ *(ອິເມ ກຸສະລາ ສີລາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ສະມຸຕຖານແຫ່ງສີລທີ່ເປັນກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້ *(ອິໂຕສະມຸຕຖານາ ກຸສະລາ ສີລາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ສີລທີ່ເປັນກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ນີ້ ເຮົາກ່າວວ່າ ຄວນຮູ້ *(ອິທະ ກຸສະລາ ສີລາ ອະປະຣິເສສາ ນິຣຸຊຊັນຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ຜູ້ປະຕິບັຕຢ່າງນີ້ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສີລທີ່ເປັນກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້ *(ເອວັງ ປະຕິປັນໂນ ກຸສະລານັງ ສີລານັງ ນິໂຣທາຍະ ປະຕິປັນໂນ ໂຫຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ).*

**ດູກ່ອນຊ່າງໄມ້! ຂໍ້ທີ່ຄວາມດຳຣິເຫລົ່ານີ້ເປັນອະກຸສົລ ເຮົາກ່າວວ່າ ຄວນຮູ້** *(ອິເມ ອະກຸສະລາ ສັງກັປປາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ສະມຸຕຖານແຫ່ງຄວາມດຳຣິທີ່ເປັນອະກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້** *(ອິໂຕສະມຸຕຖານາ ອະກຸສະລາ ສັງກັປປາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ຄວາມດຳຣິທີ່ເປັນອະກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ນີ້ ເຮົາກ່າວວ່າ ຄວນຮູ້** *(ອິທະ ອະກຸສະລາ ສັງກັປປາ ອະປະຣິເສສາ ນິຣຸຊຊັນຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

**ດູກ່ອນຊ່າງໄມ້! ຂໍ້ທີ່ຜູ້ປະຕິບັຕຢ່າງນີ້ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງຄວາມດຳຣິທີ່ເປັນອະກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້** *(ເອວັງ ປະຕິປັນໂນ ອະກຸສະລານັງ ສັງກັປປານັງ ນິໂຣທາຍະ ປະຕິປັນໂນ ໂຫຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ).*

ດູກ່ອນຊ່າງໄມ້! ຂໍ້ທີ່ຄວາມດຳຣິເຫລົ່ານີ້ເປັນກຸສົລ ເຮົາກ່າວວ່າ ຄວນຮູ້ *(ອິເມ ກຸສະລາ ສັງກັປປາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ສະມຸຕຖານແຫ່ງຄວາມດຳຣິທີ່ເປັນກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້ *(ອິໂຕສະມຸຕຖານາ ກຸສະລາ ສັງກັປປາ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ຄວາມດຳຣິທີ່ເປັນກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ນີ້ ເຮົາກ່າວວ່າ ຄວນຮູ້ *(ອິທະ ກຸສະລາ ສັງກັປປາ ອະປະຣິເສສາ ນິຣຸຊຊັນຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ),*

ດູກ່ອນຊ່າງໄມ້! ຂໍ້ທີ່ຜູ້ປະຕິບັຕຢ່າງນີ້ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງຄວາມດຳຣິທີ່ເປັນກຸສົລເຫລົ່ານີ້ ເຮົາກ່າວວ່າ ຄວນຮູ້ *(ເອວັງ ປະຕິປັນໂນ ກຸສະລານັງ ສັງກັປປານັງ ນິໂຣທາຍະ ປະຕິປັນໂນ ໂຫຕິ ຕະມະຫັງ ຖະປະຕິ ເວທິຕັພພັນຕິ ວະທາມິ).*

## ສີລທີ່ເປັນອະກຸສົລ

ດູກ່ອນຊ່າງໄມ້! ກໍສີລທີ່ເປັນອະກຸສົລເປັນຢ່າງໃດ?
ດູກ່ອນຊ່າງໄມ້! ກາຍະກັມທີ່ເປັນອະກຸສົລ, ວະຈີກັມທີ່ເປັນອະກຸສົລ, ການລ້ຽງຊີພຊົ່ວ. ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ ສີລທີ່ເປັນອະກຸສົລ *(ກະຕະເມ ຈະ ຖະປະຕິ ອະກຸສະລາ ສີລາ ໆ ອະກຸສະລັງ ກາຍະກັມມັງ ອະກຸສະລັງ ວະຈີກັມມັງ ປາປະໂກ ອາຊີໂວ ອິເມ ວຸຈຈັນຕິ ຖະປະຕິ ອະກຸສະລາ ສີລາ).*

ດູກ່ອນຊ່າງໄມ້! ກໍສີລທີ່ເປັນອະກຸສົລເຫລົ່ານີ້ມີອັນໃດເປັນສະມຸຕຖານ?

ແມ່ນແຕ່ສະມຸຕຖານແຫ່ງສີລທີ່ເປັນອະກຸສົລເຫລົ່ານັ້ນ ເຮົາກໍກ່າວແລ້ວ ຄວນກ່າວວ່າ ມີຈິຕເປັນສະມຸຕຖານ.

ຈິຕເປັນຢ່າງໃດ?

ຈິຕກໍມີຫລາຍ ຫລາຍຢ່າງ ມີປະກາຣຕ່າງໆ ຈິຕໃດມີຣາຄະ ໂທສະ ໂມຫະ ສີລທີ່ເປັນອະກຸສົລມີຈິຕນີ້ເປັນສະມຸຕຖານ.

ດູກ່ອນຊ່າງໄມ້! ສີລທີ່ເປັນອະກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ໃດ?

ແມ່ນແຕ່ຄວາມດັບແຫ່ງສີລທີ່ເປັນອະກຸສົລເຫລົ່ານັ້ນ ເຮົາກໍກ່າວແລ້ວ.

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ລະກາຍທຸຈະຣິຕ ຈະເຣີນກາຍສຸຈະຣິຕ, ລະວະຈີທຸຈະຣິຕ ຈະເຣີນວະຈີສຸຈະຣິຕ, ລະມະໂນທຸຈະຣິຕ ຈະເຣີນມະໂນສຸຈະຣິຕ, ລະມິຈສາອາຊີວະ ລ້ຽງຊີພດ້ວຍສັມມາອາຊີວະ.

ຜູ້ປະຕິບັຕຢ່າງໃດ ຈຶ່ງຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສີລທີ່ເປັນອະກຸສົລ?

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ຍັງສັນທະໃຫ້ເກີດພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອບໍ່ໃຫ້ອະກຸສົລທັມອັນເປັນບາບທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອລະອະກຸສົລທັມອັນເປັນບາບທັງຫລາຍທີ່ເກີດຂຶ້ນແລ້ວ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອໃຫ້ກຸສົລທັມທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເລືອນຫາຍ ເພື່ອຄວາມມີຍິ່ງໆຂຶ້ນໄປ ເພື່ອຄວາມໄພບູນ ເພື່ອຄວາມຈະເຣີນ ເພື່ອຄວາມບໍຣິບູນແຫ່ງກຸສົລທັມທັງຫລາຍທີ່ເກີດຂຶ້ນແລ້ວ.

ດູກ່ອນຊ່າງໄມ້! ຜູ້ປະຕິບັຕຢ່າງນີ້ແລ ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສີລທີ່ເປັນອະກຸສົລ.

## ສີລທີ່ເປັນກຸສົລ

ດູກ່ອນຊ່າງໄມ້! ກໍສີລທີ່ເປັນກຸສົລເປັນຢ່າງໃດ?
ດູກ່ອນຊ່າງໄມ້! ເຮົາຍ່ອມກ່າວເຊິ່ງກາຍະກັມທີ່ເປັນກຸສົລ, ວະຈີກັມທີ່ເປັນກຸສົລ ແລະອາຊີພບໍຣິສຸທ ລົງໃນສີລເຫລົ່ານີ້.

ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ ສີລທີ່ເປັນກຸສົລ *(ກະຕະເມ ຈະ ຖະປະຕິ ກຸສະລາ ສີລາ ໆ ກຸສະລັງ ກາຍະກັມມັງ ກຸສະລັງ ວະຈີກັມມັງ ອາຊີວະປາຣິສຸທທິງປີ ໂຂ ອະຫັງ ຖະປະຕິ ສີລັສມິງ ວະທາມິ ອິເມ ວຸຈ ຈັນຕິ ຖະປະຕິ ກຸສະລາ ສີລາ).*

ດູກ່ອນຊ່າງໄມ້! ກໍສີລທີ່ເປັນກຸສົລເຫລົ່ານີ້ມີອັນໃດເປັນສະມຸຕ ຖານ?

ແມ່ນແຕ່ສະມຸຕຖານແຫ່ງສີລທີ່ເປັນກຸສົລເຫລົ່ານັ້ນ ເຮົາກໍກ່າວ ແລ້ວ ຄວນກ່າວວ່າ ມີຈິຕເປັນສະມຸຕຖານ.

ຈິຕເປັນຢ່າງໃດ?

ຈິຕກໍມີຫລາຍ ຫລາຍຢ່າງ ມີປະກາຣຕ່າງໆ ຈິຕໃດ ປາສະຈາກຣາຄະ ປາສະຈາກໂທສະ ປາສະຈາກໂມຫະ ສີລ ທີ່ເປັນກຸສົລມີຈິຕນີ້ເປັນສະມຸຕຖານ.

ດູກ່ອນຊ່າງໄມ້! ສີລທີ່ເປັນກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ ໃດ?

ແມ່ນແຕ່ຄວາມດັບແຫ່ງສີລທີ່ເປັນກຸສົລເຫລົ່ານັ້ນ ເຮົາກໍກ່າວ ແລ້ວ.

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີສິລ ແຕ່ຈະສຳເຣັຈດ້ວຍສິລຫາບໍ່ໄດ້, ຍ່ອມຮູ້ຊັດຕາມຄວາມເປັນຈິງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນເປັນທີ່ດັບບໍ່ເຫລືອແຫ່ງສິລທີ່ເປັນກຸສົລເຫລົ່ານັ້ນຂອງພິກຂຸນັ້ນດ້ວຍ.

ຜູ້ປະຕິບັຕຢ່າງໃດ ຈຶ່ງຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສິລທີ່ເປັນກຸສົລ?

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ຍັງສັນທະໃຫ້ເກີດພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອບໍ່ໃຫ້ອະກຸສົລທັມອັນເປັນບາບທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອລະອະກຸສົລທັມອັນເປັນບາບທັງຫລາຍທີ່ເກີດຂຶ້ນແລ້ວ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອໃຫ້ກຸສົລທັມທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເລືອນຫາຍ

ເພື່ອຄວາມມີຍິ່ງໆຂຶ້ນໄປ ເພື່ອຄວາມໄພບູນ ເພື່ອຄວາມຈະເຣີນ ເພື່ອຄວາມບໍຣິບູນແຫ່ງກຸສົລທັມທັງຫລາຍທີ່ເກີດຂຶ້ນແລ້ວ.

ດູກ່ອນຊ່າງໄມ້! ຜູ້ປະຕິບັຕຢ່າງນີ້ແລ ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງສີລທີ່ເປັນກຸສົລ.

## ອະກຸສົລສັງກັປປະ

ດູກ່ອນຊ່າງໄມ້! ກໍຄວາມດໍາຣິທີ່ເປັນອະກຸສົລເປັນຢ່າງໃດ? ດູກ່ອນຊ່າງໄມ້! ຄວາມດໍາຣິໃນກາມ, ຄວາມດໍາຣິໃນພະຍາບາທ, ຄວາມດໍາຣິໃນການບຽດບຽນ. ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ ຄວາມດໍາຣິທີ່ເປັນອະກຸສົລ.

ດູກ່ອນຊ່າງໄມ້! ກໍຄວາມດໍາຣິທີ່ເປັນອະກຸສົລເຫລົ່ານີ້ມີອັນໃດເປັນສະມຸຕຖານ?

ແມ່ນແຕ່ສະມຸຕຖານແຫ່ງຄວາມດໍາຣິທີ່ເປັນອະກຸສົລເຫລົ່ານັ້ນເຮົາກໍກ່າວແລ້ວ ຄວນກ່າວວ່າ ມີສັນຍາເປັນສະມຸຕຖານ.

ສັນຍາເປັນຢ່າງໃດ?

ສັນຍາກໍມີຫລາຍ ຫລາຍຢ່າງ ມີປະກາຣຕ່າງໆ ສັນຍາໃດເປັນສັນຍາໃນກາມ ເປັນສັນຍາໃນພະຍາບາທ ເປັນສັນຍາໃນກາຣບຽດບຽນ. ຄວາມດຳຣິທີ່ເປັນອະກຸສົລມີສັນຍານີ້ເປັນສະມຸຕຖານ.

ດູກ່ອນຊ່າງໄມ້! ຄວາມດຳຣິທີ່ເປັນອະກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ໃດ?

ແມ່ນແຕ່ຄວາມດັບແຫ່ງຄວາມດຳຣິທີ່ເປັນອະກຸສົລເຫລົ່ານັ້ນເຮົາກໍກ່າວແລ້ວ.

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ສງັດຈາກກາມທັງຫລາຍສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່ ເຊິ່ງເປັນທີ່ດັບບໍ່ເຫລືອແຫ່ງຄວາມດຳຣິທີ່ເປັນອະກຸສົລ.

ຜູ້ປະຕິບັຕຢ່າງໃດ ຈຶ່ງຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງຄວາມດຳຣິທີ່ເປັນອະກຸສົລ?

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອ ບໍ່ໃຫ້ອະກຸສົລທັມອັນເປັນບາບທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງ ຈິຕ ຕັ້ງຈິຕໄວ້ ເພື່ອລະອະກຸສົລທັມອັນເປັນບາບທັງຫລາຍທີ່ ເກີດຂຶ້ນແລ້ວ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງ ຈິຕ ຕັ້ງຈິຕໄວ້ ເພື່ອໃຫ້ກຸສົລທັມທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງ ຈິຕ ຕັ້ງຈິຕໄວ້ ເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເລືອນຫາຍ ເພື່ອຄວາມມີຍິ່ງໆຂຶ້ນໄປ ເພື່ອຄວາມໄພບູນ ເພື່ອຄວາມຈະ ເຣີນ ເພື່ອຄວາມບໍຣິບູນແຫ່ງກຸສົລທັມທັງຫລາຍທີ່ເກີດຂຶ້ນ ແລ້ວ.

ດູກ່ອນຊ່າງໄມ້! ຜູ້ປະຕິບັຕຢ່າງນີ້ແລ ຊື່ວ່າປະຕິບັຕເພື່ອ ຄວາມດັບແຫ່ງຄວາມດຳຣິທີ່ເປັນອະກຸສົລ.

# ກຸສົລສັງກັປປະ

ດູກ່ອນຊ່າງໄມ້! ກໍຄວາມດຳຣິທີ່ເປັນກຸສົລເປັນຢ່າງໃດ? ດູກ່ອນຊ່າງໄມ້! ຄວາມດຳຣິໃນເນກຂັມມະ, ຄວາມດຳຣິໃນການບໍ່ພະຍາບາທ, ຄວາມດຳຣິໃນການບໍ່ບຽດບຽນ. ດູກ່ອນຊ່າງໄມ້ ເຫລົ່ານີ້ຮຽກວ່າ ຄວາມດຳຣິທີ່ເປັນກຸສົລ.

ດູກ່ອນຊ່າງໄມ້! ກໍຄວາມດຳຣິທີ່ເປັນກຸສົລເຫລົ່ານີ້ມີອັນໃດເປັນສະມຸຕຖານ?

ແມ່ນແຕ່ສະມຸຕຖານແຫ່ງຄວາມດຳຣິທີ່ເປັນກຸສົລເຫລົ່ານັ້ນເຮົາກໍກ່າວແລ້ວ ຄວນກ່າວວ່າ ມີສັນຍາເປັນສະມຸຕຖານ.

ສັນຍາເປັນຢ່າງໃດ?

ສັນຍາກໍມີຫລາຍ ຫລາຍຢ່າງ ມີປະການຕ່າງໆ ສັນຍາໃດເປັນສັນຍາໃນເນກຂັມມະ ເປັນສັນຍາໃນການບໍ່ພະຍາບາທ ເປັນສັນຍາໃນການບໍ່ບຽດບຽນ. ຄວາມດຳຣິທີ່ເປັນກຸສົລມີສັນຍານີ້ເປັນສະມຸຕຖານ.

ດູກ່ອນຊ່າງໄມ້! ຄວາມດຳຣິທີ່ເປັນກຸສົລເຫລົ່ານີ້ດັບລົງໝົດສິ້ນໄປໃນທີ່ໃດ?

ແມ່ນແຕ່ຄວາມດັບແຫ່ງຄວາມດຳຣິທີ່ເປັນກຸສົລເຫລົ່ານັ້ນ ເຮົາກໍກ່າວແລ້ວ.

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ເພາະວິຕົກວິຈາຣສງົບໄປ ມີປີຕິແລະສຸຂອັນເກີດແຕ່ສະມາທິຢູ່ ເຊິ່ງເປັນທີ່ດັບບໍ່ເຫລືອແຫ່ງຄວາມດຳຣິທີ່ເປັນກຸສົລ.

ຜູ້ປະຕິບັຕຢ່າງໃດ ຈຶ່ງຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງຄວາມດຳຣິທີ່ເປັນກຸສົລ?

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ຍັງສັນທະໃຫ້ເກີດພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອບໍ່ໃຫ້ອະກຸສົລທັມອັນເປັນບາບທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອລະອະກຸສົລທັມອັນເປັນບາບທັງຫລາຍທີ່ເກີດຂຶ້ນແລ້ວ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອໃຫ້ກຸສົລທັມທັງຫລາຍທີ່ຍັງບໍ່ເກີດເກີດຂຶ້ນ.

ຍັງສັນທະໃຫ້ເກີດ ພະຍາຍາມ ປຣາຣົພຄວາມພຽນ ປະຄອງຈິຕ ຕັ້ງຈິຕໄວ້ ເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເລືອນຫາຍ ເພື່ອຄວາມມີຍິ່ງໆຂຶ້ນໄປ ເພື່ອຄວາມໄພບູນ ເພື່ອຄວາມຈະເຣີນ ເພື່ອຄວາມບໍຣິບູນແຫ່ງກຸສົລທັມທັງຫລາຍທີ່ເກີດຂຶ້ນແລ້ວ.

ດູກ່ອນຊ່າງໄມ້! ຜູ້ປະຕິບັຕຢ່າງນີ້ແລ ຊື່ວ່າປະຕິບັຕເພື່ອຄວາມດັບແຫ່ງຄວາມດຳຣິທີ່ເປັນກຸສົລ.

## ອະເສຂະທັມ ໑໐ ປະການ

ດູກ່ອນຊ່າງໄມ້! ເຮົາບັນຍັດບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການວ່າ ເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້.

ດູກ່ອນຊ່າງໄມ້! ພິກຂຸໃນທັມວິນັຍນີ້ ເປັນຜູ້ປະກອບດ້ວຍສັມມາທິຕຖິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສັງກັປປະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວາຈາອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາກັມມັນຕະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາອາຊີວະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວາຍາມະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສະຕິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສະມາທິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາຍານະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວິມຸຕອັນເປັນຂອງອະເສຂະ,

ດູກ່ອນຊ່າງໄມ້! ເຮົາບັນຍັຕບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ແລວ່າ ເປັນຜູ້ມີກຸສົລສົມບູນ ມີກຸສົລຢ່າງຍິ່ງ ເປັນສະມະນະຜູ້ເຖິງພູມປະຕິບັຕອັນອຸດົມ ບໍ່ມີໃຜຊະນະໄດ້ ດັ່ງນີ້.

ພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ຊ່າງໄມ້ປັນຈະກັງຄະກໍຍິນດີ ຊື່ນຊົມພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ມັຊຊິມະປັນນາສກ໌ ໑໓/໔໗໓-໔໗໙/໓໕໗-໓໗໗*



ພິກຂຸທັງຫລາຍ ກໍມິຈສາອາຊີວະເປັນ
ຢ່າງໃດ? ຄື:
ການຫລອກລວງ,
ການຕລົບຕະແລງ,
ການລຽບຄຽງ ຫລືການເວົ້າເປັນນັຍ,
ການໃຊ້ເລ່ກົນອຸບາຍ,
ການເອົາລາພຕໍ່ລາພ.
ພິກຂຸທັງຫລາຍ ນີ້ຄືມິຈສາອາຊີວະ.
*(ກະຕະໂນ ຈະ ພິກຂະເວ ມິຈສາອາຊີໂວ ໆ ກຸຫະນາ ລະປະນາ ເນມິຕຕະກະຕາ ນິປເປສິກະ-ຕາ ລາເພນະ ລາພັງ ນິຊິຄິງສະນະຕາ ອະຍັງ ພິກຂະເວ ມິຈສາອາຊີໂວ ໆ)*

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໑໔໙/໔໗໕*



**“And what is wrong livelihood?**
**Deceit,**
**flattery,**
**hinting,**
**and belittling,**
**and using material possessions to chase after other material possessions.**
**This is wrong livelihood.”**

Mahācattārīsakasutta MN 117
https://suttacentral.net/mn117

# Unskillful Behaviors
# Skillful Behaviors

At one time the Buddha was staying near Sāvatthī in Jeta’s Grove, Anāthapiṇḍika’s monastery.

Now at that time the wanderer Uggāhamāna Samaṇamuṇḍikāputta was residing together with **around three hundred wanderers**[3] in Mallikā’s single-halled monastery for group debates, set among the flaking pale-moon ebony

[3] around five hundred wanderers

trees *(Tena kho pana samayena uggāhamāno paribbājako samaṇamuṇḍikāputto samayappavādake tindukācīre ekasālake mallikāya ārāme paṭivasati mahatiyā paribbājakaparisāya saddhiṁ* ***pañcamattehi paribbājakasatehi****.)*

Then the master builder Pañcakaṅga left Sāvatthī in the middle of the day to see the Buddha. It occurred to him, "It's the wrong time to see the Buddha, as he's in retreat. And it's the wrong time to see the esteemed mendicants, as they're in retreat. Why don't I go to Mallikā's monastery to visit the wanderer Uggāhamāna?" So that's what he did.

Now at that time, Uggāhamāna was sitting together with a large assembly of wanderers making an uproar, a dreadful racket. They engaged in all kinds of unworthy talk, such as talk about kings, bandits, and ministers; talk about armies, threats, and wars; talk about food, drink, clothes, and beds; talk about garlands and fragrances; talk about family, vehicles, villages, towns, cities, and countries; talk about women and heroes; street talk and well talk; talk about the

departed; motley talk; tales of land and sea; and talk about being reborn in this or that state of existence.

Uggāhamāna saw Pañcakaṅga coming off in the distance, and hushed his own assembly, "Be quiet, good sirs, don't make a sound. Here comes Pañcakaṅga, a disciple of the ascetic Gotama. He is included among the white-clothed lay disciples of the ascetic Gotama, who is residing in Sāvatthī. Such venerables like the quiet, are educated to be quiet, and praise the quiet. Hopefully if he sees that our assembly is quiet, he'll see fit to approach." Then those wanderers fell silent.

Then Pañcakaṅga approached Uggāhamāna, and exchanged greetings with him. When the greetings and polite conversation were over, he sat down to one side. Uggāhamāna said to him:

"Householder, when an individual has four qualities I describe them as an invincible ascetic—accomplished in the skillful, excelling in the skillful, attained to the highest attainment.

What four? It's when they do no bad deeds with their body; speak no bad words; think no bad thoughts; and don't earn a living by bad livelihood. When an individual has these four qualities, I describe them as an invincible ascetic."

Then Pañcakaṅga neither approved nor dismissed that mendicant's statement. He got up from his seat, thinking, "I will learn the meaning of this statement from the Buddha himself."

Then he went to the Buddha, bowed, sat down to one side, and informed the Buddha of all that had been discussed.

When he had spoken, the Buddha said to him, "Master builder, if what Uggāhamāna says is true, a little baby boy is an invincible ascetic—accomplished in the skillful, excelling in the skillful, attained to the highest attainment. For a little baby doesn't even have a concept of 'a body', so how could they possibly do a bad deed with their body, apart from just wriggling? And a

little baby doesn't even have a concept of 'speech', so how could they possibly speak bad words, apart from just crying? And a little baby doesn't even have a concept of 'thought', so how could they possibly think bad thoughts, apart from just whimpering? And a little baby doesn't even have a concept of 'livelihood', so how could they possibly earn a living by bad livelihood, apart from their mother's breast? If what Uggāhamāna says is true, a little baby boy is an invincible ascetic—accomplished in the skillful, excelling in the skillful, attained to the highest attainment.

When an individual has four qualities I describe them, not as an invincible ascetic—accomplished in the skillful, excelling in the skillful, attained to the highest attainment—but as having achieved the same level as a little baby. What four? It's when they do no bad deeds with their body; speak no bad words; think no bad thoughts; and don't earn a living by bad livelihood. When an individual has these four qualities I describe

them, not as an invincible ascetic, but as having achieved the same level as a little baby.

When an individual has ten qualities, master builder, I describe them as an invincible ascetic—accomplished in the skillful, excelling in the skillful, attained to the highest attainment.

But certain things must first be understood, I say. ‘These are unskillful behaviors.’ ‘Unskillful behaviors stem from this.’ ‘Here unskillful behaviors cease without anything left over.’ ‘Someone practicing like this is practicing for the cessation of unskillful behaviors.’

‘These are skillful behaviors.’ ‘Skillful behaviors stem from this.’ ‘Here skillful behaviors cease without anything left over.’ ‘Someone practicing like this is practicing for the cessation of skillful behaviors.’

‘These are unskillful thoughts.’ ‘Unskillful thoughts stem from this.’ ‘Here unskillful thoughts cease without anything left over.’

'Someone practicing like this is practicing for the cessation of unskillful thoughts.'

'These are skillful thoughts.' 'Skillful thoughts stem from this.' 'Here skillful thoughts cease without anything left over.' 'Someone practicing like this is practicing for the cessation of skillful thoughts.'

And what, master builder, are unskillful behaviors? **Unskillful deeds by way of body and speech, and bad livelihood.** These are called unskillful behaviors.

And where do these unskillful behaviors stem from? Where they stem from has been stated. You should say that they stem from the mind. What mind? The mind takes many and diverse forms. But unskillful behaviors stem from a mind that has greed, hate, and delusion.

And where do these unskillful behaviors cease without anything left over? Their cessation has also been stated. It's when a mendicant gives up

bad conduct by way of body, speech, and mind, and develops good conduct by way of body, speech, and mind; they give up wrong livelihood and earn a living by right livelihood. This is where these unskillful behaviors cease without anything left over.

And how is someone practicing for the cessation of unskillful behaviors? It's when a mendicant generates enthusiasm, tries, makes an effort, exerts the mind, and strives so that bad, unskillful qualities don't arise. They generate enthusiasm, try, make an effort, exert the mind, and strive so that bad, unskillful qualities that have arisen are given up. They generate enthusiasm, try, make an effort, exert the mind, and strive so that skillful qualities arise. They generate enthusiasm, try, make an effort, exert the mind, and strive so that skillful qualities that have arisen remain, are not lost, but increase, mature, and are completed by development. Someone practicing like this is practicing for the cessation of unskillful behaviors.

And what are skillful behaviors? **Skillful deeds by way of body and speech, and purified livelihood are included in behavior, I say.** These are called skillful behaviors.

And where do these skillful behaviors stem from? Where they stem from has been stated. You should say that they stem from the mind. What mind? The mind takes many and diverse forms. But skillful behaviors stem from a mind that is free from greed, hate, and delusion.

And where do these skillful behaviors cease without anything left over? Their cessation has also been stated. It's when a mendicant behaves ethically, but they don't identify with their ethical behavior. And they truly understand the freedom of heart and freedom by wisdom where these skillful behaviors cease without anything left over.

And how is someone practicing for the cessation of skillful behaviors? It's when a mendicant generates enthusiasm, tries, makes an effort,

exerts the mind, and strives so that bad, unskillful qualities don't arise … so that unskillful qualities are given up … so that skillful qualities arise … so that skillful qualities that have arisen remain, are not lost, but increase, mature, and are fulfilled by development. Someone practicing like this is practicing for the cessation of skillful behaviors.

And what are unskillful thoughts? Thoughts of sensuality, of malice, and of cruelty. These are called unskillful thoughts.

And where do these unskillful thoughts stem from? Where they stem from has been stated. You should say that they stem from perception. What perception? Perception takes many and diverse forms. Perceptions of sensuality, malice, and cruelty—unskillful thoughts stem from this.

And where do these unskillful thoughts cease without anything left over? Their cessation has also been stated. It's when a mendicant, quite secluded from sensual pleasures, secluded from unskillful qualities, enters and remains in the first

absorption, which has the rapture and bliss born of seclusion, while placing the mind and keeping it connected. This is where these unskillful thoughts cease without anything left over.

And how is someone practicing for the cessation of unskillful thoughts? It’s when a mendicant generates enthusiasm, tries, makes an effort, exerts the mind, and strives so that bad, unskillful qualities don’t arise … so that unskillful qualities are given up … so that skillful qualities arise … so that skillful qualities that have arisen remain, are not lost, but increase, mature, and are fulfilled by development. Someone practicing like this is practicing for the cessation of unskillful thoughts.

And what are skillful thoughts? Thoughts of renunciation, good will, and harmlessness. These are called skillful thoughts.

And where do these skillful thoughts stem from? Where they stem from has been stated. You should say that they stem from perception. What perception? Perception takes many and diverse

forms. Perceptions of renunciation, good will, and harmlessness—skillful thoughts stem from this.

And where do these skillful thoughts cease without anything left over? Their cessation has also been stated. It's when, as the placing of the mind and keeping it connected are stilled, a mendicant enters and remains in the second absorption, which has the rapture and bliss born of immersion, with internal clarity and confidence, and unified mind, without placing the mind and keeping it connected. This is where these skillful thoughts cease without anything left over.

And how is someone practicing for the cessation of skillful thoughts? It's when a mendicant generates enthusiasm, tries, makes an effort, exerts the mind, and strives so that bad, unskillful qualities don't arise … so that unskillful qualities are given up … so that skillful qualities arise … so that skillful qualities that have arisen remain, are not lost, but increase, mature, and are fulfilled

by development. Someone practicing like this is practicing for the cessation of skillful thoughts.

Master builder, when an individual has what ten qualities do I describe them as an invincible ascetic—accomplished in the skillful, excelling in the skillful, attained to the highest attainment? It’s when a mendicant has an adept’s right view, right thought, right speech, right action, right livelihood, right effort, right mindfulness, right immersion, right knowledge, and right freedom. When an individual has these ten qualities, I describe them as an invincible ascetic—accomplished in the skillful, excelling in the skillful, attained to the highest attainment.”

That is what the Buddha said. Satisfied, Pañcakaṅga the master builder was happy with what the Buddha said.

Samaṇamuṇḍikasutta MN 78 https://suttacentral.net/mn78
Translated by Bhikkhu Sujato



# ສີລ ພຣົຕ ຊີວິຕ ພຣົມມະຈັນຍ໌

ຄັ້ງນັ້ນແລ ທ່ານພຣະອານົນທ໌ໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສຖາມວ່າ:

**ອານົນທ໌! ສີລ ພຣົຕ ຊີວິຕ ພຣົມມະຈັນຍ໌ ເຊິ່ງມີການບໍາຣຸງດີ ມີຜົລທຸກຢ່າງໄປຫລື?**

ທ່ານພຣະອານົນທ໌ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໃນບັນຫາຂໍ້ນີ້ ບໍ່ຄວນແກ້ແຕ່ແງ່ດຽວ.

ອານົນທ໌! ຖ້າເຊັ່ນນັ້ນ ຈົ່ງຈຳແນກໄປ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກໍເມື່ອບຸຄຄົລເສພສີລ ພຣົຕ ຊີວິຕ ພຣົມມະຈັນຍ໌ ເຊິ່ງມີກາຣບຳຣຸງດີ ອະກຸສົລທັມຈະເຣີນຫລາຍຍິ່ງຂຶ້ນ ກຸສົລທັມເສື່ອມໄປ, ສີລ ພຣົຕ ຊີວິຕ ພຣົມມະຈັນຍ໌ ເຊິ່ງມີກາຣບຳຣຸງດີເຫັນປານນີ້ນັ້ນບໍ່ມີຜົລ, ແຕ່ເມື່ອບຸຄຄົລເສພສີລ ພຣົຕ ຊີວິຕ ພຣົມມະຈັນຍ໌ ເຊິ່ງມີກາຣບຳຣຸງດີ ອະກຸສົລທັມເສື່ອມໄປ ກຸສົລທັມຈະເຣີນຫລາຍຍິ່ງຂຶ້ນ, ສີລ ພຣົຕ ຊີວິຕ ພຣົມມະຈັນຍ໌ ເຊິ່ງມີກາຣບຳຣຸງດີເຫັນປານນີ້ນັ້ນມີຜົລ.

ທ່ານພຣະອານົນທ໌ໄດ້ກຣາບທູລທັມປະຣິຍາຍນີ້ແລ້ວ ພຣະຜູ້ມີພຣະພາຄຊົງພໍພຣະທັຍ. ລຳດັບນັ້ນແລ ທ່ານພຣະອານົນທ໌ຄິດວ່າ ພຣະສາສດາຊົງພໍພຣະທັຍເຮົາ ຈຶ່ງລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວຫລີກໄປ.

ລຳດັບນັ້ນແລ ເມື່ອທ່ານພຣະອານົນທ໌ຫລີກໄປໄດ້ບໍ່ນານ ພຣະຜູ້ມີພຣະພາຄໄດ້ຕຣັສກັບພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ! ອານົນທ໌ຍັງເປັນພຣະເສຂະ ແຕ່ຈະຫາຜູ້ທີ່ສະເໝີເຂົາທາງປັນຍາບໍ່ໄດ້ງ່າຍເລີຍ.**

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໔໑໓-໔໑໔/໕໑໗*



# ຊານຸສະໂສນິພຣາມນ໌ທູລຖາມເຖິງ ພຣົມມະຈັນຍ໌ທີ່ຂາດ ທະລຸ ດ່າງ ພ້ອຍ

ຄັ້ງນັ້ນແລ ຊານຸສະໂສນິພຣາມນ໌ໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ ແມ່ນແຕ່ພຣະໂຄດົມກໍຊົງປະຕິຍານວ່າເປັນພຣົມມະຈາຣີຫລື?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ພຣາມນ໌! ບຸຄຄົລເມື່ອຈະກ່າວໂດຍຊອບ ຄວນກ່າວຜູ້ໃດວ່າ ປະພຶຕພຣົມມະຈັນຍ໌ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ບໍຣິສຸທ ບໍຣິບູນ ບຸຄຄົລນັ້ນເມື່ອຈະກ່າວໂດຍຊອບ ຄວນກ່າວເຮົານັ້ນແລ ເພາະເຮົາປະພຶຕພຣົມມະຈັນຍ໌ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ບໍຣິສຸທ ບໍຣິບູນເຕັມທີ່.

ຂ້າແຕ່ທ່ານພຣະໂຄດົມ! ກໍອັນໃດຊື່ວ່າ ຂາດ ທະລຸ ດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌?

ພຣາມນ໌! ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ ແຕ່ຍັງຍິນດີການຂັດສີ ລູບໄລ້ ໃຫ້ອາບນ້ຳ ແລະນວດຟັ້ນຂອງມາຕຸຄາມ, ພໍໃຈ ຊອບໃຈ ເຖິງຄວາມປື້ມໃຈດ້ວຍການບຳເຣີນັ້ນ ຂໍ້ນີ້ຊື່ວ່າ ຂາດ ທະລຸ ດ່າງ ພ້ອຍແຫ່ງພຣົມມະຈັນຍ໌. ພຣາມນ໌ ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງໂຍຄ *(ເມຖຸເນນະ ສັນໂຍ-ເຄນະ)* ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ ແລະບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນ້ຳ ແລະນວດຟັ້ນຂອງມາຕຸຄາມ ແຕ່ຍັງກະຊິກກະຊີ້ ຫລິ້ນຫົວ ສັບໝາກກອກກັບມາຕຸຄາມ ພໍໃຈ ຊອບໃຈ ເຖິງຄວາມປື້ມໃຈດ້ວຍການເສສອນນັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດທະລຸ ດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມນ໌ ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ, ບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນ້ຳ ແລະນວດຟັ້ນຂອງມາຕຸຄາມ ແລະບໍ່ກະຊິກກະຊີ້ ຫລິ້ນຫົວ ສັບໝາກກອກກັບມາຕຸຄາມ ແຕ່ເພັ່ງເບິ່ງ ຈ້ອງເບິ່ງຈັກຂຸຂອງມາຕຸຄາມດ້ວຍຈັກຂຸຂອງຕົນ ພໍໃຈ ຊອບໃຈ ເຖິງຄວາມປື້ມໃຈດ້ວຍການເລັງແລນັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດທະລຸ ດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມນ໌ ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງ

ໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ, ບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນ້ຳ ແລະນວດຟັ້ນຂອງມາຕຸຄາມ, ບໍ່ກະຊິກກະຊີ້ ຫລິ້ນຫົວ ສັບໝາກກອກກັບມາຕຸຄາມ ແລະບໍ່ເພັ່ງເບິ່ງ ຈ້ອງເບິ່ງຈັກຂຸຂອງມາຕຸຄາມດ້ວຍຈັກຂຸຂອງຕົນ ແຕ່ໄດ້ຟັງສຽງມາຕຸຄາມຫົວຢູ່ກໍດີ ເວົ້າຢູ່ກໍດີ ຂັບຮ້ອງຢູ່ກໍດີ ຮ້ອງໄຫ້ຢູ່ກໍດີ ຂ້າງນອກຝາກໍດີ ຂ້າງນອກກຳແພງກໍດີ ພໍໃຈ ຊອບໃຈ ເຖິງຄວາມປື້ມໃຈດ້ວຍສຽງນັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດ ທະລຸດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມນ໌ ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມ

ຄວາມເປັນຄູ່ໆກັບມາຕຸຄາມ, ບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນໍ້າ ແລະນວດຟັ້ນຂອງມາຕຸຄາມ, ບໍ່ກະຊິກກະຊີ້ ຫລິ້ນຫົວ ສັບໝາກາກອກກັບມາຕຸຄາມ, ບໍ່ເພັ່ງເບິ່ງ ຈ້ອງເບິ່ງຈັກຂຸຂອງມາຕຸຄາມດ້ວຍຈັກຂຸຂອງຕົນ ແລະບໍ່ໄດ້ຟັງສຽງມາຕຸຄາມຫົວຢູ່ກໍດີ ເວົ້າຢູ່ກໍດີ ຂັບຮ້ອງຢູ່ກໍດີ ຮ້ອງໄຫ້ຢູ່ກໍດີ ຂ້າງນອກຝາກໍດີ ຂ້າງນອກກໍາແພງກໍດີ ແຕ່ຕາມຣະນຶກເຖິງການຫົວການເວົ້າ ການຫລິ້ນຫົວກັບມາຕຸຄາມໃນກາລກ່ອນ ພໍໃຈຊອບໃຈ ເຖິງຄວາມປື້ມໃຈດ້ວຍອາການນັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດ ທະລຸ ດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມນ໌ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ, ບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນໍ້າ ແລະນວດຟັ້ນຂອງມາຕຸຄາມ, ບໍ່ກະຊິກກະຊີ້ ຫລິ້ນຫົວ ສັບໝາກາກອກກັບມາຕຸຄາມ, ບໍ່ເພັ່ງເບິ່ງ ຈ້ອງເບິ່ງຈັກຂຸຂອງມາຕຸຄາມດ້ວຍຈັກຂຸຂອງຕົນ, ບໍ່ໄດ້ຟັງສຽງມາຕຸຄາມຫົວຢູ່ກໍດີ ເວົ້າຢູ່ກໍດີ ຂັບຮ້ອງຢູ່ກໍດີ ຮ້ອງໄຫ້ຢູ່ກໍດີ ຂ້າງນອກຝາກໍ

ດີ ຂ້າງນອກກຳແພງກໍດີ ແລະບໍ່ໄດ້ຕາມຣະນຶກເຖິງການຫົວ ການເວົ້າ ການຫລິ້ນຫົວກັບມາຕຸຄາມໃນກາລກ່ອນ ແຕ່ໄດ້ເຫັນຄະຫະບໍດີກໍດີ ບຸຕຂອງຄະຫະບໍດີກໍດີ ຜູ້ອີ່ມເອີບພັ່ງພ້ອມດ້ວຍກາມຄຸນ ໕ ບຳເຣີຕົນຢູ່ ພໍໃຈ ຊອບໃຈ ເຖິງຄວາມປີ້ມໃຈດ້ວຍການບຳເຣີນັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດ ທະລຸ ດ່າງພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມນ໌ ຜູ້ນີ້ເຮົາກ່າວວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນໄປຈາກທຸກຂ໌ໄດ້.

ພຣາມນ໌! ອີກປະການໜຶ່ງ ສະມະນະຫລືພຣາມນ໌ບາງຄົນໃນໂລກນີ້ ປະຕິຍານວ່າເປັນພຣົມມະຈາຣີໂດຍຊອບ ບໍ່ຮ່ວມຄວາມເປັນຄູ່ໆກັບມາຕຸຄາມ, ບໍ່ຍິນດີການຂັດສີ ລູບໄລ້ ໃຫ້ອາບນ້ຳ ແລະນວດຟັ້ນຂອງມາຕຸຄາມ, ບໍ່ກະຊິກກະຊີ້ ຫລິ້ນຫົວ ສັບໝາກາອກກັບມາຕຸຄາມ, ບໍ່ເພັ່ງເບິ່ງ ຈ້ອງເບິ່ງຈັກຂຸຂອງມາຕຸຄາມດ້ວຍຈັກຂຸຂອງຕົນ, ບໍ່ໄດ້ຟັງສຽງມາຕຸຄາມຫົວຢູ່ກໍດີ ເວົ້າຢູ່ກໍດີ ຂັບຮ້ອງຢູ່ກໍດີ ຮ້ອງໄຫ້ຢູ່ກໍດີ ຂ້າງນອກຝາກໍດີ ຂ້າງນອກກຳແພງກໍດີ, ບໍ່ໄດ້ຕາມຣະນຶກເຖິງການຫົວ ການເວົ້າ ການຫລິ້ນຫົວກັບມາຕຸຄາມໃນກາລກ່ອນ ແລະບໍ່ໄດ້ເຫັນຄະຫະບໍດີກໍດີ ບຸຕຂອງຄະຫະບໍດີກໍດີ ຜູ້ອີ່ມເອີບພັ່ງພ້ອມດ້ວຍ

ກາມຄຸນ ໕ ບຳເຣີຕົນຢູ່ ແຕ່ປະພຶຕພຣົມມະຈັນຍ໌ໂດຍຕັ້ງ ປາຖນາເພື່ອເປັນເທພພະເຈົ້າຫລືເທວະດາອົງຄ໌ໃດອົງຄ໌ໜຶ່ງວ່າ ເຮົາຈະໄດ້ເປັນເທພພະເຈົ້າຫລືເທວະດາອົງຄ໌ໃດອົງຄ໌ໜຶ່ງດ້ວຍ ສີລ ພຣົຕ ຕະບະ ຫລືພຣົມມະຈັນຍ໌ນີ້ ພໍໃຈ ຊອບໃຈ ເຖິງ ຄວາມປື້ມໃຈດ້ວຍຄວາມປາຖນານັ້ນ ແມ່ນແຕ່ຂໍ້ນີ້ກໍຊື່ວ່າ ຂາດ ທະລຸ ດ່າງ ພ້ອຍ ແຫ່ງພຣົມມະຈັນຍ໌. ພຣາມມ໌ ຜູ້ນີ້ເຮົາກ່າວ ວ່າ ປະພຶຕພຣົມມະຈັນຍ໌ບໍ່ບໍຣິສຸທ ປະກອບດ້ວຍເມຖຸນສັງ ໂຍຄ ຍ່ອມບໍ່ພົ້ນໄປຈາກຊາຕ ຊະຣາ ມະຣະນະ ໂສກະ ປະຣິ ເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເຮົາກ່າວວ່າ ຍ່ອມບໍ່ພົ້ນ ໄປຈາກທຸກຂ໌ໄດ້.

ພຣາມມ໌! ຕາບໃດທີ່ເຮົາຍັງພິຈາຣະນາເຫັນເມຖຸນສັງໂຍຄ ໗ ປະກາຣນີ້ ຢ່າງໃດຢ່າງໜຶ່ງວ່າ ຍັງລະບໍ່ໄດ້ໃນຕົນ ພຽງໃດ, ເຮົາກໍຍັງບໍ່ປະຕິຍານວ່າ ເປັນຜູ້ຕຣັສຮູ້ອະນຸຕຕະຣະສັມມາ ສັມໂພທິຍານໃນໂລກ ພ້ອມທັງເທວະໂລກ ມາຣໂລກ ພຣົມ ມະໂລກ ໃນໝູ່ສັຕພ້ອມທັງສະມະນະພຣາມມ໌ ເທວະດາແລະ ມະນຸສພຽງນັ້ນ ແຕ່ເມື່ອໃດ ເຮົາບໍ່ພິຈາຣະນາເຫັນເມຖຸນສັງ ໂຍຄ ໗ ປະກາຣນີ້ ຢ່າງໃດຢ່າງໜຶ່ງວ່າ ຍັງລະບໍ່ໄດ້ໃນຕົນ ເມື່ອນັ້ນ ເຮົາຈຶ່ງປະຕິຍານວ່າ ເປັນຜູ້ຕຣັສຮູ້ອະນຸຕຕະຣະ ສັມມາສັມໂພທິຍານໃນໂລກ ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກ ໃນໝູ່ສັຕພ້ອມທັງສະມະນະພຣາມມ໌ ເທວະດາ

ແລະມະນຸສ. ກໍຍານທັສສະນະເກີດຂຶ້ນແກ່ເຮົາວ່າ ວິມຸຕຂອງເຮົາບໍ່ກຳເຮີບ ຊາຕນີ້ເປັນຊາຕສຸດທ້າຍ ບັດນີ້ພົພໃໝ່ບໍ່ມີອີກ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ຊານຸສະໂສນີພຣາມນ໌ໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ, ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະໂຄດົມຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງທ່ານພຣະໂຄດົມ ພຣະທັມ ແລະພຣະພິກຂຸສົງຄ໌ວ່າ ເປັນສະຣະນະ ຂໍທ່ານພຣະໂຄດົມໂປດຊົງຈຳຂ້ານ້ອຍໄວ້ວ່າ ເປັນອຸປາສົກຜູ້ເຖິງສະຣະນະຕລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*

*໒໓/໕໐-໕໒/໕໗*



# ທຸສະສີລະສູຕ

ພິກຂຸທັງຫລາຍ! ສັມມາສະມາທິຂອງພິກຂຸຜູ້ທຸສີລ ມີສີລວິບັຕ ແລ້ວ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ, ເມື່ອສັມມາ ສະມາທິບໍ່ມີ ຍະຖາພູຕະຍານທັສສະນະຂອງພິກຂຸຜູ້ມີສັມມາ ສະມາທິວິບັຕ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ, ເມື່ອ ຍະຖາພູຕະຍານທັສສະນະບໍ່ມີ ນິພພິທາແລະວິຣາຄະຂອງ ພິກຂຸຜູ້ມີຍະຖາພູຕະຍານທັສສະນະວິບັຕ ຍ່ອມເປັນທັມມີອຸປະ ນິສັຍຂາດແລ້ວ, ເມື່ອນິພພິທາແລະວິຣາຄະບໍ່ມີ ວິມຸຕຕິ ຍານທັສສະນະຂອງພິກຂຸຜູ້ມີນິພພິທາແລະວິຣາຄະວິບັຕ ຍ່ອມ ເປັນທັມມີອຸປະນິສັຍຂາດແລ້ວ.

ພິກຂຸທັງຫລາຍ! ຕົ້ນໄມ້ທີ່ມີກິ່ງແລະໃບວິບັຕແລ້ວ ແມ່ນແຕ່ສະເກັດຂອງຕົ້ນໄມ້ນັ້ນ ກໍບໍ່ເຖິງຄວາມບໍຣິບູນ, ແມ່ນແຕ່ເປືອກຂອງຕົ້ນໄມ້ນັ້ນ ກໍບໍ່ເຖິງຄວາມບໍຣິບູນ, ແມ່ນແຕ່ມອກຂອງຕົ້ນໄມ້ນັ້ນ ກໍບໍ່ເຖິງຄວາມບໍຣິບູນ, ແມ່ນແຕ່ແກ່ນຂອງຕົ້ນໄມ້ນັ້ນ ກໍບໍ່ເຖິງຄວາມບໍຣິບູນ ສັນໃດ, ພິກຂຸທັງຫລາຍ ສັນນັ້ນເໝືອນກັນແລ ສັມມາສະມາທິຂອງພິກຂຸຜູ້ທຸສີລ ມີສີລວິບັຕແລ້ວ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ, ເມື່ອສັມມາສະມາທິບໍ່ມີ ຍະຖາພູຕະຍານທັສສະນະຂອງພິກຂຸຜູ້ມີສັມມາສະມາທິວິບັຕ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ, ເມື່ອຍະຖາພູຕະຍານທັສສະນະບໍ່ມີ ນິພພິທາແລະວິຣາຄະຂອງພິກຂຸຜູ້ມີຍະຖາພູຕະຍານທັສສະນະວິບັຕ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ, ເມື່ອນິພພິທາແລະວິຣາຄະບໍ່ມີ ວິມຸຕຕິຍານທັສສະນະຂອງພິກຂຸຜູ້ມີນິພພິທາແລະວິຣາຄະວິບັຕ ຍ່ອມເປັນທັມມີອຸປະນິສັຍຂາດແລ້ວ.

ພິກຂຸທັງຫລາຍ! ສັມມາສະມາທິຂອງພິກຂຸຜູ້ມີສີລ ເຖິງພ້ອມດ້ວຍສີລ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອສັມມາສະມາທິມີຢູ່ ຍະຖາພູຕະຍານທັສສະນະຂອງພິກຂຸຜູ້ເຖິງພ້ອມດ້ວຍສັມມາສະມາທິ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອຍະຖາພູຕະຍານທັສສະນະມີຢູ່ ນິພພິທາແລະວິຣາຄະຂອງພິກຂຸຜູ້ເຖິງພ້ອມດ້ວຍຍະຖາພູຕະຍານທັສສະນະ

ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອນິພພິທາແລະວິຣາຄະມີຢູ່ ວິມຸຕຕິຍານທັສສະນະຂອງພິກຂຸຜູ້ເຖິງພ້ອມດ້ວຍນິພພິທາແລະວິຣາຄະ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ.

ພິກຂຸທັງຫລາຍ! ຕົ້ນໄມ້ທີ່ມີກິ່ງແລະໃບບໍຣິບູນ ແມ່ນແຕ່ສະເກັດຂອງຕົ້ນໄມ້ນັ້ນ ກໍເຖິງຄວາມບໍຣິບູນ, ແມ່ນແຕ່ເປືອກຂອງຕົ້ນໄມ້ນັ້ນ ກໍເຖິງຄວາມບໍຣິບູນ, ແມ່ນແຕ່ມອກຂອງຕົ້ນໄມ້ນັ້ນ ກໍເຖິງຄວາມບໍຣິບູນ, ແມ່ນແຕ່ແກ່ນຂອງຕົ້ນໄມ້ນັ້ນ ກໍເຖິງຄວາມບໍຣິບູນ ສັນໃດ, ພິກຂຸທັງຫລາຍ ສັນນັ້ນເໝືອນກັນແລ ສັມມາສະມາທິຂອງພິກຂຸຜູ້ມີສີລ ເຖິງພ້ອມດ້ວຍສີລ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອສັມມາສະມາທິມີຢູ່ ຍະຖາພູຕະຍານທັສສະນະຂອງພິກຂຸຜູ້ເຖິງພ້ອມດ້ວຍສັມມາສະມາທິ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອຍະຖາພູຕະຍານທັສສະນະມີຢູ່ ນິພພິທາແລະວິຣາຄະຂອງພິກຂຸຜູ້ເຖິງພ້ອມດ້ວຍຍະຖາພູຕະຍານທັສສະນະ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ, ເມື່ອນິພພິທາແລະວິຣາຄະມີຢູ່ ວິມຸຕຕິຍານທັສສະນະຂອງພິກຂຸຜູ້ເຖິງພ້ອມດ້ວຍນິພພິທາແລະວິຣາຄະ ຍ່ອມເປັນທັມທີ່ເຖິງພ້ອມດ້ວຍອຸປະນິສັຍ.

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໗-໒໐/໒໔*



# ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ແລະອານິສົງສ໌ແຫ່ງສີລສົມບັຕຂອງ ບຸຄຄົລຜູ້ເຖິງພ້ອມດ້ວຍສີລ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນແຄວ້ນມະຄົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໄດ້ສະເດັຈເຖິງປາຕະລິຄາມ ອຸປາສົກຊາວບ້ານປາຕະລິຄາມໄດ້ສະດັບຂ່າວວ່າ ພຣະຜູ້ມີພຣະພາຄສະເດັຈຈາຣິກມາໃນແຄວ້ນມະຄົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໄດ້ສະເດັຈເຖິງປາຕະລິຄາມແລ້ວ ລຳດັບນັ້ນ ອຸປາສົກຊາວປາຕະລິຄາມພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລະໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຊົງຮັບເຮືອນສໍາລັບພັກຂອງພວກຂ້ານ້ອຍທັງຫລາຍເຖີດ ພຣະຜູ້ມີພຣະພາຄຊົງຮັບໂດຍດຸສນີພາບ. ລໍາດັບນັ້ນ ອຸປາສົກຊາວປາຕະລິຄາມ ຊາບວ່າພຣະຜູ້ມີພຣະພາຄຊົງຮັບແລ້ວ ກໍລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ເດີນວຽນຂວາ ແລ້ວເຂົ້າໄປຍັງເຮືອນສໍາລັບພັກ ຄັນແລ້ວກໍປູສາດ ປູອາສະນະຕັ້ງໝໍ້ນໍ້າແລະປະທີບນໍ້າມັນແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ສະແດງຄວາມນອບນ້ອມແລ້ວໄດ້ຢືນຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ເຮືອນສໍາລັບພັກ ພວກຂ້ານ້ອຍທັງຫລາຍປູສາດ ປູອາສະນະ ຕັ້ງໝໍ້ນໍ້າ ແລະປະທີບນໍ້າມັນແລ້ວ ບັດນີ້ ຂໍພຣະຜູ້ມີພຣະພາຄຊົງສໍາຄັນກາລອັນຄວນເຖີດ.

ຄັ້ງນັ້ນ ເປັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງນຸ່ງແລ້ວ ຊົງຖືບາຕແລະຈີວອຣສະເດັຈໄປຍັງເຮືອນສໍາລັບພັກ ພ້ອມດ້ວຍພິກຂຸສົງຄ໌ ຄັນແລ້ວຊົງລ້າງພຣະບາທ ສະເດັຈເຂົ້າໄປຍັງເຮືອນສໍາລັບພັກ ປະທັບນັ່ງອີງເສົາກາງ ຜິນພຣະພັກໄປທາງທິສບູຣະພາ ແມ່ນແຕ່ພິກຂຸສົງຄ໌ເມື່ອລ້າງປາທາແລ້ວ ກໍເຂົ້າໄປຍັງເຮືອນສໍາລັບພັກ ນັ່ງອີງຝາດ້ານຫລັງ ຜິນໜ້າໄປທາງທິສບູຣະພາ*(ທິສຕາເວັນອອກ)* ນັ່ງແວດລ້ອມພຣະຜູ້ມີພຣະພາຄຢູ່ສ່ວນອຸປາສົກຊາວປາຕະລິຄາມກໍລ້າງເທົ້າແລ້ວເຂົ້າໄປຍັງ

ເຮືອນສຳລັບພັກ ນັ່ງອີງຝາດ້ານໜ້າ ຜິນໜ້າໄປທາງທິສຕາເວັນຕົກ ແວດລ້ອມພຣະຜູ້ມີພຣະພາຄຢູ່. ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສກັບອຸປາສົກຊາວປາຕະລິຄາມວ່າ:

ຄະຫະບໍດີທັງຫລາຍ! ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ໕ ປະການນີ້; ໕ ປະການເປັນຢ່າງໃດ?

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕໃນໂລກນີ້ ຍ່ອມເຂົ້າເຖິງຄວາມເສື່ອມແຫ່ງໂພຄະຊັພຍ໌ອັນໃຫຍ່ຫລວງ ເພາະເຫຕແຫ່ງຄວາມປະມາທ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະການທີ ໑.

ຄະຫະບໍດີທັງຫລາຍ! ອີກປະການໜຶ່ງ, ກິຕຕິສັທອັນຕ່ຳຊາມຂອງບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕຍ່ອມຟຸ້ງຂະຈອນໄປ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະການທີ ໒.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ເຂົ້າໄປຫາບໍຣິສັທໃດຄື ຂັຕຕິຍະບໍຣິສັທ ພຣາມມະນະບໍຣິສັທ ຄະຫະບໍດີບໍຣິສັທ ສະມະນະບໍຣິສັທ ຍ່ອມເປັນຜູ້ບໍ່ອາດຫານ ເກີ້ເຂີນ

ເມື່ອເຂົ້າໄປຫາບໍຣິສັທນັ້ນໆ. ຄະຫະບໍດີທັງຫລາຍ ນີ້ເປັນໂທສ ແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໓.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ຍ່ອມເປັນ ຜູ້ຫລົງທຳກາລະ*(ຫລົງສະຕິໃນເວລາຕາຍ)*. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໔.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ເມື່ອແຕກ ກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸ ສີລປະກາຣທີ ໕.

ຄະຫະບໍດີທັງຫລາຍ! ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ໕ ປະກາຣນີ້ແລ.

ຄະຫະບໍດີທັງຫລາຍ! ອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ ມີສີລ ໕ ປະກາຣນີ້; ໕ ປະກາຣເປັນຢ່າງໃດ?

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລໃນ ໂລກນີ້ ຍ່ອມໄດ້ມາເຊິ່ງໂພຄະຊັພຍ໌ອັນໃຫຍ່ຫລວງເພາະເຫຕ

ແຫ່ງຄວາມບໍ່ປະມາທ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະກາຣທີ ໑.

ຄະຫະບໍດີທັງຫລາຍ! ອີກປະກາຣໜຶ່ງ, ກິຕຕິສັທອັນງາມຂອງບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລ ຍ່ອມແຜ່ຂະຈອນໄປ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະກາຣທີ ໘.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລເຂົ້າໄປຫາບໍຣິສັທໃດເຊັ່ນ ຂັຕຕິຍະບໍຣິສັທ ພຣາມມະນະບໍຣິສັທ ຄະຫະບໍດີບໍຣິສັທ ສະມະນະບໍຣິສັທ ຍ່ອມເປັນຜູ້ອາດຫານ ບໍ່ເກີ້ເຂີນເມື່ອເຂົ້າໄປຫາບໍຣິສັທນັ້ນໆ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະກາຣທີ ໓.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລຍ່ອມເປັນຜູ້ບໍ່ຫລົງທຳກາລະ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະກາຣທີ ໔.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະກາຣທີ ໕.

ຄະຫະບໍດີທັງຫລາຍ! ອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລ ໕ ປະກາຣນີ້ແລ.

ລຳດັບນັ້ນແລ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ອຸປາສົກຊາວປາຕະລິຄາມເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງດ້ວຍທັມມີກະຖາສິ້ນຣາຕຣີເປັນອັນມາກ ແລ້ວຊົງສົ່ງໄປດ້ວຍພຣະດຳຣັສວ່າ **ຄະຫະບໍດີທັງຫລາຍ ຣາຕຣີລ່ວງໄປແລ້ວ ທ່ານທັງຫລາຍຈົ່ງສຳຄັນເວລາອັນຄວນໃນບັດນີ້ເຖີດ.**

ລຳດັບນັ້ນ ອຸປາສົກຊາວປາຕະລິຄາມທັງຫລາຍຊື່ນຊົມຍິນດີພາສິຕຂອງພຣະຜູ້ມີພຣະພາຄ ລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວຫລີກໄປ. ລຳດັບນັ້ນ ເມື່ອອຸປາສົກຊາວປາຕະລິຄາມຫລີກໄປແລ້ວບໍ່ນານພຣະຜູ້ມີພຣະພາຄໄດ້ສະເດັຈເຂົ້າໄປຍັງສຸນຍາຄາຣ.

---

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະປົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໑໔໙-໑໕໐/໑໖໙-໑໗໑*



**“Bad friendship hinders ethical conduct”**

Iṭṭhadhammasutta AN 10.73
https://suttacentral.net/an10.73


“Good friendship nourishes ethical conduct”
Iṭṭhadhammasutta AN 10.73
https://suttacentral.net/an10.73

# ຄວາມເປັນຜູ້ມີມິດຊົ່ວ ເປັນອັນຕຣາຍຕໍ່ສີລ ຄວາມເປັນຜູ້ມີມິດດີ ເປັນອາຫາຣຂອງສີລ

ພິກຂຸທັງຫລາຍ! ທັມ ໑໐ ປະກາຣນີ້ ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ, ໑໐ ປະກາຣເປັນຢ່າງໃດ?

**ໂພຄະສົມບັດ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ວັນນະ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ຄວາມບໍ່ມີໂຣຄ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ສີລ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ພຣົມມະຈັນຍ໌** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ມິຕ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ຄວາມເປັນພະຫູສູຕ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ປັນຍາ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ທັມມ໌** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

**ສວັນ** ເປັນທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

ພິກຂຸທັງຫລາຍ! ທັມ ໑໐ ປະການນີ້ແລ ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

ພິກຂຸທັງຫລາຍ! ທັມ ໑໐ ປະການນີ້ ເປັນອັນຕຣາຍຕໍ່ທັມ ໑໐ ປະການ ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກຄື:

ຄວາມກຽດຄ້ານ ຄວາມບໍ່ຂະຫຍັນໝັ່ນພຽນ ເປັນອັນຕຣາຍຕໍ່ໂພຄະສົມບັຕ.

ການບໍ່ປະດັບຕົກແຕ່ງ ເປັນອັນຕຣາຍຕໍ່ວັນນະ.

ການກະທຳສິ່ງທີ່ບໍ່ເປັນສັປປາຍະ ເປັນອັນຕຣາຍຕໍ່ຄວາມບໍ່ມີໂຣຄ.

**ຄວາມເປັນຜູ້ມີມິຕຊົ່ວ ເປັນອັນຕຣາຍຕໍ່ສີລ.**

ຄວາມບໍ່ສັງຮວມອິນຊີ ເປັນອັນຕຣາຍຕໍ່ພຣົມມະຈັນຍ໌.

ການແກ້ງກ່າວໃຫ້ຄາດເຄື່ອນຈາກຄວາມຈິງ ເປັນອັນຕຣາຍຕໍ່ມິຕ.

ການບໍ່ທຳການສາທະຍາຍ ເປັນອັນຕຣາຍຕໍ່ຄວາມເປັນພະຫູສູຕ.

ການບໍ່ຟັງດ້ວຍດີ ການບໍ່ສອບຖາມ ເປັນອັນຕຣາຍຕໍ່ປັນຍາ.

ການບໍ່ປະກອບຄວາມພຽນ ການບໍ່ພິຈາຣະນາ ເປັນອັນຕຣາຍຕໍ່ທັມ.

ການປະຕິບັຕຜິດ ເປັນອັນຕຣາຍຕໍ່ສວັນ.

ພິກຂຸທັງຫລາຍ! ທັມ ໑໐ ປະການນີ້ແລ ເປັນອັນຕຣາຍຕໍ່ທັມ ໑໐ ປະການ ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

ພິກຂຸທັງຫລາຍ! ທັມ ໑໐ ປະການນີ້ ເປັນອາຫານຂອງທັມ ໑໐ ປະການ ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກ ໃນໂລກຄື:

ຄວາມຂະຫຍັນໝັ່ນພຽນ ຄວາມບໍ່ກຽດຄ້ານ ເປັນອາຫານຂອງ ໂພຄະສົມບັດ.

ການປະດັບຕົກແຕ່ງ ເປັນອາຫານຂອງວັນນະ.

ການກະທຳສິ່ງທີ່ເປັນສັປປາຍະ ເປັນອາຫານຂອງຄວາມບໍ່ ມີໂຣຄ.

**ຄວາມເປັນຜູ້ມີມິຕຄີ ເປັນອາຫານຂອງສີລ.**

ຄວາມສັງຮວມອິນຊີ ເປັນອາຫານຂອງພຣົມມະຈັນຍ໌.

ການບໍ່ແກ້ງກ່າວໃຫ້ຄາດເຄື່ອນຈາກຄວາມຈິງ ເປັນອາຫານ ຂອງມິຕ.

ການທຳການສາທະຍາຍ ເປັນອາຫານຂອງຄວາມເປັນພະຫູ ສູຕ.

ການຟັງດ້ວຍດີ ການສອບຖາມ ເປັນອາຫານຂອງປັນຍາ.

ການປະກອບຄວາມພຽນ ການພິຈາລະນາ ເປັນອາຫານຂອງທັມ.

ການປະຕິບັຕຊອບ ເປັນອາຫານຂອງສວັນ.

ພິກຂຸທັງຫລາຍ! ທັມ ໑໐ ປະການນີ້ແລ ເປັນອາຫານຂອງທັມ ໑໐ ປະການ ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຫາໄດ້ຍາກໃນໂລກ.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ*
*ສະບັບມະຫາຈຸລາ ໒໔/໑໗໐/໗໘*



# ນັນທະນະເທວະບຸຕທູລຖາມພຣະຜູ້ມີພຣະພາຄ

ນັນທະນະເທວະບຸຕຢືນໃນທີ່ຄວນສ່ວນຂ້າງໜຶ່ງແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄດ້ວຍຄາຖາວ່າ:

ຂ້າແຕ່ພຣະໂຄຕົມຜູ້ມີປັນຍາກວ້າງຂວາງ! ຂ້ານ້ອຍຂໍທູລຖາມພຣະອົງຄ໌ເຖິງຍານທັສສະນະອັນບໍ່ວຽນກັບຂອງພຣະຜູ້ມີພຣະພາຄ:

ບັນດິຕທັງຫລາຍຮຽກບຸຄຄົລຊະນິດໃດວ່າ ເປັນຜູ້ມີສີລ?
ຮຽກບຸຄຄົລຊະນິດໃດວ່າ ເປັນຜູ້ມີປັນຍາ?
ບຸຄຄົລຊະນິດໃດລ່ວງທຸກຂ໌ໄດ້ແລ້ວ?
ເທວະດາທັງຫລາຍບູຊາບຸຄຄົລເຊັ່ນໃດ?
ພຣະຜູ້ມີພຣະພາຄຕຣັສຕອບວ່າ:

**ບຸຄຄົລໃດ ມີສີລ ມີປັນຍາ ມີຕົນອົບຮົມແລ້ວ ມີຈິຕຕັ້ງໝັ້ນ ຍິນດີໃນຊານ ມີສະຕິ ເຂົາປາສະຈາກຄວາມໂສກທັງປວງ ລະໄດ້ຂາດ ມີອາສະວະທັງຫລາຍສິ້ນແລ້ວ ຊົງໄວ້ເຊິ່ງ ສະຣີຣະອັນມີໃນທີ່ສຸດ,**
**ບັນດິຕທັງຫລາຍຮຽກບຸຄຄົລນັ້ນວ່າ ເປັນຜູ້ມີສີລ,**
**ຮຽກບຸຄຄົລນັ້ນວ່າ ເປັນຜູ້ມີປັນຍາ,**
**ບຸຄຄົລຊະນິດນັ້ນລ່ວງທຸກຂ໌ໄດ້ແລ້ວ,**
**ເທວະດາທັງຫລາຍບູຊາບຸຄຄົລເຊັ່ນນັ້ນ.**

---

*ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/ຜຜ-ຜ໗/໔໕໗-໔໕໙*



# ຈັນທະນະເທວະບຸຕທູລຖາມພຣະຜູ້ມີພຣະພາຄ

ຈັນທະນະເທວະບຸຕຢືນໃນທີ່ຄວນສ່ວນຂ້າງໜຶ່ງແລ້ວ
ໄດ້ກຣາບທູລພຣະຜູ້ມີພຣະພາຄດ້ວຍຄາຖາວ່າ:

ບຸຄຄົລຜູ້ບໍ່ກຽດຄ້ານທັງກາງເວັນແລະກາງຄືນຈະຂ້າມໂອຄະ
ໄດ້ຢ່າງໃດ?

ໃຜຈະບໍ່ຈົມໃນຫ້ວງນ້ຳເລິກ ອັນບໍ່ມີທີ່ເພິ່ງພາ ບໍ່ມີທີ່ຢຶດໜ່ຽວ?
ພຣະຜູ້ມີພຣະພາຄຕຣັສຕອບວ່າ:

**ບຸຄຄົລຜູ້ສົມບູນດ້ວຍສີລ ໃນກາລທຸກເມື່ອ ມີປັນຍາ ມີໃຈຕັ້ງໝັ້ນດີແລ້ວ ປຣາຣົພຄວາມພຽນ ມີຕົນສົ່ງໄປແລ້ວ ຍ່ອມຂ້າມໂອຄະທີ່ຂ້າມໄດ້ຍາກ ເຂົາເວັ້ນຂາດແລ້ວຈາກການສັນຍາລ່ວງຮູປສັນໂຍຊນ໌ໄດ້ ມີພົພອັນເປັນທີ່ເພີດເພີນສິ້ນໄປແລ້ວ ຍ່ອມບໍ່ຈົມໃນຫ້ວງນ້ຳເລິກ.**

---

*ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໖໖-໖໗/໔໕໗-໔໕໙*

“ບຸຄຄົລຜູ້ສົມບູນດ້ວຍສີລ ໃນກາລທຸກເມື່ອ ມີປັນຍາ ມີໃຈຕັ້ງໝັ້ນດີແລ້ວ ປຣາຣົພຄວາມພຽນ ມີຕົນສົ່ງໄປແລ້ວ ຍ່ອມຂ້າມໂອຄະທີ່ຂ້າມໄດ້ຍາກ ເຂົາເວັ້ນຂາດແລ້ວຈາກກາມສັນຍາ ລ່ວງຮູປສັນໂຍຊນ໌ໄດ້ ມີພົພອັນເປັນທີ່ເພີດເພີນສິ້ນໄປແລ້ວ ຍ່ອມບໍ່ຈົມໃນຫ້ວງນ້ຳເລິກ.”

ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໓໓-໓໗/໔໕໙-໔໕໒



# ອຸຄຄະຄະຫະບໍດີຊາວເມືອງເວສາລີ ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ ອັນບໍ່ເຄີຍມີມາ ໘ ປະການ

*ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ກູຕາຄາຣະສາລາ ປ່າມະຫາວັນ ໃກ້ນະຄອຣເວສາລີ ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍວ່າ* ***ພິກຂຸທັງຫລາຍ*** *ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:*

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງຊົງຈຳອຸຄຄະຄະຫະບໍດີຊາວເມືອງເວສາລີວ່າ ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໘ ປະການ.**

ພຣະຜູ້ມີພຣະພາຄຜູ້ສຸຄົຕຄັນໄດ້ຕຣັສພຣະດຳຣັສນີ້ແລ້ວ ສະເດັຈລຸກຈາກອາສະນະເຂົ້າໄປສູ່ວິຫາຣ.

ຄັ້ງນັ້ນ ເປັນເວລາເຊົ້າ ພິກຂຸອົງຄ໌ໜຶ່ງນຸ່ງແລ້ວ ຖືບາຕແລະຈີວອຣເຂົ້າໄປສູ່ນິເວສຂອງອຸຄຄະຄະຫະບໍດີຊາວເມືອງເວສາລີ ຄັນແລ້ວຈຶ່ງນັ່ງເທິງອາສະນະທີ່ເຂົາປູໄວ້ ລຳດັບນັ້ນ ອຸຄຄະຄະຫະບໍດີຊາວເມືອງເວສາລີໄດ້ເຂົ້າໄປຫາພິກຂຸນັ້ນ ໄຫວ້ແລ້ວກໍນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວ ພິກຂຸນັ້ນໄດ້ກ່າວກັບອຸຄຄະຄະຫະບໍດີຊາວເມືອງເວສາລີວ່າ:

ຄະຫະບໍດີ! ພຣະຜູ້ມີພຣະພາຄຊົງພະຍາກອນທ່ານວ່າ ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໘ ປະກາຣ.

ຄະຫະບໍດີ! ທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໘ ປະກາຣເປັນຢ່າງໃດ?

ອຸຄຄະຄະຫະບໍດີກ່າວວ່າ ຂ້າແຕ່ທ່ານຜູ້ຈະເຣີນ ຂ້ານ້ອຍກໍບໍ່ຊາບເລີຍວ່າ ພຣະຜູ້ມີພຣະພາຄຊົງພະຍາກອນຂ້ານ້ອຍວ່າເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໘ ປະກາຣວ່າເປັນແນວໃດ, ແຕ່ຂໍທ່ານໄດ້ໂປດຟັງທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໘ ປະກາຣຂອງຂ້ານ້ອຍທີ່ມີຢູ່ ຈົ່ງ

ໃສ່ໃຈໃຫ້ດີ ຂ້ານ້ອຍຈັກກ່າວຖວາຍ ພິກຂຸນັ້ນຮັບຄຳອຸຄຄະຄະຫະບໍດີຊາວເມືອງເວສາລີແລ້ວ ອຸຄຄະຄະຫະບໍດີຊາວເມືອງເວສາລີໄດ້ກ່າວວ່າ:

ຂ້າແຕ່ທ່ານຜູ້ຈະເຣີນ! ໃນຄາວທີ່ຂ້ານ້ອຍໄດ້ເຫັນພຣະຜູ້ມີພຣະພາຄແຕ່ໄກເປັນຄັ້ງທຳອິດ ດ້ວຍການເຫັນນັ້ນເອງ ຈິຕຂອງຂ້ານ້ອຍເຫລື້ອມໃສໃນພຣະຜູ້ມີພຣະພາຄ ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະການທີ ໑ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍມີຈິຕເຫລື້ອມໃສແລ້ວ ເຂົ້າໄປນັ່ງໃກ້ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄໄດ້ຊົງສະແດງອະນຸປຸພພິກະຖາໂປດຂ້ານ້ອຍ ຄື ຊົງສະແດງທານກະຖາ, ສີລກະຖາ, ສັຄຄະກະຖາ, ໂທສຂອງກາມອັນຕ່ຳຊາມເສົ້າໝອງ *(ກາມານັງ ອາທີນະວັງ ໂອກາຣັງ ສັງກິເລສັງ)* ແລະອານິສົງສ໌ໃນເນກຂັມມະ *(ເນກຂັມເມ ອານິສັງສັງ)*. ໃນຄາວທີ່ພຣະຜູ້ມີພຣະພາຄໄດ້ຊົງຊາບຂ້ານ້ອຍວ່າ ມີຈິຕຄວນ ອ່ອນ ປາສະຈາກນິວອຣນ໌ ເບີກບານ ຜ່ອງໃສແລ້ວ ຈຶ່ງຊົງປະກາສສາມຸກັງສິກາທັມມະເທສະນາຂອງພຣະພຸທທະເຈົ້າທັງຫລາຍ *(ພຸທທານັງ ສາມຸກກັງສິກາ ທັມມະເທສະນາ ຕັງ ປະກາເສສິ)* ຄື ທຸກຂ໌ ສະມຸທັຍ ນິໂຣທ ມັຄຄ໌ ປຽບເໝືອນຜ້າທີ່ບໍຣິສຸທບໍ່ໝົ່ນໝອງ ຍ່ອມຈະ

ຮັບນ້ຳຍ້ອມໄດ້ດີ ສັນໃດ; ທັມມະຈັກຂຸອັນປາສະຈາກທຸລີ ປາສະຈາກມົນທິນ ເກີດຂຶ້ນແກ່ຂ້ານ້ອຍໃນທີ່ນັ້ນແລວ່າ **ສິ່ງໃດສິ່ງໜຶ່ງມີຄວາມເກີດຂຶ້ນເປັນທັມມະດາ ສິ່ງນັ້ນທັງມວນຍ່ອມມີຄວາມດັບໄປເປັນທັມມະດາ** *(ຍັງກິນຈິ ສະມຸທະຍະທັມມັງ ສັພພັນຕັງ ນິໂຣທະທັມມັນຕິ)* ສັນນັ້ນເໝືອນກັນ.

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຢັ່ງລົງໃນທັມແລ້ວ *(ປະຣິໂຍຄາລຫະທັມໂມ)* ປາສະຈາກຄວາມເຄືອບແຄງສົງໃສແລ້ວ *(ຕິນນະວິຈິກິຈໂສ)* ເຖິງຄວາມແກ້ວກ້າແລ້ວ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ເຖິງພຣະພຸທທະເຈົ້າ ພຣະທັມ ພຣະສົງຄ໌ວ່າເປັນສະຣະນະແລ້ວ **ແລະສະມາທານສິກຂາບົທອັນມີພຣົມມະຈັນຍ໌ເປັນທີ ໕ ແລ້ວ** ໃນທີ່ນັ້ນແລ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະກາຣທີ ໔ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍມີປະຊາບໍດີທີ່ຍັງສາວຢູ່ ໔ ຄົນ ຂ້ານ້ອຍໄດ້ເຂົ້າໄປຫາປະຊາບໍດີເຫລົ່ານັ້ນແລ້ວ ໄດ້ກ່າວກັບນາງວ່າ:

ນ້ອງຍິງທັງຫລາຍ! ຂ້າພະເຈົ້າໄດ້ສະມາທານສິກຂາບົທມີພຣົມມະຈັນຍ໌ເປັນທີ ໕ ຜູ້ໃດປາຖນາ ຜູ້ນັ້ນຈົ່ງໃຊ້ໂພຄະຊັພຍ໌ເຫລົ່ານີ້ແລະກະທຳບຸນຍ໌ໄດ້ ຫລືຈະກັບໄປສູ່ຕະກຸນຍາຕຂອງຕົນກໍໄດ້ ຫລືປະສົງຊາຍອື່ນ ຂ້າພະເຈົ້າກໍຈະມອບໃຫ້ແກ່ເຂົາ. ເມື່ອຂ້ານ້ອຍກ່າວຢ່າງນີ້ແລ້ວ ປະຊາບໍດີຄົນທຳອິດໄດ້ເວົ້າກັບຂ້ານ້ອຍຢ່າງນີ້ວ່າ ຂໍທ່ານໄດ້ກະຣຸນາມອບນ້ອງໃຫ້ແກ່ຊາຍຊື່ນີ້ເຖີດ, ຂ້ານ້ອຍກໍໃຫ້ເຊີນຊາຍຜູ້ນັ້ນມາ ເອົາມືຊ້າຍຈັບປະຊາບໍດີ ມືຂວາຈັບນ້ຳເຕົ້າ ຫລັ່ງນ້ຳມອບໃຫ້ແກ່ຊາຍຄົນນັ້ນ. ເມື່ອບໍຣິຈາຄປະຊາບໍດີສາວເປັນທານ ຂ້ານ້ອຍບໍ່ຮູ້ສຶກວ່າມີຈິຕປ່ຽນແປງເປັນຢ່າງອື່ນເລີຍ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະການທີ ៣ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ໃນຕະກຸນຂອງຂ້ານ້ອຍມີໂພຄະຊັພຍ໌ຢູ່ຫລາຍ ແລະໂພຄະຊັພຍ໌ເຫລົ່ານັ້ນ ຂ້ານ້ອຍແຈກຈ່າຍທົ່ວໄປເຖິງຜູ້ມີສີລ ມີກັລຍານະທັມ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະການທີ ໔ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍເຂົ້າໄປຫາພິກຂຸອົງຄ໌ໃດຂ້ານ້ອຍກໍເຂົ້າໄປຫາດ້ວຍຄວາມເຄົາຣົພແທ້ໆ ບໍ່ແມ່ນເຂົ້າໄປຫາດ້ວຍຄວາມບໍ່ເຄົາຣົພ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະການທີ ໕ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ຫາກທ່ານຜູ້ມີອາຍຸນັ້ນສະແດງທັມແກ່ຂ້ານ້ອຍ ຂ້ານ້ອຍກໍຟັງດ້ວຍຄວາມເຄົາຣົພແທ້ໆ ບໍ່ແມ່ນຟັງດ້ວຍຄວາມບໍ່ເຄົາຣົພ. ຫາກທ່ານຜູ້ມີອາຍຸນັ້ນບໍ່ສະແດງທັມແກ່ຂ້ານ້ອຍ ຂ້ານ້ອຍກໍສະແດງທັມແກ່ທ່ານນັ້ນ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະກາຣທີ ๖ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ບໍ່ໜ້າອັຈສະຈັນຍ໌ທີ່ເທວະດາທັງຫລາຍເຂົ້າມາຫາຂ້ານ້ອຍ ແລ້ວບອກວ່າ ດູກ່ອນຄະຫະບໍດີ ທັມອັນພຣະຜູ້ມີພຣະພາຄຕຣັສດີແລ້ວ ເມື່ອເທວະດາທັງຫລາຍກ່າວຢ່າງນີ້ແລ້ວ ຂ້ານ້ອຍຈຶ່ງເວົ້າກັບເທວະດາເຫລົ່ານັ້ນຢ່າງນີ້ວ່າ ທ່ານທັງຫລາຍຈະບອກຢ່າງນີ້ ຫລືບໍ່ບອກຢ່າງນີ້ກໍຕາມ ແທ້ຈິງແລ້ວ ທັມກໍເປັນທັມທີ່ພຣະຜູ້ມີພຣະພາຄຕຣັສດີແລ້ວ ຂ້ານ້ອຍບໍ່ຮູ້ສຶກເລີຍວ່າ ຄວາມຟູໃຈຈະມີມາແຕ່ເຫຕນັ້ນ ຂໍ້ທີ່ເທວະດາທັງຫລາຍມາຫາຂ້ານ້ອຍ ຫລືຂ້ານ້ອຍໄດ້ປຣາສັຍກັບເທວະດາທັງຫລາຍ ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະກາຣທີ ๗ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ຂ້ານ້ອຍບໍ່ພິຈາຣະນາເຫັນສັງໂຍຊນ໌ໃດໆໃນໂອຣັມພາຄິຍະສັງໂຍຊນ໌ ๕ ທີ່ພຣະຜູ້ມີພຣະພາຄຊົງ

ສະແດງແລ້ວນັ້ນວ່າ ຍັງລະບໍ່ໄດ້ໃນຕົນ. ນີ້ແລເປັນທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາປະການທີ ๘ ຂອງຂ້ານ້ອຍທີ່ມີຢູ່.

ຂ້າແຕ່ທ່ານຜູ້ຈະເຣີນ! ທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ๘ ປະການຂອງຂ້ານ້ອຍທີ່ມີຢູ່ຢ່າງນີ້ແລ. ຂ້ານ້ອຍກໍບໍ່ຊາບເລີຍວ່າ ພຣະຜູ້ມີພຣະພາຄຊົງພະຍາກອນຂ້ານ້ອຍວ່າເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ๘ ປະການວ່າເປັນແນວໃດ.

ລຳດັບນັ້ນ, ພິກຂຸນັ້ນຮັບບິນທະບາຕໃນນິເວສຂອງອຸຄຄະຄະຫະບໍດີຊາວເມືອງເວສາລີແລ້ວ ລຸກຈາກອາສະນະແລ້ວຫລີກໄປ ພາຍຫລັງພັຕ*(ພາຍຫລັງສັນອາຫາຣແລ້ວ)* ກັບຈາກບິນທະບາຕແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຄຳສົນທະນາປຣາສັຍກັບອຸຄຄະຄະຫະບໍດີຊາວເມືອງເວສາລີທັງໝົດແດ່ພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຕຣັສວ່າ:

**ພິກຂຸ! ຖືກແລ້ວ ຖືກແລ້ວ ອຸຄຄະຄະຫະບໍດີຊາວເມືອງເວສາລີ ເມື່ອຈະພະຍາກອນ ຈົ່ງພະຍາກອນຕາມນັ້ນໂດຍຊອບ.**

ພິກຂຸ! ເຮົາພະຍາກອນອຸຄຄະຄະຫະບໍດີວ່າ ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໗ ປະການນີ້ແລ ແລະພວກເຈົ້າທັງຫລາຍຈົ່ງຊົງຈຳອຸຄຄະຄະຫະບໍດີຊາວເມືອງເວສາລີວ່າ ເປັນຜູ້ປະກອບດ້ວຍທັມທີ່ໜ້າອັຈສະຈັນຍ໌ອັນບໍ່ເຄີຍມີມາ ໗ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*
*໔໓/໑໗໐-໑໗໔/໑໑໑*



# ກິ່ນຫອມທວນລົມ

ຄັ້ງນັ້ນແລ ທ່ານພຣະອານົນທ໌ໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວ ໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກິ່ນຫອມ ໓ ຢ່າງນີ້ ຟຸ້ງໄປຕາມລົມຢ່າງດຽວ ຟຸ້ງໄປທວນລົມບໍ່ໄດ້. ກິ່ນຫອມ ໓ ຢ່າງນັ້ນເປັນຢ່າງໃດ? ຄື ກິ່ນທີ່ຮາກ, ກິ່ນທີ່ແກ່ນ, ກິ່ນທີ່ດອກ, ກິ່ນຫອມ ໓ ຢ່າງນີ້ແລ ຟຸ້ງໄປຕາມລົມຢ່າງດຽວ ຟຸ້ງໄປທວນລົມບໍ່ໄດ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກິ່ນຫອມທີ່ຟຸ້ງໄປຕາມລົມກໍໄດ້ ຟຸ້ງໄປທວນລົມກໍໄດ້ ຟຸ້ງໄປທັງຕາມລົມແລະທວນລົມກໍໄດ້ ມີຢູ່ຫລືໜໍ?

ອານົນທ໌! ກິ່ນຫອມທີ່ຟຸ້ງໄປຕາມລົມກໍໄດ້ ຟຸ້ງໄປທວນລົມກໍໄດ້ ຟຸ້ງໄປທັງຕາມລົມແລະທວນລົມກໍໄດ້ມີຢູ່.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກິ່ນຫອມທີ່ຟຸ້ງໄປຕາມລົມກໍໄດ້ ຟຸ້ງໄປທວນລົມກໍໄດ້ ຟຸ້ງໄປທັງຕາມລົມແລະທວນລົມກໍໄດ້ເປັນຢ່າງໃດ?

ອານົນທ໌! ສະຕຣີຫລືບຸຣຸສໃນບ້ານຫລືນິຄົມໃດໃນໂລກນີ້ ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ເວັ້ນຂາດຈາກການຂ້າສັຕ, ເວັ້ນຂາດຈາກການລັກຊັພຍ໌, ເວັ້ນຂາດຈາກການປະພຶຕຜິດໃນການທັງຫລາຍ, ເວັ້ນຂາດຈາກການເວົ້າຕົວະ, ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສີລ, ມີກັລຍານະທັມ, ມີໃຈປາສະຈາກມັຈສະຣິຍະອັນເປັນມົລທິນ ມີຈາຄະອັນສະລະແລ້ວ ມີຝາມືອັນຊຸ່ມ ຍິນດີໃນການສະລະ ຄວນແກ່ການຂໍ ຍິນດີໃນທານແລະການແຈກຈ່າຍທານ ຢູ່ຄອງເຮືອນ ສະມະນະຫລືພຣາມນ໌ທຸກທິສຍ່ອມ

ກ່າວສັນລະເສີນຄຸນຂອງເຂົາວ່າ ສະຕຣີຫລືບຸຣຸສໃນບ້ານຫລືນິຄົມແຫ່ງນັ້ນ ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ເວັ້ນຂາດຈາກການຂ້າສັຕ, ເວັ້ນຂາດຈາກການລັກຊັພຍ໌, ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ, ເວັ້ນຂາດຈາກການເວົ້າຕົວະ, ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສີລ, ມີກັລຍານະທັມ, ມີໃຈປາສະຈາກມັຈສະຣິຍະອັນເປັນມົລທິນ ມີຈາຄະອັນສະລະແລ້ວ ມີຝາມືອັນຊຸ່ມ ຍິນດີໃນການສະລະ ຄວນແກ່ການຂໍ ຍິນດີໃນທານແລະການແຈກຈ່າຍທານ ຢູ່ຄອງເຮືອນ.

ແມ່ນແຕ່ເທວະດາທັງຫລາຍກໍກ່າວສັນລະເສີນຄຸນຂອງເຂົາວ່າ ສະຕຣີຫລືບຸຣຸສໃນບ້ານຫລືນິຄົມແຫ່ງນັ້ນ ເຖິງພຣະພຸທທະເຈົ້າເປັນສະຣະນະ ເຖິງພຣະທັມເປັນສະຣະນະ ເຖິງພຣະສົງຄ໌ເປັນສະຣະນະ ເວັ້ນຂາດຈາກການຂ້າສັຕ, ເວັ້ນຂາດຈາກການລັກຊັພຍ໌, ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ, ເວັ້ນຂາດຈາກການເວົ້າຕົວະ, ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສີລ, ມີກັລຍານະທັມ, ມີໃຈປາສະຈາກມັຈສະຣິຍະອັນເປັນມົລທິນ ມີຈາຄະອັນສະລະແລ້ວ ມີຝາມືອັນຊຸ່ມ ຍິນດີໃນການສະລະ

ຄວນແກ່ການຂໍ ຍິນດີໃນທານແລະການແຈກຈ່າຍທານ ຢູ່ຄອງເຮືອນ.

ອານົນທ໌! ກິ່ນຫອມນີ້ແລ ຟຸ້ງໄປຕາມລົມກໍໄດ້ ຟຸ້ງໄປທວນລົມກໍໄດ້ ຟຸ້ງໄປທັງຕາມລົມແລະທວນລົມກໍໄດ້.

**ກິ່ນດອກໄມ້ຟຸ້ງທວນລົມໄປບໍ່ໄດ້ ກິ່ນຈັນທ໌ ກິ່ນກິດສນາ ຫລືກິ່ນມັລລິກາກໍຟຸ້ງທວນລົມໄປບໍ່ໄດ້ ສ່ວນກິ່ນຂອງສັປບຸຣຸສຍ່ອມຟຸ້ງທວນລົມໄປໄດ້ ເພາະສັປບຸຣຸສຟຸ້ງໄປທຸກທິສ.**

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກນິບາຕ ໔໐/໔໑໔-໔໑໕/໕໑໙*



# ຄຸນແຫ່ງການສັນອາຫານຄັ້ງດຽວ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫານເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອນ ສາວັຕຖີ ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສກັບພິກຂຸ ທັງຫລາຍວ່າ:

**ພິກຂຸທັງຫລາຍ! ເຮົາສັນອາຫານຄັ້ງດຽວ ເມື່ອເຮົາສັນອາຫານ ຄັ້ງດຽວ ຍ່ອມຮູ້ສຶກເຖິງຄຸນ ຄືຄວາມເປັນຜູ້ມີອາພາທໜ້ອຍ ມີໂຣຄເບົາບາງ ກາຍເບົາ ມີກຳລັງ ແລະມີຄວາມເປັນຢູ່ຜາ ສຸກ.**

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງສັນອາຫາຣຄັ້ງດຽວເຖີດ ເມື່ອພວກເຈົ້າທັງຫລາຍສັນອາຫາຣຄັ້ງດຽວ ຍ່ອມຮູ້ສຶກເຖິງຄຸນ ຄືຄວາມເປັນຜູ້ມີອາພາທໜ້ອຍ ມີໂຣຄເບົາບາງ ກາຍເບົາ ມີກຳລັງ ແລະມີຄວາມເປັນຢູ່ຜາສຸກ.**

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ທ່ານພຣະພັທທາລິໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍບໍ່ສາມາດຈະສັນອາຫາຣຄັ້ງດຽວໄດ້ ເພາະເມື່ອຂ້ານ້ອຍສັນອາຫາຣຄັ້ງດຽວ ຈະມີຄວາມກະວົນກະວາຍ ແລະມີຄວາມເດືອດຮ້ອນ.

ພັທທາລິ! ຖ້າຢ່າງນັ້ນ ເຈົ້າຮັບນິມົນໃນທີ່ໃດແລ້ວ ຈົ່ງສັນໃນທີ່ນັ້ນເສຍສ່ວນໜຶ່ງ ແລ້ວນຳສ່ວນໜຶ່ງມາສັນອີກກໍໄດ້ ເມື່ອເຈົ້າສັນໄດ້ຢ່າງນີ້ ກໍຈັກຍັງຊີວິຕໃຫ້ເປັນໄປໄດ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍບໍ່ສາມາດຈະສັນແມ່ນແຕ່ດ້ວຍອາກາຣຢ່າງນັ້ນໄດ້ ເພາະເມື່ອຂ້ານ້ອຍສັນແມ່ນແຕ່ດ້ວຍອາກາຣຢ່າງນັ້ນ ຈະມີຄວາມກະວົນກະວາຍ ແລະມີຄວາມເດືອດຮ້ອນ.

ຄັ້ງນັ້ນແລ ທ່ານພຣະພັທທາລິໄດ້ປະກາສຄວາມບໍ່ສາມາດໃນ (ກາຣຮັກສາ)ສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສິກສາຢູ່. ຕັ້ງແຕ່ນັ້ນມາ ທ່ານພຣະພັທທາລິບໍ່ກ້າປະເຊີນພຣະພັກພຣະຜູ້ມີພຣະພາຄ ຕລອດ ໓ ເດືອນເຕັມ ເໝືອນພິກຂຸອື່ນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ສມັຍນັ້ນ ພິກຂຸຈຳນວນຫລາຍຊ່ວຍກັນກະທຳຈີວອຣກັມ ສຳລັບພຣະຜູ້ມີພຣະພາຄ ດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະພາຄ ມີຈີວອຣສຳເຣັຈແລ້ວ ຈັກສະເດັຈທ່ຽວຈາຣິກໄປໂດຍລ່ວງໄຕຣມາສນັ້ນ.

ຄັ້ງນັ້ນ ທ່ານພຣະພັທທາລິເຂົ້າໄປຫາພິກຂຸເຫລົ່ານັ້ນເຖິງທີ່ຢູ່ ໄດ້ສົນທະນາປຣາສັຍກັບພິກຂຸເຫລົ່ານັ້ນແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພິກຂຸເຫລົ່ານັ້ນໄດ້ກ່າວກັບທ່ານພຣະພັທທາລິວ່າ:

ອາວຸໂສພັທທາລິ! ພິກຂຸທັງຫລາຍຊ່ວຍກັນກະທຳຈີວອຣກັມນີ້ ສຳລັບພຣະຜູ້ມີພຣະພາຄ ດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະພາຄ

ມີຈີວອຣສຳເຣັຈແລ້ວ ຈັກສະເດັຈທ່ຽວຈາຣິກໄປໂດຍລ່ວງໄຕຣມາສນັ້ນ.

ອາວຸໂສພັທທາລິ! ເຮົາຂໍເຕືອນ ທ່ານຈົ່ງມະນະສິການຄວາມຜິດນີ້ໃຫ້ດີເຖີດ. ການກະທຳທີ່ຍາກກວ່າຢ່າໄດ້ມີແກ່ທ່ານໃນພາຍຫລັງເລີຍ.

ທ່ານພຣະພັທທາລິຮັບຄຳຂອງພິກຂຸເຫລົ່ານັ້ນແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໂທສໄດ້ຄອບງຳຂ້ານ້ອຍແລ້ວ ຜູ້ເປັນຄົນພາລ ຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສິກສາຢູ່ ຂໍພຣະຜູ້ມີພຣະພາຄຊົງຮັບຊາບໂທສຂອງຂ້ານ້ອຍນັ້ນໂດຍຄວາມເປັນໂທສ ເພື່ອຄວາມສັງຣວມຣະວັງຕໍ່ໄປເຖີດ ພຣະອົງຄ໌ຜູ້ຈະເຣີນ.

ພຣະຜູ້ມີພຣະພາຄຕຣັສວ່າ:

ພັທທາລິ! ເປັນຄວາມຈິງ ໂທສໄດ້ຄອບງໍາເຈົ້າແລ້ວຜູ້ເປັນຄົນພາລ ເປັນຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ເຮົາບັນຍັດໄວ້ ໃນເມື່ອພິກຂຸສົງຄ໌ກໍາລັງສະມາທານສຶກສາຢູ່.

ພັທທາລິ! ເຈົ້າບໍ່ສໍານຶກແມ່ນແຕ່ເຫຕທີ່ວ່າ ພຣະຜູ້ມີພຣະພາຄປະທັບຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ພຣະຜູ້ມີພຣະພາຄກໍຊົງຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທໍາໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ເຈົ້າບໍ່ສໍານຶກແມ່ນແຕ່ເຫຕທີ່ວ່າ ພິກຂຸຈໍານວນຫລາຍເຂົ້າຈໍາພັນສາຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ພິກຂຸເຫລົ່ານັ້ນກໍຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທໍາໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ເຈົ້າບໍ່ສໍານຶກແມ່ນແຕ່ເຫຕທີ່ວ່າ ພິກຂຸນີຈໍານວນຫລາຍເຂົ້າຈໍາພັນສາຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ພິກຂຸນີເຫລົ່ານັ້ນກໍຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທໍາໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ເຈົ້າບໍ່ສຳນຶກແມ່ນແຕ່ເຫດທີ່ວ່າ ອຸປາສົກຈຳນວນຫລາຍອາສັຍຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ອຸປາສົກເຫລົ່ານັ້ນກໍຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ເຈົ້າບໍ່ສຳນຶກແມ່ນແຕ່ເຫດທີ່ວ່າ ອຸປາສິກາຈຳນວນຫລາຍອາສັຍຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ອຸປາສິກາເຫລົ່ານັ້ນກໍຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ເຈົ້າບໍ່ສຳນຶກແມ່ນແຕ່ເຫດທີ່ວ່າ ສະມະນະພຣາມນ໌ຕ່າງລັທທິຈຳນວນຫລາຍເຂົ້າຈຳພັນສາຢູ່ໃນນະຄອຣສາວັຕຖີ ແມ່ນແຕ່ສະມະນະພຣາມນ໌ເຫລົ່ານັ້ນກໍຮູ້ຈັກເຮົາວ່າ ພິກຂຸຊື່ພັທທາລິເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໂທສໄດ້ຄອບງຳຂ້ານ້ອຍແລ້ວ ຜູ້ເປັນຄົນພາລ ຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສຶກສາຢູ່ ຂໍພຣະຜູ້ມີພຣະພາຄ

ຊົງຮັບຊາບໂທສຂອງຂ້ານ້ອຍນັ້ນໂດຍຄວາມເປັນໂທສ ເພື່ອຄວາມສັງຣວມຣະວັງຕໍ່ໄປເຖີດ ພຣະອົງຄ໌ຜູ້ຈະເຣີນ.

ພັທທາລີ! ເປັນຄວາມຈິງ ໂທສໄດ້ຄອບງຳເຈົ້າແລ້ວຜູ້ເປັນຄົນພາລ ເປັນຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ເຮົາບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສຶກສາຢູ່.

ພັທທາລີ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ (ເໝືອນຢ່າງວ່າ) ພິກຂຸໃນທັມວິນັຍນີ້ ເປັນອຸພະໂຕພາຄະວິມຸຕ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມດັ່ງນີ້, ພິກຂຸນັ້ນຈະກ້າວໄປຕາມ ຫລືນ້ອມກາຍໄປທາງອື່ນຫລືຈະປະຕິເສດ?

ບໍ່ເລີຍ*(ບໍ່ນ້ອມກາຍໄປທາງອື່ນ ບໍ່ປະຕິເສດເລີຍ)* ພຣະອົງຄ໌ຜູ້ຈະເຣີນ!

ພັທທາລີ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມວິນັຍນີ້ ເປັນປັນຍາວິມຸຕ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມ
ວິນັຍນີ້ ເປັນກາຍສັກຂີ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາ
ເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວ
ໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມ
ວິນັຍນີ້ ເປັນທິຕຖິປັຕຕະ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາ
ເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວ
ໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມ
ວິນັຍນີ້ ເປັນສັທທາວິມຸຕ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາ
ເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວ
ໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມ ວິນັຍນີ້ ເປັນທັມມານຸສາຣີ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາ ເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວ ໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພິກຂຸໃນທັມ ວິນັຍນີ້ ເປັນສັທທານຸສາຣີ ເຮົາກ່າວກັບພິກຂຸນັ້ນຢ່າງນີ້ວ່າ ມາ ເຖີດພິກຂຸ ເຮົາຈະກ້າວລົງໄປໃນຕົມ ດັ່ງນີ້, ພິກຂຸນັ້ນຈະກ້າວ ໄປຕາມ ຫລືນ້ອມກາຍໄປທາງອື່ນ ຫລືຈະປະຕິເສດ?

ບໍ່ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ສມັຍນັ້ນ ເຈົ້າ ເປັນອຸພະໂຕພາຄະວິມຸຕ, ເປັນປັນຍາວິມຸຕ, ເປັນກາຍສັກຂີ, ເປັນທິຕຖິປັຕຕະ, ເປັນສັທທາວິມຸຕ, ເປັນທັມມານຸສາຣີ, ເປັນສັທທານຸສາຣີຫລືໜໍ?

ບໍ່ໄດ້ເປັນເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ໃນສມັຍນັ້ນ ເຈົ້າເປັນຄົນວ່າງ ຄົນເປົ່າ ຄົນຜິດບໍ່ແມ່ນຫລື?

ເປັນຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໂທສໄດ້ຄອບງຳຂ້ານ້ອຍແລ້ວ ຜູ້ເປັນຄົນພາລ ຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສຶກສາຢູ່ ຂໍພຣະຜູ້ມີພຣະພາຄຊົງຮັບຊາບໂທສຂອງຂ້ານ້ອຍນັ້ນໂດຍຄວາມເປັນໂທສ ເພື່ອຄວາມສັງຮວມຣະວັງຕໍ່ໄປເຖີດ ພຣະອົງຄ໌ຜູ້ຈະເຣີນ.

ພັທທາລິ! ເປັນຄວາມຈິງ ໂທສໄດ້ຄອບງຳເຈົ້າແລ້ວຜູ້ເປັນຄົນພາລ ເປັນຄົນຫລົງ ບໍ່ສລາດ ເຊິ່ງໄດ້ປະກາສຄວາມບໍ່ສາມາດໃນສິກຂາບົທທີ່ເຮົາບັນຍັຕໄວ້ ໃນເມື່ອພິກຂຸສົງຄ໌ກຳລັງສະມາທານສຶກສາຢູ່ ແຕ່ເພາະເຈົ້າເຫັນໂທສໂດຍຄວາມເປັນໂທສແລ້ວ ທຳຄືນຕາມທັມ ເຮົາຈຶ່ງຮັບຊາບໂທສຂອງເຈົ້ານັ້ນຂໍ້ທີ່ບຸຄຄົລເຫັນໂທສໂດຍຄວາມເປັນໂທສແລ້ວ ທຳຄືນຕາມ

ທັມ ເຖິງຄວາມສັງຣວມຣະວັງຕໍ່ໄປ ນີ້ເປັນຄວາມຈະເຣີນໃນອະຣິຍະວິນັຍ.

ພັທທາລິ! ພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ ເຂົາມີຄວາມດຳຣິຢ່າງນີ້ວ່າ ຖ້າເຊັ່ນນັ້ນ ເຮົາຄວນເສພເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູຜາ ຮ່ອມພູ ຖໍ້າ ປ່າຊ້າ ປ່າດົງໝາ ທີ່ແຈ້ງ ແລະປ່າເຫລົ່າເຖິດ ບາງທີ ເຮົາອາດກະທຳໃຫ້ແຈ້ງເຊິ່ງຍານທັສສະນະອັນປະເສີດ ທີ່ເປັນທັມອັນຍິ່ງຂອງມະນຸສໄດ້ດັ່ງນີ້. ເຂົາເສພເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູຜາຮ່ອມພູ ຖໍ້າ ປ່າຊ້າ ປ່າດົງໝາ ທີ່ແຈ້ງ ແລະປ່າເຫລົ່າ ເມື່ອເຂົາຫລີກອອກຢູ່ດ້ວຍປະການຢ່າງນັ້ນ, ພຣະສາສດາກໍຊົງຕິຕຽນໄດ້, ເພື່ອນພຣົມມະຈັນຍ໌ຜູ້ເປັນວິນຍູຊົນທັງຫລາຍໃຄ່ຄວນແລ້ວກໍຕິຕຽນໄດ້, ເທວະດາກໍຕິຕຽນໄດ້, ແມ່ນແຕ່ຕົນເອງກໍຕິຕຽນຕົນເອງໄດ້. ເຂົາຖືກພຣະສາສດາຕິຕຽນແດ່, ຖືກເພື່ອນພຣົມມະຈັນຍ໌ຜູ້ເປັນວິນຍູຊົນທັງຫລາຍຕິຕຽນແດ່, ເທວະດາຕິຕຽນແດ່, ຕົນເອງກໍຕິຕຽນຕົນເອງແດ່ ເຂົາຍ່ອມບໍ່ກະທຳໃຫ້ແຈ້ງເຊິ່ງຍານທັສສະນະອັນປະເສີດ ທີ່ເປັນທັມອັນຍິ່ງຂອງມະນຸສໄດ້ ຂໍ້ນັ້ນເພາະເຫຕໃດ?

**ພັທທາລິ! ເພາະພິກຂຸນັ້ນເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.**

ພັທທາລິ! ສ່ວນພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ ເຂົາມີຄວາມດຳຣິຢ່າງນີ້ວ່າ ຖ້າເຊັ່ນນັ້ນ ເຮົາຄວນເສພເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູຜາ ຮ່ອມພູ ຖ້ຳ ປ່າຊ້າ ປ່າດົງໜາ ທີ່ແຈ້ງ ແລະປ່າເຫລົ່າເຖິດ ບາງທີ ເຮົາອາດກະທຳໃຫ້ແຈ້ງເຊິ່ງຍານທັສສະນະອັນປະເສີດ ທີ່ເປັນທັມອັນຍິ່ງຂອງມະນຸສໄດ້ດັ່ງນີ້. ເຂົາເສພເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູຜາ ຮ່ອມພູ ຖ້ຳ ປ່າຊ້າ ປ່າດົງໜາ ທີ່ແຈ້ງ ແລະປ່າເຫລົ່າ ເມື່ອເຂົາຫລີກອອກຢູ່ດ້ວຍປະການຢ່າງນັ້ນ, ພຣະສາສດາກໍບໍ່ຊົງຕິຕຽນ, ເພື່ອນພຣົມມະຈັນຍ໌ຜູ້ເປັນວິນຍູຊົນທັງຫລາຍໃຄ່ຄວນແລ້ວກໍບໍ່ຕິຕຽນ, ເທວະດາກໍບໍ່ຕິຕຽນ, ແມ່ນແຕ່ຕົນເອງກໍຕິຕຽນຕົນເອງບໍ່ໄດ້. ເມື່ອພຣະສາສດາບໍ່ຊົງຕິຕຽນເຂົາ, ເພື່ອນພຣົມມະຈັນຍ໌ຜູ້ເປັນວິນຍູຊົນທັງຫລາຍບໍ່ຕິຕຽນເຂົາ, ເທວະດາບໍ່ຕິຕຽນເຂົາ, ຕົວເຂົາເອງກໍຕິຕຽນຕົນເອງບໍ່ໄດ້ ເຂົາຍ່ອມກະທຳໃຫ້ແຈ້ງເຊິ່ງຍານທັສສະນະອັນປະເສີດ ທີ່ເປັນທັມອັນຍິ່ງຂອງມະນຸສໄດ້.

ພິກຂຸນັ້ນສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກ ວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່ ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ອີກປະກາຣໜຶ່ງ ເພາະວິຕົກວິຈາຣສງົບຣະງັບໄປ ພິກຂຸບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່ ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ອີກປະກາຣໜຶ່ງ ເພາະປີຕິສິ້ນໄປ ພິກຂຸເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະ ສເວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິ ຢູ່ເປັນສຸຂ ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພັທທາລິ! ອີກປະການໜຶ່ງ ເພາະລະສຸຂລະທຸກຂ໌ເສຍໄດ້ ແລະດັບໂສມະນັສໂທມະນັສກ່ອນໆໄດ້ ພິກຂຸບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່ ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອປຸພເພນິວາສານຸສະຕິຍານ ເຂົາຍ່ອມຣະນຶກຊາຕກ່ອນໄດ້ເປັນອັນມາກຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນຊາຕແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສເວີຍສຸຂສເວີຍທຸກຂ໌ຢ່າງນັ້ນໆ ມີກຳນົດອາຍຸ

ເທົ່ານັ້ນ ເຮົານັ້ນຈຸຕິຈາກພົບນັ້ນແລ້ວ ໄດ້ມາບັງເກີດໃນພົບນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອັນມາກ ພ້ອມທັງອາການ ພ້ອມທັງອຸເທສ ດ້ວຍປະການຢ່າງນີ້. ຂໍ້ນັ້ນເປັນເພາະເຫຕ ໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອຈຸຕູປະປາຕະຍານ ເຂົາຍ່ອມມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະ ຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນ ມິຈສາທິຕຖິ ຍຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອ ແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນ ສັມມາທິຕຖິ ຍຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອ ແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຂົາຍ່ອມມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ

ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້. ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ພິກຂຸນັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທຜຸດຜ່ອງ ບໍ່ມີກິເລສປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນ ບໍ່ຫວັ່ນໄຫວຢ່າງນີ້ ຍ່ອມນ້ອມຈິຕໄປເພື່ອອາສະວັກຂະຍະຍານ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣທ ນີ້ທຸກຂະນິໂຣທະຄາມິນີປະຕິປະທາ ເຫລົ່ານີ້ອາສະວະ ນີ້ເຫຕເກີດແຫ່ງອາສະວະ ນີ້ຄວາມດັບແຫ່ງອາສະວະ ນີ້ປະຕິປະທາໃຫ້ເຖິງຄວາມດັບແຫ່ງອາສະວະ ເມື່ອເຂົານັ້ນຮູ້ເຫັນຢ່າງນີ້ແລ້ວ ຈິຕກໍຫລຸດພົ້ນຈາກກາມາສະວະ ຈາກພະວາສະວະ ຈາກອະວິຊຊາສະວະ ເມື່ອຈິຕຫລຸດພົ້ນແລ້ວ ກໍມີຍານຢັ່ງຮູ້ວ່າ ຫລຸດພົ້ນແລ້ວ ຍ່ອມຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳ ໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ. ຂໍ້ນັ້ນເປັນເພາະເຫຕໃດ? ພັທທາລິ ຂໍ້ນັ້ນເປັນເພາະພິກຂຸນັ້ນເປັນຜູ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ທ່ານພຣະພັທທາລິ ໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ພິກຂຸທັງຫລາຍຂົ່ມແລ້ວຂົ່ມອີກເຊິ່ງພິກຂຸບາງອົງຄ໌ໃນທັມວິນັຍນີ້ ແລ້ວກະທຳໃຫ້ເປັນອະທິກອນ *(ກະທຳໃຫ້ເປັນເຫຕ)*?

ອີກຢ່າງໜຶ່ງ ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ພິກຂຸທັງຫລາຍຈະບໍ່ຂົ່ມແລ້ວບໍ່ຂົ່ມອີກເຊິ່ງພິກຂຸບາງອົງຄ໌ໃນທັມວິນັຍນີ້ ແລ້ວກະທຳໃຫ້ເປັນອະທິກອນ?

ພຣະຜູ້ມີພຣະພາຄຕຣັສວ່າ:

ພັທທາລິ! ພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ຕ້ອງອາບັຕເນື່ອງໆ ເປັນຜູ້ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍຍັງຝ່າຝືນປະພຶຕຢ່າງອື່ນດ້ວຍອາກາຣຢ່າງອື່ນ ນຳເອົາຖ້ອຍຄຳໃນພາຍນອກມາທັບຖົມ ກະທຳຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ບໍ່ປະພຶຕໂດຍຊອບ ບໍ່ຢ້ານກົວ ບໍ່ປະພຶຕຖອນຕົນອອກ ບໍ່ກ່າວວ່າຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌. ພັທທາລິ ເພາະເຫຕທີ່ພິກຂຸເປັນຜູ້ວ່າຍາກນັ້ນ ພິກຂຸທັງຫລາຍຈຶ່ງມີວາຈາຢ່າງ

ນີ້ວ່າ “ທ່ານຜູ້ມີອາຍຸທັງຫລາຍ ພິກຂຸນີ້ເປັນຜູ້ຕ້ອງອາບັດເນື່ອງໆ ເປັນຜູ້ມີອາບັດຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍຍັງຝ່າຝືນປະພຶດຢ່າງອື່ນດ້ວຍອາການຢ່າງອື່ນ ນໍາເອົາຖ້ອຍຄໍາໃນພາຍນອກມາທັບຖົມ ກະທໍາຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ບໍ່ປະພຶຕໂດຍຊອບ ບໍ່ຢ້ານກົວ ບໍ່ປະພຶຕຖອນຕົນອອກ ບໍ່ກ່າວວ່າຂ້ານ້ອຍຈະທໍາຕາມຄວາມພໍໃຈຂອງສົງຄ໌.” ສົມຄວນແລ້ວທີ່ທ່ານຜູ້ມີອາຍຸທັງຫລາຍຈະພິຈາຣະນາໂທສຂອງພິກຂຸນີ້ ໂດຍບໍ່ໃຫ້ອະທິກອນຣະງັບໄປໂດຍໄວ. ພັທທາລິ ພິກຂຸທັງຫລາຍຈຶ່ງພິຈາຣະນາໂທສຂອງພິກຂຸນັ້ນ ໂດຍບໍ່ໃຫ້ອະທິກອນຣະງັບໄປໂດຍໄວ ດ້ວຍອາການຢ່າງນີ້.

ພັທທາລິ! ສ່ວນພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ຕ້ອງອາບັດເນື່ອງໆ ເປັນຜູ້ມີອາບັດຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍບໍ່ຝ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນ ບໍ່ນໍາເອົາຖ້ອຍຄໍາໃນພາຍນອກມາທັບຖົມ ບໍ່ກະທໍາຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ປະພຶຕໂດຍຊອບ ມີຄວາມຢ້ານກົວ ປະພຶຕຖອນຕົນອອກ ກ່າວວ່າຂ້ານ້ອຍຈະທໍາຕາມຄວາມພໍໃຈຂອງສົງຄ໌. ພັທທາລິ ເພາະເຫຕທີ່ພິກຂຸເປັນຜູ້ວ່າງ່າຍນັ້ນ ພິກຂຸທັງຫລາຍຈຶ່ງມີວາຈາຢ່າງນີ້ວ່າ “ທ່ານຜູ້ມີອາຍຸທັງຫລາຍ ພິກຂຸນີ້ເປັນຜູ້ຕ້ອງອາ

ບັຕເນື່ອງໆ ເປັນຜູ້ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍບໍ່ຜ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນ ບໍ່ນຳເອົາຖ້ອຍຄຳໃນພາຍນອກມາທັບຖົມ ບໍ່ກະທຳຄວາມໂກທຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ປະພຶຕໂດຍຊອບ ມີຄວາມຢ້ານກົວ ປະພຶຕຖອນຕົນອອກ ກ່າວວ່າຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌.” ສົມຄວນແລ້ວທີ່ທ່ານຜູ້ມີອາຍຸທັງຫລາຍຈະພິຈາຣະນາໂທສຂອງພິກຂຸນີ້ ໂດຍໃຫ້ອະທິກອນຣະງັບໄປໂດຍໄວ. ພັທທາລິ ພິກຂຸທັງຫລາຍຈຶ່ງພິຈາຣະນາໂທສຂອງພິກຂຸນັ້ນ ໂດຍໃຫ້ອະທິກອນຣະງັບໄປໂດຍໄວ ດ້ວຍອາການຢ່າງນີ້.

ພັທທາລິ! ພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ຕ້ອງອາບັຕເປັນບາງຄັ້ງ ບໍ່ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍຍັງຜ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນນຳເອົາຖ້ອຍຄຳໃນພາຍນອກມາທັບຖົມ ກະທຳຄວາມໂກທຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ບໍ່ປະພຶຕໂດຍຊອບ ບໍ່ຢ້ານກົວ ບໍ່ປະພຶຕຖອນຕົນອອກ ບໍ່ກ່າວວ່າຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌. ພັທທາລິ ເພາະເຫຕທີ່ພິກຂຸເປັນຜູ້ວ່າຍາກນັ້ນ ພິກຂຸທັງຫລາຍຈຶ່ງມີວາຈາຢ່າງນີ້ວ່າ “ທ່ານຜູ້ມີອາຍຸທັງຫລາຍ ພິກຂຸນີ້ເປັນຜູ້ຕ້ອງອາບັຕເປັນບາງຄັ້ງ ບໍ່ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່

ກໍຍັງຝ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນ ນຳເອົາຖ້ອຍຄຳໃນພາຍນອກມາທັບຖົມ ກະທຳຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ບໍ່ປະພຶຕໂດຍຊອບ ບໍ່ຢ້ານກົວ ບໍ່ປະພຶຕຖອນຕົນອອກ ບໍ່ກ່າວວ່າ ຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌." ສົມຄວນແລ້ວທີ່ທ່ານຜູ້ມີອາຍຸທັງຫລາຍຈະພິຈາຣະນາໂທສຂອງພິກຂຸນີ້ ໂດຍບໍ່ໃຫ້ອະທິກອນຣະງັບໄປໂດຍໄວ. ພັທທາລິ ພິກຂຸທັງຫລາຍຈຶ່ງພິຈາຣະນາໂທສຂອງພິກຂຸນັ້ນ ໂດຍບໍ່ໃຫ້ອະທິກອນຣະງັບໄປໂດຍໄວ ດ້ວຍອາການຢ່າງນີ້.

ພັທທາລິ! ສ່ວນພິກຂຸບາງອົງຄ໌ໃນທັມວິນັຍນີ້ ເປັນຜູ້ຕ້ອງອາບັຕເປັນບາງຄັ້ງ ບໍ່ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍບໍ່ຝ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນ ບໍ່ນຳເອົາຖ້ອຍຄຳໃນພາຍນອກມາທັບຖົມ ບໍ່ກະທຳຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ປະພຶຕໂດຍຊອບ ມີຄວາມຢ້ານກົວ ປະພຶຕຖອນຕົນອອກ ກ່າວວ່າ ຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌. ພັທທາລິ ເພາະເຫຕທີ່ພິກຂຸເປັນຜູ້ວ່າງ່າຍນັ້ນ ພິກຂຸທັງຫລາຍຈຶ່ງມີວາຈາຢ່າງນີ້ວ່າ "ທ່ານຜູ້ມີອາຍຸທັງຫລາຍ ພິກຂຸນີ້ເປັນຜູ້ຕ້ອງອາບັຕເປັນບາງຄັ້ງ ບໍ່ມີອາບັຕຫລາຍ ເຂົາຖືກພິກຂຸທັງຫລາຍຕັກເຕືອນຢູ່ ກໍບໍ່ຝ່າຝືນປະພຶຕຢ່າງອື່ນດ້ວຍອາການຢ່າງອື່ນ ບໍ່ນຳເອົາຖ້ອຍ

ຄຳໃນພາຍນອກມາທັບຖົມ ບໍ່ກະທຳຄວາມໂກທ ຄວາມຂັດເຄືອງ ແລະຄວາມບໍ່ອ່ອນນ້ອມໃຫ້ປາກົຕ ປະພຶຕໂດຍຊອບ ມີຄວາມຢ້ານກົວ ປະພຶຕຖອນຕົນອອກ ກ່າວວ່າຂ້ານ້ອຍຈະທຳຕາມຄວາມພໍໃຈຂອງສົງຄ໌." ສົມຄວນແລ້ວທີ່ທ່ານຜູ້ມີອາຍຸທັງຫລາຍຈະພິຈາຣະນາໂທສຂອງພິກຂຸນີ້ ໂດຍໃຫ້ອະທິກອນຣະງັບໄປໂດຍໄວ. ພັທທາລິ ພິກຂຸທັງຫລາຍຈຶ່ງພິຈາຣະນາໂທສຂອງພິກຂຸນັ້ນ ໂດຍໃຫ້ອະທິກອນຣະງັບໄປໂດຍໄວ ດ້ວຍອາການຢ່າງນີ້.

ພັທທາລິ! ພິກຂຸບາງອົງຄ໌ໃນທັມວິນັຍນີ້ ດຳເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານ. ພັທທາລິ ເພາະເຫຕທີ່ພິກຂຸນັ້ນເປັນຜູ້ດຳເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານ ພິກຂຸທັງຫລາຍຈຶ່ງມີວາຈາຢ່າງນີ້ວ່າ "ທ່ານຜູ້ມີອາຍຸທັງຫລາຍ ພິກຂຸນີ້ດຳເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານ ຖ້າເຮົາທັງຫລາຍຈັກຂົ່ມຂີ່ພິກຂຸນີ້ ກະທຳໃຫ້ເປັນອະທິກອນ ດ້ວຍຕັ້ງໃຈວ່າ ສັທທາພໍປະມານ ຄວາມຮັກພໍປະມານຂອງເຂົານັ້ນຢ່າໄດ້ເສື່ອມໄປຈາກເຂົາເລີຍ.

ພັທທາລິ! ປຽບເໝືອນຊົນຜູ້ເປັນມິຕ ອະມາຕຍ໌ ຍາຕສາຍໂລຫິຕຂອງບຸຣຸສຜູ້ມີຕາຂ້າງດຽວ ຄວນຮັກສາຕາຂ້າງດຽວນັ້ນ

ໄວ້ ດ້ວຍຕັ້ງໃຈວ່າ ຕາຂ້າງດຽວຂອງເຂົານັ້ນຢ່າໄດ້ເສື່ອມໄປຈາກເຂົາເລີຍ ສັນໃດ; ພັທທາລິ ພິກຂຸບາງອົງຄ໌ໃນທັມວິນັຍນີ້ກໍສັນນັ້ນເໝືອນກັນ ດໍາເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານ. ພັທທາລິ ເພາະເຫຕທີ່ພິກຂຸນັ້ນເປັນຜູ້ດໍາເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານພິກຂຸທັງຫລາຍຈຶ່ງມີວາຈາຢ່າງນີ້ວ່າ “ທ່ານຜູ້ມີອາຍຸທັງຫລາຍພິກຂຸນີ້ດໍາເນີນຊີວິຕດ້ວຍສັທທາພໍປະມານ ດ້ວຍຄວາມຮັກພໍປະມານ ຖ້າເຮົາທັງຫລາຍຈັກຂົ່ມຂີ່ພິກຂຸນີ້ ກະທໍາໃຫ້ເປັນອະທິກອນ ດ້ວຍຕັ້ງໃຈວ່າ ສັທທາພໍປະມານ ຄວາມຮັກພໍປະມານຂອງເຂົານັ້ນຢ່າໄດ້ເສື່ອມໄປຈາກເຂົາເລີຍ.

ພັທທາລິ! ນີ້ແລ ເປັນເຫຕ ເປັນປັຈຈັຍໃຫ້ພິກຂຸທັງຫລາຍຂົ່ມແລ້ວຂົ່ມອີກເຊິ່ງພິກຂຸບາງອົງຄ໌ໃນທັມວິນັຍນີ້ ແລ້ວກະທໍາໃຫ້ເປັນອະທິກອນ. ອີກຢ່າງໜຶ່ງ ນີ້ເປັນເຫຕ ເປັນປັຈຈັຍໃຫ້ພິກຂຸທັງຫລາຍຈະບໍ່ຂົ່ມແລ້ວບໍ່ຂົ່ມອີກເຊິ່ງພິກຂຸບາງອົງຄ໌ໃນທັມວິນັຍນີ້ ແລ້ວກະທໍາໃຫ້ເປັນອະທິກອນ.

ທ່ານພຣະພັທທາລິທູລຖາມວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ອັນໃດໜໍເປັນເຫຕ ເປັນປັຈຈັຍເມື່ອກ່ອນສິກຂາບົທມີພຽງເລັກນ້ອຍ ແຕ່ພິກຂຸດໍາຣົງຢູ່ໃນ

ອະຣະຫັຕຕະຜົລມີຫລາຍ, ອີກຢ່າງໜຶ່ງ ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ໃນບັດນີ້ສິກຂາບົທມີຫລາຍ ແຕ່ພິກຂຸດໍາຣົງຢູ່ ໃນອະຣະຫັຕຕະຜົລມີໜ້ອຍ?

ພັທທາລິ! ເປັນຄວາມຈິງ ເມື່ອສັຕທັງຫລາຍກໍາລັງເສື່ອມ ສັທ ທັມກໍາລັງອັນຕຣະທານ ສິກຂາບົທມີຫລາຍ ແຕ່ພິກຂຸດໍາຣົງຢູ່ ໃນອະຣະຫັຕຕະຜົລມີໜ້ອຍ. ສາສດາຍັງບໍ່ຊົງບັນຍັຕສິກຂາ ບົທແກ່ສາວົກທັງຫລາຍ ຕາບເທົ່າທີ່***ອາສະວັຕຖານີຍະທັມ*** *(ທັມອັນເປັນທີ່ຕັ້ງແຫ່ງອາສະວະ)* ບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນ ທັມວິນັຍນີ້ ເມື່ອໃດອາສະວັຕຖານີຍະທັມບາງຢ່າງເກີດຂຶ້ນໃນ ສົງຄ໌ໃນທັມວິນັຍນີ້ ເມື່ອນັ້ນ ສາສດາຈຶ່ງຊົງບັນຍັຕສິກຂາບົທ ແກ່ສາວົກທັງຫລາຍ ເພື່ອກໍາຈັດອາສະວັຕຖານີຍະທັມ ເຫລົ່ານັ້ນ.

ອາສະວັຕຖານີຍະທັມບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນທັມ ວິນັຍນີ້ ຕາບເທົ່າທີ່ສົງຄ໌ຍັງບໍ່ເຖິງຄວາມເປັນໝູ່ໃຫຍ່, ເມື່ອໃດ ສົງຄ໌ເຖິງຄວາມເປັນໝູ່ໃຫຍ່ ອາສະວັຕຖານີຍະທັມບາງຢ່າງ ຈຶ່ງເກີດຂຶ້ນໃນສົງຄ໌ ສາສດາຈຶ່ງຊົງບັນຍັຕສິກຂາບົທແກ່ສາວົກ ທັງຫລາຍ ເພື່ອກໍາຈັດອາສະວັຕຖານີຍະທັມເຫລົ່ານັ້ນ.

ອາສະວັຕຖານິຍະທັມບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນທັມວິນັຍນີ້ ຕາບເທົ່າທີ່ສົງຄ໌ຍັງບໍ່ເຖິງຄວາມເປັນຜູ້ເລີດດ້ວຍລາພ, ເມື່ອໃດສົງຄ໌ເຖິງຄວາມເປັນຜູ້ເລີດດ້ວຍລາພ ອາສະວັຕຖານິຍະທັມບາງຢ່າງຈຶ່ງເກີດຂຶ້ນໃນສົງຄ໌ ສາສດາຈຶ່ງຊົງບັນຍັຕສິກຂາບົທແກ່ສາວົກທັງຫລາຍ ເພື່ອກຳຈັດອາສະວັຕຖານິຍະທັມເຫລົ່ານັ້ນ.

ອາສະວັຕຖານິຍະທັມບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນທັມວິນັຍນີ້ ຕາບເທົ່າທີ່ສົງຄ໌ຍັງບໍ່ເຖິງຄວາມເປັນຜູ້ເລີດດ້ວຍຍົສ, ເມື່ອໃດສົງຄ໌ເຖິງຄວາມເປັນຜູ້ເລີດດ້ວຍຍົສ ອາສະວັຕຖານິຍະທັມບາງຢ່າງຈຶ່ງເກີດຂຶ້ນໃນສົງຄ໌ ສາສດາຈຶ່ງຊົງບັນຍັຕສິກຂາບົທແກ່ສາວົກທັງຫລາຍ ເພື່ອກຳຈັດອາສະວັຕຖານິຍະທັມເຫລົ່ານັ້ນ.

ອາສະວັຕຖານິຍະທັມບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນທັມວິນັຍນີ້ ຕາບເທົ່າທີ່ສົງຄ໌ຍັງບໍ່ເຖິງຄວາມເປັນພະຫູສູຕ, ເມື່ອໃດສົງຄ໌ເຖິງຄວາມເປັນພະຫູສູຕ ອາສະວັຕຖານິຍະທັມບາງຢ່າງຈຶ່ງເກີດຂຶ້ນໃນສົງຄ໌ ສາສດາຈຶ່ງຊົງບັນຍັຕສິກຂາບົທແກ່ສາວົກທັງຫລາຍ ເພື່ອກຳຈັດອາສະວັຕຖານິຍະທັມເຫລົ່ານັ້ນ.

ອາສະວັຕຖານິຍະທັມບາງຢ່າງຍັງບໍ່ເກີດຂຶ້ນໃນສົງຄ໌ໃນທັມວິນັຍນີ້ ຕາບເທົ່າທີ່ສົງຄ໌ຍັງບໍ່ເຖິງຄວາມເປັນຣັຕຕັນຍູ ເມື່ອໃດສົງຄ໌ເຖິງຄວາມເປັນຣັຕຕັນຍູ ອາສະວັຕຖານິຍະທັມບາງຢ່າງຈຶ່ງເກີດຂຶ້ນໃນສົງຄ໌ ສາສດາຈຶ່ງຊົງບັນຍັຕສິກຂາບົທແກ່ສາວົກທັງຫລາຍ ເພື່ອກຳຈັດອາສະວັຕຖານິຍະທັມເຫລົ່ານັ້ນ.

ພັທທາລິ! ໃນສມັຍທີ່ເຮົາສະແດງທັມປະຣິຍາຍປຽບດ້ວຍມ້າອາຊາໄນໜຸ່ມແກ່ພວກເຈົ້າທັງຫລາຍ ໃນສມັຍນັ້ນ ພວກເຈົ້າທັງຫລາຍຍັງມີຈຳນວນໜ້ອຍ. ພັທທາລິ ເຈົ້າຍັງຣະນຶກເຖິງທັມປະຣິຍາຍນັ້ນໄດ້ຢູ່ຫລື?

ຂ້ານ້ອຍຣະນຶກເຖິງທັມປະຣິຍາຍນັ້ນບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລິ! ໃນການຣະນຶກບໍ່ໄດ້ນັ້ນ ເຈົ້າອາສັຍອັນໃດເປັນເຫຕໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຄົງເປັນເພາະຂ້ານ້ອຍນັ້ນບໍ່ໄດ້ກະທຳໃຫ້ບໍຣິບູນໃນສິກຂາໃນສາສນາຂອງພຣະສາສດາເປັນເວລານານແນ່ນອນ ພຣະອົງຄ໌ຜູ້ຈະເຣີນ!

ພັທທາລີ! ຄວາມເປັນຜູ້ບໍ່ກະທຳໃຫ້ບໍຣິບູນໃນສິກຂານີ້ ຈະເປັນເຫຕເປັນປັຈຈັຍຫາບໍ່ໄດ້, ເຮົາກໍານົດຮູ້ດ້ວຍໃຈ ແລະຮູ້ເຈົ້າມານານແລ້ວວ່າ **ໂມຄະບຸຣຸສນີ້ ເມື່ອເຮົາສະແດງທັມຢູ່ ບໍ່ຕັ້ງໃຈ ບໍ່ໃສ່ໃຈ ບໍ່ສັງຮວມໃຈ ບໍ່ງ່ຽງໂສຕະລົງຟັງທັມ** ແຕ່ເຮົາກໍຈັກສະແດງທັມປະຣິຍາຍປຽບດ້ວຍມ້າອາຊາໄນໜຸ່ມແກ່ເຈົ້າອີກ ເຈົ້າຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ.

ທ່ານພຣະພັທທາລີທູລຮັບພຣະດຳຣັສພຣະຜູ້ມີພຣະພາຄແລ້ວພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

ພັທທາລີ! ປຽບເໝືອນນາຍສາຣະຖີຝຶກມ້າຜູ້ຊຳນານ ໄດ້ມ້າອາຊາໄນໂຕງາມມາແລ້ວ ເລີ່ມຕົ້ນ ຝຶກໃຫ້ຮູ້ເຫຕໃນການໃສ່ບັງຫຽນ ເມື່ອນາຍສາຣະຖີກຳລັງຝຶກໃຫ້ມັນຮູ້ເຫຕໃນການໃສ່ບັງຫຽນ ມັນກໍພະຍົສ ສະບັດ ດີ້ນຣົນ ຢ່າງໃດຢ່າງໜຶ່ງເໝືອນມ້າທີ່ຍັງບໍ່ເຄີຍຝຶກ ມ້ານັ້ນໝົດພະຍົສໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ. ມ້າອາຊາໄນໂຕງາມໝົດພະຍົສລົງໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ.

ເມື່ອມ້າອາຊາໄນໂຕງາມໝົດພະຍົສລົງໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ ນາຍ

ສາຣະຖີຝຶກມ້າກໍຈະຝຶກໃຫ້ມັນຮູ້ເຫຕຍິ່ງຂຶ້ນໄປໃນການທຽມແອກ ເມື່ອນາຍສາຣະຖີຝຶກໃຫ້ມັນຮູ້ເຫຕໃນການທຽມແອກ ມັນກໍພະຍົສ ສະບັດ ດີ້ນຣົນ ຢ່າງໃດຢ່າງໜຶ່ງ ເໝືອນມ້າທີ່ຍັງບໍ່ເຄີຍຝຶກ ມ້ານັ້ນໝົດພະຍົສໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ. ມ້າອາຊາໄນໂຕງາມໝົດພະຍົສລົງໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ.

ນາຍສາຣະຖີຝຶກມ້າຈຶ່ງຝຶກໃຫ້ມັນຮູ້ເຫຕຍິ່ງຂຶ້ນໄປ **ໃນການກ້າວຍ່າງ, ໃນການແລ່ນເປັນວົງກົມ, ໃນການຈົດກີບ, ໃນການແລ່ນ, ໃນການໃຊ້ສຽງຮ້ອງໃຫ້ເປັນປະໂຍຊນ໌, ໃນການເປັນມ້າທີ່ມີຄຸນສົມບັຕທີ່ພຣະຣາຊານິຍົມ, ໃນວົງສ໌ພະຍາມ້າ, ໃນຄວາມວ່ອງໄວຊັ້ນຢຽມ, ໃນຄວາມເປັນມ້າຊັ້ນຢຽມ, ໃນການເປັນມ້າຄວນແກ່ການຊົມເຊີຍຊັ້ນຢຽມ** ມ້ານັ້ນກໍພະຍົສ ສະບັດ ດີ້ນຣົນ ຢ່າງໃດຢ່າງໜຶ່ງ ເໝືອນມ້າທີ່ຍັງບໍ່ເຄີຍຝຶກ ມ້ານັ້ນໝົດພະຍົສໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ. ມ້າອາຊາໄນໂຕງາມໝົດພະຍົສລົງໄດ້ເພາະໄດ້ຮັບການຝຶກເລື້ອຍໆ ເພາະນາຍສາຣະຖີຝຶກໃຫ້ຮູ້ໂດຍລຳດັບ. ນາຍສາຣະຖີກໍຈະເພີ່ມການຝຶກໃຫ້ມີຄຸນພາບ ໃຫ້ມີກຳລັງຍິ່ງຂຶ້ນໄປ. ພັທທາລີ ມ້າອາຊາໄນໂຕງາມປະກອບດ້ວຍອົງຄ໌ ໑໐ ປະການນີ້ແລ ຍ່ອມເປັນພາຫະນະຄວນແກ່ພຣະຣາ

ຊາ ເປັນພາຫະນະສຳລັບການຮັບໃຊ້ຂອງພຣະຣາຊາ ນັບໄດ້ວ່າເປັນອົງຄ໌ຂອງພຣະຣາຊາ ສັນໃດ; ພັທທາລິ ພິກຂຸປະກອບດ້ວຍທັມ ໑໐ ປະການ ກໍສັນນັ້ນ ຍ່ອມເປັນຜູ້ຄວນແກ່ຂອງຄຳນັບ ຄວນແກ່ຂອງຕ້ອນຮັບ ຄວນແກ່ຂອງທຳບຸນຍ໌ ຄວນທຳອັນຊະລີ ເປັນນາບຸນຍ໌ຂອງໂລກ ບໍ່ມີນາບຸນຍ໌ອື່ນຍິ່ງກວ່າ ທັມ ໑໐ ປະການເປັນຢ່າງໃດ?

ພັທທາລິ! ພິກຂຸໃນທັມວິນັຍນີ້ ເປັນຜູ້ປະກອບດ້ວຍສັມມາທິຕຖິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສັງກັປປະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວາຈາອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາກັມມັນຕະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາອາຊີວະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວາຍາມະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສະຕິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາສະມາທິອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາຍານະອັນເປັນຂອງອະເສຂະ,

ເປັນຜູ້ປະກອບດ້ວຍສັມມາວິມຸຕອັນເປັນຂອງອະເສຂະ,

ພັທທາລີ! ພິກຂຸປະກອບດ້ວຍທັມ ໑໐ ປະການນີ້ແລ ຍ່ອມເປັນຜູ້ຄວນແກ່ຂອງຄຳນັບ ຄວນແກ່ຂອງຕ້ອນຮັບ ຄວນແກ່ຂອງທຳບຸນຍ໌ ຄວນທຳອັນຊະລີ ເປັນນາບຸນຍ໌ຂອງໂລກ ບໍ່ມີນາບຸນຍ໌ອື່ນຍິ່ງກວ່າ ດັ່ງນີ້.

ພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ທ່ານພຣະພັທທາລີມີໃຈຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄ ດັ່ງນີ້ແລ.

---

*ມັຊຊິມະນິກາຍ ມັຊຊິມະປັນນາສ ໑໓/໑໔໙-໑໕໐/໑໖໐-໑໗໔*



# ຫລັກການບໍຣິໂພຄອາຫານ

ພິກຂຸທັງຫລາຍ! ພິກຂຸເປັນຜູ້ຮູ້ປະມານ
ໃນໂພຊະນະເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້
**ພິຈາຣະນາໂດຍລະອຽດແລ້ວຈຶ່ງສັນອາຫານ**
**ບໍ່ສັນເພື່ອຫລິ້ນ ບໍ່ສັນເພື່ອມົວເມົາ**
**ບໍ່ສັນເພື່ອປະດັບ ບໍ່ສັນເພື່ອຕົກແຕ່ງ**
**ແຕ່ສັນພຽງເພື່ອໃຫ້ກາຍນີ້ຕັ້ງຢູ່ໄດ້**

**ເພື່ອໃຫ້ຊີວິດເປັນໄປ ເພື່ອປ້ອງກັນຄວາມລຳບາກ**
**ເພື່ອອະນຸເຄາະພຣົມມະຈັນຍ໌**
ໂດຍກຳນົດວ່າ ເຮົາຈັກກຳຈັດເວທະນາເກົ່າ
*(ຄືຄວາມຫິວ)* ເສຍ ແລ້ວບໍ່ກະທຳເວທະນາໃໝ່
*(ຄືອິ່ມຈົນອຶດອັດ)* ໃຫ້ເກີດຂຶ້ນ
ຄວາມທີ່ອາຍຸດຳເນີນໄປໄດ້
ຄວາມບໍ່ມີໂທສເພາະອາຫານ
ແລະຄວາມຢູ່ຜາສຸກສຳຣານຈະມີແກ່ເຮົາ ດັ່ງນີ້,
**ພິກຂຸທັງຫລາຍ ພິກຂຸຢ່າງນີ້ຊື່ວ່າ**
**ເປັນຜູ້ຮູ້ປະມານໃນໂພຊະນະ.**

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໓໙/໓໗*



# ເຫດປັຈຈັຍທີ່ເຮັດໃຫ້ອາຍຸສັ້ນ ແລະອາຍຸຍືນ

ພິກຂຸທັງຫລາຍ! ທັມ ໕ ປະການີ້ ເປັນເຫດໃຫ້ອາຍຸສັ້ນ; ໕ ປະການເປັນຢ່າງໃດ? ຄື:

**ເປັນຜູ້ບໍ່ກະທຳຄວາມສະບາຍແກ່ຕົນເອງ,**
**ບໍ່ຮູ້ຈັກປະມານໃນສິ່ງທີ່ສະບາຍ,**
**ບໍຣິໂພຄສິ່ງທີ່ຍ່ອຍຍາກ,**
**ເປັນຜູ້ທ່ຽວໃນກາລບໍ່ສົມຄວນ,**
**ເປັນຜູ້ບໍ່ປະພຶດພຽງດັ່ງພຣົມ,**

ພິກຂຸທັງຫລາຍ! ທັມ ໕ ປະການີ້ແລ ເປັນເຫດໃຫ້ອາຍຸສັ້ນ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ເປັນເຫຕໃຫ້ອາຍຸຍືນ; ໕ ປະການເປັນຢ່າງໃດ? ຄື:

**ເປັນຜູ້ທຳຄວາມສະບາຍແກ່ຕົນເອງ,**

**ຮູ້ຈັກປະມານໃນສິ່ງທີ່ສະບາຍ,**

**ບໍຣິໂພຄສິ່ງທີ່ຍ່ອຍງ່າຍ,**

**ເປັນຜູ້ທ່ຽວໃນກາລອັນສົມຄວນ,**

**ເປັນຜູ້ປະພຶຕພຽງດັ່ງພຣົມ,**

ພິກຂຸທັງຫລາຍ! ທັມ ໕ ປະການນີ້ແລ ເປັນເຫຕໃຫ້ອາຍຸຍືນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໓໐/໑໒໕*



# ສີລເປັນໜຶ່ງໃນທັມທີ່ເປັນເຫຕໃຫ້ອາຍຸຍືນ

ພິກຂຸທັງຫລາຍ! ທັມ ໕ ປະການີ້ ເປັນເຫຕໃຫ້ອາຍຸສັ້ນ; ໕ ປະການເປັນຢ່າງໃດ? ຄື:
ເປັນຜູ້ບໍ່ກະທຳຄວາມສະບາຍແກ່ຕົນເອງ,
ບໍ່ຮູ້ຈັກປະມານໃນສິ່ງທີ່ສະບາຍ,
ບໍຣິໂພຄສິ່ງທີ່ຍ່ອຍຍາກ,
**ເປັນຄົນທຸສີລ,**
ເປັນຜູ້ມີມິຕຊົ່ວ,
ພິກຂຸທັງຫລາຍ! ທັມ ໕ ປະການີ້ແລ ເປັນເຫຕໃຫ້ອາຍຸສັ້ນ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ເປັນເຫຕໃຫ້ອາຍຸຍືນ; ໕ ປະການເປັນຢ່າງໃດ? ຄື:
ເປັນຜູ້ທຳຄວາມສະບາຍແກ່ຕົນເອງ,
ຮູ້ຈັກປະມານໃນສິ່ງທີ່ສະບາຍ,
ບໍຣິໂພຄສິ່ງທີ່ຍ່ອຍງ່າຍ,
**ເປັນຄົນມີສີລ,**
ເປັນຜູ້ມີມິຕດີ,
ພິກຂຸທັງຫລາຍ! ທັມ ໕ ປະການນີ້ແລ ເປັນເຫຕໃຫ້ອາຍຸຍືນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໓໑/໑໒໕*



# ພຣະເຈົ້າພິມພິສາຣກຣາບທູລພຣະຜູ້ມີພຣະພາຄຂໍໃຫ້ພິກຂຸທັງຫລາຍປະຊຸມກັນໃນວັນ ໑໔ ຄ່ຳ, ໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌

ໃນສມັຍນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພູເຂົາຄິຊຊະກູຕ ເຂຕພຣະນະຄອຣຣາຊະຄຶຫ໌. ຄັ້ງນັ້ນ ພວກປະຣິພາຊົກອັນຍະເດຍຣະຖີຍ໌ ເຖິງວັນ ໑໔ ຄ່ຳ, ໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌ ຍ່ອມປະຊຸມກັນກ່າວທັມ. ຄົນທັງຫລາຍເຂົ້າໄປຫາປະຣິພາຊົກ

ອັນຍະເດຍຣະຖີຍ໌ເຫລົ່ານັ້ນເພື່ອຟັງທັມ. ພວກເຂົາໄດ້ຄວາມຮັກ ໄດ້ຄວາມເຫລື້ອມໃສໃນພວກປະຣິພາຊົກອັນຍະເດຍຣະຖີຍ໌ ປະຣິພາຊົກອັນຍະເດຍຣະຖີຍ໌ຍ່ອມໄດ້ພັກພວກ.

ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄະຣາຊ ສະເດັຈເຂົ້າໄປໃນທີ່ສງັດ ຫລີກເຣັ້ນຢູ່ ໄດ້ມີພຣະຣາຊະປະຣິວິຕົກແຫ່ງພຣະທັຍເກີດຂຶ້ນຢ່າງນີ້ວ່າ ດຽວນີ້ ເຖິງວັນ ໑໔ ຄ່ຳ, ໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌ ພວກປະຣິພາຊົກອັນຍະເດຍຣະຖີຍ໌ຍ່ອມປະຊຸມກັນກ່າວທັມ. ຄົນທັງຫລາຍເຂົ້າໄປຫາປະຣິພາຊົກອັນຍະເດຍຣະຖີຍ໌ເຫລົ່ານັ້ນເພື່ອຟັງທັມ. ພວກເຂົາໄດ້ຄວາມຮັກ ໄດ້ຄວາມເຫລື້ອມໃສໃນພວກປະຣິພາຊົກອັນຍະເດຍຣະຖີຍ໌ ປະຣິພາຊົກອັນຍະເດຍຣະຖີຍ໌ຍ່ອມໄດ້ພັກພວກ. ສັນໃດໜໍ ພຣະຄຸນເຈົ້າທັງຫລາຍຈຶ່ງຈະປະຊຸມກັນໃນວັນ ໑໔ ຄ່ຳ, ໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌ດ້ວຍ ພຣະອົງຄ໌ຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ປະທັບນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ເມື່ອພຣະເຈົ້າພິມພິສາຣນັ່ງຮຽບຮ້ອຍແລ້ວ ໄດ້ທູລຂໍ້ປະຣິວິຕົກນັ້ນຕໍ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍເຂົ້າໄປໃນທີ່ສງັດ ຫລີກເຣັ້ນຢູ່ໃນໝູ່ບ້ານນີ້ ໄດ້ມີຄວາມປະຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງ

ນີ້ວ່າ ດຽວນີ້ ເຖິງວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໗ ຄໍ່າແຫ່ງ ປັກຂ໌ ພວກປະຣິພາຊົກອັນຍະເດຍຣະຖີຍ໌ຍ່ອມປະຊຸມກັນກ່າວ ທັມ. ຄົນທັງຫລາຍເຂົ້າໄປຫາປະຣິພາຊົກອັນຍະເດຍຣະຖີຍ໌ ເຫລົ່ານັ້ນເພື່ອຟັງທັມ. ພວກເຂົາໄດ້ຄວາມຮັກ ໄດ້ຄວາມ ເຫລື້ອມໃສໃນພວກປະຣິພາຊົກອັນຍະເດຍຣະຖີຍ໌ ປະຣິພາຊົກ ອັນຍະເດຍຣະຖີຍ໌ຍ່ອມໄດ້ພັກພວກ. ສັນໃດໜໍ ພຣະຄຸນເຈົ້າ ທັງຫລາຍຈຶ່ງຈະປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໗ ຄໍ່າແຫ່ງປັກຂ໌ດ້ວຍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຂໍປະທານພຣະວະໂຣ ກາສ ຂໍພຣະຄຸນເຈົ້າທັງຫລາຍໂປດປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໗ ຄໍ່າແຫ່ງປັກຂ໌ດ້ວຍເຖີດ.

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣ ຈອມເສນາມາຄະຣາຊຊົງເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງດ້ວຍທັມມີກະຖາ. ເມື່ອພຣະຜູ້ມີພຣະພາຄຊົງຊີ້ແຈງ ໃຫ້ພຣະອົງຄ໌ຊົງເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງ ດ້ວຍທັມມີກະຖາແລ້ວ ພຣະເຈົ້າພິມພິສາຣຈອມເສນາມາຄະ ຣາຊກໍສະເດັຈລຸກຈາກທີ່ປະທັບ ຖວາຍບັງຄົມພຣະຜູ້ມີພຣະ ພາຄ ຊົງກະທໍາປະທັກຂິນສະເດັຈກັບໄປ.

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງກະທໍາທັມມີກະຖາໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕແຣກເກີດນັ້ນ ແລ້ວຕຣັສສັ່ງກັບພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ! ເຮົາອະນຸຍາຕໃຫ້ປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໘ ຄໍ່າແຫ່ງປັກຂ໌.**

ກໍໂດຍສມັຍນັ້ນແລ ພິກຂຸທັງຫລາຍສົນທະນາກັນວ່າ ພຣະຜູ້ມີພຣະພາຄຊົງອະນຸຍາຕໃຫ້ປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໘ ຄໍ່າແຫ່ງປັກຂ໌. ພິກຂຸເຫລົ່ານັ້ນຈຶ່ງປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໘ ຄໍ່າແຫ່ງປັກຂ໌ ແລ້ວນັ່ງນິ້ງເສຍ. ຄົນທັງຫລາຍເຂົ້າໄປຫາພິກຂຸເຫລົ່ານັ້ນເພື່ອຟັງທັມ, ພວກເຂົາຕ່າງກໍເພັ່ງໂທສ ຕິຕຽນ ຕໍານິວ່າ ເຫຕໃດພຣະສະມະນະເຊື້ອສາຍສາກະຍະບຸຕ ປະຊຸມກັນໃນວັນ ໑໔ ຄໍ່າ, ໑໕ ຄໍ່າ ແລະ ໘ ຄໍ່າແຫ່ງປັກຂ໌ ຈຶ່ງໄດ້ນັ່ງນິ້ງເສຍເໝືອນໝູໃບ້ໜໍ*(ມູຄະສູກະຣາ)* ທໍານຽມພິກຂຸຜູ້ປະຊຸມກັນຄວນກ່າວທັມບໍ່ແມ່ນຫລື? ພິກຂຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນເພັ່ງໂທສ ຕໍານິຕິຕຽນຢູ່ ຈຶ່ງກຣາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງກະທຳທັມມີກະຖາໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕແຣກເກີດນັ້ນ ແລ້ວຕຣັສສັ່ງກັບພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ! ເຮົາອະນຸຍາຕໃຫ້ປະຊຸມກັນກ່າວທັມໃນວັນ ໑໔ ຄ່ຳ, ໑໕ ຄ່ຳ ແລະ ໘ ຄ່ຳແຫ່ງປັກຂ໌.**

*ວິນັຍປິດົກ ມະຫາວັຄ ພາຄ ໑ ເຫລັ້ມ ໔/໑໗໒-໑໗໓/໑໔໖-໑໔໘*



ເທວະດາທູລຖາມວ່າ:
ອັນໃດໜໍຍັງປະໂຍຊນ໌ໃຫ້ສຳເຣັຈຈົນກະທັ້ງຊະຣາ?
ອັນໃດໜໍຕັ້ງໝັ້ນແລ້ວຍັງປະໂຍຊນ໌ໃຫ້ສຳເຣັຈ?
ອັນໃດໜໍເປັນຣັຕນະຂອງຄົນທັງຫລາຍ?
ອັນໃດໜໍໂຈຣລັກໄປບໍ່ໄດ້?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:
ສີລຍັງປະໂຍຊນ໌ໃຫ້ສຳເຣັຈຈົນກະທັ້ງຊະຣາ.
ສັທທາຕັ້ງໝັ້ນແລ້ວຍັງປະໂຍຊນ໌ໃຫ້ສຳເຣັຈ.
ປັນຍາເປັນຣັຕນະຂອງຄົນທັງຫລາຍ.
ບຸນຍ໌ອັນໂຈຣລັກໄປບໍ່ໄດ້.

ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໔໘/໑໕໗-໑໕໙

# “ຄູ່ມືຮັກສາອຸໂປສົຖ”

ໄດ້ແປແລະຮຽບຮຽງຈາກພຣະໄຕຣປິດົກ
ສະບັບຫລວງ ພາສາໄທ ແລະໄດ້ຜ່ານ
ການທຽບຄຽງກັບພຣະໄຕຣປິດົກຫລາຍສຳນັກເຊັ່ນ:
ພຣະໄຕຣປິດົກສະບັບມະຫາຈຸລາ,
ສະບັບພາສາບາລີ-ໄທ ແລະພຣະໄຕຣປິດົກ
ພາສາອັງກິດຈາກ Suttacentral.net
ພຣະສູຕທີ່ເປັນພາສາອັງກິດຮຽບຮຽງຈາກ
Suttacentral.net

**Compiled by V. Vongsengsy**

“ຊາວສັກກະທັງຫລາຍ ທ່ານທັງຫລາຍໄດ້ຮັກສາອຸໂປສົຖ
ປະກອບດ້ວຍອົງຄ໌ ໘ ຫລືໜໍ?

ອຸປາສົກຊາວສັກກະຊົນບົທເຫລົ່ານັ້ນກຣາບທູລວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ບາງຄາວພວກຂ້ານ້ອຍທັງຫລາຍກໍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ບາງຄາວກໍບໍ່ໄດ້ຮັກສາ ພຣະອົງຄ໌ຜູ້ຈະເຣີນ.

ຊາວສັກກະທັງຫລາຍ ບໍ່ເປັນລາພຂອງທ່ານທັງຫລາຍເສຍແລ້ວ ທ່ານທັງຫລາຍບໍ່ໄດ້ດີເສຍແລ້ວ ທີ່ທ່ານທັງຫລາຍເມື່ອຊີວິຕມີພັຍເພາະຄວາມໂສກ ມີພັຍເພາະຄວາມຕາຍຢູ່ຢ່າງນີ້ ບາງຄາວກໍຮັກສາອຸໂປສົຖປະກອບດ້ວຍອົງຄ໌ ໘ ບາງຄາວກໍບໍ່ໄດ້ຮັກສາ.”

ອັງຄຸຕຕະຣະນິກາຍ. ໔໙/໑໙໖-໔໐໐/໑໙໔

**For Free Distribution**

**For more information: Please contact us:**

**buddhavacana.word@gmail.com**